ໝວດວິຊາສະເພາະ | ສາຍສ້າງຄູມັດທະຍົມ

# ສັນທະສິນສາດ 2




**ສົກ 2022**

# ສັນທະສິນສາດ 2

| ສາຍ ພາສາລາວ ລະບົບ 4 ປີ | ປີທີ 3 | ພາກຮຽນ2 |
|---|---|---|


**ຮຽບຮຽງໂດຍ:**

ຊອ ນ.ອໍລະວັນ ສີຫາຈັກ

ສຸລີໄຊ ສີຜາຣາດ

**ກວດແກ້ໂດຍ:**

ອຈ ນ. ຄໍາສະຫວັນ ຈັນສີຍະວົງ

ຊອ ປທ ນ.ບົວສະຫວັນ ຫອມສີສີມບັດ

ສົມໃຈ ພົມມະນີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ..໓໓.../ສພ.ສວ

# ເອກະສານຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມສາຍວິທະຍາສາດສັງຄົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳ ສະພາວິທະຍາສາດຂອງ ວິທະຍາໄລຄູສາລະວັນ ປະຈຳສົກຮຽນ 2021-2022

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງອະນຸກຳມະການເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ໃນກິດຈະກຳການຮຽນ-ການສອນ ໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ປທ ມອນໄຊ ສັນທະຈັກ | |
| 2. ທ່ານ ປອ ໄພທອງ ພົງສີງຄາມ | |

ທີ່,ສາລະວັນ, ວັນທີ..20 APR 2022..........................

ປະທານສະພາວິທະຍາສາດ

ອຈ. ບ. ສົມປອງ ແສນທະວິສຸກ
Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສາລະວັນ

## ເອກະສານຮັບຮອງການກວດແກ້ບົດຮຽບຮຽງປຶ້ມວິຊາ: ສັນທະສິນສາດ 2

| ລ/ດ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຮຽບຮຽງ | ຜູ້ກວດແກ້ |
|---|---|---|---|---|
| 1 | ສັນທະສິນສາດ2 | ວິທະຍາສາດສັງຄົມ | ຊອ ນ ອໍລະວັນ ສີຫາຈັກ<br>ທ່ານ ສຸລິໄຊ ສີພາຣາດ | ອາຈານ ນ ຄຳສະຫວັນ ຈັນສີຍະວົງ<br>ຊອ ປທ ນ ບົວສະຫວັນ ທອມສີສົມບັດ<br>ທ່ານ ສົມໃຈ ພົມມະນີ |

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ອາຈານ ນ ຄຳສະຫວັນ ຈັນສີຍະວົງ | |
| 2. ຊອ ປທ ນ ບົວສະຫວັນ ທອມສີສົມບັດ | |
| 3. ທ່ານ ສົມໃຈ ພົມມະນີ | |

ທີ່,ສາລະວັນ, ວັນທີ 21/12/2022

ຫົວໜ້າຫ້ອງການສາຍ

ນ. ຄຳສະຫວັນ ຈັນສີຍະວົງ
Khamsavan CHANSEEYAVONG

# ຄໍານໍາ

ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການອັນຮີບດ່ວນການສ້າງ ແລະ ພັດທະນາຫຼັກສູດມາຮັບໃຊ້ໃນການຮຽນ-ການສອນ ໃນລະດັບປະລິນຍາຕີທີ່ທາງວິທະຍາໄລຄູສາລະວັນໄດ້ກໍານົດອອກນັ້ນ. ພວກຂ້າພະເຈົ້າໄດ້ພະຍາຍາມຄົ້ນຄວ້າເພື່ອຮີບຮຽງປຶ້ມ“ສັນທະສິນສາດ2”ເຫຼັ້ມນີ້ຂຶ້ນມາເພື່ອເປັນບ່ອນອີງໃນການຮຽນ-ການສອນ ຂອງນັກສຶກສາຍ: ພາສາລາວ-ວັນນະຄະດີ ວິທະຍາໄລຄູສາລະວັນ.

ສັນທະສິນສາດ2 ເປັນພາກທີ່ໄດ້ຮຽນຮູ້ກ່ຽວກັບ ການນາໃຊ້ຖ້ອຍຄໍາ,ສານວນ, ວາດເວົ້າຕ່າງໆເຂົ້າກັນເພື່ອໃຫ້ເປັນຄໍາເວົ້າທີ່ມ່ວນ,ອ່ອນຊອນ ຫຼື ເວົ້າອີກຢ່າງໜຶ່ງວ່າເປັນພາກທີ່ຮຽນຮູ້ກ່ຽວກັບການແຕ່ງກາບ,ກອນ,ໂຄງ ແລະ ສານ... ສະນັ້ນ ພາກນີ້ຈຶ່ງມີຄວາມໝາຍສໍາຄັນພິເສດເປັນພື້ນຖານ ແລະ ເປັນນບ່ອນອີງໃຫ້ແກ່ການສຶກສາຄົ້ນຄວ້າພາກອື່ນໆໃນປະມວນວິຊາພາສາລາວ. ແຕ່ເຖິງແນວໃດກໍ່ດີການຄົ້ນຄວ້າປື້ມແບບຮຽນມັນຕ້ອງມີເວລາ ແລະ ພະຍາຍາມສູງພໍສົມຄວນ.  ແຕ່ນີ້ຍ້ອນຄວາມຕ້ອງການອັນຮີບດ່ວນເຊິ່ງທັງຜູ້ສອນ ແລະ ຜູ້ຮຽນຈະຕ້ອງມີປື້ມແບບຮຽນເພື່ອສະດວກສະບາຍໃນການຄົ້ນຄວ້າຮໍ່າຮຽນ. ດັ່ງນັ້ນຈຶ່ງໄດ້ຊຸ້ນຂ້ຽວຄົ້ນຄວ້າຮຽບຮຽງປຶ້ມເຫຼັ້ມນີ້ຂຶ້ນມາເພື່ອໃຫ້ທ່ວງທັນກັບຄວາມຮຽກຮ້ອງຕ້ອງການດັ່ງກ່າວ.

ດັ່ງທີ່ສະເໜີມາຂ້າງເທິງນີ້ແລ້ວວ່າ ການຄົ້ນຄວ້າຮຽບຮຽງປື້ມແບບຮຽນມັນຕ້ອງໃຊ້ເວລາ ແລະ ຄວາມອິດທົນພະຍາຍາມ ແລະ ຕ້ອງມີຄວາມຮູ້ທາງດ້ານວິຊາການຢ່າງເລິກເຊິ່ງ ແຕ່ທັງສາມເງື່ອນໄຂນີ້ຍັງບໍ່ເປັນທີ່ອໍານວຍຄວາມສະດວກໃຫ້ແກ່ຜູ້ຄົ້ນຄວ້າເທົ່າທີ່ຄວນ. ສະນັ້ນ ຂ້າພະເຈົ້າຈຶ່ງຄິດວ່າໃນການຮຽບຮຽງປຶ້ມເຫຼັ້ມນີ້ຂຶ້ນມາ ອາດຈະປະສະຈາກບໍ່ໄດ້ບາງຈຸດທີ່ຍັງຂາດຕົກບົກຜ່ອງ. ຢ່າງໃດກໍ່ດີຂ້າພະເຈົ້າເອງຫວັງຢ່າງຍິ່ງວ່າ ບັນດາທ່ານທີ່ໄດ້ອ່ານປຶ້ມເຫຼັ້ມນີ້ຈະຕໍານິ ແລະ ປະກອບຄໍາຄິດເຫັນໃນສ່ວນທີ່ຍັງຂາດຕົກບົກຜ່ອງນັ້ນ. ເພື່ອເຮັດໃຫ້ການຄົ້ນຄວ້າຮຽບຮຽງໃນຄັ້ງຕໍ່ໄປໃຫ້ມີຄວາມຊັດເຈນ ແລະ ສົມບູນຍິ່ງຂຶ້ນ.

# ສາລະບານ


ຄຳນຳ ........................................ A
ສາລະບານ ........................................ B
ບົດທີ 1ຄວາມຮູ້ທົ່ວໄປກ່ຽວກັບສັນທະສິນສາດ ........................................ 1
1. ຄວາມໝາຍ ແລະ ຄວາມສຳຄັນຂອງສັນທະກະວີ. ........................................ 1
1.1 ຄວາມໝາຍຂອງສັນທະກະວີ. ........................................ 1
1.2 ຄວາມສຳຄັນຂອງສັນທະກະວີ. ........................................ 1
2. ພາກສ່ວນຂອງສັນທະກະວີ. ........................................ 2
2.1 ພາກສ່ວນຫຼັກ ........................................ 3
2.2 ພາກສ່ວນເສີມ ........................................ 9
3. ຫຼັກຄຳປະຈຳບ່ອນ ແລະ ການເນື່ອງສຽງຂອງກອນ. ........................................ 10
4. ຫຼັກການສຳຜັດຂອງກອນ. ........................................ 12
4.1 ການສຳຜັດໃນ. ........................................ 12
4.2. ສຳຜັດນອກ. ........................................ 20
1). ການສຳຜັດສະຫຼະ. ........................................ 20
2). ສຳຜັດພະຍັນຊະນະ ........................................ 20
5. ຄຳຜະຫຍາ ........................................ 26
5.1 ຄວາມໝາຍ ແລະ ລັກນະຂອງຄຳຜະຫຍາ ........................................ 26
5.2 ປະເພດຄຳຜະຫຍາ ........................................ 26
6. ຄຳສຸພາສິດ ........................................ 32
6.1 ຄວາມຫມາຍ ແລະລັກສະນະຈຸດພິເສດ ........................................ 32
6.2ປະເພດຄຳສຸພາສິດ ........................................ 32
ບົດທີ 2ປະເພດກາບ ........................................ 36
1. ຄວາມໝາຍຂອງກາບ ........................................ 36
1.1. ພາກສ່ວນຂອງກາບ ........................................ 36
2. ການສຳຜັດຂອງກາບ ........................................ 36
3. ວິທີການໃຊ້ກາບ. ........................................ 42
3.1. ກາບເຊີ້ງ ( ສຽງເຍີ້ນ) ........................................ 42
3.2 ກາບເຊີ້ງສຽງໄວ ........................................ 43
ບົດທີ 3ກອນ ........................................ 45
1. ຄວາມໝາຍຂອງກອນ. ........................................ 45
1.1 ພາກສ່ວນຂອງກອນ. ........................................ 45
2. ຫຼັກຄຳປະຈຳບ່ອນ ແລະ ການເນືອງສຽງຂອງກອນ. ........................................ 45
3. ຊະນິດຂອງກອນ. ........................................ 46
3.1. ຊະນິດກອນອ່ານ ........................................ 46

ກ. ກອນອ່ານແບບທຳມະດາ.......................................................................47
ຂ.ການອ່ານແບບອັກສອນສັງວາດ. ...........................................................48
ຄ.ກອນອ່ານແບບວິດຊຸມາລີ ( ກອນສາຍຟ້າ )..............................................50
ງ. ກອນອ່ານແບບວະສີລະປັນຕິ. ............................................................. 51
ຈ. ກອນອ່ານແບບມະຫາສິນທຸ ..................................................................52
ສ.ກອນທຽມແອກ ( ກອນສັບພະສອດ ). ......................................................53
ຊ. ກອນອ່ານແບບກອນແປດ ....................................................................53
ຍ. ກອນອ່ານແບບຊ້ອນເລັບ ....................................................................54
3.1. ກອນລຳ - ກອນຂັບ .............................................................................56
3.2.1 ຄວາມໝາຍຂອງກອນລຳ. .................................................................56
ກ. ລຳທົ່ວໄປ.........................................................................................57
ຂ. ກອນຂັບທ້ອງຖິ່ນ ...............................................................................67
3.3. ກອນຮ່າຍ ...........................................................................................76
ກ. ແບບວະສີລະປັນຕິ...............................................................................76
ຂ. ມະຫາວະສີລະປັນຕິ .............................................................................77
ບົດທີ 4ໂຄງ ............................................................................................86
1. ຄວາມໝາຍຂອງໂຄງ..............................................................................87
2. ຊະນິດຂອງໂຄງ.....................................................................................87
2.1. ໂຄງ 2...............................................................................................87
2.2 ໂຄງ 5 ...............................................................................................89
2.2.1 ໂຄງ 5ທຳມະດາ ...............................................................................89
2.2.2ໂຄງ 5 ວິດຊຸມາລີ ..............................................................................89
2.3. ໂຄງ 7ສຸພາບ ( ໂຄງມະຫາສິນທຸມາລີ )................................................. 91
ບົດທີ 5ສານ.............................................................................................92
1. ຄວາມໝາຍຂອງສານ..............................................................................92
2. ປະເພດຂອງສານ ..................................................................................92
3. ວິທີແຕ່ງສານ .......................................................................................93
4. ຕົວຢ່າງສານ ........................................................................................93
ບົດທີ 6ກາບເຊີ້ງ ..................................................................................... 100
1. ຄວາມໝາຍຂອງກາບເຊີ້ງ ..................................................................... 100
2. ຫຼັກການແຕ່ງກາບເຊີ້ງ.......................................................................... 100
ເອກະສານອ້າງອີງ..................................................................................... 101

# ບົດທີ1

# ຄວາມຮູ້ທົ່ວໄປກ່ຽວກັບສັນທະສິນສາດ

## 1.ຄວາມໝາຍ ແລະ ຄວາມສຳຄັນຂອງສັນທະກະວີ.

### 1.1ຄວາມໝາຍຂອງສັນທະກະວີ.

ຄຳວ່າ ສັນທະກະວີ ແມ່ນຄຳສັບທີ່ທ່ານພູມີວົງວິຈິດບັນຍັດໃນປື້ມ ໄວຍາກອນ ທີ່ພິມໃນປີ 1967 ໂດຍສຳນັກພິມສຶກສາສູນກາງຊຳເໜືອ ຄຳວ່າ: ສັນທະກະວີ ມີຄວາມໝາຍ ດັ່ງນີ້: ສັນທະ ແປວ່າ: ເນື່ອງກັນ ມ່ວນ ແລະ ກະວີ ແປວ່າ: ຄວາມສະຫຼາດໃນການແຕ່ງກາບກ່ອນອັນເນື່ອງກັນ, ອັນມ່ວນ ແລະ ອ່ອນຊອນຂອງພາສາລາວ.

ໃນປື້ມໄວຍາກອນທີ່ຝ່າຍລາຊະອານາຈັກລາວໃຊ້ເມື່ອກ່ອນເພິ່ນເອີ້ນວ່າ: ສັນທະລັກສະນະ ຄຳວ່າ: ສັນທະແປວ່າ: ເປັນທີ່ຖືກໃຈ, ເນື່ອງກັນ ແລະ ມ່ວນອອນຊອນ, ຄຳວ່າ: ລັກສະນະ ແປວ່າ: ສິ່ງທີ່ສະແດງໃຫ້ເຫັນຄວາມຕ່າງກັນ, ຄຸນນະພາບ, ປະເພດແບບ, ຮູບການ ຫຼື ວິທີ. ດັ່ງນັ້ນ ສັນທະລັກສະນະ ຈຶ່ງມີຄວາມໝາຍວ່າ ຫຼັກການແຕ່ງກາບກອນອັນເນື່ອງກັນ, ເປັນທີ່ຖືກໃຈ, ມ່ວນ ແລະ ອອນຊອນຂອງພາສາລາວ.

ຍ້ອນວ່າ ຄວາມເວົ້າໃນພາສາລາວປະກອບດ້ວຍຄວາມລາວເດີມ ແລະ ຄວາມບາລີ - ສັນສະກຼິດປົນກັນ ຈະເປັນ ສັນທະກະວີ ຫຼື ສັນທະລັກສະນະ ກໍລ້ວນແຕ່ແມ່ນຄວາມໝາຍອັນດຽວກັນ, ແມ່ນສັບ ທີ່ໄດ້ເຄົ້າມາຈາກພາສາບາລີ ທີ່ເວົ້າເຖິງຫຼັກການແຕ່ງກອນປະເພດຕ່າງໆ.

ເວົ້າອີກຢ່າງໜຶ່ງ, ສັນທະກະວີ ແມ່ນຮູບການນຳໃຊ້ພາສາຢ່າງໜຶ່ງ ນອກຈາກເປັນພາຫະນະຕິດພັນ ກັບການສະແດງແນວຄິດອາລົມຈິດແລ້ວ. ມັນຍັງຕິດພັນຢ່າງສະໜິດແໜ້ນກັບສິລະປະການໃຊ້ພາສາ ເພື່ອສ້າງຄວາມສະເທືອນໃຈ, ຄວາມຮູ້ສຶກນຶກຄິດ ແລະ ສ້າງອຸດົມການແກ່ຜູ້ອ່ານ. ສັບສຳນວນທີ່ນຳໃຊ້ເຂົ້າໃນສັນທະກະວີ ໄດ້ຜ່ານການຄົ້ນຄິດຮິ່ນຕອງຈາກຜູ້ປະພັນ ແລ້ວນຳເຂົ້າມາປະກອບ ຫຼື ສ້າງເປັນບົດພື້ນຖານຫຼັກການອັນໃດໜຶ່ງທີ່ແນ່ນອນ, ຮູບການສ້າງບົດຄືແນວນັ້ນ ແມ່ນຈະໄດ້ສະເໜີໃນຂໍ້ຕໍ່ໆໄປ.

### 1.2ຄວາມສຳຄັນຂອງສັນທະກະວີ.

ວັນນະກຳຊະນິດນີ້ ໄດ້ແນບສະໜິດກັບຊີວິດຂອງຊາວລາວ ມາແຕ່ດຶກດຳບັນຈົນເທົ້າເຖິງທຸກວັນນີ້ ຊາວບູຮານໄດ້ສັ່ງສອນ, ສຶກສາອົບຮົມຄຸນສົມບັດ ແລະ ທັດສະນະຄະຕິແກ່ສັງຄົມຜ່ານຮູບການວັນນະຄະດີຊະນິດນີ້ເປັນຫຼາຍ. ເຮົາຈະເຫັນໄດ້ຈາກບົດກ່ອມເດັກນ້ອຍ, ຄຳໂອ່ນຊາ ຫຼື ຮູບການລິ້ນເລີງອື່ນໆຂອງເດັກນ້ອຍທີ່ໃຊ້ພາສາ ກໍລ້ວນແຕ່ເປັນຄຳກອນທັງນັ້ນ ຈົນກະທັ້ງຮອດບົດເທສະໜາ, ບົດເລື່ອງຕ່າງໆທີ່ສັ່ງສອນຜູ້ໃຫຍ່ ກໍຂຽນເປັນຄຳຮ້ອຍກອງເກືອບທັງໝົດ. ປັດຈຸບັນນີ້ ຮູບການວັນນະຄະດີປະເພດນີ້ກໍຍັງເປັນທີ່ນິຍົມຂອງຄົນທົ່ວໄປ ບົດຂັບ - ລຳທ້ອງຖິ່ງຕ່າງໆ, ລຳເລື່ອງ, ໂດຍສະເພາະ ລຳເພີນ, ລຳເຕີ້ຍ...ທີ່ຜະລິດກະແຊັດກໍຂາຍດີເປັນພິເສດ. ໃນວົງການສຶກສາ, ບົດທີ່ເປັນຄະຕິເພິ່ນກໍນິຍົມແຕ່ງເປັນບົດກອນ ເພື່ອໃຫ້ນັກຮຽນທ່ອງຂຶ້ນໃຈ. ການຮຽນແນວນີ້ ນອກຈາກຈົດຈຳບົດທີ່ໄດ້ດີ ແລະ ຈື່ໄດ້ດົນແລ້ວ ຍັງເຮັດໃຫ້ຜູ້ຮຽນເກີດອາລົມຈິດ, ມີຄວາມຮັກ, ມີຄວາມສະຫງວນມັກໄປໃນຕົວ, ຖ້າພວກເຮົາຮູ້ເສີມຂະຫຍາຍ, ຮູ້ບຳລຸງສ້າງບຸກຄົນ ໂດຍສະເພາະຜູ້ທີ່ມີພອນສະຫວັນໃນດ້ານນີ້ໃຫ້ຫຼາຍຂຶ້ນ ແລະ ສ້າງໂອກາດໃຫ້ເຂົາເຈົ້າໄດ້ພັດທະນາຄວາມສາມາດ ຄົ້ນຄິດປະດິດແຕ່ງ ໃຫ້ແທດເໝາະກັບຍຸກສະໄໝ, ວັນນະກຳປະເພດນີ້ ມີສ່ວນຊ່ວຍບໍ່ສະເພາະແຕ່ເປັນການທະນຸບຳລຸງມໍລະດົກຕົກທອດ ຈາກບັນພະບູລຸດເທົ່ານັ້ນຫາກຍັງເປັນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງຊັບພະຍາກອນມະນຸດທາງດ້ານຄຸນສົມບັດທັດສະນະຄະຕິອີກດ້ວຍ. ວັນນະກຳປະເພດຄຳຮ້ອຍກອງ ເປັນວັນນະຄະດີ

ທີ່ລະອຽດອ່ອນ ບັນຈຸອາລົມຈິດສູງ ຖ້າເຮົາບໍ່ສຶກສາເບິ່ງລະອຽດຄວາມເລິກເຊິ່ງຂອງມັນສູງຂຶ້ນເທົ່ານັ້ນ. ສະນັ້ນ ນັກຮຽນພວກເຮົາຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າຮໍ່າຮຽນ ບັນຫານີ້ໃຫ້ເລິກເຊິ່ງຈຶ່ງຈະເຫັນໄດ້ຄວາມສໍາຄັນ ແລະ ນໍາໄປເຜີຍແຜ່ວຽກງານດ້ານນີ້ ໃນໝູ່ຊາວໜຸ່ມນັກຮຽນຮຸ່ນໆຕໍ່ໆໄປ.

## 2.ພາກສ່ວນຂອງສັນທະກະວີ.

ພາກສ່ວນຂອງສັນທະກະວີຕາມຫຼັກການຂອງສັນທະກະວີແລ້ວ, ເພິ່ນແບ່ງອອກເປັນ 2 ພາກສ່ວນໃຫຍ່ຄື: ພາກສ່ວນຫຼັກ ແລະ ພາກສ່ວນເສີມ.

**ແຜນວາດສະແດງເຖິງພາກສ່ວນຫຼັກ ແລະ ພາກສ່ວນເສີມຂອງສັນທະກະວີດັ່ງລຸ່ມນີ້:**




**ຖ້າສັງເກດແຕ່ນ້ອຍຫາໃຫຍ່ພວກເຮົາຈະເຫັນວ່າພາກສ່ວນຫຼັກດັ່ງນີ້**



ບົດ

**2.1 ພາກສ່ວນຫຼັກ**

**ກ. ຄໍາ.**

ຄາໍວ່າຄໍານັ້ນໝາຍເອົາຄາໍເວົ້າໜຶ່ງເຊິ່ງປະກອບດ້ວຍສະຫຼະ, ພະຍັນຊະນະ, ວັນນະຍຸດມາປະສົມກັນ ແລ້ວອ່ານອອກສຽງເທື່ອໜຶ່ງເຊິ່ງຮຽກວ່າ ພະຍາງເປັນຄາໍໜຶ່ງດັ່ງຄໍາວ່າ: ນາ, ຮື້ວ, ສວນ, ນົກ, ໝູ, ປູ, ປາ ເປັນຕົ້ນ. ແຕ່ຄາໍຈາໍພວກພະຍັນຊະນະປະສົມທີ່ອ່ານ ສອງພະຍາງ ຖ້າວ່າພະຍາງໜ້າເປັນສະຫຼະ xະ ແມ່ນນັບເອົາຄໍາດຽວເຊັ່ນ ສະເໜີ, ສະຫວ່າງ, ຖະໜົນ, ຕະຫຼາດ, ສະດວກ... ຖ້າອອກສຽງເປັນ 3 ພະຍາງກໍ່ນັບເປັນ2 ຄາໍເຊັ່ນ ປົດສະໜາ, ບົວລະພາ, ສະ
ເໜຫາ, ເຈລະຈາ, ພິດສະຫວາດ... ເປັນຕົ້ນ.

ຄໍາໃນລັກສະນະຂອງການແຕ່ງກອນແມ່ນມີຢູ່4 ປະເພດຄື

**(1). ຄໍາເປັນ (ຄໍາສຸພາບ ຫຼື ຄໍາກາງ)**

ຄໍາສຸພາບ ຫຼື ຄໍາເປັນແມ່ນ ຄາໍທີ່ຜັນສຽງໄດ້ເຊິ່ງຈັດຢູ່ໃນຫຼັກການ ເນື່ອງສຽງແມ່ນສຸພາບ ຫຼື ຄໍາກາງໂດຍບໍ່ມີສຽງວັນນະຍຸດ. ຄາໍເປັນແມ່ນຄໍາທີ່ປະກອບດ້ວຍສະຫຼະສຽງຍາວ, ຫຼະພິເສດ (ໃx, ໄx, ເxົາ, xໍາ) ແລະ ຕົວສະກົດເປັນ (ງ, ຍ, ນ, ມ, ວ) ເຊັ່ນ ດີ, ແດງ, ເທົາ ທາມ, ການ, ຍາມ, ເດືອນ...ເປັນຕົ້ນ.

ຄໍາເປັນແບ່ງອອກເປັນ 2 ຈຸຄື:

- ຈຸທີ່ປະກອບດ້ວຍສະຫຼະສຽງຍາວ ທັງໝົດ: ກາ, ກີ, ກູ, ເກງ ເປັນຕົ້ນ ແລະ ຄໍາທີ່ປະກອບດ້ວຍສະຫຼະ ໄx, ໃx, ເxົາ ແລະ xໍາ.
- ຈຸທີ່ປະກອບດ້ວຍຕົວສະກົດເປັນຄື: ງ, ຍ, ນ, ມ, ວ ດັ່ງຄໍາວ່າ ນາງ, ສາຍ, ສິນ, ສຸມ, ແສວ.

**(2).ຄາໍຕາຍ**

ຄາໍຕາຍແມ່ນຄາໍທີ່ຜັນສຽງໄປຕາມສຽງວັນນະຍຸດບໍ່ໄດ້ ເຊິ່ງປະກອບດ້ວຍສະຫຼະສຽງສັ້ນ ແລະ ຕົວສະກົດຕາຍ (ກ, ດ, ບ) ເຊັ່ນ ເປະ, ແລະ , ດູ, ກາບ, ນາກ, ກົບ, ກັບ, ເປີ, ເສດ, ປາກ,ເປັນຕົ້ນ.

ຄໍາຕາຍນີ້ແມ່ນແບ່ງອອກເປັນ 2 ຈຸຄື:

- ຈຸທີ່ປະກອບດ້ວຍສະຫຼະສຽງສັ້ນ ຄື: ກະ, ກິ, ກຸ, ກຶ, ເກະ, ແກະ ເປັນຕົ້ນ.
- ຈຸທີ່ປະກອບດ້ວຍຕົວສະກົດຕາຍຄື: ກ, ດ, ບ ດັ່ງຄໍາວ່າ ເບີດ, ເກີບ,ເຊີກ ເປັນຕົ້ນ( ຄໍາຈໍາພວກນີ້ນັບເປັນຄໍາເອກດ້ວຍ).

ບັນດາຄໍາທີ່ປະກອບດ້ວຍສະຫຼະຕາຍ ແລະ ຕົວສະກົດຕາຍດັ່ງກ່າວນີ້ ແມ່ນບໍ່ສາມາດ ຜັນສຽງໄປຕາມໄມ້ເອກ ແລະ ໄມ້ໂທໄດ້, ເວັ້ນເສຍແຕ່ບາງຄໍາທີ່ມີສຽງໄມ້ເອກຢູ່ໃນຕົວເທົ່ານັ້ນ ່ ໃນການແຕ່ງກາບກອນ ເພິ່ນຫຼີກເວັ້ນການໃຊ້ຄໍາຕາຍລົງໃນບ່ອນທີ່ເປັນຄໍາສໍາຜັດ ອັນສໍາຄັນນັ້ນທີ່ສຸດ, ເປັນຕົ້ນແມ່ນໃນຄໍາທ້າຍຂອງວັກ, ເພາະວ່າການສໍາຜັດຄໍາ

ຕາຍມັນບໍ່ມ່ອນເທົ່າກັບການສໍາຜັດຄໍາເປັນ, ເມື່ອບໍ່ສາມາດໃຊ້ຄໍາເປັນແທ້ໆ ເພິ່ນຈຶ່ງໃຊ້ຄໍາຕາຍໃສ່ ໃນບ່ອນສໍາຜັດສໍາຄັນດັ່ງກ່າວນັ້ນ.

**(3). ຄໍາເອກ**

ຄາໍເອກແມ່ນຄາໍທີ່ປະກອບດ້ວຍວັນນະຍຸດເອກ ແລະ ປະກອບດ້ວຍຕົວສະກົດຕາຍ ກ, ດ, ບ ໂດຍນັບເປັນ

ຄາໍເອກເຊັ່ນ ທໍ່, ຜ່ານ, ຍາກ, ຝາກ, ຄ່ອຍ, ຊ່າງ, ເດັ່ນ, ລັ່ນ, ເທດ, ເສດ, ແນບ, ເປັນຕົ້ນ.

**(4).ຄໍາໂທ**

ແມ່ນຄາໍທີ່ປະກອບດ້ວຍວັນນະຍຸດໂທທັງໝົດເຊັ່ນ ຟ້າ, ໃຕ້, ນັ້ນ, ນີ້, ຍ້ອຍ, ແລ້ວ, ແກ້ວ, ກ້ອນ, ຟ້ອນ, ຊ້ອນ... ເປັນຕົ້ນ.

**ຕົວຢ່າງ**

| | |
|---|---|
| 1 31 34 | 1 311 1 |
| ຍາມເມື່ອໄກຈາກບ້ານ | ຖານຖິ່ນພູມລໍາເນົາ |
| 31 11 1 | 4 311 4 |
| ບ່ອນເຄີຍເຊົາອາໃສ | ໄດ້ຈາກໄປຄາວນີ້ |
| 11 12 1 4 | 2113 13 |
| ນານຫຼາຍປີຈະໂງໂຄ້ງ | ສະຖານເດີມບ່ອນເຄີຍຢູ່ |
| 3 3 3 23 4 | 1 1 423 1 |
| ຈາກໝູ່ເພື່ອນແລະ ພີ່ນ້ອງ | ສາມປີຂ້ອຍຊິຕ່າວຄືນ |

**ໝາຍເຫດ:**

ເລກທີ່ຂຽນຢູ່ເບື້ອງເທິງຄໍາຕ່າງໆຂອງຄໍາກອນນັ້ນ ແມ່ນໝາຍບອກລັກສະນະຂອງຄໍາແຕ່ລະປະເພດຄື:

1. ແມ່ນໝາຍເຖິງຄໍາສຸພາບ(ຄໍາກາງ)
2. ແມ່ນໝາຍເຖິງຄໍາຕາຍ
3. ແມ່ນໝາຍເຖິງຄໍາເອກ
4. ແມ່ນໝາຍເຖິງຄໍາໂທ

ຄໍາໃນຄວາມໝາຍຂອງສັນທະກະວິໝາຍເອົາພະຍາງໃນບາດຄໍາ ໃນບາງກໍລະນີ ບໍ່ໝາຍວ່າພະຍາງໜຶ່ງພະຍາງດຽວ. ດັ່ງນັ້ນ, ບາງຄໍາຈຶ່ງບໍ່ກົງກັບພະຍາງໃນຄໍາເວົ້າທົ່ວໄປ ທັງນີ້ກໍເພາະວ່າມັນຂຶ້ນກັບການບັງຄັບຂອງວິທີ ຫຼື ຫຼັກການແຕ່ງກອນ.

**ຕົວຢ່າງ:**

| | | |
|---|---|---|
| ບັດນີ້ | ຮຽມຈະຈາຖະແຫຼງຂໍ້ | ໄຂກອນກອຍກ່າວ |
| | ເປັນພາກບັ້ນ | ແໜງຊີ້ກ່າວຄະດີ |

ແຕ່ລະພະຍາງເພິ່ນຖືເປັນບາດຄຳໜຶ່ງ ແຕ່ມີກໍລະນີສອງພະຍາງເປັນບາດຄຳດຽວເຊັ່ນ: ຄະດີ, ຖະແຫຼງກໍລະນີບັງຄັບນີ້ ກວມເອົາທັງຄຳຄວບ ແລະ ຄຳຢືມ ເຊິ່ງມີຫຼາຍພະຍາງ. ຄຳປະເພດນີ້ ບາງເທື່ອກໍນັບຕາມແຕ່ລະພະຍາງແຕ່ບາງເທື່ອກໍຖືກໝົດຄຳເປັນບາດຄຳທີ່ໜຶ່ງ ແລ້ວແຕ່ລະກໍລະນີຮຽກຮ້ອງຕົວຈິງໃນເວລາແຕ່ງ.

**ຂ. ຕອນ.**

ຕອນແມ່ນຜົນຂອງການແບ່ງສ່ວນໃນແຖວໜຶ່ງໆຂອງກະວີແມ່ນໝູ່ຄຳຈຳນວນໜຶ່ງທີ່ເປັນເຄິ່ງໜຶ່ງຂອງວັກ, ກອນວັກໜຶ່ງ ແຖວໜຶ່ງເພິ່ນແບ່ງອອກເປັນສອງສ່ວນ ສ່ວນຢູ່ທາງໜ້າ ຫຼື ສ່ວນທຳອິດເພິ່ນເອີ້ນວ່າຕອນໜ້າ,ສ່ວນທີ່ເຫຼືອຮຽກວ່າຕອນຫຼັງ.ຕອນໜ້ານັ້ນບາງທີກໍ່ມີ 3ຄຳ ຫຼື 4 ຄຳ ຫຼື 5 ຄຳ ແຕ່ຖ້າຫາກມີຄຳບຸພະບົດມາຕື່ມໃສ່ອີກມັນກໍອາດຈະມີຫຼາຍກວ່ານັ້ນ. ສ່ວນຕອນຫຼັງຂອງວັກນັ້ນຕາມທຳມະດາແມ່ນມີ 4ຄຳ ຫຼື 5ຄຳ ຫຼື 6ຄຳ ເວັ້ນໄວ້ແຕ່ມີຄຳສ້ອຍມາຕື່ມໃສ່ອີກມັນຈຶ່ງມີຫຼາຍກ່ວານັ້ນ.

ຕົວຢ່າງ: ກອນທີ່ມີ 7 ຄຳໃນວັກໜຶ່ງ

| **ຕອນໜ້າ 3 ຄຳ** | **ຕອນຫຼັງ 4 ຄຳ** |
|---|---|
| ປະເທດຂ້ອຍ | ຂຶ້ນຊື່ເມືອງລາວ |
| ລວງກວ້າງຍາວ | ສຸດຕາເຫຼືອອ່ານ |
| ນ້ຳຂອງຜ່ານ | ໄຫຼຜ່ານທາງກາງ |
| ມີຫີນທາງ | ຖະໜົນສະອາດ |
| ປະເທດຊາດ | ລາວໃຫຍ່ໄພສານ |
| ເຮົາລູກຫຼານ | ເກີດມາພາຍຊ້ອຍ |
| ຄູຊູຊ່ວຍ | ສ້າງບ້ານເມືອງລາວ |
| ໃຫ້ຍືນຍາວ | ຕໍ່ໄປພາຍໜ້າ |
| ຢ່າໄດ້ຫຼ້າ | ເຂົາແທ້ໝູ່ລາວ. |

**ຕົວຢ່າງ: ກອນອ່ານ 7 ຄຳຂຶ້ນໄປ**

| | | |
|---|---|---|
| ເມື່ອນັ້ນ | ປາງຄຳຄຸ້ມ | ຄະນິງທຳທີ່ງມາກ |
| ເຫັນຮຸ່ງ | ຍາດຍອດແກ້ວ | ທຽວໃຊ້ຊາດພະອີງ |
| ໄກ່ຈັກ | ຕົກແຕ່ງປັ້ນ | ແປ່ປັ່ນເປັນໄທ |
| ເອ ຊູເລີ | ເຊີນສວງ | ຊ່ວຍຍາມຍາມແຄ້ນ |

**ຄ. ວັກ.**

ຄຳວ່າ ວັກ ແມ່ນປະໂຫຍກໜຶ່ງຂອງຄຳກອນທີ່ມີຄຳເວົ້າຄົບຈຳນວນ ແລະ ຄົບຕາມຄວາມໝາຍຂອງມັນແມ່ນໄລຍະຂອງຄຳກະວີຕອນໜຶ່ງໆທີ່ເກາະກ່າຍກັນ, ຕາມທຳມະດາກອນ ມັກມີ 7,8,9,10,11,12 ແລະ 13 ຄຳສອງຕອນໃດໃນກະວີເພິ່ນຮຽກວ່າໜຶ່ງວັກ.

ເພິ່ນແບ່ງວັກອອກເປັນ 4 ຊະນິດຄື:

( 1 ) ວັກທີໜຶ່ງ ເອີ້ນວ່າ ວັກສະດັບ
( 2 ) ວັກທີສອງ ເອີ້ນວ່າ ວັກຮັບ
( 3 ) ວັກທີສາມ ເອີ້ນວ່າ ວັກຮອງ
( 4 ) ວັກທີສີ່ ເອີ້ນວ່າ ວັກສົ່ງ

**ຕົວຢ່າງ1: ກອນອ່ານບາດໜຶ່ງ**

(1). ວັກສະດັບ: ສັບພະກອດກ້ຽວ ກອນເກົ່າມາຖະ ແຫຼງ ( ວັກ 9 ຄໍາ)

(2).ວັກຮັບ : ເທພາວະ ວາດພະນອມໄພກວ້າງ ( ວັກ 8 ຄໍາ )

(3).ວັກຮອງ : ບຸນຍວງຍັງ ເຊົາແຄນຄາວໜຶ່ງ ( ວັກ7ຄໍາ

(4).ວັກສົ່ງ :ສັງລ່ວງຜ້າຍ ຜົນບ້າກ່ອນບາ ( ວັກ 7ຄໍາ )

**ຕົວຢ່າງ2:**

| | | | | |
|---|---|---|---|---|
| - | ວັກທີ 1 | ເພື່ອນແທ້ ! | ຍາມເຈັບໄຂ້ | ຄອຍເບິ່ງບົວລະບັດ |
| - | ວັກທີ 2 | ຍາມຕິດຂັດ ! | ຄອຍພິຈານ | ຊ່ວຍຫາທາງແກ້ |
| - | ວັກທີ 3 | ເພື່ອນປອມ ! | ຍາມມີເງິນເຫັນໜ້າ | ມາເກົ້າຂາເລຍແຂ່ງ |
| - | ວັກທີ 4 | ຍາມເຈັບເປັນ ! | ໜ້າທໍ່ກ້ອຍ | ບໍ່ຫຼຽວໜ້າລໍ່າຄອຍ |

**ງ.ເຟື້ອງ.**

ເຟື້ອງແມ່ນ ໝາຍ ເອົາແຖວ(ສອງວັກ) ໃນກະວີເປັນເຟື້ອງໜຶ່ງ, ວັກທີໜຶ່ງ ແລະ ວັກທີສອງ ເພິ່ນເອີ້ນວ່າເຟື້ອງກົກ ວັກທີສາມ ແລະ ວັກທີສີ່ເພິ່ນເອີ້ນວ່າ ເຟື້ອງປາຍ.

ສອງວັກໃນກະວີເປັນເຟື້ອງໜຶ່ງ, ວັກທີໜຶ່ງ ແລະ ວັກທີສອງ ເພິ່ນເອີ້ນວ່າເຟື້ອງກົກ ວັກທີສາມ ແລະ ວັກທີສີ່ ເພິ່ນເອີ້ນວ່າເຟື້ອງປາຍ.

**ຕົວຢ່າງ:**

| | | | | |
|---|---|---|---|---|
| ເຟື້ອງກົກ | ວັກສະຫຼູ້ | : | ເຮົາອາໄສພວກພ້ອງ | ນ້ອງນຸ່ງສະຫາຍເກີ |
| | ວັກຮັບ | : | ເຂົາກໍອາໄສເຮົາ | ຈຶ່ງເປັນເມືອງບ້ານ |
| ເຟື້ອງປາຍ | ວັກຮອງ | : | ຄົນຫາກອາໄສດ້ານ | ດອມຄົນເປັນໝູ່ |
| | ວັກສົ່ງ | : | ບໍ່ມີໃຜຢູ່ຢັ້ງ | ໂທນໂທ້ຜູ້ດຽວ ໄດ້ແລ້ວ. |

**ຈ. ບາດ**

ບາດໜຶ່ງມີສອງເຟື້ອງ ສອງເຟື້ອງນີ້ໝາຍເອົາເຟື້ອງກົກ ແລະ ເຟື້ອງປາຍ

**ຕົວຢ່າງ:**

| | | |
|---|---|---|
| ເຟື້ອງກົກ | ຄັນວ່າໄດ້ຂີ່ຊ້າງ | ຢ່າລືມໝູ່ໝູໝາ |
| | ຫ່າຂະໂມຍມາລັກ | ເຫົ່າຫອນໃຫ້ມັນຢ້ານ |
| ເຟື້ອງປາຍ | ລາງເທື່ອກວາງຟານເຕັ້ນ | ຕາມດົງຊິໄດ້ໄລ່ |
| | ຄັນໝາໄດ້ຕ່ອນຊີ້ນ | ຍັງຊິໂອ້ອ່າວຄຸນ ດອກນາ. |

**ຕົວຢ່າງ:ບົດກອນ**

**ດົງໂດກແດນງາມ**

ມາເຢີ ມາດຸ່ງດົ້ນ ທ່ອງທ່ຽວຊົມດົງ
ເລາະລຽບລົງແລໂພ ມຸ້ງມອງມອນໄມ້
ເພື່ອຈະຈົດຈຳໄດ້ ດົງໃດໂດດເດັ່ນ
ເປັນດົງງາມເລີດລ້ຳ ນຳໜ້າປ່າໄພ
ທຳມະຊາດປ່າໄມ້ ດ້າວໃຫຍ່ໄພສານ
ລ້ອນແຕ່ງາມສະດຸດຕາ ປະໂຫຍດຫຼາຍເຫຼືອລົ້ນ
ຄົນທັງໂລການີ້ ມີຊີວິຍ້ອນປ່າ
ຄຸນຄ່າດົງເດັ່ນພົ້ນ ແຕ່ຄົນຮູ້ບໍ່ທໍ່ກັນ
ອັນວ່າ ດົງດ່ານດ້າວ ລາວມາກມູນມີ
ຂຽວກະຈິເຈືອຈານ ທົ່ວທັງເໜືອໃຕ້
ແຕ່ດົງໃດງາມແທ້ ເປັນດົງຍອດຍິ່ງ
ເປັນມິ່ງເມືອງເອກອ້າງ ດົງນັ້ນຊື່ໃດ ?
ຄັນໃກ້ຮຽມບິ່ງຊີ້ ມີຢູ່ດົງດຽວ
ມີສີຂຽວງາມຂຳ ກວ່າດົງທັງຄ້າຍ
ຄັນໃຜກາຍໄປ ລອງແລເຫຼືອດລ່ຳ
ເຫັນແສງທຳຍາບເຫຼື້ອມ ໃສແຈ້ງຊູ່ຍາມ
ນາມຂອງດົງແຫ່ງນີ້ ເປັນທີ່ເຄີຍຫູ
ຕັ້ງຢູ່ຊານນະຄອນຫຼວງ ບໍ່ກວາງໄກເຍີ້ນ
ໝົດທຸກຄົນເຄີຍເອີ້ນ ນາມມະກອນກ້ຽງກ່ອມ
ດົງໂດກຫອມຮື່ນເຮົ້າ ເຫັນແລ້ວຈື່ບໍ່ລືມ
ຄາວກ່ອນດົງໂດກຄື້ນ ຄ້ອຍຄັ່ງຕຶບໜາ
ຕະຫຼອດວັນຄືນມືດ ມືດມົ້ວມຸມເມົ້າ
ແຖບປ່າເຂົາແຖວນັ້ນ ເປັນປາງຮ້າງເປົ່າ
ແສນໂສກເຫງົາງ່ອມເຫງົ້າ ຄ້າງກະດ້າງເມື່ອຍກາຍ
ດຽວນີ້ ຫາຍໂສກແຄ້ນ ດົງໂດກແດນງາມ
ຕາມທີ່ຮຽມແລເຫັນ ກວ່າມະນີນິນແກ້ວ
ງາມກວ່ານາມແນວເຊື້ອ ມາລາດວງດອກ
ງາມໄຂ່ປອກເປືອກກ້ຽງ ບໍ່ທຽມເທົ່າທຽບທັນ
ງາມດວງຈັນເດັ່ນຟ້າ ສິບຫ້າຄ່ຳເດືອນເພັງ
ງາມແກ້ມນາງພອມເບັງ ບໍ່ປຸນປານໄດ້
ດົງໂດກງາມໃນເນື້ອ ຄຸນທຳລ້ຳຄ່າ
ຫາດົງໃດທຽບໄດ້ ດົງນີ້ແມ່ນບໍ່ມີ
ເພາະເພິ່ນສ້າງບ່ອນນີ້ ເປັນແຫ່ງການສຶກສາ

ເປັນມະຫາວິທະຍາໄລ ສ້າງຄູຄຸນລົ້ນ
ສ້າງໃຫ້ຄົນເປັນເຄົ້າ ດູດີຊີ້ຊ່ອງ
ສະໝອງໃສສະຫຼາດຮູ້ ຊຶນສູ້ຊອບງານ
ຫວ່ານອອກໄປຮັບໃຊ້ ຫຼາຍແຫ່ງໃນລາວ
ເປັນດວງດາວເຮືອງໃສ ໄລ່ຄວາມຈົນຈ້າ
ເອົາວິຊາຄວາມຮູ້ ຂອງຄູແຈກແຜ່
ເປັນແມ່ພິມຮອບດ້ານ ສິນທຳພ້ອມພໍ່າມີ
ນິແຫຼະ ສາເຫດຕົ້ນ ພ້ອມພໍ່າຄວນມີ
ງາມດ້ວຍຄຸນຄວາມດີ ບໍ່ຫຼູ່າສີສູນສິ້ນ
ງາມມະນີນິນນັ້ນ ຍັງມີມື້ຫຼູ່າ
ງາມບຸບຜາດອກໄມ້ ຍັງມີມື້ຮ່ວງໂຮຍ
ໂດຍທີ່ເປັນບ່ອນເຕົ້າ ເບົ້າຫຼໍ່ຄູລາວ
ດັ່ງໂດກ ແວວວາວໃສ ຕະຫຼອດໄປໄກກວ້າງ
ປະກອບການເສີມສ້າງ ສັງຄົມລະບອບໃໝ່
ສິວິໄລພາພົ້ນ ຈົນຈ້າຈາກຈອນ
ໂຈະຄຳກອນທໍ່ນີ້ ສາກອນນໍ່ຄູ
ຫາກຄຳໃດຂືນຫູ ຈົ່ງອະໄພຮຽມດ້ວຍ
ຄຳໃດສວຍສະເຫຼົ່າກ້ຽງ ສຳນຽງແມ້ນມ່ວນ
ຂໍຍົກເປັນສ່ວນຍູ້ ຄູກ້າວຕໍ່ໄປ
ຂໍໃຫ້ເປັນດອກໄມ້ ໄຫວ້ຂາບຄຸນຄູ
ຂໍໃຫ້ເປັນແຮງຊູ ຊ່ວຍຄູແລງເຊົ້າ
ຂໍໃຫ້ຄູເປັນເຄົ້າ ສຶກສາລະບອບໃໝ່
ເປັນທວນໄຟຮຸ່ງແຈ້ງ ແຍງເບື້ອງບ່ອນຈະເລີນ

**ສ. ບົດ.**

ບົດ ແມ່ນໝາຍເອົາຂອບກຳນົດ ຂອງເລື່ອງທີ່ຖືກຜູກຂຶ້ນ, ບົດອາດສັ້ນຍາວຕາມແຕ່ກຳນົດຕາມຂອບເລື່ອງທີ່ຕ້ອງການສະແດງເຊັ່ນວ່າ: ບົດໜຶ່ງອາດມີແຕ່ເຟືອງດຽວ.

**ຕົວຢ່າງ:** ຄັນຊິຖິ່ມນໍ້າລາຍ ໃຫ້ເຈົ້າຫຼິງເບິ່ງປ່ອງ
ຄັນຊິນັ່ງຢ່ອງຍໍ້ ໃຫ້ຫຼຽວເບິ່ງຫວ່າງຂາ

ຕົວຢ່າງ 2:

ຜັກອີ່ເຕີຍ ຕົ້ນຕໍ່າໃບດົກ
ກົກບໍ່ທັນຝັງແໜ້ນ ສັງມາຈິຈູມດອກ
ຮາກບໍ່ທັນຢັ່ງພື້ນ ສັ່ງມາປົ້ນປົ່ງໃບ

ຕົວຢ່າງ 3:

ບາງເທື່ອ, ບົດໜຶ່ງອາດຍາວຫຼາຍກໍໄດ້ເຊັ່ນ: ເລື່ອງ ສັງສິນໄຊ, ການະເກດ, ສຸລິວົງ ແລະ ອື່ນໆ.

ນອກຈາກພາກສ່ວນຫຼັກທີ່ວ່າມາແລ້ວ ໃນສັນທະກະວີ ຍັງມີພາກສ່ວນເສີມອີກຄື: ຄຳບຸບພະບົດ ແລະ ຄຳສ້ອຍ.

## 2.2 ພາກສ່ວນເສີມ

### ກ. ຄຳບຸບພະບົດ.

ຄຳບຸບພະບົດ ແມ່ນຄຳທີ່ຕື່ມໃສ່ທາງໜ້າໃນວັກໜຶ່ງຂອງບົດກະວີ ເພື່ອເຮັດໜ້າທີ່ອາລາມພະບົດ, ເຊື່ອມແຊກ ຫຼື ກ່າຍຄວາມລະຫວ່າງວັກ. ເພື່ອງ ຫຼື ບາດ ໃຫ້ໄດ້ຄວາມໝາຍຈະແຈ້ງຕື່ມ ຄຳເຫຼົ່ານີ້ປະເພດຄຳ: ຍາມເມື່ອ, ເມື່ອນັ້ນ, ບັດນີ້, ຄັນວ່າ ແລະ ຖ້າວ່າ...

**ຕົວຢ່າງ:**

| | | |
|---|---|---|
| <u>ເມື່ອນັ້ນ</u> | ລົມຕ່າວມ້າ | ເຮວຣີບເມືອບົນ |
| | ສຽງຄະດີກອນ | ກ່າວນາງນົງໜ້າ |
| <u>ກັບທັງ</u> | ສີພົນເຈົ້າ | ສອນຕານລ້ານມາດ |
| | ເປັນລູກເຫງົ້າ | ແຖນຟ້າຜ່ານເມືອງ |
| <u>ດີແຕ່</u> | ນາຍຄົວຍ້າຍ | ພານທອງຖວາຍລາດ |
| | ພະບາດເຈົ້າ | ສະເຫວີຍແລ້ວເລີກທະໄລ |
| <u>ຜໍ່ເຫັນ</u> | ວັນເຮື່ອເຂັ້ມ | ໄຂທິບບົວລະພາ |
| | ສາຍາຍົນ | ລ່ວງລົງຄາຄ້ອຍ ( ສິນໄຊ ). |

### ຂ. ຄຳສ້ອຍ.

ຄຳສ້ອຍ ກົງກັນຂ້າມກັບຄຳບຸບພະບົດ, ແມ່ນຄຳທີ່ຕື່ມໃສ່ທາງຫຼັງຂອງວັກໃດວັກໜຶ່ງຂອງບາດກະວີເພື່ອເນັ້ນ ຫຼື ຢ້ຳຄວາມໃຫ້ໜັກແໜ້ນຂຶ້ນຕື່ມ. ຄຳເຫຼົ່ານີ້ແມ່ນປະເພດ: ແດ່, ເນີ, ເອີຍ, ເຖີ້ນ, ເຍີ...ຫຼາຍສົມຄວນຢູ່ໃນຕຳແໜ່ງຄຳສ້ອຍ.

**ຕົວຢ່າງ:**

| | | | |
|---|---|---|---|
| ເມື່ອນັ້ນ | ທົກພີ່ນ້ອງ | ຮູ້ຮ່ອມຮອຍລະທັດ | |
| | ເຫັນແທ້ພູມີເນົາ | ມືດມົນມົວໃບ້ | |
| ເຂົາຈຶ່ງ | ປຸນຄຳຮ້າຍ | ຫາໂທນລັກລອບ | |
| | ພໍ່ຢ່າຊັກເງື່ອນຖ້ອຍ | ຄຳຮ້າຍຕໍ່ຕູ | ແດ່ນາ |
| ຊອບເມື່ອ | ໄດ້ລາບລົ້ນ | ໂດຍປະໂຫຍດດູຂອງ | ເມື່ອໃດ |
| | ພໍ່ຈິ່ງຄອຍຄອງສຸກ | ເຊື່ອຕູຕົງເກົ້ອ | |
| ເມື່ອນັ້ນ | ພາຍຫົນຮູ້ | ຍິນດີຮັບຮີບ | |
| | ເຈົ້າຢ່າຟ້າວ | ຟັງຂ້າຊ່າງປອງ | ກ່ອນເທີ້ນ |
| ເລີຍເລົ່າ | ພາກທີ່ນັ້ນ | ທູນທອດເຮັງໂຍ | |
| | ອາການເຫັນ | ເພດໄພພະອົງໃບ້ | |
| ດັ່ງຂ້າ | ພິຈານແຈ້ງ | ໃນກົງຖ້ວນທີ່ | |

ອັນວ່າ ຫີກພີ່ນ້ອງ ດີຖ້ອນຖ້ານບິນ

## 3.ຫຼັກຄຳປະຈຳບ່ອນ ແລະ ການເນື່ອງສຽງຂອງກອນ.

ຄຳປະຈຳບ່ອນ ແມ່ນຫຼັກການແຕ່ງກອນ,ແມ່ນລະບຽບຂອງການວາງຄຳໃນການແຕ່ງກອນ ແລະ ເປັນຫຼັກການຕາຍຕົວ.ຫຼັກຄຳປະຈຳບ່ອນແມ່ນຈັງຫວະໃນການເດີນກອນ, ຄຳປະຈຳບ່ອນຖືກກຳນົດໄວ້ໃນແຕ່ລະວັກຢ່າງຕາຍຕົວ ຫຼື ໃຫ້ສຽງເນື່ອງກັນ, ເຮັດໃຫ້ມີຄວາມມ່ວນ, ອ່ານ ຫຼື ລຳງ່າຍ.

ຫຼັກຄຳປະຈຳບ່ອນ ແມ່ນເວົ້າເຖິງບາດຄຳໃນພາກສ່ວນຫຼັກ, ທີ່ປະກອບສຽງວັນນະຍຸດໃນແຕ່ລະວັກຂອງກອນ. ຄຳກອນບາດໜຶ່ງທີ່ມີ 4 ວັກ, ວັກໃດກໍ່ມີ 7 ຄຳ ( ບໍ່ນັບຄຳບຸບພະບົດ ແລະ ຄຳສ້ອຍເຂົ້ານຳ ). ກອນບາດໜຶ່ງມີ 28 ຄຳ ໃນຈຳນວນຄຳທັງໝົດ 28 ຄຳນີ້: ຕ້ອງມີຄຳເອກ 6 ຄຳ, ຄຳໂທ 5 ຄຳ ແລະ ຄຳກາງ ( ຄຳສາມັນ ) 17 ຄຳ. ຢູ່ປະຈຳບ່ອນຂອງມັນຈະຍ້າຍໄປບ່ອນອື່ນບໍ່ໄດ້, ກອນທີ່ມີ 28 ຄຳນີ້ ເພິ່ນເອີ້ນວ່າກອນກະທັດຮັດ. ດັ່ງໂຄງຮ່າງຕໍ່ໄປນີ້

**ໂຄງຮ່າງ**

o o◌່ o◌້ o o◌່ o o

o o o o◌່ o o o◌້

o o o◌້ o o o o◌່

o o◌່ o◌້ o o◌່◌້ o◌່ o

**ເພິ່ນເອີ້ນຄຳປະຈຳບ່ອນວ່າ**

| | | | | | | | |
|---|---|---|---|---|---|---|---|
| ວັກທີ 1 ວັກສະດັບ | ກາງ | ເອກ | ໂທ | ກາງ | ເອກ | ກາງ | ກາງ |
| | o | o | o | o | o | o | o |
| ວັກທີ 2 ວັກຮັບ | ກາງ | ກາງ | ກາງ | ເອກ | ກາງ | ກາງ | ໂທ |
| | o | o | o | o | o | o | o |
| ວັກທີ 3 ວັກຮອງ | ກາງ | ກາງ | ໂທ | ກາງ | ກາງ | ກາງ | ເອກ |
| | o | o | o | o | o | o | o |
| ວັກທີ 4 ວັກສົ່ງ | ກາງ | ເອກ | ໂທ | ກາງ | ໂທ | ເອກ | ກາງ |
| | o | o | o | o | o | o | o |

ເມື່ອເຮົາເອົາຄຳເວົ້າມາລົງໃສ່ຕາມຫຼັກສຽງເອກ, ສຽງໂທຕາມຂ້າງເທິງນັ້ນພວກເຮົາກໍ່ຈະໄດ້ກອນກະທັດຮັດ ມີວັກລະ 7 ຄຳ ໂດຍທີ່ບໍ່ທັນໄດ້ເອົາຄຳບຸບພະບົດ ແລະ ຄຳສ້ອຍຕື່ມໃສ່ ເຊັ່ນ:

**ຕົວຢ່າງ:**

ຮຽນຮ່ວມຫ້ອງ ຫົນແຫ່ງດຽວກັນ
ສາຍສຳພັນ ແຕ່ຫຼັງຄາວກີ້
ຍັງຝັງແໜ້ນ ໃນໃຈເຮົາຢູ່
ຄອຍຊຸກຍູ້ ຮຽນຮູ້ຮ່ວມກັນ

ກອນແບບນີ້ແມ່ນແຕ່ງຖືກຕາມຫຼັກການ ແຕ່ບໍ່ມ່ວນປານໃດ ເພາະມັນບໍ່ສະແດງອອກໃຫ້ເຫັນໝົດທຸກຄວາມຄິດຂອງເພິ່ນຢາກເວົ້າ, ຖ້າຢາກໃຫ້ມ່ວນ ແລະ ຄົບຖ້ວນກວ່ານີ້ເພິ່ນກໍ່ເອົາຄຳບຸບພະບຸດ ແລະ ຄຳສ້ອຍຕື່ມໃສ່ເພື່ອໃຫ້ມັນເປັນກອນຂະຫຍາຍກວ້າງ.

**ຕົວຢ່າງ** :

ເຮົາເຄີຍ ຮຽນຮ່ວມຫ້ອງ ຫົນແຫ່ງດຽວກັນ
ມັນແມ່ນ ສາຍສຳພັນ ແຕ່ຫຼັງຄາວກີ້
ເຊິ່ງວ່າ ຍັງຝັງແໜ້ນ ໃນໃຈເຮົາຢູ່
ໝູ່ເພື່ອນ ຄອຍຊຸກຍູ້ ຮຽນຮູ້ຮ່ວມກັນ

ໃນກໍລະນີທີ່ເຮົາຊອກຫາຄຳປະຈຳບ່ອນບໍ່ໄດ້ ກໍ່ຕ້ອງໃຫ້ຄຳປະຈຳບ່ອນນັ້ນໆໃກ້ຄຽງກັນ ໂດຍສະເພາະສຽງເອກ , ສຽງໂທຄື:

ຕົວຢ່າງ:

1. ( ເຮົາຈັກ ) ພາກເພື່ອນໄວ້ ພໍແຕ່ສາມເດືອນ
( ສູຈິ່ງ ) ເອົາກັນຫອມເຫວີ ຢູ່ຄອງຄອຍຖ້າ
( ເມື່ອນັ້ນ) ເສນານ້ອມ ມັດສະການພ້ອມພາດ
( ຂໍໃຫ້ ) ພູວະນາດເຈົ້າ ເດີມດັ້ງດັ່ງປະສິ່ງ ( ແດ່ທ້ອນ)

2. ສັບພະກອດກ້ຽວ ກອນເກົ່າມາຖະແຫຼງ
ເທພາວະ ອາດພະນອມໄພກວ້າງ
ບຸນຍວງຍັ້ງ ເຊົາແຄນຄາວໜຶ່ງ
ສັງລ່ວງຜ້າຍ ຜົນບ້າກ່ອນບາ

3. ( ຫຼືງເຫັນ ) ໄມ້ລ່າວລິ້ມ ລຽນຮ່ອມເຂົ້າຮອມ
ພູທອນເລາະ ລຽບພະນອມນຳນ້ອງ
ເຫັນຜາກວ້າງ ເຂົ້າຄຳຄ້ອຍຄ່ຳ
ອິນແຕ່ງຕັ້ງ ດູເຮື້ອງຮຸ່ງເຮືອງ

4. ໃນເຂດນັ້ນ ຜາພາກພູມສັນຖານ
ເອົາກັນມາ ຜໍ່ແລເລັງຢັ້ງມ
ຍິນໆຍ້ອງ ຍໍຄຳຄາມມ້າ
ບາກ່ຽວໃກ້ ສະຫງວນແກ້ວສວາກສີ

**ສັງເກດ, ຈາກຕົວຢ່າງທີ່ຍົກໃຫ້ເຫັນຂ້າງເທິງນັ້ນເຮົາເຫັນໄດ້ວ່າ:**

**1) ຄຳກາງ:** ແມ່ນຄຳທີ່ບໍ່ບັງຄັບອາດເປັນສຽງສາມັນດັ່ງ: ເສນາ ໃນ ເສນານ້ອມ ມັດສະການພ້ອມພາດ, ອາດເປັນສຽງເອກ ຫຼື ສະກົດ ກ ດ ບ. ດັ່ງ ພາກ ໃນ: ເຮົາຈັກພາກເພື່ອໄວ້ ພໍແຕ່ສາມເດືອນ. ຫຼື ອາດຈະເປັນສຽງໂທດັ່ງ: ໄມ້ ໃນ: ຫຼິງເຫັນໄມ້ລ່າວລີ້ມລຽນຮ່ອມເຂົ້າຮອມ ແລະ ຄ້ອຍ ໃນ: ເຫັນຜາກອ້າງ ເຂົ້າຄຳຄ້ອຍຄ່ຳ.

**2) ຕົວສະກົດ:** ກ ດ ບ ແທນໃຫ້ສຽງເອກໄດ້ດັ່ງ ພາບ, ນາດ, ໃນຕົວຢ່າງທີ 3 ກອດວາດ ໃນຕົວຢ່າງທີ 4 ແລະ ລຽບ ໃນຕົວຢ່າງທີ 5.

**3) ບາດຄຳ:** ບາດຄຳຢູ່ໃນວັກອາດເພີ່ມຂຶ້ນໄດ້ບໍ່ຈຳກັດສະເພາະມີແຕ່ 7 ຄຳ, ດັ່ງນັ້ນໃນວັກຮັບຂອງຕົວຢ່າງທີ 3 ຕອນຕົ້ນມີເຖິງ 5 ຄຳ ແຕ່ສຳຄັນໃຫ້ຮູ້ການແບ່ງຕອນ.

## 4.ຫຼັກການສຳຜັດຂອງກອນ.

ຄຳວ່າ ສຳຜັດແປວ່າ: ຖືກຕ້ອງກັນຄ່ອງກັນ, ຊູນກັນ, ຄ່ອງກັນ, ເກາະກ່າຍກັນລະຫວ່າງຄຳກັບຄຳຢູ່ໃນກອນທາງດ້ານສຽງສະຫຼະ ຫຼື ສຽງພະຍັນຊະນະຢູ່ໃນວັກ ຫຼື ນອກວັກ , ການສຳຜັດພາຍໃນວັກດຽວກັນຮຽກວ່າ: ສຳຜັດໃນ ແລະ ການສຳຜັດນອກຮຽກວ່າ : ການສຳຜັດນອກ.

### 4.1ການສຳຜັດໃນ.

ການສຳຜັດໃນ: ແມ່ນການເກາະກ່ຽວກັນຂອງສະຫຼະ ຫຼື ພະຍັນຊະນະທີ່ຢູ່ໃນວັກດຽວກັນ, ເພື່ອໃຫ້ບົດກະວີຄ່ອງ ແລະ ມ່ວນອອນຊອນເພີ່ນເອີ້ນວ່າ: ການສຳຜັດໃນ , ຖ້າການສຳຜັດເກີດຈາກສະຫຼະ ເພື່ອຮຽກວ່າ: ສຳຜັດສະຫຼະ, ຖ້າສຳຜັດເກີດຈາກສຳຜັດພະຍັນຊະນະ ເພີ່ນຮຽກວ່າ: ສຳຜັດພະຍັນຊະນະ.

#### 4.1.1 ສຳຜັດສະຫຼະ.

ສຳຜັດສະຫຼະ ໝາຍຄວາມວ່າເອົາຄຳທີ່ໃຊ້ສະຫຼະດຽວກັນ ຫຼື ຄ້າຍຄືກັນມາວາງລົງໃນບ່ອນຄຳສຳຜັດກັນໃນວັກດຽວກັນ ຫຼື ໃນວັກຕໍ່ໄປ.

ຕົວຢ່າງ:

| | |
|---|---|
| ວັນຄ່ຳຄ້ອຍ | ລົມລ່ວງເຂົາຄອຍ |
| ວອຍໆພັດ | ປ່າດອຍດົງຄ້ອຍ |

ຕົວຢ່າງ:ຂ້າງເທິງພວກເຮົາເຫັນໄດ້ວ່າ: ທຸກຄຳທີ່ໃຊ້ສະຫຼະດຽວກັນ ( xອຍ ) ແມ່ນສຳຜັດກັນ.

ໃນເມື່ອຊອກສຽງທີ່ມີສຽງສະຫຼະດຽວກັນ ເພື່ອໃຫ້ສຳຜັດກັນບໍ່ໄດ້ແທ້ໆ, ເພີ່ນກໍໃຊ້ຄຳທີ່ມີສຽງສະຫຼະຄ້າຍຄືກັນມາສຳຜັດກັນກໍໄດ້, ແຕ່ວ່າການໃຊ້ສະຫຼະສຽງສັ້ນມາສຳຜັດກັບສະຫຼະສຽງຍາວນັ້ນມັນພາໃຫ້ກາບກອນບໍ່ມ່ວນປານໃດ ຕ້ອງໃຊ້ສຽງສະຫຼະດຽວກັນສຳຜັດກັນ.ເມື່ອຊອກຄຳທີ່ມີສະຫຼະດຽວກັນບໍ່ໄດ້ແທ້ໆເພີ່ນຈຶ່ງໃຊ້ເປັນພິເສດເທົ່ານັ້ນ.

❖ ສຳຜັດສະຫຼະທີ່ເພີ່ນນິຍົມໃຊ້ກັນມີຢູ່ 4 ຊະນິດຄື: ສຳຜັດຄູ່, ສຳຜັດທຽມແອກ, ສຳຜັດຄີກ ແລະ ສຳຜັດຮຽງຄູ່.

**ກ). ສຳຜັດຄູ່ ຫຼື ສຳຜັດຄຽງ.**

ແມ່ນກຳນົດເອົາສຽງສະຫຼະດຽວກັນສຳຜັດຮຽງກັນຢູ່ຕິດກັນ 2 ຄຳໃນວັກດຽວກັນ.

**ຕົວຢ່າງ 1:**

| | |
|---|---|
| ຄວາມດີມີປະມານໜ້ອຍ | ຫາກທຳໄປຫຼາຍເທື່ອ |
| ເພີ່ນວ່າຄົນຜູ້ນັ້ນ | ດີແທ້ແນ່ນອນ |
| ເໝືອນດັ່ງນ້ຳຍ້ອຍ | ໜ້ອຍໜຶ່ງແຕ່ຫຼາຍທີ |

ອ່າງໃຫຍ່ໄຫໄພເຮົາ		ໂຕ່ງເອົາຫາກເຕັມໄດ້

**ຕົວຢ່າງ 2:**

ພີ່ໂສກກັ້ນ		ດິ້ນດັ່ນຝັນຫາ

ອາໄລຄຶດ		ຮ່ຳຮອນກອນກ້ຽງ

ວັນອ່ຽງຄ້ອຍ		ສັນດອຍວອຍວິ່ງ

ພີ່ຄະນຶງຮອດນ້ອງ________________ໜອງໄໜ້ເມື່ອຍມະໂນ

**ຕົວຢ່າງ 3:**

ເຮົາພີ່ນ້ອງຄວນຮັກຫໍ່____________ຫໍພັກພຽນຖະໜອມ

ປັດກວດດູໃຫ້ສວຍສິດ____________ງິດງາມເລີງເລື້ອຍ

ຢ່າໃຫ້ມີໜອງເສົ້າ______________ເງົາດຳລາຍກ່ຳ

ຕິດແປດຝາ__________________ໜ້າທາງເຂົ້າຫ້ອງນອນ...

ຕົວຢ່າງ 4:

ຄວາມດີບໍ່ຊື້_________________ພີ້ແພ່ວາງຂາຍ

ຈຳໜ່າຍຕີລາຄາ		ດັ່ງຄືສິນຄ້າ

ມັນແມ່ນການກະທຳແທ້		ແນວດີມີປະໂຫຍດ

ເຄື່ອງພິສູດໃຫ້ຮູ້		ເວລານັ້ນກັ້ນເອົາ ທ່ານເອີຍ.

**ຂ). ສຳຜັດທຽມແອກ.**

ສຳຜັດທຽມແອກ ແມ່ນການກຳນົດເອົາສຽງສະຫຼະສຽງດຽວສອງຕົວ, ຕົວໜຶ່ງຢູ່ທາງໜ້າ ແລະ ຕົວໜຶ່ງຢູ່ທາງຫຼັງ ໂດຍມີສະຫຼະອື່ນຂັ້ນກາງ 1 ຄຳ ( ຄູ່ຂັ້ນ ) ຢູ່ປາຍຂອງແຕ່ລະວັກຮຽກວ່າ: ສຳຜັດທຽມແອກ.

**ຕົວຢ່າງ 1:**

ເພິ່ນວ່າ	ເຮົານຸ່ງຜ້າ		ແພໄໝຜືນໃໝ່

	ປະດັບມາດກ້ຽວງາມ		ຍ້ອຍລ່າມຍອຍ

ກໍບໍ່	ປານຜູ້ເອ້		ວິຊາໃສ່ເຮືອງໃສ

ວິຊາ	ມີໃນຕົວ		ສະຫ່າງພໍໃຜພໍ້

**ຕົວຢ່າງ 2:**

ເຫັນດອກໄມ້		ກ້ານກ່າຍນາງກາຍ

ກອງກັນສັບ		ດອກຊອນແຊມຊ້ອນ

ພູທອນທ້າວ		ເດີນດຽວດັ້ນດ່ຽວ

ຂ້າມຂອບຂັ້ນ　　　ເມືອຊັ້ນຊ່ອງຊັນ

**ຕົວຢ່າງ 3:**

ຫຼືງເຫັນ　ໄມ້ລ່າວລິ້ມ　　ລຽນຮ່ອມເຂົາຮອມ

ພູທອນເລາະ　　ລຽບພະນອງນຳນ້ອງ

ເຫັນຜາກວ້າງ　　ເຂົາຄຳຄ້ອຍຄ່ຳ

ດອນນັ້ນອິນແຕ່ງຕັ້ງ　　ດູເຮື້ອງຮຸ່ງເຮືອງ

**ຫຼື**

ທຸກກໍທຸກ　ເພາະຢາກໄດ້　　ຢ່າໃຫ້ທອດທໍລະມານ

ທຸກເພື່ອກາຍຍາວນານ　　ຊິຜ່ານກາຍຄວາມແຄ້ນ

ຈະເກີດແດນຊາຕາຂຶ້ນ　　ບໍ່ຂືນທາງກ້າວຢ່າງ

ສຳເລັດກິດຫວ່າງນີ້　　ທີ່ໜ້າຊີລ່າເລີງ

ຕົວຢ່າງ **4**:

ງາມແມ່ນ້ຳ　　ຫ້ວຍຮ່ອມຜາຮອມ

ໄປທ່ຽວເລາະ　　ປ່າດົງດອນດົ້ງ

ຫົງບິນຜ້າຍ　　ເຂົາກູຂັນກູ່

ແມງຜູ່ນ້ອຍ　　ບິນສ້ອຍສ່ວນສອຍ

## ຄ). **ສຳຜັດຄຶກ ຫຼື ສຳຜັດທຽບຄຽງ.**

ສຳຜັດຄຶກແມ່ນການກຳນົດເອົາສຽງສະຫຼະດຽວກັນ ຫຼື ຄ້າຍຄືກັນຮຽງກັບຢູ່ 3 ຄຳໃນວັກດຽວກັນ.

**ຕົວຢ່າງ1:**

ຮາມຫ່າງຮ້າງ　　ນາງນາດນົງຄານ

ລາໄລ່ໄປ　　ໃຝ່ຝັນຫານ້ອງ

ສອງປີແລ້ວ　　ອ້າຍໄລໄກຫ່າງ

ໄກຈາກເຈົ້າ　　ເຫງົ້າເສົ້າຄິດເຖິງ

**ຕົວຢ່າງ 2:**

ອ້າຍນີ້ ທຸກຍາກລ້ຳ　　ດຳກ່ຳທັງຈົນ

ສິນລະວິນທົນທ້ອງ　　ອັງໃນໃຈອ້າຍ

ຈຳເປັນໄດ້　　ໄປໄກເຫີນຫ່າງ

ຈິ່ງໄດ້　ພັດພາກຂ້າງ　　ນາງຮ້າງຫ່າງໜີ້

**ຕົວຢ່າງ 3:**

ຄິດຮອດຊູ້　　ຜູ້ຢູ່ທາງໄກ

ຫົວໃຈຫັກ　　ຫວ່າງວາງທາງອ້າຍ

ເຫັນຄົນເດີນມາຜ້າຍ ກາຍທາງກໍ່ວ່າແມ່ນ

ໃຈພີ້ແຂວນອ້ອນຕ້ອນ ນຳນ້ອງບໍ່ລືມ

**ຕົວຢ່າງ 4:**

ທຸກຍາກລ້ຳ ດຳກ່ຳທັງຈົນ

ສົນລະວົນທົນທຸກ ອັ່ງໃນໃຈອ້າຍ

ຈຳເປັນໄດ້ ໄປໄກເຫີນຫ່າງ

ພັດພາກຂ້າງ ນາງຮ້າງຫ່າງໜີ

**ງ). ສຳຜັດຮຽງຄູ່( ສຳຜັດທົບຄຽງ )**

ແມ່ນສຳຜັດສະຫຼະສອງໂຕຈັບຄູ່ກັນ( ສອງຄູ່ )ຢູ່ຕໍ່ກັນໃນວັກດຽວກັນສຳຜັດກັນໄປເປັນຄູ່ຕາມສຽງຂອງໃຜມັນ ຫຼື ວ່າແມ່ນການກຳນົດເອົາສອງສະຫຼະຮຽງກັນສະຫຼະລະສອງຄຳ.

**ຕົວຢ່າງ 1:**

ນັບແຕ່ລາວເຮົາຕັ້ງ ສັງຄົມສົມຊື່

ສ້າງປະເທດໃໝ່ໄດ້ ແນວແກ້ວໜ່ວຍມະນີ

ດ່ຽວນີ້ບໍ່ໂສກເສົ້າ ເວົ້າມ່ວນນວນຫູ

ຢູ່ຍອດອູ່ດອນໂຂງ ທົ່ງພຽງວຽງກວ້າງ

**ຕົວຢ່າງ 2:**

ນັບແຕ່ມາໃກ້ນ້ອງ ທອງປອນນອນປ່ຽວ

ໃຈພີ່ຍັງກ່ຽວຝັ້ນ ພັນກ້ຽວໜ່ຽວນຳ

**ຕົວຢ່າງ 3:**

ຟັງເຍີນ້ອງ ທອງເຕົາເບົ້າລ່ຽນ

ພີ່ຊິພຽນແຕ່ງແຕ້ມ ແຖມຂໍ້ຕໍ່ກອນ

**ຕົວຢ່າງ4:**

ອ້າຍນີ້ຄິດຮ່ຳຮ້ອນ ນອນນັ່ງຫວັງດອມ

ຢາກຮ່ວມຮຽງຄຽງນາງ ຍ່າງເດີນຄິດເຫັນໜ້າ

ຍາມຫຼັບຕາຝັນເພີ້ ເພີໃຈອ້າຍຄິດຮ່ຳ

ຝັນຕົກຮ່ຳອ້າຍບໍ່ຢ້ານ ຂານສູ້ສູ່ແນວ ຊອບແລ້ວ

**4.1.2. ສຳຜັດພະຍັນຊະນະ.**

ສຳຜັດພະຍັນຊະນະ ແມ່ນການກຳນົດເອົາຄຳທີ່ໃຊ້ພະຍັນຊະນະຕົວດຽວກັນ ຫຼື ອາດອອກສຽງຄ້າຍຄືກັນ. ສຳຜັດຮຽງກັນໄປຢູ່ໃນວັກດຽວກັນ ນັບແຕ່ສອງຄຳຂຶ້ນໄປຮຽກວ່າ: ສຳຜັດລຽນອັກສອນ, ບາງເທື່ອອາດມີພະຍັນຊະນະອື່ນມາຂັ້ນກາງໄວ້ໜຶ່ງຄຳ ຫຼື ສອງຄຳ ຮຽກວ່າ: ສຳຜັດຂັ້ນອັກສອນ ຫຼື ( ສຳຜັດທຽມແອກ ) ຫຼື ເວົ້າອີກຢ່າງໜຶ່ງວ່າ: ພະຍັນຊະນະນັ້ນໝາຍເອົາພະຍັນຊະນະຕົວດຽວກັນ ຫຼື ຈຳພວກທີ່ມີສຽງຄ້າຍຄືກັນເຊິ່ງຮຽກວ່າ: ອັກສອນຄູ່ເຊັ່ນ:

ຕົວຂ - ຄ

ຕົວ ຖ - ທ

ຕົວ ສ - ຊ

ຕົວ ຜ - ພ

ຕົວ ຝ - ຟ

ຕົວ ຫ - ຮ

ຕົວ ຫຼ - ລ

ຕົວ ຫວ - ວ

ຕົວ ຫຍ - ຍ

ຕົວ ໝ - ມ

ຕົວ ໜ - ນ

ຕົວ ຫງ - ງ ເຫຼົ່ານີ້ເປັນຕົ້ນ.

**ກ. ສຳຜັດລຽນອັກສອນ ຫຼື ສຳຜັດຄູ່.**

ສຳຜັດລຽນອັກສອນ ຫຼື ສຳຜັດຄູ່ ແມ່ນກຳນົດເອົາພະຍັນຊະນະຕົວດຽວກັນ ຮຽງກັນຢູ່ 2 ຄຳ, ບໍ່ມີພະຍັນຊະນະອື່ນມາຂັ້ນ.

**ຕົວຢ່າງ 1 :**

ປີເກົ່າຄະເຄື່ອນຍ້າຍ ຍົວລະຍາດກາຍໄປ
ປີເກົ່າໄລລາໜີ ປ່ຽນໄປຮາມຮ້າງ
ປີໃໝ່ມາແຖມຊ້ອນ ເຊີຍອິງອວນເກົ່າ
ນອນນັ່ງແທ່ນກັ້ງ ກອມພື້ນແຜ່ນລາວ

**ຕົວຢ່າງ 2 :**

ຟັງຍິນຟ້າສະໜັ່ນນ້າວ ເບີຍເບີກບົວລະພາ ພຸ້ນເຍີ
ນັບແຕ່ພູທອນລຸນ ນະລາດລິງລາໄທ້
ບາກໍທອມພົນຜ້າຍ ເວຫາຫຼາຍຫຼັ່ນ
ມະໂນນາດທ້າວ ທົ່ງຝົ້ນຝ່າຍຫຼັງ

**ຕົວຢ່າງ 3:**

ອ້າຍເຫັນນ້ອງນັ່ງຄົ້ນ ຮຽນຮ່ຳຢູ່ຄົນດຽວ
ໜ່ອຍກໍ່ຫຼົ່ຽວແລມອງ ສ່ອງພະນາໄກກວ້າງ
ຈັກຫ່ວງຫຍັງນໍຫຼ້າ ຕາລອຍເສົ້າຊຶມ
ມື້ເຈົ້າຈັບອ່ານປຶ້ມ ແຕ່ໃຈເຈົ້າບໍ່ອ່ານນຳ

**ຕົວຢ່າງ 4**: ຄືນນັ້ນ ເດືອນເດັ່ນພົ້ນ ເພັງພ່າງພາຍບົນ
ເບີຍເບີກບານເບັງໄຂ ເຄື່ອນຄີງປະຄອງຍ້າຍ
ກ້າວກ່າຍ ທັນວາເວົ້າງ ເວວົ້ນໜາວໜ່ວງ.

ດວງດາວ ເດຍລະດາດຟ້າ ລຽນລ້ອມເລື່ອນມາ.

**ຂ. ສຳຜັດທຽມຄູ່.**

ສຳຜັດທຽມຄູ່ ແມ່ນສຳຜັດເອົາພະຍັນຊະນະຕົວດຽວກັນຮຽງກັນຢູ່ 3 ຄຳ.

**ຕົວຢ່າງ 1 :**

ນັບແຕ່ ເນົາແນບຄ້າງ ຄືນຄອບບວງຈັນ
ກຳຫາກ ເນີນນານເຫີງ ຫ່າງເຫີນໄກບ້ານ
ເນົາຄ້າງຄາ ຄາວປີເປັນເຂດ
ຄິດຢາກ ຄະເຄື່ອນໂຄ້ງ ຄືນບ້ານບ່ອນເດີມ

**ຕົວຢ່າງ 2 :**

ພະກຳ ຄິດຮ່ຳຮ້ອນ ຮີມຍິ່ງແສນຢຳ
ເພາະເພື່ອ ສອງແພງພັດ ພາກັນໄກລ້ຳ
ຄອນຄອນນ້ຳ ຊິນລະຫິນອງອາບ
ຄິດເຮ່ງຮ້ອນ ແສນຊັ້ນແສບຂະໜອງ

**ຕົວຢ່າງ 3:**

ນັບແຕ່ຈອນຈາກເຈົ້າ ຕົນແມ່ມານດາ ມາແລ້ວ
ຈາກເພື່ອການສຶກສາ ຊອກວິຊາຄວາມຮູ້
ຮຽນເປັນຄູສອນຊີ້ ສິດລາວໃຫ້ກ້າວເກັ່ງ
ຫຼາຍເດືອນປີໜີຈາກບ້ານ ບິນເບື້ອງເກົ່າຫຼັງ

**ຄ. ສຳຜັດທຽມລິດ**

ສຳຜັດທຽມລິດ ແມ່ນກຳນົດເອົາພະຍັນຊະນະຕົວດຽວກັນຮຽງກັນຢູ່ 4 ຄຳ.

**ຕົວຢ່າງ 1 :**

ບັດນີ້ ຈອນຈອບເຈົ້າ ຈອມມິ່ງແມນໝາຍ
ສາຍໃຈຮັກ ຮ່ຳຮອນຫານ້ອງ
ນາງຜູ້ ແນວນາມເນື້ອ ນິ່ງນວນຄວນຄ່າ
ມາຫັນ ຫໍແຫ່ງຫ້ອງ ຫາຍງ້ວງສວ່າງກະສັນ

**ຕົວຢ່າງ 2 :**

ພີ່ຈາກເຈົ້າ ເຈົ້າພີ່ພອຍຮຽນ
ຂວັນຢ່າອອນອ່ອນອອນ ອິງແກ້ວ
ຈຽມແຕ່ເຮົາໝາຍໝັ້ນ ໝາຍມາສົມສູ່
ຊົມຊື່ນແລ້ວ ລາແລ້ວພີ່ຈາກເມືອ

**ຕົວຢ່າງ 3:**

ໃຈພີ່ຄິດໄຄ່ນ້ອງ　　ນາງນາດນິງຄານ
ຢ້ານມີຄົນມາໝາຍ　　ໝ່າຍມາຫານ້ອງ
ສາຍຕາມອງຍັງຟ້າ　　ເມຄາລອຍເລື່ອນ
ເໝືອນດັ່ງໃຈອ້າວໂອ້　　ອິມເອື້ອມບໍ່ເຖິງ　ເຈົ້າແລ້ວ

**ງ. ສໍາຜັດທຽບລິດ.**

ສໍາຜັດທຽມລິດ ແມ່ນກໍານົດເອົາພະຍັນຊະນະຕົວດຽວກັນ ຮຽງກັນຢູ່ 5 ຄໍາ ຂຶ້ນໄປ.

**ຕົວຢ່າງ 1 :**

ເຈົ້າຜູ້ເຊື້ອຊາດແກ້ວ　　ກ້ຽວກ່າຍກິ່ງຫັນ
ຈຸດສໍາຄັນເຄີຍຄິດ　　ຄ່ໍາຄວນຫວນຮູ້
ດູເບິ່ງສີສັນເຈົ້າ　　ຈິດໃຈຈິດຈໍ່
ບໍ່ແມ່ນແຂກຕ່າງດ້າວ　　ເດີນດັ້ນດ່ວນມາ ດອກນາ

**ຕົວຢ່າງ 2 :**

ກາກ່ອງກ້ານແກມກິ່ງ　　ບົວທອງ
ທຸກວັນຕູໄຄ່ຫຸມ　　ເຫັນໜ້າ

**ຕົວຢ່າງ 3:**

ຈໍາໃຈຈອນຈາກເຈົ້າ　　ຊຶມຊອກສຶກສາສິນ
ໃຈທະຫວິນວິນວຽນ　　ວໍ່າວອນວາດເວົ້າ
ເຮົາຫາກເຮຮິນຮ້ອນ　　ບໍ່ຕຶກຕອງຕົນຕາມໄຕ່
ຄິດໄຄ່ວຄວາມຄາດເຄືອນ　　ຂົມແຄ້ນແມ່ນບໍ່ດີ

**ຈ. ສໍາຜັດທົບຄູ່.**

ສໍາຜັດທົບຄູ່ ແມ່ນກໍານົດເອົາພະຍັນຊະນະ 2 ຕົວຮຽງກັນເທື່ອລະ 2 ຄໍາ.

**ຕົວຢ່າງ1:**

ພາງພ່າງຟ້າ　　ຟື້ນຊໍ່ວາຕາ
ເມືອເມືອງສູນ　　ສ່ອງຄອຍຄວາງຟ້າ
ຣົມມະນາຄ້ອຍ　　ຄະນຶງຮຽນຮັກພີ່
ໄກອຸ່ນຜູ້ນຶງໜ້າ　　ໝົ່ນກະສັນ

**ຕົວຢ່າງ 2:**

ອ້າຍນີ້ຮັກຮູບນ້ອງ　　ນາມແມ່ສະຕີຍິງ
ຫວັງປາກຮຽງຄຽງຄອງ　　ຢູ່ຄອມດົມນ້ອງ
ອ້າຍຮັກຈິງຈັງແທ້　　ທາງໃຈແນ່ວແນ່

ໃຈກະສັນອ່າວໂອ້ ນໍານ້ອງແຕ່ຜູ້ດຽວ

**ສ. ສໍາຜັດທຽບຄູ່.**

ສໍາຜັດທຽບຄູ່ ແມ່ນກໍານົດເອົາພະຍັນຊະນະ 2ຕົວຮຽງກັນ ເທື່ອລະ 3 ຄໍາ ຫຼື 3 ຄູ່( ພະຍັນຊະນະ 3 ຕົວ )

**ຕົວຢ່າງ1:**

ລາງພ່ອງລຸ ໂຊກຝົ້ນເຝືອກກ່ອນ ພະໄມມິດ ກໍມີ

ຣິມຣິມ ເຕີມແຕ່ງດີ ດາມ້ຽນ...

**ຕົວຢ່າງ 2:**

ຍາມຈາກເຈົ້າ ເຫີນຫ່າງລາໄລ

ໃນຈິດໃຈ ໄຝ່ຝັນນາງນ້ອງ

ມອງໄກກໍ້າ ແດນໃດຕາມແຕ່

ຄຶດຫ່ວງຫ້ອງ ນໍານ້ອງຮໍ່າໄຮ

**ຊ. ສໍາຜັດແຊກຄູ່.**

ສໍາຜັດແຊກຄູ່ ແມ່ນກໍານົດເອົາພະຍັນຊະນະ 2ຫຼື 3ຕົວຮຽງກັນແລ້ວມີພະຍັນຊະນະອື່ນມາຂັ້ນກາງອີກ 1 ຄໍາ. ເມື່ອຊອກຫາຄໍາທີ່ໃຊ້ຕົວພະຍັນຊະນະຕົວດຽວກັນບໍ່ໄດ້ແທ້ເພິ່ນກໍໃຊ້ຄໍາທີ່ມີພະຍັນຊະນະອັນມີສຽງຄ້າຍຄືກັນໃສ່ແທນ ເຊັ່ນ: ເອົາຄໍາທີ່ມີອັກສອນສູງໃສ່ແທນຄໍາອັກສອນຕໍ່າແທນຄໍາອັກສອນສູງກໍໄດ້, ແຕ່ດີແທນຄວນພະຍາຍາມໃຊ້ຄໍາທີ່ມີອັກສອນຕົວດຽວກັນ.

**ຕົວຢ່າງ1 :**

ແລເຫັນເມກມ່ານຍ້າຍ ໄຫຼຫຼັ່ງລິວລິບ

ສີນະພາເສາະໃສ ເບີດຂິງຂາວຖ້ວນ

ອາທິດສາຍແສງເຂັ້ມ ກວມກ່າຍເກີນຂະໜາດ

ສາດລົງໃສ່ສູ່ພື້ນ ເຫຼືອງເຫຼື້ອມຮຸ່ງເຮືອງ ແທ້ເດ.

**ຕົວຢ່າງ2 :**

ພູວະນາດນ້ອຍຮັກພີ່ ຊຽງເຄີຍ

ຄອນຄອນຄຶດຊູ່ລ່ວງ ເລີຍຊ້ອງ

ປານນີ້ ລະອໍເນື້ອນົງປາງ ພະພີ່ກູພຸ້ນ

ດີແກ່ ເດືອນແຈ້ງຈຽນຟ້າ ສ່ອງໃສ.

**ຕົວຢ່າງ 3:**

ຢ່າໄດ້ຝັນໄຝ່ຄວ້າ ເກີນກວ່າປັດຈຸບັນ

ຝັນເອົາດາວດວງເດືອນ ຢູ່ທາງເທິງຟ້າ

ເປັນຄວາມຝັນເລື່ອນລ້າ ຝັນລົມແລ້ງເປົ່າ

ຄັນບໍ່ເຮັດຮ່ວມສ້າງ ເດີນໄດ້ບໍ່ຈະເລີນ ດອກນາ

**ຍ. ສຳຜັດແຊກລິດ.**

ສຳຜັດແຊກລິດ ແມ່ນກຳນົດເອົາພະຍັນຊະນະ 2 ຕົວຮຽງກັນແລ້ວມີພະຍັນຊະນະອື່ນຂັ້ນກາງ 2 ຄຳ.

**ຕົວຢ່າງ 1 :**

| | |
|---|---|
| ຄິດເມື່ອ<u>ເນົາແນບ</u>ຂ້າງ | ຕົນ<u>ພີ່ພາ</u>ຕາ |
| ເປັນເວ<u>ລາເລີຍ</u>ເຫິງ | ຂອບ<u>ປີປາຍ</u>ເຂົ້າ |
| <u>ຄວາມເຄືອງ</u>ເສົ້າ | ຫາຍ<u>ເບົາບາງ</u>ໂສກ |
| ໂຊກຫາ<u>ລຸລາບ</u>ໄດ້ | ສົມ<u>ດ້ານດັ່ງ</u>ປະສົງ ວ່ານາ. |

**ຕົວຢ່າງ 2 :**

| | |
|---|---|
| ບໍ່ອາດຕັ້ງອົດຢູ່ | ເປັນຕົວໄດ້ແລ້ວ |
| <u>ກອງກັນ</u>ລົດມອດ | <u>ໂດຍດອມ</u>ເຈົ້າ |

**ຕົວຢ່າງ3:**

| | |
|---|---|
| ອ້າຍນີ້ຮັກ<u>ຕໍ່ຕັ້ງ</u> | ຫວັງຢາກ<u>ຮ່ວມແຮງ</u>ໃຈ |
| ຮັກບໍ່ເຄີຍ<u>ລືມໄລ</u> | ໄຝ່<u>ໃຈນຳນ້ອງ</u> |
| ຫວັງ<u>ຮ່ວມແຮງ</u>ແປງສ້າງ | <u>ດົມດອມ</u>ເນື້ອອຸ່ນ |
| ໃຈພີ່ຄິດ<u>ວ່າວຸ້ນ</u> | ຫານ້ອງ<u>ຮ່ວມຮຽງ</u> |

**4.2. ສຳຜັດນອກ.**

ສຳຜັດນອກ ແມ່ນການສຳຜັດຄຳໃນວັກນີ້ກັບຄຳໃນວັກອື່ນ ການສຳຜັດຊະນິດນີ້ ແມ່ນທັງສຳຜັດສະຫຼະ ແລະ ສຳຜັດພະຍັນຊະນະແຕ່ທີ່ສະແດງໃຫ້ໂດດເດັ່ນແມ່ນການສຳຜັດສະຫຼະ.

**1). ການສຳຜັດສະຫຼະ.**

**ຕົວຢ່າງ:**

| | |
|---|---|
| ອ້າຍໂລດບໍ່ຢາກເວົ້າ | ຢ້ານອາຍໜ້າຕົວ<u>ເອງ</u> |
| ຈົ່ງອິດໄປຕາມ<u>ເພງ</u> | ຜູ້ທຸກຈົນຄົນ<u>ດ້ອຍ</u> |
| ເຂົາບໍ່ມາ<u>ຄອຍ</u>ໜ້າ | ໜໍເສລາຊູ້<u>ເກົ່າ</u> |
| ຍ້ອນຜູ້<u>ບ່າວ</u>ສໍ່ານ້ອຍ | ເອົາເງິນລ້ານປ່ອນມື... |

**ສັງເກດ:**<u>ເອງ</u>ໃນວັກທີໜຶ່ງສຳຜັດກັບ <u>ເພງ</u> ໃນວັກທີສອງ, <u>ດ້ອຍ</u> ໃນວັກທີສອງໄປສຳຜັດກັບ <u>ຄອຍ</u>ໃນວັກທີສາມ ແລະ <u>ເກົ່າ</u>ໃນວັກທີສາມໄປສຳຜັດກັບ <u>ບ່າວ</u> ໃນວັກທີສີ່.

**2). ສຳຜັດພະຍັນຊະນະ.**

**ຕົວຢ່າງ 1 :**

| | | |
|---|---|---|
| ເມື່ອນັ້ນ | ທ້າວພີ່ນ້ອງ | ຮູ້ຮ່ອມລະ<u>ຫັດ</u> |

| | |
|---|---|
| <u>ເຫັນ</u>ທີ່ພູມີເນົາ | ມືດມິນມົວໃບ້. |

**ຕົວຢ່າງ 2 :**

| | |
|---|---|
| ຄັນໄດ້ກິນປາແລ້ວ | ຢ່າລືມປູປະ<u>ປ່ອຍ</u> |
| ລາງເທື່ອ<u>ປາ</u>ຂາດຂ້ອງ | ຍັງຊິໄດ້ປິ່ນປູ |

**ສັງເກດ:** <u>ຫ</u>ໃນຄຳ <u>ຫັດ</u> ສຳຜັດກັບ <u>ຫ</u>ໃນຄຳ <u>ເຫັນ</u>ຂອງວັກຕໍ່ໄປ.
<u>ປ</u>ໃນຄຳ <u>ປ່ອຍ</u>ສຳຜັດກັບ <u>ປ</u>ໃນຄຳ <u>ປາ</u>ຂອງວັກຕໍ່ໄປ.

**ຕົວຢ່າງ 3 :**

**ສຳຜັດກັບພະຍັນຊະນະໂຕດຽວກັນ ຕົວ ສ**

| | |
|---|---|
| ສູ້ສູ້ສູ້ | ສຶກສາສູ້ສູ້ |
| ສຶກສາສາດ | ສ້າງສີ່ສິດສອນ |
| ສ້າງສີສັນ | ສ່ອງແສງສົດໃສ |
| ສີມສັກສີ | ສຶກສາສູງສິ່ງ |

**ຕົວຢ່າງ 4 :**

**ພະຍັນຊະນະຕົວ ນ**

| | | |
|---|---|---|
| **1).** | ນາງນິນາ | ນັ່ງແນບນ້ອງນອນ |
| | ນອກນ້ອງນອນ | ແນບນໍ້າໃນນາ |
| | ນອກນໍ້ານາ | ແນມນົກນາງນອນໃນນໍ້າ |
| **2).** | ໃນເນີນໂນນ | ນົກນ້ອຍນັ້ນນີ້ |
| | ນົກເນືອງນັນ | ແນວໂນນນົກນ້ອຍ |
| | ນານເນີນນັ່ງ | ນົກນ້ອຍນັ້ນໂນນ |

**ຕົວຢ່າງ 5 :**

**ພະຍັນຊະນະຕົວ ບ**

| | | |
|---|---|---|
| **1).** | ບິນໃບບົວ | ເບັ່ງບານເບີຍເບີກ |
| | ເບິ່ງໃບບົວ | ບາງບ່ອນບ້ຽວໆ |
| | ບົວໃບເບີຍ | ເບິ່ງແບບໃບບອນບາງບ່ອນ |
| **2).** | ໃບບົວບົກ | ບໍ່ບິດບໍ່ບ້ຽວ |
| | ໃບແບນໆ | ເບີຍເບີກບາງບ່ອນ |
| | ບຸກເບີກບ້ານ | ບົວບູ້ແບ່ງເບີຍ |

**ຕົວຢ່າງ 6 :**

**ພະຍັນຊະນະຕົວ ປ**

| | |
|---|---|
| ປ້າໄປປ່າ | ປີ້ງປາໄປປິ່ນ |
| ປາປານແປ | ປີ້ງປິ່ນປາປາກ |
| ປີ້ງເປັດປອງ | ປິ່ນເປປູປາ |
| ເປັນແປກໆ | ປີ້ງປາປິ່ນເປັດ |

- **ອີງຕາມລັກສະນະ ເພິ່ນແບ່ງການສໍາຜັດນອກອອກເປັນ 2 ແບບຄື: ສໍາຜັດຮຽງວັກ ແລະ ສໍາຜັດບາວັກ.**

**ກ. ສໍາຜັດຮຽງວັກ.**

ສໍາຜັດຮຽງວັກ ແມ່ນສໍາຜັດລະຫວ່າງວັກນີ້ກັບວັກຖັດໄປ.

**ຕົວຢ່າງ:**

| | |
|---|---|
| ບັດນີ້ ໃຜຜູ້ບັງບຽງຖ້ອຍ | ລ້ຽວລ່າຍສັດຈະ |
| ຂໍໃຫ້ ເວລາເຖິງ | ຕອບສະໜອງນໍາໃຊ້ |
| ຄັນໃຜ ໂມໂຫມ້າງ | ໄມຕີຫຼົງຫຼ່າກັນນັ້ນ |
| ຂໍໃຫ້ ຂວານແຕ່ຟ້າ | ລິງເຂົ້າຜ່າຫົວ ແດ່ເດີ |

**ສັງເກດ:** ສັດຈະ ໃນວັກໜຶ່ງ ສໍາຜັດກັບ ເວລາ ໃນວັກທີສອງ, ໃຊ້ ໃນວັກທີສອງສໍາຜັດກັບ ໃຜ ໃນວັກທີສາມ ແລະ ຫຼ່າ ໃນວັກທີສາມສໍາຜັດກັບ ຟ້າ ໃນວັກທີສີ່ ໂດຍໂຄງຮ່າງຕໍ່ໄປນີ້:

**ໂຄງຮ່າງ:**



ຈາກແຜນວາດຂ້າງເທິງ, ເຮົາສາມາດສັງເກດເຫັນວ່າ: ການສໍາຜັດລະຫວ່າງຄໍາໃນວັກນີ້ກັບຄໍາໃນວັກອື່ນທີ່ບໍ່ຈໍາກັດ. ມັນອາດສໍາຜັດກັບຄໍາໃດຄໍາໜຶ່ງໄດ້ເຊັ່ນ: ກໍລະນີທີໜຶ່ງ ຄໍາສຸດທ້າຍຂອງວັກຕົ້ນສໍາຜັດກັບຄໍາທີ່ສອງ, ຄໍາສຸດທ້າຍຂອງວັກທີສອງ ສໍາຜັດກັບຄໍາບຸບພະບົດໃນວັກທີສາມ ແລະ ຄໍາສຸດທ້າຍຂອງວັກທີສາມໄປສໍາຜັດກັບຄໍາທີສາມຂອງວັກທີສີ່ ຍິ່ງກວ່ານັ້ນອາດສໍາຜັດກັນລະຫວ່າງຄໍາຢູ່ທ້າຍວັກກໍເປັນໄດ້ ( ວັກນີ້ກັບວັກຕໍ່ໄປ)

- **ສໍາຜັດທ້າຍວັກ**

ສໍາຜັດທ້າຍວັກ ໝາຍຄວາມວ່າຄໍາຢູ່ທ້າຍວັກຂອງບາດສໍາຜັດກັນຕາມໂຄງຮ່າງດັ່ງນີ້:

**ໂຄງຮ່າງ:**



**ຕົວຢ່າງ:**

| | | |
|---|---|---|
| ເມື່ອວ່າ | ເປັນດັ່ງນັ້ນ | ກໍສຸດທີ່ເຈັບໃຈ |
| | ຄັນບໍ່ເຫຼືອວິໄສ | ຊິໃສ່ໃຈຈຳໄວ້ |
| | ຈຳຈົນຕາຍບໍ່ໝາຍໃຫ້ | ໃຜມາເຮັດໃສ່ ອີກລະ |
| | ເຫຼືອກະໃຈແທ້ໆ | ຈົນຍົມຍ້ອຍຍ່າວໄຫຼ |

ການສຳຜັດຊະນິດນີ້ບາງເທື່ອອາສຳຜັດແຕ່ລະເຟື້ອງກໍ່ໄດ້.

**ຕົວຢ່າງ:**

| | | |
|---|---|---|
| ຫຼາຍຄືນລູກນັ່ງນິ້ງ | ໂອ້ອ່າວຄະນຶງຫາ | |
| | ເຖິງບິດາມານດາ | ພໍ່ອາວອາປ້າ |
| | ຄິດຮອດຊຸມພວກນ້າ | ທັງຍາຍ ແລະຍ່າ |
| | ຜູ້ເພິ່ນໄດ້ຫຼໍ່ລ້ຽງ | ໃຫ້ເຮົາໄດ້ໃຫຍ່ມາ |
| | ເປັນສັນໃດພວກປ້າ | ພໍ່ແມ່ມານດາ |
| | ຍັງຄ່ອຍສຸກສຳລານ | ອາດຫານຊານກ້າ |
| | ພ້ອມພໍ່າພຽນຮຽນສ້າງ | ສ້າງຕົວໃຫ້ມີຄ່າ |
| | ສ້າງຊີວິດໃຫ້ແກ່ນໜ້າ | ສົມແມ້ງປາຖະໜາ |
| | ສ່ວນວ່າລູກຢູ່ພຸ້ນ | ຍັງຄອຍຢູ່ເປັນເປັນສຸກ |
| | ບໍ່ໄດ້ມີໂພຍໄພ | ບຽດບຽນທຳຮ້າຍ |
| | ສ່ວນວ່າການຮຽນນັ້ນ | ຍັງເດີນດີບໍ່ເບື່ອໜ່າຍ |
| | ເຖິງຍາກຫຍຸ້ງລູກກໍ່ຄິດກໍ່ຕັ້ງ | ເດີນໃຫ້ຮອດທີ່ໝາຍ |
| | ພໍເມື່ອສຳເລັດແລ້ວ | ໜ້າທີ່ການສຶກສາ |
| | ລູກຈະກັບຄືນມາ | ຢູ່ນຳອາວອາປ້າ |
| | ມາເພື່ອພັດທະນາສ້າງ | ດິນແດນບ້ານປ່າ |
| | ໃຫ້ຈະເລີນຮຸ່ງແຈ້ງ | ລື້ເທົ້າທົ່ວປະຊາ |

ອາດຂຽນເປັນໂຄງຮ່າງດັ່ງລຸ່ມນີ້:

o o o o o o o
o o o o o o o
o o o o o o o
o o o o o o o

**ຂ. ສຳຜັດບາວັກ.**

ສຳຜັດບາວັກ ແມ່ນສຳຜັດແບບຂ້າມວັກຄື: ຄຳສຸດທ້າຍຂອງວັກທີ 1 ໄປສຳຜັດກັບຄຳທີ 1, ທີ 2 ຫຼື ຄຳທີ 3 ຄຳໃດຄຳໜຶ່ງຂອງວັກທີ 3. ຄຳສຸດທ້າຍຂອງວັກທີ 2 ໄປສຳຜັດກັບຄຳທີ 1, ທີ 2 ຫຼື ຄຳທີ 3 ຄຳໃດຄຳໜຶ່ງ ຂອງວັກທີ 4, ຄຳສຸດທ້າຍຂອງວັກທີ 3 ໄປສຳຜັດກັບຄຳທີ 1 , ຄຳທີ 2 ຫຼື ຄຳທີ 3 ຄຳໃດຄຳໜຶ່ງຂອງວັກທີ 5, ຄຳສຸດທ້າຍຂອງວັກທີ 4 ໄປສຳຜັດກັບຄຳທີ 1, ທີ 2 ຫຼື ຄຳທີ 3 ຄຳໃດຄຳໜຶ່ງ ຂອງວັກຕໍ່ໆໄປ.

**ດັ່ງໂຄງຮ່າງຕໍ່ໄປນີ້:**



**ຕົວຢ່າງ:**

| | | | |
|---|---|---|---|
| **1** | ເມື່ອນັ້ນ | ພູວະນາດທ້າວ | ຜູ້ຜ່ານຄອງສະຫວັນ |
| 2 | | ປຸນຄຳປວນ | ຂ້ອງແໜສອງນ້ອຍ |
| 3 | ເຮົາກໍ | ມາງັນຫຼິ້ນ | ລວງສາວຊູ້ບ່າວ |
| 4 | | ຖ້ານເພື່ອນພ້ອງ | ພັນພ້ອມພໍ່ພາຍ |
| 5 | | ຈັກກ່າວໃຫ້ | ຊອບສັ່ງແບນສົມ |
| 6 | | ໜໍໂຫນທວາຍ | ບອກມາມວນພ້ອມ |
| 7 | | ຣົມຣົມສ້ອຍ | ສາວສີຣົມບ່າວ |
| 8 | | ເຍົາວະລາດຜູ້ | ຄົງຄ້ອມຄູ່ຂຽນ |

**ຕົວຢ່າງ2:**

ຊາຍໜຸ່ມເປັນສຳເຊື້ອ ກຳລັງໃຫຍ່ສຳຄັນ

ມັນແມ່ນອະນາຄົດ ແກ່ນກຳລັງເມືອງບ້ານ

ທັງແມ່ນຊຸມຊົນຊັ້ນ　　　　ພະລັງແຮງກ້າກັ່ນ
ເປັນຫົວຈັກຊຸກຍູ້　　　　ໃຫ້ຄົນຕັ້ງແຕ່ງການ
ບໍ່ວ່າປະເທດບ້ານ　　　　ສະຖານຖິ່ນດິນໃດ
ກໍຍ່ອມມີຄົນຫານ　　　　ໜຸ່ມຄະນອງເນື້ອງລົ້ນ
ມັນແມ່ນຄົນພວກສ້າງ　　　　ແປງທາງຊີວິດໃໝ່
ຍາກທໍ່ໃດກໍ່ໄດ້　　　　ປະສົງສູ້ຊອກຊົມ
ຄາວເມື່ອຍັງໜຸ່ມນ້ອຍ　　　　ສະແຫວງຮ່ຳຮຽນໜັງສື
ຍາກກໍ່ພັນພຽນອົດ　　　　ຮ່ຳຮຽນຈົບແລ້ວ
ໝົດສູ່ອັນຮຽນໄດ້　　　　ຈົດຈຳຈົບວ່າຈື່
ບັດນີ້ນຳອອກໃຊ້　　　　ໃຫ້ມັນໄດ້ສູ່ແນວ
ຄາວນີ້ຊາວໜຸ່ມໄດ້　　　　ຄືນມາຢູ່ໃນປາງ
ມາເຮັດການແປງຊຸດ　　　　ກົ່ນນາຕາກ້າ
ຄວນທີ່ພາຕົວຕັ້ງ　　　　ປຸນເປັນຕົວຢ່າງ
ຊີ້ຊ່ອງທາງບອກໃຫ້　　　　ປະຊາເຊື້ອເພິ່ງພາ
ຊາວໜຸ່ມຄວນເກັ່ງກ້າ　　　　ເພີ່ມພູນຜະລິດຜົນ
ການຮ່ຳຮຽນການເມືອງ　　　　ເສບລຳຮ່ຳຟ້ອນ
ກັບທັງການທົນຮູ້　　　　ສັດຕູທີ່ມາຈົ່ນ
ໂຄສະນາຮຽກຮ້ອງ　　　　ຂະຫຍັນຕ້ານສັ່ງສອນ
ເຮັດໃຫ້ໄດ້ດັ່ງນັ້ນ　　　　ຈິ່ງສົມວ່າເຢົາວະຊົນ
ສົມວ່າເປັນຄົນລາວ　　　　ທີ່ສືບມູນແທນເຊື້ອ
ເປັນກຳລັງຫຼວງສ້າງ　　　　ແປງເມືອງຊຸດກົ່ນ
ເຮັດໃຫ້ລາວຍ່າງກ້າວ　　　　ຈະເລີນຂຶ້ນຢືດເຍື້ອ.

ນອກຈາກນີ້ ເຮົາຍັງຈະພົບເຫັນກອນທີ່ມີການສຳຜັດຮຽງວັກພາຍໃນບາດດຽວກັນ ແຕ່ພັດສຳຜັດຂັ້ນວັກໃນບາດຕໍ່ໄປ. ລັກສະນະສຳຜັດແບບນີ້ ເຮົາອາດຈະເຫັນໃນກອນແປດ ກອນແປດເພິ່ນນິຍົມໃຊ້ແຕ່ງເພງຮ້ອງ. ລັກສະນະກອນແປດໃຊ້ສຳຜັດດັ່ງນີ້:

- ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 3 ຂອງວັກທີ 2
- ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳສຸດທ້າຍຂອງວັກທີ 3
- ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 3 ຂອງວັກທີ 4

- ຄຳສຸດທ້າຍຂອງວັກທີ 4 ສຳຜັດກັບຄຳສຸດທ້າຍຂອງວັກທີ 2 ໃນບາດຕໍ່ໆໄປ.

**ຕົວຢ່າງ: ເພງ: ມິດຕະພາບ ລາວ - ໄທ.**

| | |
|---|---|
| ຂອງໄຫຼຫຼັ່ງ | ສອງຟາກຝັ່ງແຜ່ນດິນລາວໄທ |
| ໂອ...ທານນ້ຳໃສ | ເໝືອນດັ່ງນ້ຳໃຈຂອງຄົນສອງຝັ່ງ |
| ເຊື່ອມຄວາມຮັກ | ຄວາມຫວັງ |
| ສອງຟາກຝັ່ງ | ເປັນທານນ້ຳໃສ |
| ລາວເອີຍ | ໄທເອີຍ |
| ກ່ອນເຮົາເຄີຍ | ເພີ່ນພາອາໄສ |
| ສຽງແຄນຟັງໄດ້ | ປາກເວົ້າເຂົ້າໃຈເຊື່ອມສາຍໄມຕີ |
| ຢູ່ຄົນລະຝັ່ງບໍ່ຢຸດຢັ້ງ | ສ້າງສາມັກຄີ |
| ຮ້ອຍພັນມື່ນປີ | ເພີ່ມທະວີໄມຕີສຳພັນ |
| ຢ່າໃຫ້ໝາຍໝອງໝົ່ນ | ຫົວໃຈຄົນ |
| ທີ່ເຄີຍຮັກກັນ | ຢູ່ໃກ້ຄຽງກັນ |
| ຊ່ວຍເຫຼືອກັນ | ເຖີດເຜົ່າລາວ - ໄທ. |

## 5.ຄຳຜະຫຍາ

### 5.1 ຄວາມໝາຍ ແລະ ລັກນະຂອງຄຳຜະຫຍາ

ດ້ານເຄົ້າສັບ ໄດ້ມີຄວາມເຂົ້າໃຈກັນວ່າ ຄຳນີ້ (ຜະຫຍາ) ແມ່ນຄຳທີ່ ໄດ້ມີການເຈລະໃນ ຫຼືປ່ຽນຮູບ(ແປ່ງ ຄຳ) ມາຈາກ ປັນຍາໃນພາສາບາລີ, ມັນມີຄວາມໝາຍວ່າ ຄວາມຮອບຮູ້, ຄວາມສະຫຼາດ, ຄວາມຫຼັກແຫຼມ, ຄວາມຮອບຄອບ ອັນເປັນບໍ່ເກີດແຫ່ງຄວາມມີພິກໄຫວ ແລະປະຕິພານ.

ດ້ານວິຊາການ ຄຳຜະຫຍາໄດ້ຖືກກຳນົດເປັນຫົວຂໍ້ ຫຼືບັນຫາໜຶ່ງໃນວັນນະຄະດີພື້ນເມືອງ, ຄວາມສິນຈິງອັນໜຶ່ງກໍຄືວ່າ ຖ້ອຍຄຳ, ສຳນວນ ໃຊ້ເຂົ້າໃນຄຳຜະຫຍາ ລ້ວນແຕ່ແມ່ນສັບພາສາພື້ນເມືອງ (ພາສາສາມັນຊົນ) ຍ້ອນ ແນວນັ້ນມັນຈິງແມ່ນກາບ ກອນພື້ນເມືອງປະເພດຫນຶ່ງ ທີ່ສະແດງເຖິງຫົວຄິດປັນຍາ, ຄວາມສະຫຼາດຫຼັກແຫຼມ ຂອງປະຊາຊົນຊາວຜູ້ອອກແຮງງານບັນດາເຜົ່າ, ພ້ອມກັນນີ້, ມັນຍັງເປັນຄຳເວົ້າ ທີ່ສະທ້ອນໃຫ້ເຫັນຄວາມມີພິກໄຫວວ່ອງໄວ ອັນມີລັກສະນະເວົ້າແທ້ແກ້ແມ່ນ ລະຫວາງບ່າວສາວ(ຍິງ - ຊາຍ) ທີ່ຍົກຂຶ້ນເພື່ອໂຈດຖາມກັນ ກ່ຽວກັບຄວາມຮູ້ຮອບຕົວ, ທັດສະນະ, ຄຸນສົມບັດ ແລະຄວາມຮັກທີ່ມີຕໍ່ກັນອີກດ້ວຍ...

ເຖິງວ່າຄຳຜະຫຍາແມ່ນກາບກອນປະເພດໜຶ່ງ, ແຕ່ກະໂຕມັນເອງພັດມີຄວາມແຕກຕ່າງຈາກກອນປະເພດອື່ນໆ. ໂດຍສະເພາະດ້ານລະບຽບການ, ໂດຍທົ່ວໄປ, ຮູບການປະດິດແຕ່ງຄຳຜະຫຍາແມ່ນສັ້ນ ແລະບັນຈຸດ້ວຍຄຳເວົ້າທີ່ຄ່ອງແຄ້ວລ່ຽນໄຫຼດີ ເມື່ອເວົ້າເຖິງຫຼັກການແຕ່ງ. ຄຳຜະຫຍາມີການສຳຜັດແບບງ່າຍດາຍ ບໍ່ຈຳກັດ ຫຼືຕາຍຕົວຕາມຫຼັກການ ຫຼືລະບຽບ ກອນ, ດ້ານຈຳນວນ ຫຼືປະລິມານວັກ ກໍບໍ່ຈຳກັດ ອາດມີສອງວັກ, ສາມວັກ: ສີວັກ ຫຼືຫຼາຍກວ່ານັ້ນ ພ້ອມກັນນັ້ນ ລຳດັບວັກກໍບໍ່ມີການຈຳກັດເຊັ່ນດຽວກັນ (ມີການສັບລຳດັບວັກ).

### 5.2ປະເພດຄຳຜະຫຍາ

### ກ. ອີງຕາມຮູບການປະດິດແຕ່ງ

**•ປະເພດສອງວັກ**

ສ່ວນຫຼາຍແລ້ວ, ຄຳຜະຫຍາທີ່ແຕ່ງຕາມປະເພດນີ້ ມັນຕາມຫຼັກຄຳປະຈຳບ່ອນ, ແຕ່ພັດໃຊ້ແຕ່ສອງວັກ: ບາງເທື່ອກໍແມ່ນວັກທີໜຶ່ງ ກັບວັກທີສອງ. ບາງເທື່ອກໍແມ່ນວັກທີ່ ສາມກັບວັນທີ່ສີ່ ດັ່ງຕົວຢ່າງຕໍ່ໄປນີ້:

( 1 ) - ຫົງກາດຳ ບິນລຽບນ້ຳກ່ຳຢູ່ລ້າຍໆ

( 1 ) - ໝາວໃນຊວງ ຄືຊິເປັນບ້າປ່ວງນຳນ້ອງ

( 1 ) - ເຫຼືອໃບແຄ ອິດສາເວ ົ້ານາໍແນ່ເດີນ້ອງ

( 1 ) - ສີມພໍຄອນ ລຳສ່ວນຊິລິງທໍ່ນີ້ແລ້ວ

(3-4) - ນ້ອງນີ້ຄືດັ່ງປາເຊັງຂ້ອນ ຫນອງນານ້ຳເພິ່ນຂາດ

ຝົນບໍ່ມາສິ່ງໃຫ້ ຊິຕາຍແລງແດດເຜົາ

(3 - 4) - ຍາມເມື່ອລົມເປັນຊູ້ ແກງງູກໍ່ວ່າອ່ຽນ

ບາດວ່າປ່ຽນໃໝ່ແລ້ວ ປາປີ້ງກໍວ່າປີງ

( 1-2) - ຄັນອ້າຍຄິດຮອດນ້ອງ ໃຫ້ແນມເບິ່ງເດືອນດາວ

ສາຍຕາເຮົາ ຊິຈອບກັນຢູ່ເທິງຟ້າ

( 1-2) - ຄັນເຈົ້າໄດ້ຂີ່ຊ້າງ ກັ້ງຮົ່ມປະສີຂາວ

ຢ່າໄດ້ລືມຊາວນາ ຜູ້ຂີ່ຄວາຍຄອນກ້າ

- ຫຼ້າບົວຜັນ ຫຼ້ານ້ອຍບົວຜັນ

ບໍ່ໄດ້ນອນນຳກັນ ບໍ່ໄດ້ຄັນບໍ່ໄດ້ໝ່ຽງບໍ່ຍອມແລ້ວ

- ລຳມາພໍສີມຄອນ ມ່ວນກະມ່ວນຫຼາຍຄືນ

ສາວໜໍ່ລຳດພິ່ນບໍ່ສິນ ຊິໂຈະກອນໄວ້ກ່ອນ ທໍ່ນີ້ແລ້ວ

- ໃຈປະສົງແລ້ວ ກາງດົງກໍວ່າທົ່ງ

ໃຈປະສົງຂີ້ຄານ ກາງບ້ານກໍວ່າດົງ

**•ປະເພດສາມວັກ**

ສ່ວນຫຼາຍແລ້ວ, ຄຳຜະຫຍາທີ່ແຕ່ງຕາມປະເພດນີ້ ມັກເປັນໄປຕາມລັກສະນະຂອງກາບແລະ ກອນ, ອັນທີ່ເສດຂອງມັນແມ່ນວັກສຸດທ້າຍ (ແຖວທີສາມ) ມັນຖືກຕາມລະບຽບກອນວັກທີສີ່ (ວັກສີ່ງ) ດັ່ງຕົວຢ່າງຕໍ່ໄປນີ້ :

+ຫອມດອກຈິກ ຄິດຮອດບ້ານຫຼັງ

ຫອມດອກກັງ ຄິດຮອດບ້ານເກົ່າ

ຫອມດອກຄັດເຄົ້າ ຄືຊິເຖົ້າບໍ່ເປັນ

+ນ້ຳໂຕນຕາດ ຄືນ້ອງແກວ່ງຫຼາ

ນ້ຳໂຕນຜາ ຄືນ້ອງແກວ່ງອື່ວ

ຟ້າຍິກຄົ້ວ ຄືນ້ອງແກ່ວງແຂນ
+ຄັນແມ່ນບໍ່ເຫັນໜ້າ ເຫັນແຕ່ນາກໍ່ພໍ່ຢູ່
ເຫັນແຕເສື້ອຟາດແຈ່ ເຫັນແຕ່ແພ່ພາດຮື້ວ
ຍິນສຽງຫົວຢູ່ບ້ານ ກໍປານໄດ້ນັ່ງນໍາ ນ້ອງເອີຍ
+ ແກ້ມອໍ່າຖໍ່າ ແກ້ມເຈົ້າອໍ່າຖໍ່າ
ສາວເອີຍສາວ ເຈົ້າຜົ◌ູສາວຕາດໍາ
ໂລດໄຫຼ່ກ່ອມ ແຂ້ວຄໍາຢູ່ລ້າໆ
+ ນິກເຂົາໄຂ້ ຍັງແກ້ມກ່າຍຄອນ
ນິກເຂົານອນ ຍັງເອົາແກ້ມກ່າຍໄມ້
ບາດວ່າ ອ້າຍນັ່ງໄຫ້ ຊິເອົາແກ້ມກ່າຍໃຜ

**•ປະເພດສີ່ວັກ**

ສ່ວນຫຼາຍແລ້ວ ຄໍາຜະຫຍາທີ່ແຕ່ງຕາມປະເພດນີ້ ມັກຖືກຕາມລໍາດັບວັກ( 1-2-3-4) ແຕ່ມີບາງກໍລະນີ ກໍມັກໃຊ້ເຟື້ອງປາຍສອງເທື່ອ( 3-4-3-4) ດັ່ງຕົວຢ່າງຕໍ່ໄປນີ້ :

( 1-2-3-4) - ຄັນວ່າ ຊາຍບໍ່ເວົ້າ ມັນບໍ່ສວ່າງຄວາມເຫງົາ
ຄັນບໍ່ຫາຍບັນເທົາ ສວ່າງໂພຍໄພຮ້ອນ
ວ່າຈັກລອງຫຼິ້ນ ຈັກຄໍາຕ່າງມ່ອນ
ພໍໃຫ້ມວນພີ່ນອງ ຟັງແລ້ວຊື່ນໃຈ ວ່ານາ

(3-4-3-4) - ເມື່ອອ້າຍມາເຫັນນ້ອງ ນວນລະອອງວາດຄ່ອງ
ມາເຫັນນິງນາດນ້ອງ ເຫັນແລ້ວບໍ່ຢາກໜີ
ອ້າຍນີ້ມີໃຈຂ້ອງ ໝາຍປອງເປັນຄູ່
ອິດອີ່ດູຄືນພາກບ້ານ ມາພີ້ຄອບພະນາງ ນ້ອງແລ້ວ

- ແກ້ມເປັ້ນເອີ່ນ ແກ້ມເຈົ້າເປັ້ນເອີ່ນ
ຄັນວ່າແມ່ນຊູ້ເພິ່ນ ໃຫ້ເຈົ້າເອີ່ນໜີໄກໆ
ຄັນບໍ່ແມ່ນຊູ້ໃຜ ໃຫ້ເຈົ້າໄຫຼມາເອີນ
ບ່ອນຕະຫຼີງເນີນໆ ທາງບ້ານອ້າຍແນ່ ເດີນ້ອງ

- ເຫັນວ່າໄດ້ຂີ່ຊ້າງ ກັ້ງຄັນຮົ່ມເປັນພະຍາ
ຢ່າໄດ້ລືມຊາວນາ ຜູ້ຂີ້ຄວາຍຄອນກ້າ
ຄັນຊິໄປທາງໜ້າ ໃຫ້ຫຼຽວຫຼັງບ້ານເກົ່າ
ຄັນມະລະທູດເທົ່າ ເຊົາທ້ອນຢ່າຊິໄປ ຫຼານເອີຍ

**•ປະເພດທີ່ຫຼາຍກວ່າສີ່ວັກ**

ໂດຍທົ່ວໄປຄໍາຜະຫຍາທີ່ແຕ່ງຕາມປະເພດນີ້ ມັກເປັນໄປແບບປະສົມລະຫວ່າງກາບ ແລະກອນ ( ມີທັງລັກສະນະຂອງກາບແລະກອນ) ດັ່ງຕົວຢ່າງຕໍ່ ໄປນີ້:

- ແກ້ມແປ່ນແອ່ນ ແກ້ມເຈົ້າແປ່ນແອ່ນ

ມື້ນີ້ ມັນຈັ່ງແມ່ນ ບຸນອາດສະໜາ

ໂຊກຊາຫູຊາຕາ ໄດ້ມາພົບຊູ້ໃໝ່

ສົມຄວາມອ້າຍຝັກໄຝ່ ຕັ້ງແຕ່ລົງເຮືອນມາ

ວາດສະໜາຊາຕາ ຈັ່ງຊາດມັນຄ່ອງ ແທ້ນໍານ້ອງ

- ແກ້ມອ່ອນໆ ແກ້ມນ້ອງອ່ອນ

ຕັ້ງແຕ່ກີ້ແຕ່ກ່ອນ ກະບໍ່ເຫັນມາ

ບາດວ່າຮອດເວລາ ຍ່າງເຂົ້າມາໃນເວທີ

ສາວຜູ້ດີງາມງອນ ຄື້ອກິ່ງແອວບາງ

ຮູບຮ່າງເຈົ້້າງາມດີ ຂົນຕາສີງອນໆ

ຈັ່ງແມ່ນອໍລະຊອນ ແທ້ເດນາງນ້ອງ

- ປະປີ່ນເອີຍ ແກ້ມເຈົ້າປະປີ່ນ

ອ້າຍນີ້ ເປັນຄົນທຸກ ຈິ່ງໄດ້ເຂົ້າມາວິນ

ອ້າຍນີ້ ເປັນຄົນຈົນ ຈິ່ງມາຫຍຸ້ງມາກ່ຽວ

ໄດ້ມາ ນ່ອມມາໜ່ຽວ ມາກ້ຽວມາພັນ

ຊິບໍ່ສົງສານກັນ ບໍນອນຈັນຮູບງາມ

ອິດສາກ້ຽວອິດສາຖາມ ໄດ້ບໍນ້ອງຄີງກົມ

ແສນລະທົມຫົວໃຈ ຍ້ອນເປັນຫ່ວງເປັນໃຍ

- ນ້ອງນີ້ ລູກກໍາພອຍ ອາໄສຢູ່ນໍາປ້າ

ນ້ອງເປັນ ລູກກໍາພ້າ ອາໄສຢູ່ນໍາລຸງ

ຢູ່ນໍາລຸງ ລຸງຂ້າປາກກ້າ

ຢູນໍາປ້າ ປ້າຊໍ້າພັດປາກງາມ

ຢູ່ນໍາ ຊຸນນໍາກວານ ຫຼາຍປີເພິ່ນວ່າຂ້ອຍ

ນອນແຕ່ນ້ອຍ ເພິ່ນກໍ່ດ່າວ່າເອົາ

ຄັນຮອດ ຍາມກິນເຂົ້າ ເພິ່ນພັດຍໍ້ແສ້ຫວາຍ

ຄັນແມ່ນ ເຖິງຍາມງາຍ ເພິ່ນພັດຍໍ້ບາດຄ້ອນ

ເພິ່ນພັດ ຢ້ອນບາດແສ້ ນໍ້າຕານ້ອງຍາວໄຫຼ ທຸກໃຈເດ

ນອກຈາກນັ້ນຍັງມີກອນຜະຫຍາສໍາລັບຂັບ - ລໍາທີ່ມີຕາມແຕ່ 2 ວັກ, 3ວັກ, 4 ວັກ , 5 ວັກ, 6 ວັກ 7 ວັກ, 8 ວັກ ແລະ 9 ວັກ

**ຕົວຢ່າງ: ກອນຜະຫຍາ 2 ວັກ**

| | |
|---|---|
| + ສັງມາເຈັບແສບແທ້ | ປານກືນຄົມດາບ |
| ປານວ່າສອນສຽບຈາ | ໃນທ້ອງໝື່ນດວງ |
| + ຄັນວາ ເປັນຕາໄດ້ | ແຫວນໃນມື້ອ້າຍຊິຖອດ |
| ອ້າຍຊິເຂາະຂອດໝັ້ນ | ເອົາເຈົ້າຜູ້ດຽວ |

**ຕົວຢ່າງ: ກອນຜະຫຍາ 3ວັກ**

| | |
|---|---|
| + ແນວທີ່ຈິດປະສົງແລ້ວ | ແນວທີ່ໃຈປະສົງແລ້ |
| ທາງແສນໄກກໍດັ້ນຮອດ | ຄັນບໍ່ໄດ້ຍອດແກ້ວ |
| ບໍ່ໄດ້ແນວຜູ້ຈັ່ງນ້ອງ | ເມືອບ້ານແມ່ນບໍ່ຍອມ |
| + ນ້ອງນີ້ເກີດຜິດຊໍ່າ | ບໍ່ທັນພໍ້ວດອກຈານ |
| ນ້ອງນີ້ເກີດຜິດປານ | ບໍ່ທັນຊາຍຜູ້ຮູ້ |
| ອ້າຍຫາກໄດ້ຊູ້ແລ້ວ | ຕົວນ້ອງຈຶ່ງໃຫຍ່ລຸນ |

**ຕົວຢ່າງ: ກອນຜະຫຍາ 4ວັກ**

| | |
|---|---|
| + ເຫັນວ່າດໍາຂີ່ຫຼີ້ | ຢ່າຟ້າວທໍ່ເຮືອກາຍ |
| ເຫັນວ່າດໍາຄອຍລອຍ | ຢ່າຟ້າວພາຍເຮືອເວັ້ນ |
| ບາດວ່າເຮືອນາງຫຼົ້ມ | ດໍາຄອຍລອຍຍັງຊິໄດ້ລົງຊ່ອຍ |
| ຄັນບໍ່ໄດ້ຊ່ອຍຍູ້ | ຍັງຊິໄດ້ຊ່ອຍພາຍ |

**ຕົວຢ່າງ: ກອນຜະຫຍາ 5ວັກ**

| | |
|---|---|
| + ນ້ອງມາງາມກະດັດເດ້ | ແມ່ນນ້ອງເກີດວັນຫຍັງ |
| ຫຼືນ້ອງເກີດວັນທິດ | ແມ່ນ້ອງຈຶກເຂົ້າໃສຂັ້ນ |
| ຫຼືນ້ອງເກີດວັນຈັນ | ແມ່ນ້ອງຈຶກເຂົ້າໃສ່ບາດ |
| ອ້າຍຊິໄດ້ໄປຢາດນໍ້າ | ໃຕ້ຮົ່ມໂພສີ |
| ລາງເທື່ອບຸນເຮົາມີ | ຊິໄດ້ພົບກັນຢູ່ເມືອງຟ້າ |

**ຕົວຢ່າງ: ກອນຜະຫຍາ 6ວັນ**

| | |
|---|---|
| + ຄິດຮອດນ້ອງ | ບາຍເອົາແວນມາແຍງ |
| ຄືຊິເຫັນຈອມແພງ | ຢູ່ໃນວົງແກ້ວ |
| ຄັນແມ່ນຕາເຫັນແລ້ວ | ບາຍເອົາພັດບໍ່ຖືກ |
| ອ້າຍໄດ້ແຕ່ງບ້ວງຄ້ອງ | ເປັນມື້ບໍ່ຖືກເງົາ |
| ເຫຼືອອີກແຄ້ນ | ມະໂນຂວັນອີກສັ່ນ |

ພໍຢາກມາມອດມ້ຽນ ນໍາແກ້ວໜ່ອຍປະສິງ

**ຕົວຢ່າງ: ກອນຜະຫຍາ 7 ວັກ**

+ ຄັນນ້ອງເອົາຜົວຊ້ອນ ໄດ້ລູກໜຶ່ງອ້າຍຊິນໍາໄປປອງ
ໄດ້ລູກສອງ ອ້າຍຊິນນໍາໄປເວົ້າ
ໄດ້ລູກແປດລູກເກົ້າ ຫຼືຮາມຮ້າງໜ້າຍຜົວ
ອ້າຍລັກພາຍຖິ້ງຂຶ້ນ ເມືອເຮືອນໄປສູ່
ແມ່ນຊິລ້ຽງລູກເຕົ່ານ້ອງ ຕົວອ້າຍກະບໍ່ແໜງ
ຜູ້ເປັນລູກກົກ ມັນຊິເອີ້ນພໍ່ນ້າ
ຜູ້ເປັນລູກຫຼ້າ ມັນຊິເອີ້ນພໍ່ແທ້
ກໍເອົາແຕ່ບຸນຊາຍ ນ້ອງເອີຍ!

**ຕົວຢ່າງ: ກອນຜະຫຍາ 8ວັກ**

+ ນ້ອງຜູ້ນົ້ວແລບສ້ອຍ ສິນາດນິງບານ
ຫຼຽວເບິ່ງເກສາຜົມ ດັ່ງສາວສະຫວັນຍ້ອງ
ກວມພວງແກ້ມ ທັງສອງສິນາດ
ມອຍມຸ່ງຄິ້ວ ດໍາກ້ຽງດັ່ງເທົາ
ຄິ້ວຄາດແກ້ວ ມະນີໂຊດແສງສາຍ
ມາລາແຖວກ່ອມ ກວມຕະເກິງເກົ້າ
ທົ່ງໃສແທ້ ເຖິງພະນາງລືເກັ່ງ:

**ຕົວຢ່າງ: ກອນຜະຫຍາ 9ວັກ**

+ ຄິດຮອດນ້ອງ ອ້າຍໄດ້ໄປລັດຖ້ໍາ
ສາລາຄໍາ ບ່ອນນໍ້າຕ້ອງແທ່ນ
ຈັກແມ່ນນ້ອງແລ່ນຜ້າຍ ໄປກ້ໍາຝ່າຍໃດ
ເຫັນແຕ່ນົກອີ່ອ້ຽງ ກົ້ກ່າງສັງກາ
ເຫັນແຕ່ກາເວົ້າວອນ ຮໍ່າໄຮຫາຊູ້
ຄິດວ່າບຸນຊູນ້ອງ ຟັງສຽງພັດບໍ່ແມ່ນ
ຍິນແຕ່ແຈນແອນຮ້ອງ ຈາເວົ້າຕໍ່ກັນ
ມັນເວົ້າສຽງສັ້ນສັ້ນ ນໍາກັນອ່ອມໆ
ວາຈອມແພງແຈ່ມເຈົ້າ ມີຊູ້ຕັ້ງແຕ່ດົນ.

**ຂ.ອີງຕາມເນື້ອໃນ**

ຫາກອີງຕາມເນື້ອໃນຄຳຜະຫຍາ ກໍມີຫຼາຍປະເພດເຊັ່ນ: ປະເພດທີ່ເວົ້າເຖິງການພົວພັນລະຫວ່າງຍິງ- ຊາຍ, ປະເພດທີ່ເວົ້າເຖິງຄວາມສວຍງາມ ແລະຄວາມອຸດົມຮັ່ງມີຂອງບ້ານເກີດເມືອງນອນ ແລະ ພົວພັນໃນສັງຄົມເປັນຕົ້ນ ດັ່ງຕົວຢ່າງຕໍ່ໄປນີ້ :

@ເວົ້າເຖິງຄວາມອຸດົມຮັ່ງມີຂອງຊັບໃນດິນສິນໃນນໍ້າ

| | |
|---|---|
| ອັດຕະປືປີ້ງ | ຂາຍຄຳແລກຂີ້ໄກ |
| ບຶງພະໂພຂີ້ໄຮ້ | ຂາຍຊ້າງແລກກະບອງ |

@ເວົ້າເຖິງການພົວພັນລະຫວ່າງຍິງ - ຊາຍ

| | | |
|---|---|---|
| ປານໃດເດ | ຈິ່ງໄດ້ຈູງແຂນເຂົ້າ | ພາຂວັນປ້ອນໄຂ່ໜ່ວຍ |
| | ມືຂວາປ້ອນໄຂ່ອ້າຍ | ມືຊ້າຍປ້ອນໄຂ່ນາງ |

## 6.ຄຳສຸພາສິດ

### 6.1 ຄວາມໝາຍ ແລະລັກສະນະຈຸດພິເສດ

ດ້ານເຄົ້າສັບ, ສຸພາສິດແມ່ນຄຳທີ່ມີເຄົ້າມາຈາກຄຳ ( ສຸພາສິຕະ)ໃນພາສາບາລີ - ສັນສະກິດ ເຊິ່ງມີຄວາມໝາຍວ່າ ຄຳເວົ້າທີ່ດີ ຫຼືຄຳເວົ້າທີ່ເປັນປົກກະຕິ.

ດ້ານວິຊາການ, ສຸພາສິດໄດ້ກາຍເປັນຫົວຂໍ້ໜຶ່ງໃນວັນນະຄະດີ ຄວາມໝາຍອັນເລິກເຊິ່ງ, ມັນແມ່ນຄຳກອນປະເພດໜຶ່ງ ທີ່ມີການສຳຜັດເກາະກ່າຍກັນຢ່າງຄ່ອງແຄ້ວ ແລະ ໃຊ້ສັບພາສາທີ່ເຂົ້າໃຈງ່າຍ ແຕ່ສຸພາສິດບາງຄຳກໍເປັນຄຳເວົ້າທຳມະດາ ບໍ່ແມ່ນກອນ.

ຄຳວ່າ ສຸພາສິດ ແມ່ນຄຳເວົ້າທີ່ຈົບງາມ ແລະ ຖືກຕ້ອງ, ເປັນຄຳເວົ້າທີ່ສັ້ນ ແລະ ມີຄວາມໝາຍເລິກເຊິ່ງໂດຍແມ່ນປະຊາຊົນຊາວຜູ້ອອກແຮງງານບັນດາເຜົ່າເປັນຜູ້ປະດິດແຕ່ງມາແຕ່ບູຮານນະການ

ເມື່ອອີງໃສ່ລັກສະນະແລະຈຸດພິເສດຕົ້ນຕໍຂອງສຸພາສິດ ອາດເວົ້າໄດ້ວ່າສຸພາສິດແມ່ນປະໂຫຍກຄຳເວົ້າທີ່ມີຄວາມອຸດົມສົມບູນ, ມີເນື້ອໃນຄວາມໝາຍຄົບຖ້ວນໃນໂຕຂອງມັນ. ເມື່ອໄດ້ອ່ານຫຼືຟັງ ກໍສາມາດເຂົ້າໃຈຄວາມໝາຍ ແລະ ຖອດຖອນບົດຮຽນຕົວຈິງຂອງຊີວິດໄດ້.ເພາະເນື້ອໃນຂອງຄຳສຸພາສິດນັ້ນລ້ວນແຕ່ແມ່ນບົດຮຽນຕົວຈິງທີ່ຖອດຖອນໄດ້ຜ່ານຂະບວນວິວັດອັນຍາວນານ ແລະ ຫຼາຍຮູບຫຼາຍສີຂອງການອອກແຮງງານເພີ່ມພູນຜະລິດຜົນ, ການຕໍ່ສູ້ດັດແປງທຳມະຊາດ, ສັງຄົມ ແລະ ການເຝິກຝົນທັດສະນະຄຸນສົມບັດຂອງຄົນເຮົາ.

ສະນັ້ນ, ສາມາດເວົ້າໄດ້ວ່າ ສຸພາສິດເປັນວັນນະຄະດີພື້ນເມືອງປະເພດໜຶ່ງເປັນຄຳເວົ້າທີ່ສັ້ນກະທັດຮັດ, ຈົບງາມຄ່ອງແຄ່ວ, ສຳຜັດເກາະກ່າຍ, ມີທັງຮູບພາບທີ່ມີຊີວິດວາ, ສາມາດເປັນຄຳສອນ, ຄະຕິເຕືອນໃຈໃນການດຳລົງຊີວິດໄດ້.

### 6.2ປະເພດຄຳສຸພາສິດ

**ກ. ອີງຕາມຮູບການປະດິດແຕ່ງ**

• ປະເພດທີ່ແຕ່ງຂຶ້ນເປັນຄຳເວົ້າ ທຳມະດາ

ຕົວຢ່າງ:

- ໜ້າ ພະໃຈມານ ,
- ປາກເປັນທ່ານຫົວໃຈເປັນຍັກ
- ຕີນຊ້າງຢຽບປາກນົກ.
- ແກວ່ງຄ້ອນກາຍໝາກມອງ
- ສິບປາກເວົ້າບໍ່ທໍ່ຕາເຫັນ

•ປະເພດທີ່ແຕ່ງຂຶ້ນເປັນຄຳກອນ(ຕາມຮູບຂອງ ກອນ)

**ຕົວຢ່າງ:**

- ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ
- ເພື່ອນກິນຫາງ່າຍ ເພື່ອນຕາຍຫາຍາກ
- ໝູກັດຫູກຈຶ່ງຮູ້ຄຸນແມວ

  ລູກແຂວນແອວ ຈຶ່ງຮູ້ຄຸນພໍ່ແມ່
- ເຂົ້າເພິ່ນຂາວ ລູກສາວເພິ່ນແຮງ

ແກງເພິ່ນແຊບ ປາແດກເພິ່ນນົວ

ຜົວເພິ່ນດີ ຍ້ອນເມຍເພິ່ນຮູ້

ສ່ວນຫຼາຍແລ້ວ ປະເພດທີ່ແຕ່ງຕາມຮູບການຂອງກອນນີ້ ມັກມີແຕ່ວັກດຽວແລະສອງວັກສ່ວນແຕ່ງເປັນສາມວັກ ມີໜ້ອຍ, ອັນທີ່ແຕ່ງຂຶ້ນຫຼາຍກວ່າສາມວັກແຮງມີໜ້ອຍ ແລະເມື່ອມີກໍລະນີ້ເກີດຂຶ້ນ ເນື້ອໃນຂອງມັນມັກອອກມາໃນຮູບຂອງບັນຫາ, ຕ້ອງໄດ້ມີການຄົ້ນຄິດ, ພິຈາລະນາຢ່າງເລິກເຊິ່ງຈຶ່ງເຂົ້າໃຈໄດ້.

**ຕົວຢ່າງ:**

- ເພິ່ນວ່າຫີນແຜ່ນລ້ານ ກ້ອນໃຫຍຄືຊິໜັກ

  ບາດວ່າເອົາຊະໂນຕິດ ຊັ່ງຊາສັງມາໄດ້

  ຜົວາຕາມຕາຄົ້ວ ຄືຊະໂນຊິໜັກກວ່າ

  ຄັນແມ່ນຕາບໍ່ຄົ້ວ ຊິເບົາເບື້ອງຝາຍຊະໂນ
- ຢາກກິນເຂົ້າ ໃຫ້ປູກໃສພະລານຫີນ

  ຢາກມີສິນ ໃຫ້ຂ້າພໍ່ຕີແມ່

  ຢາກມີຜູ້ມາແວ່ ໃຫ້ຂ້າໝູ່ດຽວກັນ

  ຢາກມີສີສັນ ໃຫ້ນອນດິນເກືອກຝຸ່ນ

  ຢາກໃຫ້ໂຕອຸ່ນ ໃຫ້ອາບນ້ຳຍາມໝາວ

  ຢາກກິນປາຂາວ ໃຫ້ແບກແຫຂຶ້ນໂຄກ

  ຢາກຕົກໝົ້ນາຣົກ ໃຫ້ເຂົ້າວັດຟັງທຳ

**ຂ. ອີງຕາມເນື້ອໃນ**

ຫາກອີງຕາມເນື້ອໃນທີ່ສະແດງອອກ ຄໍາສຸພາສິດກໍ່ມີຫຼາຍປະເພດເຊັ່ນ: ປະເພດທີ່ເວົ້າເຖິງບົດຮຽນໃນການຕໍ່ສູ້ດັດແປງທໍາມະຊາດ, ປະເພດທີ່ເວົ້າເຖິງການພົວພັນໃນຄອບຄົວ ແລະສັງຄົມ ເປັນຕົ້ນ ດັ່ງຕົວຢ່າງຕໍ່ໄປນີ້

**+ ເວົ້າເຖິງບົດຮຽນໃນການຕໍ່ສູ້ດັດແປງທໍາມະຊາດ ຫຼື ການທໍາມາຫາກິນ**

ຜ່ານຂະບວນວິວັດການອອກແຮງງານ, ເພີ່ມພູນຜະລິດຜົນມາເປັນເວລາຫຼາຍປີ, ປະຊາຊົນລາວຜູ້ອອກແຮງງານລາວບັນດາເຜົ່າໄດ້ສັງເກດຖອດຖອນບົດຮຽນມາຫຼາຍສິ່ງຫຼາຍຢ່າງຈາກທໍາມະຊາດກ່ຽວກັບການຕໍ່ສູ້ດັດແປງທໍາມະຊາດເພື່ອສະສົມໄວ້, ເພື່ອຖ່າຍທອດໃຫ້ລູກຫຼານຮຸ່ນຕໍ່ໆມາ, ການອອກແຮງງານໄດ້ຕິດພັນກັບທໍາມະຊາດຜ່ານມານັ້ນເຮັດໃຫ້ພວກເຂົາສາມາດສັງເກດ ແລະ ຕິດຕາມ, ສົມທຽບເຫດການທໍາມະຊາດຕ່າງໆນາໆແລ້ວກໍ່ສະຫຼູບມາເປັນບົດຮຽນດ້ວຍການປະດິດແຕ່ງ, ສຸພາສິດທີ່ກ່ຽວກັບອາການຝົນຕົກ, ຟ້າແລ້ງເຊິ່ງເປັນເຫດການທີ່ກະທົບໂດຍກົງຕໍ່ການເຮັດນາຂອງປະຊາຊົນທີ່ເປັນອາຊີບຕົ້ນຕໍ ເພື່ອຈະຕວງຖືກຕ້ອງໄດ້ວ່າ ຟ້າຈະມີຝົນ ຫຼື ຟ້າຈະແລ້ງ ປະຊາຊົນໄດ້ໃຊ້ວິທີສັງເກດສົມທຽບເບິ່ງໝູ່ດາວຢູ່ຕາມທ້ອງຟ້າ ດັ່ງຄໍາສຸພາສິດທີ່ວ່າ:

- ຝົນຊິຕົກໃຫ້ເບິ່ງດາວດິນ ຝົນຊິລົມໃຫ້ເບິ່ງດາວຊ້າງ
- ຝົນຊິຕົກຟ້າແຈ້ງ ຝົນຊິແລ້ງຟ້າມືດຟ້າມົວ
- ຝົນຊິຕົກມົດແລ່ນ ຝ້າຊິແລ້ງມົດນອນ

ສໍາລັບການປູກຝັງປະຊາຊົນກໍສັງເກດກົດເກນຫຼາຍຢ່າງທີ່ຕ້ອງໄດ້ເອົາໃຈໃສ່

- ຢາກໃຫ້ນາງາມ ໃຫ້ເບິ່ງກໍາກ້າ
- ສິບຕົ້ນຫຼ້າ ບໍທໍ່ຕົ້ນປີ
- ເດືອນຫົກໃຫ້ຫວ່ານກ້າ ເດືອນຫ້າໃຫ້ແປງໄຖ

ປະຊາຊົນຊາວຜູ້ອອກແຮງງານຕັ້ງແຕ່ໃດມາແມ່ນກຽດຊັງຄວາມຂີ້ຄ້ານ, ຊັງຜູ້ທີ່ຫຼີກວຽກຫຼີກງານໄດ້ແຕ່ເວົ້າແຕ່ບໍ່ຮູ້ເຮັດເຊັ່ນ:

- ຊ່າງມືມັນຍາກ ຊ່າງປາກມັນງ່າຍ

ນອກນັ້ນເຂົາຍັງໄດ້ສັ່ງສອນຕັກເຕືອນໃຫ້ດຸໝັ່ນສູ້ຊົນ ດັ່ງສຸພາສິດທີ່ວ່າ:

- ໝາຍໄຮ່ ໃຫ້ສຸດສາຍຕາ
- ໝາຍນາ ໃຫ້ສຸດສຽງຮ້ອງ
- ຕື່ນເດິກ ອາບນໍ້າກ່ອນກາ
- ໄປນາ ກ່ອນໄກ່
- ຫຼັງສູ້ຟ້າ ໜ້າສູ້ດິນ
- ໄຮ່ບໍ່ຮົກ ຍ້ອນເຈົ້າໝັ້ນພຽນ

**+ ເວົ້າເຖິງການພົວພັນໃນຄອບຄົວແລະສັງຄົມ**

ຄອບຄົວແມ່ນຫົວໜ່ວຍພື້ນຖານນ້ອຍຂອງສັງຄົມ ແລະ ຍັງເປັນບ່ອນກໍາເນີດຂອງສັງຄົມເຮົາທີ່ຄ່ອຍເຕີບໃຫຍ່ຂຶ້ນ ແລະ ຄ່ອຍກ້າວໄປສູ່ສັງຄົມອັນກວ້າງຂວາງ .ສະນັ້ນ, ການພົວພັນໃນຄອບຄົວຈຶ່ງມີຄວາມໝາຍສໍາຄັນກວ່າໝູ່ເພາະເປັນບ່ອນສ້າງຄຸນສົມບັດ, ນິດໄສໃຈຄໍອັນດີ ເພື່ອເປັນສະມາຊິກຜູ້ທີ່ດີເດັ່ນຂອງສັງຄົມ , ພ້ອມກັນນັ້ນກໍເພື່ອຮັບເອົາຜົນສະທ້ອນ ທາງສັງຄົມນັ້ນ. ສະນັ້ນ, ຕັ້ງແຕ່ໃດໆມາປະຊາຊົນເຄີຍຖືສໍາຄັນກ່ຽວກັບການເຕືອນລູກຫຼານໃຫ້ເປັນຄົນທີ່ດີ

ຂອງປູ່, ຍ່າ, ພໍ່ຕູ້, ແມ່ຕູ້... ເມື່ອໃຫຍ່ຂຶ້ນມາແລ້ວກໍເປັນ ຜົວແກ້ວເມຍທິບ, ເປັນພໍ່ແມ່ທີ່ດີຂອງລູກ, ເປັນພົນລະເມືອງທີ່ດີຂອງປະເທດຊາດ, ສັງຄົມ, ຕໍ່ບັນຫາດັ່ງກ່າວມີສຸພາສິດກ່າວໄວ້ວ່າ:

- ຜົວເມຍນີ້ ກູມຶງຢ່າໄດ້ວ່າ
ໃຫ້ວ່າຂ້ອຍ ແລະເຈົ້າ ຜອງເທົ່າຊົ່ວຊີວັງ
- ຜົວເມຍນີ້ ກູມຶງຢ່າໄດ້ວ່າ
ໃຫ້ວ່າເຈົ້າ ແລະຂ້ອຍ. ເງິນຮ້ອຍຈິ່ງແກວ່ນຖົງ
- ແຫວນດີກໍຍ້ອນຫົວ ຜົວດີກໍຍ້ອນເມຍ
- ຜົວເປັນເພຍ ຍ້ອນເມຍຊ່າງເວົ້າ
- ບຸນຄຸນພໍ່ແມ່ນີ້ ໜັກເກິ່ງທໍລະນີ
ໃຜຜູ້ຢ່າແຢງນົບ ຫາກຊິດີເມືອໜ້າ

ສ່ວນການພົວພັນລະຫວ່າງ ພີ່ນ້ອງຜູ້ອື່ນໆທາງໄກ ແລະ ໃກ້ນັ້ນ ກໍລ້ວນແຕ່ມີຄວາມສຳຄັນເຖິງການສ້າງສາ ແລະ ປັບປຸງຄວາມສຸກໃນຄອບຄົວ ເຊັ່ນ ສຸພາສິດທີ່ວ່າ:

- ມີເມຍໃຫ້ຊ່າງຍ້ອງ ມີພີ່ນ້ອງໃຫ້ໝັ່ນຢ້ຽມຢາມ
- ແກ້ວບໍ່ຜັດ ສາມປີເປັນແຮ່
  ພີ່ນ້ອງບໍ່ແວ່ ສາມປີເປັນຜູ້ອື່ນ
- ຮົ້ວຫຼາຍຫຼັກຈຶ່ງໝັ້ນ ພີ່ນ້ອງຫຼາຍຊັ້ນຈຶ່ງດີ

ນອກຈາກການພົວພັນໃນຄອບຄົວແລ້ວ ຄົນເຮົາຍັງຕ້ອງມີການພົວພັນກັບສັງຄົມຂ້າງນອກ ເຊິ່ງເປັນບັນຫາທີ່ຂາດບໍ່ໄດ້ ຜ່ານມາປະຊາຊົນເຄີຍສ້າງບັນຫາການພົວພັນກັບໝູ່ຄູ່, ມິດສະຫາຍ ເພິ່ນເຄີຍສັ່ງສອນໃຫ້ມີນ້ຳໃຈສາມັກຄີ, ເອື້ອເຟື້ອເຜື່ອແຜ່, ຖ້າຫາກບໍ່ມີພີ່ນ້ອງຫຼາຍກໍໃຫ້ຜູກສ່ຽວຮັກສະຫາຍແພງຕື່ມເຊັ່ນ: ສູພາສິດທີ່ວ່າ:

- ພີ່ນ້ອງບໍ່ຫຼາຍ ໃຫ້ທຳມິດສະຫາຍຕື່ມ
- ຜົມບໍ່ຫຼາຍ ໃຫ້ຕື່ມຊ້ອງ
- ຮັກຊໍ້າຕື່ມແພງ ແດງຊໍ້າຕື່ມຍ້ອມ

ສຳລັບການພົວພັນໝູ່ຄູ່ບໍ່ແມ່ນຈະພົບຄົນດີສະເໝີໄປ ເພິ່ນໄດ້ສັ່ງສອນວ່າ

- ພົບຄົນດີ ມີສີແກ່ຕົວ
  ພົບຄົນຊົ່ວ ພາຕົວໝົ່ນໝອງ
- ເພື່ອນກິນຫາງ່າຍ ເພື່ອນຕາຍຫາຍາກ

ເພື່ອຢາກຫຼຸດພົ້ນອອກຈາກຄວາມທຸກຍາກຂາດເຂີນ ຕ້ອງມີຄວາມດຸໝັ່ນອອກແຮງງານເພີ່ມພູນຜະລິດຜົນ ຊອກຢູ່ຫາກິນດ້ວຍຄວາມອົນທົນດຸໝັ່ນ ເຊັ່ນ:

- ຕື່ນຮຸ່ງເຊົ້າ ໃຫ້ໄດ້ເກົ້າແນວຢາມ
- ຢູ່ໃຫ້ປູກມອນ ໜີໃຫ້ຊ້ອນຮົ່ວ
- ໄປຢຽບໜາ ມາຢຽບຂຽດ

ນອກນັ້ນ, ຍັງສອນໃຫ້ເປັນຄົນຖະໜອມທ່ອມຕົວ, ຮູ້ຕ່ຳຮູ້ສູງ, ບໍ່ອວດອົ່ງທະນົງຕົວ ເຊິ່ງແມ່ນທາດແທ້ຄຸນສົມບັດຂອງຊາວຜູ້ອອກແຮງງານເພິ່ນເຄີຍສັ່ງສອນວ່າ:

- ຊາດທີ່ເປັນຄົນນີ້ ໃຫ້ທຳພຽນຄືນົກເຈົ່າ

  ຍາມເມືອບິນເຜີ່ນຝ້າຍ ຈິ່ງຂາວແຈ້ງດັ່ງນົກຍາງ

- ຊິຖິ້ມນ້ຳລາຍ ໃຫ້ຫຼຽວເບິ່ງປ່ອງ

  ຊິເຕັ້ນຂ້າມຮ່ອງ ໃຫ້ຫຼຽວເບິ່ງໜາມ

- ນັ່ງໃຫ້ເບິ່ງທີ ໜີໃຫ້ເບິ່ງບ່ອນ

- ອົດສະຈັນໃຈໂອ້ ຕັກແຕນໂມ້ປ້ອງໝູ່ມັ່ງ

  ຂຽດຈະນາປ້ອງໝູ່ຊ້າງ ໄປຢືນເກີຢູ່ທົ່ງຫຼວງ

- ດົງຫຼວງບໍ່ມີໄມ້ ຊິເອົາຫຍັງມາເປັນປ່າ

- ນ້ຳສະໝຸດບໍ່ມີຫີນກ້ອນລ້ານ ຊິເປັນແກ້ງບ່ອນໃດ

- ເຫັນວ່າປາກນົກນ້ອຍ ຊ້າງຢ່າຢຽບລົງໜັກ ຫຼາຍເນີ

  ບາດນົກໂຮມແຮງກັນ ຊິຕອດຕາຍໂຕຊ້າງ

ພ້ອມກັນນີ້, ຍັງມີຄຳສຸພາສິດທີ່ເວົ້າເຖິງບັນຫາ ອື່ນໆອີກ, ບັນຫາເຫຼົ່ານັ້ນລ້ວນແຕ່ ມີຈິງຢູ່ໃນສັງຄົມ ມັກອອກມາໃນຮູບແບບຂອງຄຳປິດສະໜາໂດຍສະເພາະແມ່ນການຕໍ່ສູ້ຊົນຊັ້ນກໍແມ່ນບັນຫາໜຶ່ງທີ່ກວມປະລິມານຫຼາຍສົມຄວນ. ຢູ່ໃນວັນນະຄະດີພື້ນເມືອງລາວປະເພດຄຳສຸພາສິດ, ເພາະວ່າຊົນຊັ້ນກົດຂີ່ຂູດຮີດ ແລະ ຊົນຊັ້ນຖືກກົດຂີ່ຂູດຮີດມີຂໍ້ຂັດແຍ່ງ ປໍລະປັກດ້ານສິດຜົນປະໂຫຍດ ເພາະວ່າຊົນຊັ້ນຖືກກົດຂີ່ຂູດຮີດເປັນຜູ້ດຳລົງຊີວິດດ້ວຍການອອກແຮງງານອາໄສເຫື່ອແຮງ ແລະ ສະຕິປັນຍາຂອງຕົນເພື່ອລ້ຽງຊີບ ຕົ້ນຕໍແມ່ນການອອກແຮງງານດ້ວຍຕີນມືຢ່າງໜັກໜ່ວງ, ແຕ່ຜົນທີ່ໄດ້ຊົມໃຊ້ພັດໄດ້ຕາມແຮງງານທີ່ຖອກເທອອກມາ, ສ່ວນຊົນຊັ້ນກົດຂີ່ຂູດຮີດພັດອາໃສຂູດຮີດແຮງງານຂອງຜູ້ອື່ນເພື່ອສ້າງຮັ່ງຄູນມີໃຫ້ແກ່ຕົນເອງ, ສະນັ້ນຈິ່ງເກີດມີການຕໍ່ສູ້ດັ່ງສຸພາສິດທີ່ສະແດງອອກດັ່ງນີ້:

ຕົວຢ່າງ

- ເປັດເປັນຜູ້ໄຂ່ ໄກ່ເປັນຟັກ

  ຂີ້ກະດັກກະເດືອນເປັນຜູ້ລ້ຽງ ບຸນຊິໄດ້ແກ່ໃຜ

- ເພິ່ນວ່ານົກອີ່ອ້ຽງ ກິນໝາກໂພໄຂ

  ແຊວໆສຽງ ບໍ່ມີໂຕຮ້ອງ

  ແຊວໆຮ້ອງ ໂຕດຽວໝົດໝູ່

- ໂຕຈັບຢູ່ງ່າລຸ່ມ ກົ້ມຫົວກິນຫງ່າເທິງ

  ໂຕຈັບຢູ່ຫງ່າເທິງ ແຫງວນຄໍກິນຫງ່າໃຕ້

  ຈັກວ່າເປັນຈັງໃດເດ ສັງມາເວວາດຕ່າງ

  ໄວແກ່ເຈົ້າຜູ້ສອງຮູ້ ປອງແກ້ຮ່ຳເພິງ ຫັ້ນທ້ອນ.

- ເຫັນວ່າປາກນົກນ້ອຍ ຊ້າງຢ່າຢຽບລົງໜັກ ຫຼາຍເນີ

  ບາດນົກໂຮມແຮງກັນ ຊິຕອດຕາຍໂຕຊ້າງ

- ຜູ້ກິນ ກິນພໍຮາກ ຜູ້ຢາກໆພໍຕາຍ
- ໄຫ່ໃຫຍ່ລົ້ນ ໄຫ່ນ້ອຍບໍ່ເຕັມ
- ເງິນເຕັມເລົ້າ ນັ່ງເວົ້າກໍຄື
- ເງິນເຕັມຖົງ ເວົ້າໂກງກໍ່ໄດ້.

# ບົດທີ 2

# ປະເພດກາບ

## 1. ຄວາມໝາຍຂອງກາບ

ຄໍາວ່າກາບມາຈາພາສາສັນສະກິດວ່າ: ກາວະຍະ ແປວ່າຄໍາເວົ້າຂອງຜູ້ສະຫຼາດ, ແປງ ວ ມາເປັນ ພ ອອກສຽງຄື ຕົວ ບ ສະກົດ ຈຶ່ງອ່ານວ່າກາບ ສ່ວນ ຢູ່ຂ້າງທ້າຍຕັດອອກ.

ຄໍາວ່າກາບໃນພາສາລາວເຮົາ ໄດ້ແກ່ຈໍາພວກກາບໄມ້ຕ່າງໆເຊັ່ນ: ກາບກ້ອຍ, ກາບປີ, ກາບໄຜ່ ເປັນຕົ້ນ... ບັນດາກາບທັງຫຼາຍເຫຼົ່ານີ້ ມັນກໍມີລັກສະນະຊ້ອນ ແລະ ຮອງກັນຫຼາຍເຊັ່ນ: ສໍາລັບຄໍາເວົ້າໃນກອນກາບມັນສໍາຜັດຈອງ ດຶງກັນໄປເທື່ອລະແຖວ ແຕ່ລະວັກ ດ້ວຍສຽງສະຫຼະທີ່ຮອງຮັບກັນຕາມຫຼັກການແຕ່ງຂອງມັນ. ສະນັ້ນ ບາດກ້າວເດີນ ຂອງກອນກາບຈຶ່ງເຮັດໃຫ້ເຮົາສາມາດຈື່ໄດ້ງ່າຍ

### 1.1. ພາກສ່ວນຂອງກາບ

ກາບ ມີພຽງແຕ່ 3 ພາກສ່ວນ ຄື: ຄໍາ, ຕອນ ແລະ ວັກ

**ກ.ຄໍາ**

ໃນວັກໜຶ່ງອາດມີ 7ຄໍາ ຫຼື 8ຄໍາ (ຖ້າແມ່ນກາບ 7ຫຼື ກາບ 8 )

**ຂ.ຕອນ**

ຕອນ ໃນວັກໜຶ່ງເພິ່ນແບ່ງອອກເປັນ 2ຕອນ, ໂດຍອາໃສການຕົກພັກໆໜຶ່ງໆ. ເປັນເຄື່ອງໝາຍບອກ ເຂດແດນ. ໃນກາບທີ່ມີ7ຄໍາ, ຈັງຫວະຕົກພັກທໍາອິດຈັດເປັນຕອນໜຶ່ງ ແລະ ອີກສ່ວນໜຶ່ງທີ່ຍັງເຫຼືອຈັດເປັນອີກຕອນໜຶ່ ງ ເຊິ່ງເພິ່ນຮຽກຕາມສັບທະກະວີວ່າ: ກົກ 3ປາຍ 4.

ຖ້າແມ່ນກາບ 8ຈັງຫວະຕົກພັກທໍາອິດ ຈະຢູ່ໃນຄໍາທີ່4ເປັນຕອນໜຶ່ງ ແລະ ສ່ວນທີ່ເຫຼືອຈັດເປັນອີກຕອນໜຶ່ງ ເຊິ່ງເພິ່ນຮຽກຕາມສັບທະກະວີວ່າ: ກົກ 4 ປາຍ 4

**ຄ.ວັກ**

ວັກໜຶ່ງມີ2ຕອນ ປະກອບສ້າງເປັນວັກຢູ່ໃນກາບ ບໍ່ມີຊື່ສະເພາະ ແລະ ຂຶ້ນກັບບົດຄື ບົດສັ້ນກໍມີໜ້ອຍວັກບົດ ຍາວກໍມີຫຼາຍວັກ

## 2.ການສໍາຜັດຂອງກາບ

ການແຕ່ງກາບ ຖືເອົາການສໍາຜັດສະຫະ ເປັນຫຼັກ ຄໍາສຸດທ້າຍຂອງວັກທີ 1 ສໍາຜັດ ກັບຄໍາທີ 3ຂອງວັກທີ 2. ຄໍາສຸດທ້າຍຂອງວັກທີ 2ສໍາຜັດກັບຄໍາທີ 3ຂອງວັກທີ 3, ຄໍາສຸດທ້າຍຂອງວັກທີ 3ສໍາຜັດກັບຄໍາທີ 3ຂອງວັກທີ 4ສໍາຜັດ ດັ່ງນີ້ຕໍ່ໄປຈົນສຸດເລື່ອງ.

ກາບ ບໍ່ໄດ້ກໍານົດບາດມີແຕ່ແຕ່ງໄປໃຫ້ສຸດເລື່ອງທີ່ຜູ້ແຕ່ງຢາກເວົ້າເຖິງ. ເມື່ອແຕ່ງສຸດແລ້ວກາບນັ້ນຖື ເປັນບົດ ໜຶ່ງ ຫຼືເລື່ອງໜຶ່ງ. ສໍາລັບຄໍາທີ 7ສຸດທ້າຍຂອງວັກ ຖ້າຂັດຂ້ອງສໍາຜັດກັບຄໍາທີ 3ຂອງ ວັກຕໍ່ໄປບໍ່ໄດ້ຈະສໍາຜັດກັບຄໍາທີ 2 ຫຼື ຄໍາທີ 1ກໍໄດ້ ແລະ ຖ້າຄໍາທີ 7 ສຸດທ້າຍຂອງວັກ ◌່ ເປັນຄໍາເອກ, ຄໍາໂທ ຫຼື ຄໍາສາມັນ ຄໍາທີ 3ທີ່ເປັນຄໍາສໍາຜັດນັ້ນຈະ ຕ້ອງເປັນໄປຕາມຄໍາສຸດ

### ໂຄງຮ່າງການສໍາຜັດຂອງກາບ 7ດັ່ງນີ້



**ຕົວຢ່າງ1:**

| | |
|---|---|
| ໂລກເອີຍໂລກ | ໂລກແຫ່ງເມືອງຄົນ |
| ເກີນຍາກຈົນ | ໃນການເປັນຢູ່ |
| ການຕໍ່ສູ້ | ມີຢູ່ປະຈໍາ |
| ເລື່ອງໜ້າຂໍາ | ມີຢູ່ບໍ່ແລ້ວ |
| ເປັນເລື່ອງແປ້ວ | ມີຢູ່ຫົວໃຈ |
| ຄວາມຫຼົງໄຫຼ | ພາໃຫ້ເກີດທຸກ |
| ຫາຄວາມສຸກ | ບໍ່ມີໃນກາຍ |
| ບາດວ່າຕາຍ | ໄປແລ້ວຊາດນີ້ |
| ຄວາມເປັນໜີ້ | ໃນກົດແຫ່ງກໍາ |
| ມີປະຈໍາ | ໃນຕົວມະນຸດ |
| ບໍລິສຸດ | ກໍ່ກ້ອຍປັນຍາ |

**ຕົວຢ່າງ 2:ທ່ຽວຫຼິ້ນບຸນປີໃໝ່**

| | |
|---|---|
| ປີໃໝ່ນີ້ | ໄດ້ຮອບວຽນມາ |
| ດວງມາລາ | ຈໍາປາຊາວຈ່າມ |
| ແຕ່ລະບ້ານ | ມ່ວນຊື່ນດີໃຈ |
| ໃຜກໍໄປ | ທໍາບຸນຕັກບາດ |
| ບໍ່ໄດ້ຂາດ | ວັນພະວັນສິນ |
| ໄປທ່ຽວຫຼິ້ນ | ຕາມບ້ານຕາມຊ່ອງ |
| ທ່ຽວເລາະລອງ | ເຮືອນໃຕ້ເຮືອນເໜືອ |
| ຍ່າງເປັນເຄືອ | ເຈືອປົນເປັນໝູ່ |
| ແຕ່ລະຄູ່ | ຫົດນໍ້າໃສ່ກັນ |
| ພົດສະນັ່ນ | ສຽງກ້ອງກັງວານ |
| ສຸກສໍາລານ | ສາວປານສາວສ້ອຍ |
| ດື່ມນໍ້າອ້ອຍ | ຮ້ານນ້ອຍນິງຄານ |
| ກຸດສິງການ | ຊາວລາວມ່ວນຫຼາຍ |

| | |
|---|---|
| ແຕ່ລະສາຍ | ມີລິດເທ່ນ່າ |
| ທັງຮ້ອນດ້າ | ໂນ້ວ່າກໍມີ |
| ມ່ວນອີຫຼີ | ພໍສໍ 44 |
| ມ່ວນແບບນີ້ | ບໍ່ເຄີຍມີມາ |
| ມ່ວນແທ້ນາ | ສຸລາກໍ່ແຊບ |
| ດື່ມເຫຼົ້າແກາບ | ເອີ້ນວ່າເຫຼົ້າໄຫ |
| ແສນດີໃຈ | ຟ້ອນແອະຟ້ອນແອ່ນ |
| ມີສຽງແຄນ | ສຽງກອງສຽງຄ້ອງ |
| ເປັນທຳນອງ | ຕຸ່ມເຕີະຕຸມເຕີ່ນ |
| ຢູ່ກາງເດີ່ນ | ໂຮງຮຽນມໍຊໍ |
| ຄືນອັ່ງອໍ | ລໍຄອຍບາສີ |
| ເຖີງນາທີ | ບາສີປີໃຫມ່ |
| ທ່ານຜູ້ໃຫຍ່ | ໄດ້ກ່າວອາຈາ |
| ທ່ານອະທິການ | ບໍດີນຳຫນ້າ |
| ເວົ້າເກັ່ງກ້າ | ພາກພາສາລາວ |
| ຄຳພອນຍາວ | ກົມກຽວລ້ຽວຕໍ່ |
| ມອນກະດໍ້ | ມັດຂໍ້ຕໍ່ແຂນ |
| ແສນອອນຊອນ | ຢູ່ເດີ່ນສຳສາ |
| ຄຳພອນວາ | ມາເຢີຂວັນເອີຍ |
| ສຽງໂຮເຕີ້ຍ | ສຽງນັກສຶກສາ |
| ມີມາລາ | ຊໍ່ຊອນແຊມຮ້ອຍ |
| ສຽງອື່ນອ້ອຍ | ບ່າວນ້ອຍສາວຈິ |
| ສຽງດົນຕີ | ບັນເລັງສະນັ່ນ |
| ໂຮເປັນບັນ | ລຳເຕີ້ຍອອນຊອນ |
| ຈົນຢາກນອນ | ຫຼັບຕາຄາທີ່ |

| | |
|---|---|
| ເວົ້າຮອດນີ້ | ຊິໄດ້ກ່າວລາ |
| ມອນແທ້ນາ | ປີໃຫມ່ປີນີ້ |

ຕົວຢ່າງ:

ຟັງເຈົ້າຟັງ ໝູ່ເຮົາຊິກ່າວ
ເຮົາຈັກບ່າວ ເຕືອນບອກຜູ້ຟັງ
ອະນິດຈັງ ພຸດທາຕັດໄວ້
ອີງເອກໄທ້ ຕັດເຫດສິນຫ້າ
ໜຶ່ງຫ້າມຂ້າ ຄືຂໍ້ປານາ
ອັດທິນນາ ຂໍ້ສາມຫ້າມລັກ
ບໍ່ໃຫ້ພັກ ໃຜຜິດກາເມ
ແຕ່ບຸບເພ ພຸດທາຕັດໄວ້
ຫ້າມບໍ່ໃຫ້ ລະເມີດຄຳສອນ
ປະຊາກອນ ຈົ່ງຄິດຖ້ວນຖີ່
ຂໍ້ທີ່ສີ ຄືຂໍ້ມຸສາ
ກ່າວວ່າຈາ ສັດຈິງທຸກເມື່ອ
ຄັນບໍ່ເຊື່ອ ລະເມີດຄອງສິນ
ເປັນອາຈິນ ບາບໜາສາໂຫດ
ບໍ່ປະໂຫຍດ ເປັບບາບໜັກໜ່ວງ
ສູຣາເມ ເປັນບາບໜັກໜາ
ກິນແລ້ວກ້າ ກ່າວອອດໂອຫານ
ບໍ່ພິຈານ ອັນຜິດອັນແມ່ນ
ສ່ອງເບິ່ງແວ່ນ ຕາມືດຕາມົວ
ບໍ່ເຫັນຕົວ ຄວາມຊົ່ວເຮັດໄດ້
ເປັນຄົນໃບ້ ຂາດສິນຂາດທຳ
ກະທຳກຳ ຜິດຕໍ່ສິນຫ້າ
ເກີດຊາດໜ້າ ຕົກອະສີຈີ
ພະມຸນີ ເທສະໜາໄວ້
ຈົ່ງຈື່ໄວ້ ຢ່າລ່ວງຄອງສິນ.

ຕົວຢ່າງ 3:

ຢ່າລືມວັດທະນະທຳ

ຟັງເດີເຈົ້າ ນ້ອຍໜຸ່ມທັງສາວ
ຕັ້ງແຕ່ຄາວ ບູຮານກ່ອນກີ້
ມາຮອດນີ້ ໄດ້ສອງພັນປາຍ
ບໍ່ຄືຫຼາຍ ແຕ່ກີ້ແຕ່ກ່ອນ
ຈັ່ງແມ່ນຍ່ອຍ ວັດທະນະທຳ
ບໍ່ຈຳຄຳ ຄອງເຖົ້າຄອງແກ່

| | |
|---|---|
| ຕັ້ງແມ່ນແຕ່ | ຮີດເກົ່າຄອງເດີມ |
| ພາກັນເສີມ | ເຄື່ອງໃໝ່ຂອງນອກ |
| ພາກັນອອກ | ທ່ຽວເທັກທ່ຽວບາ |
| ແລ້ວພາກັນ | ກັນນຸ້ງໂສ້ງຫ້ຽນ |
| ໂລດບໍ່ມ້ຽນ | ມູນພໍ່ມູນແມ່ |
| ນຸ້ງເຄື່ອງແຕ່ | ແກກໜ້າແກກຫຼັງ |
| ໃຫ້ລະວັງ | ຄົນເຂົາເຍາະເຍີ້ນ |
| ຂ້ອຍບໍ່ເຄີຍ | ເຫັນມາແຕ່ກ່ອນ |
| ເພິ່ນນຸ່ງຢ່ອນ | ໂຊໜ້າປະຫຼັງ |
| ຮອດບໍ່ຍັງ | ຂຽນຕາຂຽນຄິ້ວ |
| ຈັກສີສິ້ວ | ສີກ່ຳສີແດງ |
| ລາຄາແພງ | ທີ່ໃດບໍ່ວ່າ |
| ຢ້ານເຂົາຊ່ຳ | ເສຍວັດທະນະທຳ |
| ພາກັນລະ | ເຊົາສາທຸກຄົນ |
| ຢ່າໄປວົນ | ນຳຂອງເມືອງນອກ |
| ຂ້ອຍຂໍບອກ | ຈົດຈຳໄວ້ |
| ຮີດແຕ່ເກົ່າ | ປະເພນີລາວ |
| ນຸ້ງສິ້ນລາວ | ເຄິ່ງແຄ່ງພໍງາມ |
| ເກົ້າຜົມຕາມ | ເປັນມ້ວນຈໍ້ກໍ້ |
| ງາມກະດໍ້ | ຜ້າບ່ຽງແພ່ໄໝ |
| ບໍ່ຄືໃຜ | ເປັນເອກະລັກ |
| ເບິ່ງໃຫ້ຄັກ | ຊາດລາວເອກະອ້າງ |
| ຢ່າໄດ້ມ້າງ | ວັດທະນະທຳ |
| ໃຫ້ຈື່ຈຳ | ຮັກສາເອົາໄວ້ |
| ເອົາໃຈໃສ່ | ມູນມໍລະດົກ |
| ໃຫ້ມັນຕົກ | ລູກຫຼານພາຍຊ້ອຍ |
| ໃຫຍ່ ແລະ ນ້ອຍ | ຈຳໄວ້ແນ່ເດີ |

ສຳລັບກາບ 8 ເພິ່ນກໍຈະແບ່ງເຄິ່ງກັນເລີຍຄື: ກົກ 4 ປາຍ 4  ດັ່ງໂຄງຮ່າງລຸ່ມນີ້:

**ໂຄງຮ່າງການສໍາຜັດຂອງກາບ 8 ດັ່ງນີ້**

o o o (o) o o o o

o o o (o) o o o o

o o o (o) o o o o

o o o (o) o o o o

**ຕົວຢ່າງ 1: ສາມງາມ**

ສາວເອີຍສາວເອີຍ ສາວລາວຍຸກໃໝ່
ສາວທັນສະໄໝ ສາວຊິໄປໃສ
ສາວຢ່າງໄວໄວ ສາວຢູ່ບ້ານໃດ
ສາວນຸ້ງສິ້ນໄໝ ສາວມາກັບໃຜ
ອ້າຍນີ້ຢາກໄປ ຜູກໃຈໄມຕີ
ກັບສາວຜູ້ດີ ວາຈີອ່ອນຫວານ
ສາວຫຼ້ານົງຄານ ຕາຫວານຄື້ອກົງ
ອ້າຍຢາກໄປສິ່ງ ສາວສິ້ນໄໝລາຍ
ຖາລີມຄົມຖາຍ ສະຕາຍຂອງລາວ
ສາຍຕາແວວວາວ ສາວລາວງາມແທ້
ອ້າຍຢາກໄປແວ່ ຢາມນ້ອງຢູ່ເຮືອນ
ນ້ອງນັ້ນງາມເໜືອນ ສາວສະໜັ່ນຟ້າ
ນ້ອງບໍ່ລືດລະ ຮີດເກົ່າຄອງເດີມ.

**ໂຄງຮ່າງການສໍາຜັດຂອງກາບ 14 ດັ່ງນີ້ : ຕອນໜ້າ 7 ຕອນຫຼັງ 7**

oooooo(o) ooooooo

oooo o o (o) oooo o o o

oooooo (o) oooo o o o

ooooo o (o) oooo o o o

**ຕົວຢ່າງ 1:**

ຂ້ອຍນີ້ຊັງຄົນຂີຄ້ານ ຍາມຢູ່ບ້ານມີແຕ່ນອນເວັນ
ຕາເວັນເພນຈຶ່ງຕື່ນກິນເຂົ້າ ນັ່ງເຄົ້າເມື່ົາໜ້າບູດມູຍູ
ເວົ້າສ່ຽງໂວ່ອ່າໂຕນັ້ນໃຫຍ່ ຄັນເວົ້າໃສ່ມັນຮ້າຍຖຽງຄືນ

ຍາມເດິກດຶ່ມສຽງຮ້ອງເນື່ອງນັນ ແຂ່ງລິດກັນສຽງດັ່ງຄັບບ້ານ
ພວກຂີ້ຄ້ານເລາະທ່ຽວເຮຮາ ຄໍ່າແລງມາພວກມັນອອກທ່ຽວ
ວຽກບໍ່ກ່ຽວເອົາຫຼິ້ນຢ່າງດຽວ ຈັ່ງແມ່ນຄຽວແທ້ເດພວກໝູ່
ຢາກມີຄູ່ວຽກບໍ່ເຮັດຫາ ດື່ມສຸລາໃຫ້ໝາເລ່ຍປາກ
ຄັນຂີ້ກາກຍາມຝົນຊິຕົກ ໄກ່ຂັນກົກພວກມັນເຂົ້ານອນ
ຍາມບອກສອນຢ່າງໜີຕໍ່ໜ້າ ຊາດຊົ່ວຊ້າແນວນີ້ຢ່າເນີ.

## 3.ວິທີການໃຊ້ກາບ.

ເພິ່ນນິຍົມໃຊ້ກາບສຳລັບເຊີ້ງຕາມບຸນຕ່າງໆຂອງປະຊາຊົນລາວເຊັ່ນ: ບຸນຊ່ວງເຮືອ, ບຸນບັ້ງໄຟ ຫຼື ເຊີ້ງຕາມພິທີການໃດໜຶ່ງຂອງຊາວບູຮານເຊັ່ນ: ເຊີ້ງນາງດົງ ຫຼື ນາງແມວ ເພື່ອຂໍເອົານ້ຳຟ້ານ້ຳຝົນ.

ເຊິ່ງໃນນັ້ນກາບທີ່ເພິ່ນໃຊ້ເຊີ້ງແມ່ນມີ ຢູ່ສອງແບບຄື: ກາບເຊີ້ງສຽງເຍີ້ນ ແລະ ກາບເຊີ້ງສຽງໄວ

### 3.1. ກາບເຊີ້ງ ( ສຽງເຍີ້ນ)

ການເຊີ້ງແບບສຽງເຍີ້ນແມ່ນກາບທີ່ໃຊ້ ລາກສຽງຍາວໆ. ບາງເທື່ອກໍນິຍົມສຽງສັ້ນໆແບບການເຕັ້ນກ້ອນຊຶ່ງມັນຂຶ້ນກັບຈັງຫວະທຳນອງຂອງຜູ້ແຕ່ງນັ້ນເອງ.

**ຕົວຢ່າງ: ກາບເຊີ້ງສຽງເຍີ້ນ**

ໂອ້ ໂຮ ໂອ ໂຮ ໂອ້ ໂຮ ໂອ
ອົມພຸດໂທ ມະໂນເປັນເຄົ້າ
ຂ້າຈະເວົ້າ ເລື່ອງສາມະຄີມ
ມີຄົນຊົມ ດີຫຼາຍດ້ານນີ້
ມີແນວຊີ້ ເຫັນຈຸດສຳຄັນ
ເພື່ອປະກັນ ໃນຄວາມຮັກຮໍ່
ຜູ້ເປັນພໍ່ ຈິ່ງມີເມດຕາ
ກະລຸນາ ລູກຫຼານຂອງທ່ານ
ເຂົາຈິ່ງຜ່ານ ລະຊົ່ວທຳດີ
ສາມັກຄີ ຊ່ວຍກັນຊຸກຍູ້
ເພື່ອຕໍ່ສູ້ ກັບຄວາມອະທຳ
ເພື່ອຈະນຳ ເອົາຄວາມສັນຕິ
ມີສະຕິ ລະວັງທຸກເມື່ອ
ຢ່າໄປເຊື່ອ ແຕ່ຂ່າວເລົ່າລື
ອັດຕະປື ພວກເຮົາມີແລ້ວ
ຢ່າໃຫ້ແປ້ວ ໃຫ້ສາບໃຫ້ສູນ
ອັນເປັນມູນ ຂອງລາວແຕ່ກ່ອນ
ອັນເປັນບ່ອນ ບ້ານເກີດເມືອງນອນ

| | |
|---|---|
| ຟັງຄຳສອນ | ຂອງຜູ້ເກີດກ່ອນ |
| ຢ່າຕັ້ງທ່ອນ | ເປັນເລື່ອງບໍ່ດີ |
| ຄືນໃຈຜີ | ຢ່ານຳມາໃກ້ |
| ຈະເຮັດໃຫ້ | ພວກເຮົາຈິບຫາຍ |
| ດັບວອດວາຍ | ບໍ່ມີຮອດຊື່ |
| ຈົ່ງໄດ້ຈື່ | ຊື່ອັດຕະປື |
| ໃຫ້ມັນລື | ມີຊື່ໃນໂລກ |
| ຈະເປັນໂຊກ | ແກ່ເຮົາທັງຫຼາຍ |
| ຈົ່ງແຜ່ຜາຍ | ເລື່ອງຄວາມຮັກຊາດ |
| ພວກນັກປາດ | ຢ່າໄດ້ດູດາຍ |
| ຈົ່ງຂະຫຍາຍ | ໃຫ້ເລື່ອງດັ່ງກ່າວ |
| ຈົ່ງນຳພາ | ຊາວລາວໜຸ່ມນ້ອຍ |
| ຢ່າໄດ້ດ້ອຍ | ທາງດ້ານພັດທະນາ |
| ດ້ານອາຈາ | ຈິດໃຈເປັນໃຫຍ່ |
| ທ່ານຜູ້ໃຫຍ່ | ໃຫ້ເຫັນສຳຄັນ |

**3.2 ກາບເຊີ້ງສຽງໄວ**

ຖ້າແມ່ນຊາວໜຸ່ມເຊີ້ງກໍອາດຈະໃຊ້ແບບໄວ ມີລັກສະນະສຽງຕັດເຊິ່ງເພິ່ນເອີ້ນວ່າ: ແບບຈັງຫວະກາເຕັ້ນກ້ອນ. ນອກຈາກນີ້ແລ້ວ ກໍຍັງມີປະເພດເຊີ້ງແບບໄວ ເຊິ່ງເພິ່ນໃຊ້ກາບ 8 ( ໜ້າ 4 ຫຼັງ 4 ).

**ຕົວຢ່າງ:**

| | |
|---|---|
| ເອີຍມາເຮົາມາ | ມາກັນໜິດໜູ່ |
| ມາເຕົ້າໂຮມຢູ່ | ເດີນພະທາດຫຼວງ |
| ຝູງຄົນທັງປວງ | ຍິງສາວທັງບ່າວ |
| ພາກັນຮ້ອງປ່າວ | ມ່ວນຊື່ນອຸລາ |
| ທີສອງທັນວາ | ສະຫຼອງວັນຊາດ |
| ລາວໄດ້ປະກາດ | ກ້ອງໂລກໂລກາ |
| ຕັ້ງເປັນສາທາ | ລັດສັງຄົມໃໝ່ |
| ເຮົາຄວນຮັກສາ | ຖະນຸຖະໜອມ |
| ມີໃຈຮັກຫອມ | ພິງພັນລາວໄວ້ |
| ກາງເໜືອ ແລະ ໃຕ້ | ແມ່ນຊາດດຽວກັນ |
| ຈົ່ງຮີບຂະຫຍັນ | ສ້າງເມືອງແປງບ້ານ |
| ຢ່າໄດ້ກຽດຄ້ານ | ການປູກການຝັງ |
| ຄັນແນວໃດຍັງ | ບໍ່ມີຫາໃສ |
| ສ້າງຊາດລາວໃໝ່ | ສັງຄົມນິຍົມ |
| ໃຫ້ມັນອຸດົມ | ສົມຄວາມມຸ່ງມາດ |
| ສົມກັບວ່າຊາດ | ລາວວິລະຊົນ |

ລາວເຮົາທຸກຄົນ　　　　　　　ພາກັນຄົ້ນຄິດ
ເຮັດໄປຕາມທິດ　　　　　　　ພັກມາກເລນິນ
ສ້າງໃຫ້ແດນດິນ　　　　　　　ເຖິງບັ້ນບ່ອນໝາຍ (ຊໍ້າ ).

ຄົນບູຮານເຄີຍໃຊ້ກາບສໍາລັບເຊີ້ງໃນພິທີກໍາບ່ອງສວງຕ່າງໆເຊັ່ນເຊີ້ງຂໍນໍ້າຟ້ານໍ້າຝົນເຊິ່ງເພິ່ນເອີ້ນວ່າເຊີ້ງນາງດົ້ງ.

**ຕົວຢ່າງ:**

ເຕົ່າອີ່ແມ່ນາງກວັກ　　　　　　ສັກອີ່ແມ່ນາງດົ້ງ
ເປັນໂລ້ງໂຄ້ງ　　　　　　　　ເໝືອນດັ່ງກົງກຽນ
ວຽນມານີ້　　　　　　　　　ໄດ້ສອງສາມຮອບ
ຄອບມານີ້　　　　　　　　　ໄດ້ສອງສາມທີ
ຈັດຈີ່ຫຼີ　　　　　　　　　　ແມງບີ້ໂຕລາຍ
ຄວາຍເຂົາຫຼວງ　　　　　　　　ເຂົ້າດົງປາແມດ
ດົ້ງສູ່ແດດ　　　　　　　　　ຫຼືດົງສູ່ຝົນ
ຂໍນໍ້າຝົນ　　　　　　　　　ນໍາແມ່ຊັກໄຊ້
ແມ່ຊັກໄຊ້　　　　　　　　　ໃຫ້ຖາມນໍາຂຽດຂາເຫຼືອງ
ຂຽດຂາເຫຼືອງ　　　　　　　　ເຂົາວ່າຂຽດຢ່ອງ
ເຮັດອ່ອງລ່ອງ　　　　　　　　ເຂົາວ່າຂຽດຈະນາ
ຫຼັງຊາງ　　　　　　　　　　ເຂົາວ່າຄັນຄາກ
ເຊີນທັງຄົກໄມ້ບາກ　　　　　　ມ່າເຂົ້າກິນອ່ອນນາງສາວກູກະມີ
ມີທັງຫວີເຂົາງົວ　　　　　　　ເຂົາຄວາຍປາຍເກົ້າ
ມີທັງເຫຼົ້າ　　　　　　　　　ໄຫນ້ອຍໄຫໃຫຍ່ຮັບແຖນ
ມາກ່ອງນໍ້າ　　　　　　　　　ເດືອນຫົກໃສ່ເຂົ້າ
ມາກ່ອງນໍ້າ　　　　　　　　　ເດືອນເກົ້າໃສ່ນາ
ເມກຂະຫຼາ　　　　　　　　　ເຂົາລິງມາອາບ
ຫອຍກາບກໍ້　　　　　　　　　ເຂົາຖົ້ມເມືອບົກ
ຝົນຕົກລົງເຄົ້ງໆ　　　　　　　ຫ່າຫຼວງເດືອນເກົ້າ
( ແລ້ວກໍກ້ຽວກັບໄປຕັ້ງຕົ້ນຄືນໃໝ່ອີກ )

ຈາກກາບບົດນີ້ ພວກເຮົາເຫັນວ່າ ຜູ້ແຕ່ງໄດ້ສ້າງໂຄງປະກອບບາງອັນທີ່ພິເສດ. ນອກຈາກລັກສະນະທີ່ພວກເຮົາເວົ້າມານັ້ນເຊັ່ນ ສອງວັກຕົ້ນ ມີແຕ່ວັກລະຫ້າບາດຄໍາ, ແຕ່ບາງວັກກໍພັດມີ 9 ເຖິງ 13 ບາດຄໍາເຊັ່ນ: ເຊີນທັງຄົກໄມ້ບາກ ... ແລະ ບາງວັກບາດຄໍາສໍາຜັດພັດຕົກມາຢູ່ບາດຄໍາທີ່ 5 ແທນທີ່ຈະແມ່ນບາດຄໍາທີໜຶ່ງ, ສອງ ຫຼື ສາມ. ການແຕ່ງແບບນີ້ມີລັກສະນະເຊີ້ງຍາກ ແຕ່ຊໍ້າພັດແຕ່ງງ່າຍ ເພາະມັນບໍ່ໄດ້ຜູກມັດຢູ່ໃນຂອບເຂດຫຼັກການຢ່າງຕາຍຕົວ ເວລາພວກເຮົາຕ້ອງການປະດິດແຕ່ງກາບ ກໍອາດຈະໃຊ້ວິທີແຕ່ງຕາມນີ້ກໍໄດ້ເຊັ່ນດຽວກັນສຸດແລ້ວແຕ່ຄວາມເໝາະສົມ ຫຼື ຄວາມຄ່ອງແຄ່ວຂອງໃຜມັນ.

**ຕົວຢ່າງ:** ກອນກາບ ພັກໄດ້ປົດປ່ອຍພວກເຮົາ.

ເຮົາຮູ້ສຶກ　　　　　　　　　ບຸນຄຸນມາກລົ້ນ
ທີ່ໄດ້ພົ້ນ　　　　　　　　　ຈາກແອກຄາຄໍ

ພັກໄດ້ຍໍ ປົດປົງອອກໃຫ້
ເຮົາຈຶ່ງໄດ້ ຮັບສິດເສລີ
ຜູ້ຊາຍມີ ຢູ່ຄໍາສາມແອກ
ຜູ້ຍິງແບກ ຮອດສີ່ຄາຄໍ
ເຮົາຈະຂໍ ເວົ້າແຕ່ລະຂັ້ນ
ແອກໜຶ່ງນັ້ນ ແມ່ນແອກຕະກຸນ
ທຸກຄົນໝູນ ວຽນຢູ່ໃນຂອບ
ຢູ່ໃນລອບ ຂອງເອກະຊົນ
ຈິດໃຈຄົນ ຄັບແຄບຂີ້ຖີ່
ຖືກກົດຂີ່ ຄາໂຄດຄາວົງ
ຕ້ອງດໍາລົງ ຢູ່ຕາມພໍ່ແມ່
ຂໍເວົ້າແຕ່ ທໍ່ນັ້ນກ່ອນສາ
ແອກສອງມາ ປະເພນີຊາດ
ທີ່ມັນຂາດ ເລື່ອງເຫດເລື່ອງຜີນ
ພາໃຫ້ຄົນ ຖືຜີຖືໄທ້
ທັງນົບໄຫວ້ ເຈົ້ານາຍອາດຍາ
ຖືເວລາ ຖືເຄາະຖືໂຊກ
ຢ້ານທຸກໂສກ ເວນຮອບຄອບງໍາ
ແອກທີສາມ ການເມືອງແອກໃຫຍ່
ພວກບ່າວໄພ່ ຖືແອກອາດຍາ
ເຈົ້າລາຊາ ກົດຂີ່ໝົດຊາດ
ທັງອໍານາດ ພວກຮັ່ງພວກມີ
ພວກເສດຖີ ຂີ່ມເຫັງລູກທາດ
ແອກອໍານາດ ພວກເໜືອກົດໝາຍ
ພວກຜູ້ຊາຍ ແມ່ນຖືກສາມແອກ
ຜູ້ທີ່ແບກ ຕື່ມອີກແມ່ນຍິງ
ຖ້າອ້າງອີງ ການເມືອງກ່າວໄວ້
ແອກສີ່ໄດ້ ຊື່ວ່າແອກຜົວ
ໃນຄອບຄົວ ເມຍຕ້ອງເປັນນ້ອຍ
ເປັນຄືຂ້ອຍ ຂອງຜົວກໍດີ
ຄັນເມຍໜີ ໄປທ່ຽວເລັກນ້ອຍ
ຕ້ອງຖືກປ້ອຍ ຖືກເຕະຖືກຕີ
ບາດຜົວມີ ເມຍໄປທຸກບ້ານ
ເມຍກໍຢ້ານ ບໍ່ປາກບໍ່ຕິງ
ແອກຂອງຍິງ ຂໍເວົ້າສັ້ນ

ສຸດທ່ີນັ້ນ                        ກອນກາບຂອງເຮົາ.

# ບົດທີ 3

# ກອນ

## 1.ຄວາມໝາຍຂອງກອນ.

ກອນ ແມ່ນກະວີປະເພດໜຶ່ງ ທີ່ມີສີລະປະໃນການແຕ່ງສະເພາະ, ມີຫຼັກການເຄັ່ງຄັດ, ກອນໃຊ້ສຳລັບອ່ານ, ຂັບ - ລຳ ໄດ້ຫຼາຍຈັງຫວະ, ທຳນອງເຊິ່ງເປັນທີ່ນິຍົມໃນສັງຄົມລາວ.

ກອນແມ່ນຊື່ລວມຂອງຄຳກະວີນິພົນທົ່ວໄປ ທີ່ມີຢູ່ໃນວັນນະຄະດີລາວ. ກອນໝາຍເອົາຄຳເວົ້າທີ່ປະດິດຄິດແຕ່ງຂຶ້ນ ໃຫ້ມີສຳຜັດເກາະກ່າຍກັນໄປຕາມແບບຫຼັກການແຕ່ງຂອງກອນແຕ່ລະຊະນິດ. ກອນມີຈັງຫວະບາດກ້າວເດີນມ່ວນອອນຊອນຫຼາຍກວ່າກາບ ທັງເປັນທີ່ນິຍົມຂອງປະຊາຊົນທົ່ວໄປໃນລາວ. ດັ່ງນັ້ນ, ເຮົາຄວນຮູ້ ແລະ ເຂົ້າໃຈກ່ຽວກັບຄຳນິຍາມຂອງກອນ.

ກອນແມ່ນຫຍັງ? ກອນແມ່ນກະວີປະເພດໜຶ່ງ ເຊິ່ງນິຍົມໃຊ້ຫຼາຍກວ່າໝູ່ໃນຈຳນວນກະວີທຸກປະເພດເພາະສາມາດໃຊ້ແຕ່ງສຳລັບອ່ານ ແລະ ສຳລັບລຳນຳອີກ. ມັນແມ່ນປະເພດກະວີທີ່ອຸດົມສົມບູນໄປດ້ວຍຮູບການສີລະປະ ແລະ ແຜ່ຂະຫຍາຍຢ່າງກວ້າງໃນໝູ່ມະຫາຊົນ ຈຸດພິເສດລວມຂອງກອນ ແມ່ນໃຊ້ຄຳປະຈຳບ່ອນ, ໃຊ້ຄຳສ້ອຍຄຳບຸບພະບົດ, ໃນວັກໜຶ່ງໆ ມີແຕ່ 7 ເຖິງ 12 ຫຼື 13 ບາດຄຳ, ໃຊ້ທັງສຳຜັດໃນ ແລະ ສຳຜັດນອກໄປພ້ອມໆກັນ.

### 1.1ພາກສ່ວນຂອງກອນ.

ກອນມີຄົບທຸກພາກສ່ວນຂອງສັນທະກະວີຄື: ຄຳ, ຕອນ, ວັກ, ເຟື້ອງ, ບາດ ແລະ ບົດ ນອກຈາກພາກສ່ວນຕ່າງໆທີ່ກ່າວມານັ້ນ. ກອນຍັງມີຈຸດພິເສດອັນໜຶ່ງອີກຄື: ມີຫຼັກການແຕ່ງນັ້ນແມ່ນກົດບັນຄັບໃຊ້ປະຈຳບ່ອນ.

## 2. ຫຼັກຄຳປະຈຳບ່ອນ ແລະ ການເນື່ອງສຽງຂອງກອນ.

ຫຼັກຄຳປະຈຳບ່ອນ ແມ່ນຫຼັກການແຕ່ງກອນ, ແມ່ນຈັງຫວະໃນການເດີນກອນ, ຄຳປະຈຳບ່ອນຖືກກຳນົດໄວ້ໃນແຕ່ລະວັກຢ່າງຕາຍຕົວ ຫຼື ໃຫ້ສຽງເນື່ອງກັນ. ເຮັດໃຫ້ມີຄວາມມ່ວນ ອ່ານ ຫຼື ລຳງ່າຍ.

ຫຼັກຄຳປະຈໍບ່ອນ ແມ່ນເວົ້າເຖິງບາດຄຳໃນພາກສ່ວນຫຼັກ, ທີ່ປະກອບສຽງວັນນະຍຸດໃນແຕ່ລະວັກຂອງກອນ. ຄຳກອນບາດໜຶ່ງທີ່ມີ 4 ວັກ, ວັກໃດກໍມີ 7 ຄຳ ( ບໍ່ນັບຄຳບຸບພະບົດ ແລະ ຄຳສ້ອຍເຂົ້ານຳ ). ກອນບາດໜຶ່ງມີ 28 ຄຳໃນຈຳນວນຄຳທັງໝົດ 28 ຄຳນີ້: ຕ້ອງມີຄຳເອກ 6 ຄຳ, ຄຳໂທ 5 ຄຳ ແລະ ຄຳກາງ ( ຄຳສາມັນ ) 17 ຄຳ. ຢູ່ປະຈຳບ່ອນຂອງມັນຈະຍ້າຍໄປບ່ອນອື່ນບໍ່ໄດ້, ກອນທີ່ມີ 28 ຄຳນີ້ ເພິ່ນເອີ້ນວ່າກອນກະທັດຮັດ. ດັ່ງໂຄງຮ່າງຕໍ່ໄປນີ້:

**ໂຄງຮ່າງ**

| | | | | | | | |
|---|---|---|---|---|---|---|---|
| ວັກທີ 1 ວັກສະດັບ | ກາງ | ເອກ | ໂທ | ກາງ | ເອກ | ກາງ | ກາງ |
| | o | o | o | o | o | o | o |
| ວັກທີ 2 ວັກຮັບ | ກາງ | ກາງ | ກາງ | ເອກ | ກາງ | ກາງ | ໂທ |
| | o | o | o | o | o | o | o |
| ວັກທີ 3 ວັກຮອງ | ກາງ | ກາງ | ໂທ | ກາງ | ກາງ | ກາງ | ເອກ |
| | o | o | o | o | o | o | o |
| ວັກທີ 4 ວັກສົ່ງ | ກາງ | ເອກ | ໂທ | ກາງ | ໂທ | ເອກ | ກາງ |

o o o o o o o

**ຕົວຢ່າງ:**

| | |
|---|---|
| ຮຽນຊື່<u>ແຈ້ງ</u> | ນາມ<u>ວ່າ</u>ສີມສີ |
| ຮຽນກໍດີ | ຢູ່ປີທີ<u>ຫ້າ</u> |
| ໃຈຈີງ<u>ກ້າ</u> | ນໍາຄູສອນ<u>ສັ່ງ</u> |
| ຫວັງ<u>ຢາກໃຫ້</u> | ເສັງ<u>ໄດ້ທຸກປີ</u> |

**ເມືອງລາວອຸດົມຮັ່ງມີ**

| | |
|---|---|
| ໃນປ່າໄມ້ | ສັດສິ່ງມີຫຼາຍ |
| ຝູງງົວຄວາຍ | ມັ່ງເມີຍເສືອຊ້າງ |
| ມີທັງແບ້ | ກະແຕ ແລະ ຄ່າງ |
| ອັນວ່າຊ້າງ | ຫຼາຍແທ້ທ່ານເອີຍ |
| ທັງບ່າງລີ້ວ | ຕາມທີ່ວດົງດອນ |
| ອາຣັນຍາ | ປ່າດົງພົງກວ້າງ |
| ດວງດອກໄມ້ | ມາລາບານເບັ່ງ |
| ເຕັມປ່າໄມ້ | ໄພກວ້າງທົ່ວແດນ |
| ມີຢູ່ແທ້ | ຫຼາຍສິ່ງໃນລາວ |
| ເປັນເມືອງງາມ | ຮັ່ງມີມວນພ້ອມ |
| ກັບທັງໄມ້ | ແຄນຍຸງຍາງດູ່ |
| ໃຜບໍ່ຮູ້ | ຊິເວົ້າສູ່ຟັງ |
| ຄາວແຕ່ຄັ້ງ | ປາງກ່ອນເມືອງລາວ |
| ມີຫຼວງຫຼາຍ | ຢູ່ໃນພູມພື້ນ |
| ມີອາດເວົ້າ | ຄະນານັບຂວ່າຍ |
| ຮຽມກ່າວເວົ້າ | ພໍ້ຮູ້ທ່ານເອີຍ |
| ອັນວ່າໄມ້ | ກໍຍິ່ງມີຫຼາຍ |
| ກັບທັງສັດ | ຢູ່ເວີນວັງນໍ້າ |
| ປູປາພ້ອມ | ຄູນເຄີງປາຂ່າ |
| ມີແນ່ແທ້ | ເມືອງໂຂງເຂົາຊ່າ |
| ປາຂ່ານັ້ນ | ມີແທ້ທ່ານເອີຍ |

## 3.ຊະນິດຂອງກອນ.

ຢູ່ໃນກອນປະເພດນີ້ພັດລວມມີຢູ່ຫຼາຍຊະນິດ ເຊັ່ນ: ກອນອ່ານ, ກອນລໍາ ແລະ ກອນຮ່າຍ ນອກຈາກນີ້ກໍຍັງມີກອນສັກກະວາແບບພິເສດ ແຕ່ໃນນີ້ຈະເວົ້າແຕ່ພຽງບາງຊະນິດດັ່ງນີ້:

### 3.1. ຊະນິດກອນອ່ານ

ກ. ກອນອ່ານແບບທຳມະດາ

**ກອນອ່ານ** ໝາຍເຖິງກອນໜັງສືຜູກ ເຊິ່ງບູຮານແຕ່ງໄວ້ກ່ອນສຳລັບອ່ານເຊັ່ນ: ເລື່ອງ ສັງສິນໄຊ, ນາງແຕ່ງອ່ອນ, ທ້າວ ສຸລິວົງ, ພະເວດສັນດອນ ແລະ ອື່ນໆ.

ຫຼັກການຂອງກອນອ່ານນີ້ຕ້ອງແບ່ງໃຫ້ຖືກຕາມວັກ ແລະ ບາດ ຕະຫຼອດຮອດຫຼັກຄຳປະຈຳບ່ອນຕາມສຽງເອກ, ສຽງໂທທີ່ໄດ້ກຳນົດໄວ້ ໂດຍແຕ່ງບາດໜຶ່ງມີ 4 ວັກ ແລະ ແຕ່ລະວັກໃຫ້ມີ 7 ຄຳບໍ່ນັບຄຳບຸພະບົດ ແລະ ຄຳສ້ອຍ.

**ສາມພາລະບົດບາດ ແລະ ສີ່ໜ້າທີ່ຂອງກຳມະບານ**

➢ ບັດນີ້ ຮຽມຂໍຂຽນອາດເວົ້າ ຖະແຫຼງຂ່າວເປັນກອນ ກ່ອນແລ້ວ
ເພື່ອໃຫ້ເປັນຄຳຄົມ ບອກກຳມະບານເຮົາຮູ້
3 ພາລະ 4 ໜ້າທີ່(ກຳມະບານ)ເຮົານັ້ນ ກຳມະກອນ(ລັດຖະກອນ)ເອົາໃຈໃສ່
ປະຕິບັດໃຫ້ໄດ້ ລາວກ້າວຮຸ່ງຈະເລີນ

➢ ພາລະບົດບາດໜຶ່ງນັ້ນ ແນໃສ່ກຳມະກອນ
ຂົນຂວາຍທັງສຶກສາ ອົບຮົມຊຸ່ມຊື່ນ
ມັນແມ່ນກຳມະບານສ້າງ ຜົນງານອັນຍອດຍິ່ງ
ກຳມະກອນ(ລັດຖະກອນ)ເອກອ້າງ ຊົມໃຊ້ໝາກຜົນ

➢ ພາລະບົດບາດສອງກ່ຽວຂ້ອງ ຄຸ້ມຄອງຮ່ວມວິສະຫະກິດ
ຕ່າງໜ້າກຳມະກອນ ລັດຖະກອນຄອງຄຸ້ມ
ຄຸ້ມຄອງເສດຖະກິດ,ລັດ,ສັງຄົມແລ້ວ ເປັນຕົວແທນແສນດີເດັ່ນ
ປະກອບສ່ວນສ້າງ ສ.ປ.ປ.ລ ໃໝ່ກ້າວ ຈະເລີນຂຶ້ນຮຸ່ງເຮືອງ ແທ້ໜາ

➢ ພາລະບົດບາດສາມກ່າວແຈ້ງ ແຍງເບິ່ງການກະທຳ
ທັງກວດກາຕິດຕາມ ເບິ່ງແຍງແປງສ້າງ
ບັນດາລະບອບນະໂຍບາຍພ້ອມ ຈິງໃຈຈຳຈີ່
ຜົນປະໂຫຍດຊອບທຳຮອບດ້ານ ຄວນສ້າງສິ່ງເສີມ

5 ໜ້າທີ່ກຳມະບານວ່າເວົ້າ ສະແດງອອກເປັນກອນ ລຸ່ມນີ້
ສະມາຊິກກຳມະບານທັງຫຼາຍ ຈົ່ງຈື່ຈຳເອົາໄວ້
ເມື່ອຫາກເຮົານຳໃຊ້ ທິດສະດີຈະມີຄ່າ
ຮຽນຮູ້ເຮັດຫາກໄດ້ ຜະລິດສ້າງຫຼາກຫຼາຍ ດອກນາ

- ໜ້າທີ່ໜຶ່ງວ່າໄວ້ ໂຮມຮ່ວມຂົນຂວາຍ
  ປຸກລະດົມກຳມະກອນ ລັດຖະກອນເອົາໄວ້
  ເພື່ອຝຶກຝົນຕົນໃຫ້ ຊີວິມີຄຸນຄ່າ
  ທັງແນວຄິດຖືກຕ້ອງ ຫັນໜ້າວຢູ່ເລີງ

  ໜ້າທີ່ສອງບອກແຈ້ງ ເອົາໃຈໃສ່ປຸກລະດົມ
  ຂົນຂວາຍທັງແຂ່ງຂັນ ຈັດກັນໃຫ້ມັນໄດ້
  ເປັນຫົນທາງພາກ້າວ ສຳເລັດແຜນເກີນຄາດ
  ຍາດໄຊຊະນະບາດທ້າຍ ຜະລິດສ້າງລື່ນຫຼັງ

- ໜ້າທີ່ທີສາມກ່າວຊີ້ ຈຳແນກມິດສັດຕູ
  ສຶກສາອົບຮົມກຳມະກອນ ຕື່ນຕົວຈິງແຈ້ງ
  ສະແດງຕົນໄວ້ ໃນໂລກາດີເດັ່ນ
  ຮູ້ອັນຜິດ ແລະ ຖືກຕ້ອງ ປະຊາເຊື້ອຮັກແພງ ແທ້ແລ້ວ

- ໜ້າທີ່ທີສີ່ຮູ້ ເອົາໃຈໃສ່ການດູແລ
  ແກ້ໄຂການງານນຳ ຢູ່ກິນທຳສ້າງ
  ປະສານກັນເຂົ້າ ໜັກເບົາຊູຊ່ອຍ
  ບໍ່ວ່າວຽກໃຫຍ່ນ້ອຍ ຄອຍສ້າງສິ່ງເສີມ ແທ້ເນີ

- ໜ້າທີ່ທີຫ້າຕໍ່ທ້າຍ ກະທຳຕໍ່ສາກົນ
  ປະຕິບັດແນວທາງ(ນະໂຍບາຍ) ຕ່າງປະເທດຖືກຕ້ອງ
  ອັນເປັນຄອງດີລ້ຳ ລາວ,ຫວຽດ,ກຳປູເຈຍຊູຊ່ວຍ
  ທັງໂຊຫວຽດຄ້າຍສັງຄົມນິຍົມອ້າຍນ້ອງ ກຳແພງແກ້ວເຂື່ອນແຂງ

- ອາວະສານສຸດສິ້ນ ໄຂກ່າວຄຳກອນ ມານີ້
  3 ພາລະບົດບາດ 4 ໜ້າທີ່ມີ ຈົ່ງຈື່ຈຳເອົາໄວ້
  ກຳມະກອນລາວກ້າວ ເມືອງລາວເຮືອງຮຸ່ງ
  ປົກປັກຮັກສາ ທັງກໍ່ສ້າງຄົມນິຍົມໃຫ້ໄດ້ ລາວເຮົາກ້າວຕໍ່ໄປ ແທ້ເນີ

**ຂ.ການອ່ານແບບອັກສອນສັງວາດ.**

ກອນອ່ານແບບອັກສອນສັງວາດ ແມ່ນກອນອ່ານອີກແບບໜຶ່ງ ທີ່ນິຍົມການສຳຜັດພາຍໃນວັກ ແລະ ຖືເອົາພະຍັນຊະນະເປັນຫຼັກໃນການສຳຜັດຄື: ພະຍັນຊະນະດຽວກັນຮຽງກັນ 2 ຄຳ, 3 ຄຳ, 4 ຄຳ, 5 ຄຳ, 6 ຄຳ, 7 ຄຳ ຫຼື ພະຍັນຊະນະ 2 ໂຕຮຽງກັນຢູ່ 2 ຄຳ. ມີພະຍັນຊະນະອື່ນເຂົ້າກາງ 2 ຄຳ, ການສຳຜັດແບບນີ້ຮຽກວ່າ: ກອນອ່ານອັກສອນສັງວາດ. ຫຼັກການແຕ່ງກໍເໝືອນຫຼັກການແຕ່ງກອນທົ່ວໄປ. ດັ່ງໂຄງຮ່າງຕໍ່ໄປນີ້: ( ລາຍລະອຽດເບິ່ງຫຼັກການສຳຜັດໃນ ).

| | | | | | |
|---|---|---|---|---|---|
| ບາດທີ 1 ວັກທີ | 1XXo | oo | ooo | o | XX |
| | 2 | ooo | ooo | o | |
| | 3 | ooo | ooo | o | |
| | 4 | ooo | ooo | o | |
| ບາດທີ 2 ວັກທີ | 1 | ooo | ooo | o | XX |
| | 2 | ooo | ooo | o | |

ຕົວຢ່າງ1:

ຈັກກ່າວຖອນຖະແຫຼງຂໍ້ ໄຂຄວາມຄຳປະກອບ  
ຂຽນຂອດເປັນກາບແກ້ວ ປະພັນຊີ້ຊ່ອງທາງ ກ່ອນແລ້ວ  
ແນມເຫັນດວງດອກໄມ້ ມະໄລເບີກບານສີ ພຸ້ນເຍີ  
ທຸກເມື່ອຕາຕ້ອງຫຼຶງ ຊອບຊົມຊວນໃກ້  
ອາທິດທໍ້ແສງຕ້ອງ ສວຍງາມລ້ຳລື່ນ  
ດິນລາວຄືໂລກຮູ້ ຂວັນຂ້ອຍຂອດບໍລືມ  
ໃບໜ້າຊາດຍິ້ມແຍ່ມ ສຸດຊື່ນມີສະເໜ່  
ປະຊາແພງພັນຮັກ ຮ່ວມແຮງໂຮມຫ້ອນ  
ລູງອາວອາຫຼານຫຼ້າ ຍິງສາວສະກັນບ່າວ  
ໃຜກໍແຮງເຮັງຈ້າວ ຫັ້ນຫ້າວວ່ອງໄວ້ ແທ້ແລ້ວ.

ຕົວຢ່າງ 2:

ສີທອງ ພາພວກພ້ອມ ພຽງພໍ່າພໍຂະບວນ  
ແຫກຄຸກເອົາໂຕໂຕນ ດວນເດີນດາເວົ້າ  
ໜີຈາກວົງປິດລ້ອມ ທະຫານຍາມແຂ່ງເຂື່ອນ  
ພົ້ນຜ່ານຫວິດວ່າງຮ້າຍ ກາຍເຂົ້າເຂດດົງ  
ຮ່ວມກຳລັງຕໍ່ສູ້ ປົດປ່ອຍເສຍສະຫຼະ  
ຂັນອາສາບຸກຕີ ຕໍ່ໃນແນວໜ້າ  
ເຊັ່ງຊື່ຊາຍສະກັນກ້າ ລືດັ່ງສະເທືອນທົ່ວ

ເປັນແບບຢ່າງຍອດຢ້ຽມ ປະຊາຫຸ້ມທໍ່ຫອມ
ຮອດປີພັນເກົ້າຮ້ອຍ ຫ້າສິບສີ່ປຸດນີ້ງ ຍາມນັ້ນ
ສັນຍາເຊີແນວ ອາວຸດປີງປະໄວ້
ຜື້ງສາລີລີອ້າງ ຊໍ້າເໜືອໂຮມຮ່ອມ
ຕູ້ມຕ່ອມພົນໄຜ່ແໜ້ນ ປະສານກ້ອນແກ່ນກຳລັງ

**ຄ.ກອນອ່ານແບບວິດຊຸມາລີ ( ກອນສາຍຟ້າ )**

ວິດຊຸມາລີ ແມ່ນຄຳທີໄດ້ເຄົ້າມາຈາກພາສາບາລີ ມີສອງຄຳລວມກັນຄື: ວິດຊຸ ແລະ ມາລີ, ວິດຊຸແປ່ວ່າ ຟ້າເຫຼື້ອ, ມາລີ ແປ່ວ່າ ລະບຽບ, ຖ້ອງແຖວ, . ສະນັ້ນ. ວິດສຸມາລີຈື່ແປ່ວ່າ ຄຳກອນທີ່ມີຖ້ອງແຖວດັ່ງສານະຖຸຍຟ້າ ແມບເຫຼື້ອມ.

ກອນອ່ານວິດຊຸມາລີ ແມ່ນກອນອ່ານທີ່ຄືກັນກັບກອນອ່ານແບບທຳມະດາ ຕ່າງຈາກກອນອື່ນໆຢູ່ທີ່ຄຳສຳຜັດຂອງມັນ ເປັນຄຳສຳຜັດຂ້າມວັກ ແລະ ມີທັງສຳຜັດໃນອີກດ້ວຍມັນມີລັກນະນະຕ່າງໆດັ່ງນີ້:

- ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ່ 2 ຫຼື 1 ຫຼື ຄຳທີ່ 4, ຫຼື ຄຳທີ່ 5ໃນຕອນໜ້າຂອງວັກທີ 3
- ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບວັກທີ 3 ຫຼື ຄຳທີ່ 4, ຄຳທີ່ 5 ໃນຕອນໜ້າຂອງວັກທີ່4
- ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ່ 3 ຫຼື ຄຳທີ່ 4, ຄຳທີ່ 5ໃນຕອນໜ້າຂອງວັກທີ່1 ຂອງບາດຕໍ່ໄປ
- ຄຳສຸດທ້າຍຂອງວັກທີ 4 ສຳຜັດກັບຄຳທີ່ 3 ຫຼື ຄຳທີ່ 4, ຄຳທີ່ 5ໃນຕອນໜ້າຂອງວັກທີ່2 ຂອງບາດຕໍ່ໄປ



ບາດທີ 1 ວັກທີ 1XX0 oo ooo o XX
2 ooo ooo o
3 ooo, , ooo o, ,

4 000 , 000 o ,

ບາດທີ 2 ວັກທີ 1 000 , 000 o XX

2 000 , , 000 o ,

**ຕົວຢ່າງ:** **ກອນອ່ານວິດຊຸມາລີ.**

ດູດັ່ງ ງົ້ວເງື່ອນຖ້ອນ ໄວມາກມີຖອຍ ພະເອີຍ
ຄຳສິງສານ ຢ່າບັງຜາຍຜ້ຽນ
ຂໍໃຫ້ພອນ ຖວາຍຄອງຄຳຊື່
ທຸກສິ່ງຜ້ຽນ ຄະນິງເຈົ້າດັ່ງລື
ຈັກຈື່ໄວ້ ນອນດອມດົມກິ່ນ
ຈັກໃຝ່ໄວ້ ທຽມຂ້າງກ່ອມກົມ

**ຕົວຢ່າງ 2:**

**ອັນວ່າ** ຄວາມຊື່ອນີ້ ທຳງ່າຍເຕັມທີ
ແຕ່ວ່າ ຄວນຄະນິງຜົນ ຕອບຄືນທີ່ທ້າຍ
ມັນມັກມີຜົນຕ້ອງ ກາຍເປັນຄວາມຍາກ
ເຮົາຊິເຫັນບ່ອນຮ້າຍ ຍາມເລື້ອງແລ່ນຄືນ
ຄວາມດີ ນັ້ນຍາກຫຍຸ້ງ ຍາມເມື່ອລົງມື
ຕ້ອງໄດ້ບຸກບືນອົດ ເຫື່ອແຮງລົງມ້ອນ
ຜົນຫາກຄືຄືນໄດ້ ກາຍດີໃຈຊື່ນ
ທຸກສິ່ງມີຄົບຖ້ວນ ຫາຍຮ້ອນເມື່ອລຸນ.

**ງ. ກອນອ່ານແບບອະສີລະປັນຕີ.**

ກອນອ່ານອະສີລະປັນຕີ ເປັນກອນສຳຜັດນອກ ແຕ່ງງ່າຍ, ແຕ່ເນື້ອໃນບໍ່ເລິກເຊິ່ງບໍ່ມ່ວນອອນຊອນພໍປານໃດ ໃຊ້ຄຳເວົ້າງ່າຍໆ ກອນອ່ານອະຊີລະປັນຕີ ມີຫຼັກການແຕ່ງດັ່ງນີ້:

- ກອນວັກທີ 1 ມີ 7 ຄຳແບ່ງອອກເປັນ 2 ຕອນຄື: ຕອນໜ້າ 3 ຄຳ ແລະ ຕອນຫຼັງ 4 ຄຳ. ຕື່ມຄຳບຸບພະບົດເຂົ້າ 2 – 4 ຄຳ ແລະ ຕື່ມຄຳສ້ອຍເຂົ້າ 2 ຄຳ ເມື່ອຕ້ອງການ. ກອນບາດໜຶ່ງມີ 4 ວັກ ແຕ່ລະວັກມີ 7 ຄຳ ຄືກັບກອນປະເພດອື່ນໆ.
- ການສຳຜັດຖືເອົາສະຫຼະເປັນຫຼັກຄຳປະຈຳບ່ອນຄື: ຄຳເອກ ແລະ ຄຳໂທ ກໍວາງໄວ້ປະຈຳບ່ອນຄືກັບກອນລຳສັ້ນ - ລຳຍາວ. ສຳລັບຄຳເອກ ຖ້າຂັດຂ້ອງຊອກບໍ່ໄດ້ແທ້ໆ ຈະໃຊ້ຄຳຕາຍແທນກໍໄດ້.
- ການສຳຜັດມີດັ່ງນີ້:

+ ຄຳສຸດທ້າຍຂອງວັກທີ 1 ສຳຜັດກັບຄຳທີ 3 ຫຼື ທີ 2 ຫຼື ທີ 1 ໃນວັກທີ 2
+ ຄຳສຸດທ້າຍຂອງວັກທີ 2 ສຳຜັດກັບຄຳທີ 3 ຫຼື ທີ 2 ຫຼື ທີ 1 ໃນວັກທີ 3
+ ຄຳສຸດທ້າຍຂອງວັກທີ 3 ສຳຜັດກັບຄຳທີ 3 ຫຼື ທີ 2 ຫຼື ທີ 1 ໃນວັກທີ 4
+ ຄຳສຸດທ້າຍຂອງວັກທີ 4 ສຳຜັດກັບຄຳທີ 3 ຫຼື ທີ 2 ຫຼື ທີ 1 ໃນວັກທີ 1 ຂອງບາດຕໍ່ໄປ. ສຳຜັດແບບນີ້ຈົນສຸດເລື່ອງດັ່ງໂຄງຮ່າງຕໍ່ໄປນີ້:

ບາດທີ 1 ວັກທີ 1 XXXo o o o o o XX \

2 o o o o o o
3 o o o o o o
4 o o o o o o
ບາດທີ 2 ວັກທີ 1 o o o o o o
2 o o o o o o
3 o o o o o o
4 o o o o o o

**ຕົວຢ່າງ: ກອນອ່ານ ອະຊີລະປັນຕີ.**

| | | |
|---|---|---|
| + | ສິນຫ້າ ຊູເຊີດໄວ້ | ແນວນັ່ນາມຕົນ |
| | ສິນຫ້າ ເປັນຜົນດີ | ຕໍ່ຄົນຈິງແທ້ |
| | ສິນຫ້າ ມີມາແກ້ | ຄົນພານບັງບຽດ |
| | ບໍ່ໃຫ້ ຄົນຄຽດແຄ້ນ | ທຳຮ້າຍຕໍ່ກັນ |
| + | ຂໍ້ໜຶ່ງນັ້ນ | ຮຽກວ່າປານາ |
| | ບໍ່ໃຫ້ ຄົນອິດສາ | ບຽດບຽນຕີຂ້າ |
| | ປານາເວັ້ນ | ເວນບໍ່ວຽນໃນຮອບ |
| | ບາບບໍ່ມາຕອບເຈົ້າ | ຜົນໄດ້ແຕ່ບຸນ |
| + | ຂໍ້ສອງ ບໍ່ໃຫ້ປຸ້ນ | ລັກໂລບເອົາຂອງ |
| | ເງິນທອງເຂົາ | ຢ່າຊິງເອົາໄວ້ |
| | ຈົ່ງໃສ່ໃຈຈຳແໜ້ນ | ອະທິນນາຢ່າລ່ວງ |
| | ຂອງໃຜໆຫວງຮັກໄວ້ | ບໍ່ຍອມໃຫ້ເພິ່ນເອົາ |
| + | ຂໍ້ສາມ ກາເມເຈົ້າ | ຢ່າລ່ວງພົມມະຈັນ |
| | ຜົວໃຜເມຍມັນ | ຢ່ານອກໃຈຈຳໄວ້ |
| | ຜົວເພິ່ນເມຍເພິ່ນໃຫ້ | ສັງວອນລະວັງແນ່ |
| | ຢ່າຄິດເຫັນແຕ່ໄດ້ | ເລີຍລ້ຳລ່ວງສິນ |
| + | ມຸສາວາດປອກປີ້ນ | ເວົ້າລ່າຍພາຍຕົວະ |
| | ມົວເມົາຫຼົງ | ລ່າຍພາງຄຳເວົ້າ |
| | ຄວາມຈິງບໍ່ເອົາດ້ວຍ | ມຸສາລວງລ່າຍ |
| | ບໍ່ມີໃຜເຊື່ອເຈົ້າ | ຄຳເວົ້າມຸສາ |
| | ຂໍ້ຫ້າ ສຸລາເຫຍັ້ນ | ເລີງເລີງຕິດຕໍ່ |
| | ຕື່ນພໍ້ວໍ້ມື້ເຊົ້າ | ຊີມເຫຼົ້າກ່ອນງາຍ. |

**ຈ. ກອນອ່ານແບບມະຫາສິນທຸ**

ກອນອ່ານແບບມະຫາສິນທຸແມ່ນກອນອ່ານແບບໜຶ່ງທີ່ໃຊ້ສຳຜັດນອກແບບບາວັກ ແລະ ຮຽງວັກໄປພ້ອມໆ ກັນ, ແຕ່ລະວັກມີ 9 ບາດຄຳ, ວັກທີ 1 ຫາວັກທີ 3ຕອນນໜ້າມີ 7 ບາດຄຳ , ຕອນຫຼັງມີ 2 ບາດຄຳ. ສະເພາະວັດທີ 4 ຕອນໜ້າມີ 5 ບາດຄຳ, ຕອນຫຼັງມີ 3 ຄຳ

ຕົວຢ່າງ:

ກຸນຊອນຊອນຊອບໄດ້ກິນຍອດ ໃບບົ່ງ
ມອນໝູ່ສະກູນາຫົງລຽບລອຍ ນຳນໍ້າ
ແມງວັນວິງວຽນອ້ອມ ແນວເໝັ້ນໝອງເນົ່າ
ຄົນພານທອນທ່ຽງກໍ້າ ເວນຮ້າຍບາບສະເໝີ

**ສ.ກອນທຽມແອກ ( ກອນສັບພະສອດ ).**

ກອນທຽມແອກ ຫຼື ກອນອ່ານສັບພະສອດ ມີຫຼັກການແຕ່ງຄືກັບກອນອື່ນໆ, ຕ່າງຈາກກອນອື່ນແຕ່ວິທີສຳຜັດ ກອນທຽມແອກນີ້: ຈະຖືເອົາທັງສະຫຼະ ແລະ ພະຍັນຊະນະເປັນຫຼັກການສຳຜັດ ແລະ ເປັນກອນສຳຜັດໃນ ສ່ວນຫຼາຍ ແມ່ນຄຳທີ 5 ສຳຜັດກັບຄຳທີ 7 ດັ່ງໂຄງຮ່າງຕໍ່ໄປນີ້:

o o o o o o o
o o o o o o o
o o o o o o o
o o o o o o o

**ຕົວຢ່າງ: ກອນສຳຜັດສະຫຼະທຽມແອກ.**

\+ ເຍືອນຍາກທ້າວ ທັງແຮ່ງໂຮຍແຮງ
ເດີນດົງຂວາງ ກົ່ວໄກຫຼືໃກ້
ເລີຍຂຽນຂຶ້ນ ເຂົາງອນເມືອງ່ອນ
ຄິດແມ່ປ້າ ປຸນໃຫ້ຮ່ຳໄຮ

**ຕົວຢ່າງ: ສຳຜັດພະຍັນຊະນະທຽມແອກ ( ຂັ້ນອັກສອນ ).**

\+ ພິມວິຫານຊີໃຊ້ ໃຈຮ່ຳຄະນຶງຫາ
ເມດຕາທຳຄວນມີ ສູ່ສັງຄົມໄວ້
ກະລຸນາເອື້ອຍ ອາທອນນຳທຸກເມື່ອ
ມຸດິຕາຕໍ່ຕັ້ງ ດີໃຈດ້ວຍທ່ານສະເໝີ.

**ຊ. ກອນອ່ານແບບກອນແປດ**

ກອນອ່ານແບບກອນແປດແມ່ນກອນອ່ານປະເພດໜຶ່ງ ເຊິ່ງບໍ່ໃຊ້ຄຳປະຈຳບ່ອນມີແຕ່ໃຊ້ການສຳຜັດແບບຮຽງ ວັກ ແລະ ບາວັກໄປພ້ອມໆກັນ. ການສຳຜັດຂອງມັນມີລັກສະນະເກາະກ່າຍກັນ, ຈາກບາດນີ້ໄປໃສ່ບາດອື່ນ, ສ່ວນ

ບາດຄຳ ທີ່ມັນສຳຜັດນັ້ນກໍ່ມີການກຳນົດຄັກແນ່, ແຕ່ລະວັກມີ 8 ບາດຄຳຄື: ຕອນໜ້າມີ 5 ບາດຄຳ ແລະ ຕອນຫຼັງມີ 3 ບາດຄຳດັ່ງໂຄງຮ່າງ:



ຕົວຢ່າງ:

| | |
|---|---|
| ເມືອງວຽງໄຊເປັນດິນ | ຖິ່ນກູ້ຊາດ |
| ສັງຄະຍາດຮ່ອມເຜົ່າ | ເຕົ້າຫຼາຍແຂງ |
| ທຸກປວງຊົນມາຢູ່ | ເຂົ້າເປັນແຮງ |
| ເປັນເຂື່ອນແຂງຕໍ່ຕ້ານ | ພວກໄພລີ |
| ຍ້ອນການນຳສ່ອງໄສ | ແລະ ສະຫຼາດ |
| ຈຶ່ງສາມາດຍາດໄດ້ | ເຂດກູ້ງສີ |
| ໄດ້ເຂົ້າໃນທີ່ວແຄວ້ນ | ແດນທານີ |
| ຕັ້ງ ກຸງສີ ວຽງຈັນ | ເປັນເມືອງຫຼວງ |

**ຍ. ກອນອ່ານແບບຊ້ອນເລັບ**

ກອນຊ້ອນເລັບ ແມ່ນກອນທີ່ຂຽນໜັງສືໄປຫາກັນໂດຍໃຊ້ຄຳທຳອິດ ຫຼື ຄຳ 2 ຫຼື ຄຳທີ 3 ຂອງແຕ່ລະວັກ, ສຸດແລ້ວແຕ່ຈະຕົກລົງກັນ, ມາຕໍ່ໃສ່ກັນລົງໄປເພື່ອເປັນຄວາມເວົ້າທີ່ຢາກເວົ້ານຳກັນ, ຖ້າຜູ້ບໍ່ຮູ້ວ່າຜູ້ແຕ່ງກອນໃຊ້ກອນຊ້ອນເລັບນີ້ກໍ່ບໍ່ຮູ້ອ່ານຄວາມທີ່ຊ້ອນຢູ່ໃນກອນນັ້ນ, ສ່ວນຕົວບົດກອນທີ່ແຕ່ງນັ້ນແມ່ນແຕ່ງຕາມຫຼັກການແຕ່ງກອນອ່ານທຸກປະການ. ຂໍແຕ່ໃຫ້ເປັນເລື່ອງທີ່ມີຄວາມໝາຍພໍ່ອບໍ່ໃຫ້ຄົນເອົາໃຈໃສ່ຄວາມທີ່ເອົາຢາດເຊື່ອງນັ້ນ.

ເວົ້າຫຍໍ້ໆມັນແມ່ນກອນອ່ານຊະນິດໜຶ່ງ ຊຶ່ງເພິ່ນໄດ້ຊ້ອນຄວາມໝາຍໂດຍມີການກຳນົດເອົາບາດຄຳທຳອິດໃນແຕ່ລະວັກ ເພື່ອຮັກສາຄວາມລັບລະຫວ່າງສອງຝ່າຍທີ່ໄດ້ຕົກລົງກັນໄວ້ແລ້ວ. ມັນແມ່ນກອນຊ້ອນເລັບທີ່ໃຊ້ຫົວແຖວເປັນຄຳເວົ້າ.

ໂຄງຮ່າງການແຕ່ງກອນຊ້ອນເລັບ

o o o o o o o

o o o o o o o

o o o o o o o

o o o o o o o

**ຕົວຢ່າງ 1: ປະເທດລາວສັນຕິພາບເປັນກາງ**

**ປະ** ຊາຊາດພີ້ນ້ອງ ທີ່ເນົາຢູ່ດິນລາວ ເຮົານີ້

**ເທດ** ສະການທັງມວນ ແມ່ນຮ່ວມກັບປ້ອງແກ້

**ລາວ** ແມ່ນເປັນນາມໃຫ້ ປວງຊົນທຸກໆເຜົ່າ

**ສັນ** ຕິພາບກໍ່ແມ່ນໄດ້ ມາໃຫ້ແກ່ສູ່ຄົນ

**ຕິ** ແຕ່ບໍ່ຊ່າງເວົ້າ ຂະຫຍາຍອອກໃຫ້ມັນຫຼາຍ

**ພາບ** ຂອງເມືອງລາວເຮົາ ງົດງາມຈິງແທ້

**ເປັນ** ທີ່ຍໍແຍງໃຫ້ ປະຊາຊົນຊາດເຊື້ອ

**ກາງ** ຕໍ່ເອົາອອກໃຊ້ ໃຫ້ເປັນຢຽມ່າງດີ ທ່ານເອີຍ

**ຕົວຢ່າງ 2: ເຫັນວ່າຜັກຫອມຫ້ຽນແຄມສວນຢ່າຟ້າວຢໍ່າບາດວ່າພໍຝຸ່ນນໍ້າມັນຊິປົ່ງປົ້ນໃບ.**

**ເຫັນ** ວ່າໄດ້ຂີ່ຊ້າງ ເຊັ່ງຊື່ສະກຸນສູງ

**ວ່າ** ວອນຄໍາຄວນຫວານ ອວດໂຕຄຸຍໂມ້

**ຜັກ** ຜັກກາດຊອບໃນຮົ້ວ ວ່າບໍ່ຢ້ານຜູ້ອື່ນເຕືອນ

**ຫອມ** ຮຸ່ຍຫຸຍປາກເປີດຕ້ານ ວ່າບໍ່ຢ້ານຜູ້ອື່ນເຕືອນບໍ່ດີໄດ່

**ຫ້ຽນ** ກໍ່ຫ້ຽນຕັ້ງແຕ່ຕົ້ນ ຕີນຕໍ່າສາວສະໄໝ

**ແຄມ** ຂ້າງເຄີຍຄາດຄຽງ ຄູ່ສະໄວພືນກວ້າງ

**ສວນ** ແຕງເຄີຍຫົດນໍ້າ ບໍ່ລໍາໄລລືມປະປ່ອຍ

**ຢ່າ** ເທາະຂ້ອຍບໍ່ເຕື້ອງ ຊິຜິດເບື້ອງເພິ່ນຜູ້ໃດ

**ຟ້າວ** ກ່ອນສາວຊໍ່າເຊື້ອ ຣອຍຮູບເຮືອນສະເໜ່

**ຢໍ່າ** ຍີເສຍສັກສີ ມຸນມືວທະລາຍມ້າງ

**ບາດ** ມັນຈິມຈາງຈ້ອຍ ຄົນບໍ່ດີເຂົາຄອຍຊ່າ

**ວ່າ** ແຕ່ແນວບໍ່ເລື້ອງ ພະນາງນ້ອງພັດຕື່ມເຕີມ

**ພໍ** ເທາະພໍສໍານີ້ ຊິເສຍຊື່ສະກຸນສັກ

**ຝຸ່ນ** ທຸລີໜັກໜີມ ຈ່ອງດຶງໃຫ້ນາງລ້າງ

**ນໍ້າ** ສະສ່າງຫົດສັ້ງງ ກັ້ຽງເກົ່າເກີນສະອາດ

**ຍັງ** ບໍ່ຄາດຊິສິ້ມ ຢ່າຕີເຕັ້ນຕື່ນຜະຫຍ່ອງ ນາງເອີຍ

**ຊິ** ສິມໃຈທ່ຽງແທ້ ບາງທ່ານຜູ້ມືວຫຼີ້ງ

**ປົ່ນ** ປ່ຽນແປງສັດຈະ ລ່າຍລວງລືມບ້ານ

**ປົ່ງ** ເປັນແປວໄຟຮ້າຍ ມະໄລກັນອຸກອັ່ງ

**ໃບ** ບາຍເບືອງບ່ຽງໃບ ຊິທຽວເຂົ້າສູ່ສະໜອງ ນັ້ນແລ້ວ.

**ຕົວຢ່າງ 3: ກອນຊ້ອນເລັບໃນຫົວເລື່ອງ "ໄຟໄໝ້".**

| | | | |
|---|---|---|---|
| **ໄຟ** | ຮຽນຢາກເວົ້າ | ລົມສູ່ສະຫາຍ | |
| **ໄໝ້** | ຢູ່ໃນຊວງອີກ | ເພດຊາຍຫຼາຍຄົນຮູ້ | |
| **ທໍ** | ພັກຊາຍເຮົານັ້ນ | ວັນນະຄະດີເປັນຊື່ | |
| **ພັກ** | ພວກເຮົາຢູ່ຫັ້ນ | ສູນສິ້ນເຄື່ອງຂອງ | ເພື່ອນເອີຍ |
| **ຊາຍ** | ທີ່ເຮົາວ່າໄວ້ | ກອຍກ່າວເປັນກອນມານີ້ | |
| **ທີ່** | ຢາກພັນລະນາເຖິງ | ວ່າເປັນແນວໃດແທ້ | |
| **ມ.** | ມະຫາຊົນເວົ້າ | ເຂົາສາຍາມາມຊາຍຊື່ "ສົມສີ" | |
| **ສ.** | ສັງມາເປັນແບບນີ້ | ຊິວາເສົ້າໝົ່ນໝອງ | |
| **ນີ້** | ເປັນຄຳອ່ອຍພອນ | ຕໍ່ເພື່ອນຊາຍເຮົາຮູ້ | |
| **ເອງ** | ຂໍຂັບອາສາສູ້ | ຕົຜົມານໝ່ຳໆ | |
| **ແທ້** | ອີຫຼີບອກໃຫ້ | ສະບາຍບ້າງຄູ່ສູ່ແນວ | ເພື່ອນເອີຍ |
| **ເປັນ** | ບົດຮຽນບອກໄວ້ | ນຳເພື່ອນສະຫາຍແພງ | |
| **ໜ້າ** | ທີ່ເຮົາຈະທຳ | ຈົ່ງລະວັງເອົາໄວ້ | |
| **ເສຍ** | ແນວໃດກໍ່ເສຍທ້ອນ | ຊິວິຍັງມີຢູ່ | |
| **ໃຈ** | ຈິດຈໍ່ທ່ຽງໝັ້ນ | ມັນຊິໂປ້ເມື່ອລຸນ | |
| **ທາຍ** | ການຈັດຕັ້ງ | ຍັງເປັນຫ່ວງນຳສະຫາຍ | |
| **ທີ່** | ສ.ປ.ປ.ລ. | ເພິ່ນຫາກສົນໃຈແທ້ | |
| **ສຸດ** | ທີ່ອາວອນໃຫ້ | ຄະນຶງໃຈຈິງມາກ | |
| **ນໍ** | ນິນມີຄ່າລົ້ນ | ຈະສົມດ້ານດັ່ງໝາຍ | |

## 3.1. ກອນລຳ - ກອນຂັບ

### 3.1.1ຄວາມໝາຍຂອງກອນລຳ.



ເມື່ອເວົ້າເຖິງ ລຳ ມັນແມ່ນຮູບການສິລະປະປະເພດໜຶ່ງ ເຊິ່ງຕິດພັນກັບຊີວິດຈິດໃຈຂອງຄົນລາວຕະຫຼອດມາ ອາດເວົ້າໄດ້ວ່າ ມັນແມ່ນສັນຍາລັກປະຈຳຊາດຂອງພວກເຮົາເພາະວ່າສຽງລຳມັນຕ້ອງຄຽງຄູ່ກັບສຽງແຄນ, ພວກເຮົາເຄີຍໄດ້ຍິນເພິ່ນເວົ້າວ່າຢູ່ໃສມີເຮືອນຮ້ານ, ເປົ່າແຄ້ນ, ແທ້ນເຂົ້າໜຽວ ຢູ່ບ່ອນນັ້ນມີຄົນລາວ ສຽງແຄນສຽງລຳໄດ້ດັ່ງຂຶ້ນຢູ່ໃສມັນໄດ້ເປັນສິ່ງເຕືອນໃຈບອກວ່າບ່ອນນັ້ນມີຄົນລາວ ແລະ ບ່ອນນັ້ນມີການເບີກບານມ່ວນຊື່ນບໍ່ວ່າຢູ່ຕາມທາງຖິ່ນຖານບ້ານຊ່ອງ, ທົ່ງໄຮທົ່ງນາ, ຮ່ອມຫ້ວຍພູເຂົາ ແລະ ປ່າດົງໜາ ລ້ອນແຕ່ເຈືອຈານໄປດ້ວຍສຽງ ຂັບ - ສຽງລຳຂອງປະຊາຊົນຊາວຜູ້ອອກແຮງງານ, ເຂົາເຈົ້າຮັກຊີວິດ ຍາມໃດກໍຊອກ

ຫາແຕ່ຄວາມເປີດບານມ່ວນຊື່ນມາໃຫ້ຕົນເອງ. ດັ່ງນັ້ນ, ສິລະປະປະເພດລໍາຈຶ່ງອຸດົມສົມບູນໄປດ້ວຍເນື້ອໃນ ແລະ ຮູບການ.ກອນລໍາແມ່ນກອນທີ່ໝໍລໍາ ແລະ ນັກກະວີແຕ່ງຂຶ້ນມາເພື່ອລໍາເຊິ່ງເປັນສິລະປະຂັບລໍາປະຈໍາຊາດລາວເຮົາແຕ່ໃດມາ.

ກອນລໍາໄດ້ແບ່ງອອກເປັນ ສອງ ປະເພດໃຫຍ່ຄື: ລໍາທ້ອງຖິ່ນ ແລະ  ລໍາທົ່ວໄປ

ແຕ່ຖ້າເບິ່ງຕາມທໍານອງແລ້ວເພິ່ນໄດ້ແບ່ງລໍາທົ່ວໄປອອກເປັນຫຼາຍ ແບບເຊັ່ນ: ກອນລໍາເຕີ້ຍ, ກອນລໍາຕັດ ( ລໍາທາງສັ້ນ ), ລໍາລ່ອງ ( ກອນລໍາຍາວ ), ລໍາເພີນ, ລໍາເດີນ.

**ກ.  ລໍາທົ່ວໄປ**

**•ລໍາຕັດ ຫຼື ລໍາທາງສັ້ນ.**

ກອນລໍາຕັດ ຫຼື ລໍາທາງສັ້ນມີວິທີແຕ່ງແບບກາບເພາະມັນບໍ່ໄດ້ປະຕິບັດຕາມຫຼັກຄໍາປະຈໍາບ່ອນ, ແຕ່ຕ່າງກັນກັບກາບຢູ່ບ່ອນວ່າ: ກາບບໍ່ມີຄໍາບຸບພະບົດ, ສ່ວນກອນລໍາຕັດ ຫຼື ລໍາທາງສັ້ນ ຈະຕື່ມຄໍາບຸບພະບົດເຂົ້າ 2 ຄໍາ, 3 ຄໍາ ຫຼື 4 ຄໍາ ກໍໄດ້ ແລະ ບາດຄໍາໃນວັກແມ່ນບໍ່ໄດ້ກໍານົດຢ່າງແນ່ນອນ. ການສໍາຜັດຈະສໍາຜັດແບບດຽວກັນກາບກາບດັ່ງໂຄງຮ່າງຕໍ່ໄປນີ້:




ທີ່ຂຶ້ນຊື່ວ່າລໍາຕັດ ຫຼື ລໍາທາງສັ້ນ ເພາະວ່າລໍາແບບນີ້ມີສຽງຈະຕັດຈັດໆໄປໂລດລາກສຽງຍາວ.

**ຕົວຢ່າງ1:** **ກອນລໍາຕັດ ຫຼື ລໍາທາງສັ້ນ**

| | |
|---|---|
| ໂອກາດນີ້ | ຊິລໍາທຽບນິນທາ |
| ແລ້ວຊິຂໍວິຈານ | ແປອອກເປັນບ່ອນ |
| ຄົນແຕ່ກ່ອນ | ເພິ່ນເວົ້າໄວ້ຫຼາຍ |
| ເວົ້າຊະໆຊາຍໆ | ບໍ່ໄດ້ຂຽນເປັນຜູກ |
| ເວົ້າໃຫ້ລູກ | ຟັງກ່ອນເຂົ້ານອນ |
| ຕາງວ່າເປັນການສອນ | ແນວນີ້ມັນຈີ່ |
| ນິທານໃສ່ຊື່ | ຜົວທຸກເມຍມີ |

ເມຍເປັນລູກເສດຖີ ຜົວເປັນລູກໄພ້

**ຕົວຢ່າງ2 :**

ເຮັດໃຫ້ມັນຖືກຕ້ອງ ສອດຄ່ອງແຜນການ
ຄົ້ນຄວ້າເອກະສານ ຮຽນນໍາທຸກເມື່ອ
ມີສະຕິທຸກເມື່ອ ຢ່າເຊື່ອໃຈຄົນ
ມັນຊິຈົນ ໃຈໂຕມັນຍາກ
ມັນລໍາບາກ ຄິດຮໍ່ານໍາດູ
ຢ່າໃຫ້ພວກສັດຕູ ຈູງດຶງໄດ້ງ່າຍ
ໃຫ້ເຈົ້າເບິ່ງຫຼາຍຝ່າຍ ຄົນເພິ່ນຄົນໂຕ
ຢ່າໃຫ້ສັດຕູໂຄ ສະນາແບ່ງແຍກ
ມັນຊິເຮັດເຮົາແຕກ ຄວາມສາມັກຄີ
ເບິ່ງແລ້ວມັນບໍ່ດີ ຮ້າຍແຮງເດີ່ໝູ່
ເຮົາກະຮູ້ຈັກຢູ່ ວ່າມັນແຊກມັນແຊງ
ພວກມັນຕິຖະແຫຼງ ແປງເລ່ແປງລ່ຽມ
ເບິ່ງສະຫງົບສະຫງ່ຽມ ໜ້າຕາດີດີ
ແຕ່ແນວຄິດນັ້ນຕີ ມັນກົງກັນຂ້າມ...

**ຕົວຢ່າງ 3:**

ໂອລະນໍ ລຸງເອີຍ ຟັງເດເຈົ້າ ແຖວແກ່ລູງຕາ

ຫຼານຊິພັນລະນາ ຈາປະຫວັດສາດ
ເວົ້າເລື່ອງການກູ້ຊາດ ຍາດສິດປົກຄອງ
ຈາຕາມແບບທໍານອງ ຂອງລັດທິມາກ
ລາວເຮົານີ້ມີພັກ ເປັນຜູ້ນໍາພາ
ແຕ່ 22ມີນາ ໜຶ່ງເກົ້າຫ້າຫ້າ
ເປັນມື້ງາມສະຫງ່າ ມີຄ່າລາຄາສີ
ມື້ລືກງາມຍາມດີ ມຸງຄຸນຂອງຊາດ
ພັກໄດ້ເຜີຍປະກາດ ອອກເປັນທາງການ
ຕັ້ງໜ້າປາບຜີມານ ປະຕິການຂາຍຊາດ
ກອບກູ້ເອກະລາດ ແກ່ປະຊາຊົນ
ຕໍ່ສູ່ມາສັບສົນ ໝູນວົນຫຼາຍເຫຼົ່າ
ລ່າເມືອງຂຶ້ນແບບເກົ່າ ຈົນກ້ຽງຫາຍສູນ
ບຸນຄຸນພັກເກື້ອກູນ ອຸດໜຸນປຸກປັ້ນ
ຂົນຂວາຍໄດ້ຕົວກັ່ນ ຊົນຊັ້ນຊາວນາ
ຊຸມພວກວານິດຊາ ຄ້າຂາຍຕ່າງໆ
ເຂົາກໍ່ພາກັນຍ່າງ ເຂົ້າສູ່ຖັນແຖວ

| | |
|---|---|
| ແລ້ວກໍ່ຕັ້ງເປັນແນວ | ຮ່ວມກັນກູ້ຊາດ |
| ຂະບວນເອກະລາດ | ພັກປະຊາຊົນ |
| ຜ່ານການແອບເຝິກຝົນ | ຕາມລັດທິມາກ |
| ຮຽນຮູ້ໃຫ້ແຈ້ງຄັກ | ຄຳສັ່ງເລນິນ |
| .................... | .............. |
| ສະເໜ່ເຄຄອນ | ເຊີນມ້ອນທາງລ່ອງ ໜໍແຄນເອີຍ |

**•ກອນລຳລ່ອງ.**

ແມ່ນກອນຊະນິດດຽວກັນກັບກອນເຍີ້ນ ຕ່າງແຕ່ບໍ່ມີກອນເຈັດບາດຄຳ. ມັກມີແຕ່ 9 ຫາ 15 ບາດຄຳ ໂດຍເອົາຄຳບຸບພະບົດ ແລະ ຄຳສ້ອຍຕື່ມໃສ່. ການສຳຜັດແມ່ນໃຊ້ສຳຜັດໃນ ແລະ ນອກ. ສຳຜັດໃນສ່ວນຫຼາຍແມ່ນພະຍັນຊະນະ ສ່ວນສຳນອກຂອງວັກຕໍ່ໆໄປ ກໍ່ບໍ່ໄດ້ຈຳກັດບ່ອນຢູ່ສຳຜັດໃສ່ຄຳໃດຄຳໜຶ່ງໃນຕອນຕົ້ນກໍ່ໄດ້ໂລດ.

**ຕົວຢ່າງ1:**

| | |
|---|---|
| ບັດນີ້ຈັກໄດ້ພັນລະນາເລື່ອງ | ໂຮງຮຽນຄູບ່ອນມາຢູ່ |
| ເປັນບ່ອນນັກຮຽນຄູມາຝຶກຝົນຮອບດ້ານ | ໃຫ້ພຽມພ້ອມຄູ່ອັນ |
| ຊິເວົ້າແຕ່ບ່ອນນັ້ນ | ຊີວິດຮ່ວມຢູ່ນຳກັນ |
| ມີນັກຮຽນຫຼາຍພັນ | ຢູ່ຕ່າງກັນຄົນບ້ານ |
| ແຕ່ເມື່ອມາເຖິງແລ້ວ | ສຽງບົນແຊວພວກອ້າຍໃຫ່ຍ |
| ຕ້ອນຮັບຊຸມນ້ອງໃໝ່ | ມີແຕ່ຄວາມຍິ້ມແຍ້ມຖາມຂໍ້ຂ່າວຄາວ |
| ການຈັດຕັ້ງກໍ່ຮີບຟ້າວ | ຈັດບ່ອນແປງສະຖານ |
| ຈັດອາຄານທໍພັກ | ບ່ອນນອນໃຫ້ເຮົາພ້ອມ |
| ສຸດທີ່ໄກກັນລ້ຳ | ຄົນລະແດນບ້ານພໍ່ແມ່ |
| ແຕ່ບາດມາຢູ່ແລ້ວ | ຫາກຄືນບ້ານອີ່ແມ່ເຮົາ |
| ທຸກທົ່ວໜ້າອ້າຍນ້ອງ | ຫາກຮັກທໍ່ໂຮມກັນ |
| ມີຫຍັງກິນກໍຍັງປີ | ແບ່ງປັນກໍ່ຍັງໄດ້ |
| ຍາມເຈັບເປັນຫຼືໜາວໄຂ້ | ເຮົາດີໃຈແຕ່ນຳໝູ່ |
| ຫຼາຍຄົນຄືພີ່ນ້ອງ | ໄດ້ມາລ້ອມເບິ່ງແຍງ |
| ເຖິງຍາມແລງຕາເວັນຄ້ອຍ | ຫຼາຍຄົນເກີນມັນມ່ວນ |
| ພາກັນລີງຫົດສອນ | ຍິນແຕ່ສຽງອ້າຍນ້ອງໂຮຮ້ອງມ່ວນບໍ່ເຊົາໝາ |

**ໝາຍເຫດ:** ກອນຕັດກອນເຍີ້ນ ແລະ ກອນລ່ອງກ່ອນຈະລຳແມ່ນມີກອນຂຶ້ນຕົ້ນ ແລະ ເມື່ອລຳຈົບແລ້ວກໍມີການລົງທ້າຍທຸກໆເທື່ອ

**ຕົວຢ່າງ2:**ກອນຂຶ້ນຕົ້ນຂອງກອນຕັດ, ກອນເຍີ້ນ

| | |
|---|---|
| ຄົນເອີຍຄົນຄົນຊື່ວເຂົາຕີ | ຄົນດີເຂົາແພງ |
| ຄົນແຂງແຮງໃຈເດັດ | ເຮັດອັນບໍ່ວາງປະ |
| ມີມານະອົດທົນ | ຝຶກຝົນໃຫ້ພຽງພ້ອມ |
| ຈິ່ງຊິພົ້ຮອດບ່ອນ | ຈະເລີນໄດ້ ດັ່ງໝາຍ |

**ຕົວຢ່າງ3:**ກອນຂຶ້ນຕົ້ນກອນລ່ອງ

ຟ້າເອີຍຟ້າຮ້ອງຄ່ອຍ ຄິດເຫັນບ່ອນເຮັດນາແຊງ
ຟ້າເອີຍຟ້າຮ້ອງແຮງ ຄິດເຫັນຄາວເຮັດນາຕ່າວ
ບາດວ່າຟ້າຮ້ອງຍ່າວໆ ນາປີມາຮອດໃກ້
ໃຫ້ຕຽມໄວ້ຄູ່ສູ້ຄົນ...ເດີ

ແຕ່ຕອນລົງທ້າຍກອນລ່ອງເພິ່ນມັກເວົ້າແຕ່ "ໂອ..." ຄຳດຽວພໍ

**ຕົວຢ່າງ4:** ຄຳຂຶ້ນຕົ້ນຂອງກອນລຳລ່ອງ

ຟ້າເອີຍຟ້າຮ້ອງຮ່ອນ
ຄັນວ່ານ້ອງຢາກມ່ອນ ໃຫ້ຮີບໄປໄວໆ
ຈັບຈິກແບກໄຖ ຍ່າງລັດທົ່ງໃສ່ໜ່ວຍສະຫະກອນ
ບ່ອນທ້ອນໂຮມແຮງ ດັດແປງກໍ່ສ້າງ
ສະເໜີພາບທຸກຢ່າງ ແຂ່ງເຮັດແຂ່ງກິນ
ເຈົ້າຜູ້ຖະຫວິນ ຈົ່ງຈ້ອນສິ້ນຟ້າວດ່ວນ...
ໂອນໍ ຝົນຕົກລົມຍາມເດືອນຫ້າ ກາຍລະດູແຖມຖ່າຍມາແລ້ວ
ເດືອນຫົກຕົກເຂົ້າກ້າ ນານ້ອງເຂດວັດສາ
ຝູງປະຊາພີ່ນ້ອງ ປ້ອງໝູ່ງົວຄວາຍ
ໄປສູ່ຕົນດົງຫຼວງ ຂວ່າງນາເນີນກວ້າງ
ທັງປວງເຊື້ອ ເອືອເຄືອຍ້ອຍຍ່າງ
ເລາະໄປຕາມທົ່ງເຍີ້ນ ເມີນນ້ຳລັ່ງມາ
ນຳ້ນີ້ໄຫຼແຕ່ທ້າງ ສ້າງໃຫ່ຍຄອງຫຼວງ
ປວງປະຊາຊາວເມືອງ ອັ່ງເນືອງມາປ້ານ
ຊົນລະປະທານນຳ້ ລຳຄອງທ້ອງຖິ່ນ
ຝົນຕົກລົນສິ່ງຍູ້ ຊູນ້ຳຫຼັ່ງນອງ ນໍ...
ບຸນຄຸນພັກແນບປ້ອງ ປອງປາດຖະໜາຫາ
ອາໄສເທວາຝົນ ອີກບໍ່ດົນຄົງຕາຍຍ້ອນ
ເຖິງຈະເອົາຄວາຍປ້ອນ ວອນວານເທວະໂລກ ກໍດາຍແລ້ວ
ໂຊກບໍ່ມາເຂົ້າຂ້າງ ສາງຮ້າຍກໍ່ບໍ່ແລ
ເມຄາຟ້າແຫຼ້ງ ຮ້ອງຮ່ຳຢູ່ເຄັ່ງໆ
ທຳມະຊາດເຕັງ ໝູ່ເຮົາມາແລ້ວ
ບາງປີຝົນໜີແຄ້ວ ແຊວໄປທາງອື່ນ
ຮ້ອງຮື່ມຄືຊິຖ້ວມ ກັບແລ້ງກໍ່ຊ່າງເປັນ
ບັດນີ້ກຳເວນເອັ້ນ ເກນຄອງແຕ່ຟ້າສິ່ງ
ພັກບັນຊາບົ່ງໃຫ້ ໄຂນ້ຳລ່ອງມາ
ຂຸດຄອງທາລານ້ຳ ເປັນຊຳໄຫຼລ່ວງ
ຄົນທັງປວງຮັບໃຊ້ ໄປສ້າງເຮັດເອົາ

ເພື່ອບັນເທົາຊາວບ້ານ ກະສິກອນທຸກບ່ອນ

ໄດ້ຮັບຄວາມສະດວກຍ້ອນ ຜອງເຖົ້າຊື່ວຊີວັນນໍ...

**ລຳລ່ອງ: ນີ້ລະຈຶ່ງສິມວ່າຄົນ**

ໂອຍ..............ຄົນຄົນນີ້ ຄົນມີຫຼາຍຢ່າງເດີ້ລະນາງ ຄົນເອີຍຄົນນີ້ຄົນຮູ້ເຮັດຮູ້ສ້າງ

ຈຶ່ງສົມຊື່ຊັ້ນວ່າຄົນ.....................ນັ້ນນາ

ແລ້ວບາດນີ້ຄຳວ່າຄົນນັ້ນໄດ້ ເປັນຊື່ແສນສູງນີ້

ມີຄົນຫຼາຍແນວພັນ ຊິຕ່າງກັນບໍເຫຼືອລົ້ນ

ບາງຄົນຫານກ້າ ແຕ່ປັນຍາບໍໃສສ່ອງ

ບາງຄົນພັດກຽດຄ້ານ ການບ້ານພັດບໍ່ເປັນ

ບາງຄົນມັກທ່ຽວຫຼິ້ນ ກາງຄ່ຳກາງຄືນນີ້ແລ້ວ

ບາງຄົນແນມເຫັນໄດ້ ຮ່ຳຮຽນ ແລະ ຂຽນອ່ານ

ບາງຄົນບຸກບືນຕົວ ສະໝອງຕື້ບອດວິຊາ

ນີ້ລະນໍເພິ່ນເວົ້າ ສົມຊື່ແນວຄົນນີ້ແລ້ວ

ສິນລະວົນຫຼາຍປະການ ບໍ່ອາດພັນລະນາໄດ້

ແຕ່ວ່າເປັນຄົນໃຫ້ ສຶກສາໃຫ້ໄດ້ໄປດີເດັ່ນ

ເປັນແວ່ນແຍງຮອບດ້ານ ໃຫ້ຊາວບ້ານຊື່ນຊົມ

ນັ້ນຈຶ່ງສົມຊາດເຊື້ອ ແນວໜໍ່ນາມຄົນ ແທ້ແລ້ວ

ຂໍໃຫ້ພຽນສຶກສາ ເກັ່ງແນວດີຫຼາຍດ້ານ

ພ້ອມທັງມີໃຈເກື້ອ ຈຸນເຈືອຊ່ວຍຜູ້ອື່ນ

ຈຶ່ງຈະສົມຊື່ແທ້ ເປັນຫຼານຫຼ້າຜູ້ດີເດັ່ນດີເດີລະນາງເອີຍ....

➢ **ຈັງຫວະ ແລະ ບາດກ້າວເດີນ:** ກອນນີ້ມີສອງສຳຜັດຄື ສຳຜັດນອກ ແລະ ສຳຜັດໃນ ມີຄຳເອກ, ຄຳໂທປະຈຳແຕ່ລະວັກພາຍໃນແຕ່ລະແຖວ ໃຫ້ມີການສຳຜັດຄ່ອງເຄືອຈ່ອງດຶງກັນໄປ. ສະນັ້ນ ຈຶ່ງເຮັດໃຫ້ກອນນີ້ມ່ວນທັງຈື່ຈຳໄດ້ງ່າຍອີກດ້ວຍ.

**•ກອນລຳເຍີ້ນ.**

ລຳເຍີ້ນ ມີຊື່ຮຽກອີກຢ່າງໜຶ່ງວ່າ ລຳຍາວ ( ລຳຍາວ - ລຳສັ້ນສະຫຼັບກັນກ້ຽວກ່ອມບາດວ່າລິງບໍ່ຮອມມີລ້ອມລ່ອງຂອງ ແລະ ເຕີ້ຍເກີຍເຂົ້າໃສ່ກັນ ). ລຳເຍີ້ນ ແມ່ນລຳທີ່ມີຈັງຫວະເຕື່ອຍ ຫຼື ຊ້າກວ່າລຳສັ້ນແດ່. ຜູ້ລຳ ຫຼື ແຕ່ງມີລັກສະນະຄ່ອຍລຳຄ່ອຍຄຶດໄປນຳ, ການແຕ່ງກອນປະເພດນີ້ມີລັກສະນະບັງຄັບແຕ່ງຖືກຕາມຫຼັກການແຕ່ງກອນທີ່ໄດ້ກ່າວມາແລ້ວ. ສ່ວນຫຼາຍກອນປະເພດນີ້ເປັນປະເພດກອນ 7 ແລະ ກອນ 9 ສັບປົນກັນໄປ, ອາດຕື່ມຄຳບຸບພະບົດ, ຄຳສ້ອຍເຂົ້າໃນບາງບ່ອນທຽບກັບຄຳຕັດ. ການສຳຜັດມີລັກສະນະມ່ວນກວ່າຄືບໍ່ບັງຄັບຫຼາຍ.

**ຕົວຢ່າງ:**

| | |
|---|---|
| ຟັງເດີນ້ອງ | ທອງເຕົ້າເບົ້າລ່ຽນ |
| ແຕ່ພີ່ວຽນຢາກເວົ້າ | ນຳເຈົ້າແຕ່ດົນ |
| ຄົນຜູ້ເນົາແນບກ້ຳ | ໂລກລຸ່ມໂລກາ |
| ຫາຜູ້ໃດມາທຽມ | ແມ່ນບໍ່ຄືນາງນ້ອງ |
| ຄໍກົມປ້ອງ | ສອງຕາໄຫຼລ່ຽນ |
| ພໍປານຂຽນ | ຂີດໄວ້ໃນແປ້ນແຜ່ນຄຳ |
| ຫຼຽວເບິ່ງກ້ຳ | ອ່ອນສ່ອນນອນຈັນ |
| ອອກເປັນມັນຍິຍັບ | ແຍ້ມມາຫົວຍ້າມ |
| ນາມແນວນ້ອງ | ຍິ່ງງາມຕ້ອງສະໂຫຼກ |
| ໂຊກຜູ້ໃດຈິ່ງພໍ້ | ບຸນໜ້ອຍບໍ່ເຫັນ... |

**ລຳເຍີ້ນ:** ເພິ່ນສາມາດເອົາກອນເຈັດແບບອັກສອນສັງວາດມາລຳກໍ່ໄດ້ສ່ວນກອນລຳລ່ອງກໍ່ເຊັ່ນດຽວກັນຕ່າງແຕ່ກອນລຳລ່ອງເພິ່ນໄດ້ກຳນົດເອົາແຕ່ກອນເກົ້າຂຶ້ນເມືອ ຕົວຢ່າງ(ໃຫ້ເບິ່ງກອນກ້ຽວສາວແບບໃໝ່ຂອງທ່ານພູມີ ວົງວິຈິດ ໃນປຶ້ມໄວຍາກອນ ໜ້າ 234-242)

| | |
|---|---|
| ມື້ນີ້ ອ້າຍໄດ້ມາເຫັນນ້ອງ | ທອງສະຫວັນຮູບຫຼໍ່ |
| ຄິດຢາກຂໍປາກເວົ້າ | ນຳນ້ອງໃຫ້ສະວ່າງວອນ |
| ທຸກມື້ນີ້ ອົກພີ່ຄັດເຄັ່ງຮ້ອນ | ເອົ້າອັ່ງມະໂນໃນ |
| ໃຈພີ່ເພພັງຫັກ | ວຸ້ນວາຍທະລາຍມ້າງ |
| ............................. | ................................ |

ນອກຈາກນີ້ແລ້ວ ເພິ່ນຍັງໃຊ້ກອນອ່ານແບບວະຊິລະປັນຕິເພື່ອໃຊ້ລຳລ່ອງກໍ່ໄດ້ແຕ່ການລຳລ່ອງມັນພັດມີບົດຂຶ້ນຕົ້ນຂອງມັນເຊັ່ນ: ໂອຍ! ຟ້າເອີຍຟ້າຮ້ອງສັກກະຫຼະ ຟ້າເອີຍນໍ ຟ້າຮ້ອງສັກກະລາຍ ຈັ່ງແມ່ນເປັນຕາໜ່າຍພວກໄພຢາເສບຕິດນໍປ່ອງບ້ານາເຂົ້າແມ່ນກໍ່ກວນ ແມ່ນກໍ່ກວນ...ລະນາ.

ເວລາຈະລົງເພິ່ນກໍໃຊ້ຄຳວ່າ “ໂອ...” ກໍພໍ

**•ກອນລຳເຕີ້ຍ.**

ລຳເຕີ້ຍແມ່ນລຳທີ່ມີລັກສະນະຟົດຟື້ນ ຄືກັນກັບກອນລຳເພີນແຕ່ການແຕ່ງມີລັກສະນະຄ້າຍຄືກັນກັບກອນລຳເຍີ້ນມີການໃຊ້ຫຼັກຄຳປະຈຳບ່ອນ. ໃຊ້ຄຳສ້ອຍ, ຄຳບຸບພະບົດ ມີການສຳຜັດນອກ ແລະ ສຳຜັດໃນ ແລະ ມີການຕື່ມບາດຄຳເຂົ້າໃນແຕ່ລະວັກເຊັ່ນດຽວກັນ, . ບ່ອນທີ່ຕ່າງກັນນັ້ນແມ່ນກອນເຕີ້ຍມັກໃຊ້ລຳແຕ່ລະເທື່ອລະບາດ (ສີ່ວັກ) ແລ້ວກໍ່ລົງສຽງໃຫ້ຜູ້ເປັນຄູ່ລຳຕອບ ດັ່ງນັ້ນ ແຕ່ລະບາດຈິ່ງຕ້ອງມີຄວາມໝາຍຂອງມັນຄົບຖ້ວນໂລດ ຖ້າຄວາມໝາຍໃນບາດດຽວບໍ່ຄົບ ເພິ່ນກໍ່ລຳຕື່ມບາດທີສອງ. ຕົວຢ່າງກອນລຳເຕີ້ຍດັ່ງນີ້:

**ຕົວຢ່າງ1: ” ກອນລຳເຕີ້ຍທຳມະດາ “ຖາມຂ່າວສະຫະກອນ”**

ຊ: ໂອຈັ່ງວ່ານໍນາງ

| | |
|---|---|
| ອ້າຍນີ້ມາເຫັນນ້ອງ | ຢາກລອງຖາມນ້ອງເບິ່ງ |
| ຖາມເຖິງວຽກພວກນ້ອງ | ມັນດີຂຶ້ນຢ່າງໃດ |

| | |
|---|---|
| ສະຫະກອນນ້ອງໄດ້ | ມີໝູ່ຢູ່ຈັກຄົນ |
| ຜະລິດຜົນຂອງມັນ | ຕ່າງເດີມຈັ່ງໃດນ້ອງ |
| ອົດໃຫ້ລອງຈໍາເວົ້າ | ພໍຊາຍໄດ້ຮູ້ຂ່າວ |
| ພໍໄດ້ຖືແບບເບື້ອງ | ໄດ້ດີດ້ອຍດັ່ງນາງ |
| ຊັ້ນດອກນານາງນາ | ສາວຊາວນາຜູ້ດີເອີຍ |

ຍ: ໂອ ຈັ່ງວ່ານໍຊາຍ

| | |
|---|---|
| ນ້ອງກໍ່ຍິນດີເວົ້າ | ແນວມີບ່ອນນ້ອງຢູ່ |
| ບ່ອນທີ່ອ້າຍຢາກຮູ້ | ເຊີນອ້າຍໃຫ້ຄ່ອງຟັງ |
| ສະຫະກອນນ້ອງນັ້ນ | ມີໝູ່ຊາວຄົນ |
| ຜະລິດຜົນຂອງມັນ | ໄດ້ລື່ນປີກາຍແທ້ |
| ນອກຈາກການຜະລິດເຂົ້າ | ຊາວເຮົາຍັງປູກຖົ່ວ |
| ປູກໝູ່ມັນທາດແປ້ງ | ຂາຍໄດ້ຄູ່ສູ່ອັນ |
| ຊັ້ນດອກນາ ຊາຍນາ | ໝົດເວລາຊິລາແລ້ວ |

**ຕົວຢ່າງ 2:**

ຊ: ໂອລະວ່ານໍນາງ

| | |
|---|---|
| ເຮົາມາລໍາກອນເຕີ້ຍ | ນໍາກັນໃຫ້ມ່ວນຊື່ນ |
| ລໍາໝົດຄືນກໍ່ໄດ້ | ຄັນມີນ້ອງແມ່ນຢູ່ຄຽງ |
| ຂໍແຕ່ພຽງນາດນ້ອງ | ຮັກແຕ່ພີ່ຊາຍດຽວ |
| ຢ່າໄປຫຼຽບແລໃຜ | ໃສ່ໃຈແຕ່ນໍາອ້າຍ |
| ມີໃຈດຽງຕໍ່ນ້ອງ | ບໍ່ໜ້າຍມ້າງຫ່າງນາງ |
| ແທ້ນ່າພະຍານາງ | ຫາງຕາຜູ້ງາມເອີຍ |

ຢາກເມື່ອເປັນເຂີຍພໍ່ນາງເດ......................

ຍ: ໂອລະວ່າ ຊາຍລໍາ

| | |
|---|---|
| ຄັນອ້າຍເວົ້າຈັ່ງຊັ້ນ | ສິບສ່ວນແສນດີ |
| ນ້ອງຄືງມີຄວາມສຸກ | ເມື່ອມີອ້ອນອ້າຍ |
| ມີຜູ້ໝາຍມາສ້າງ | ທໍາສວນຮົ້ວໄຮ່ |
| ມີໃຈດຽວຕໍ່ນ້ອງ | ອີຫຼີແທ້ແມ່ນບໍ່ຊາຍ |

ຢ່າໄດ້ຕິຖະແຫຼງຫຼົ້ມ ກິນໝາກຍົມໝົດມື້ຕ່າ

ກິນໝາກຂາມໝົດມື້ຕົ້ນ ຄວາມສົ້ມແມ່ນບໍ່ມີ

ແມ່ນອີຫຼີເຈົ້າບໍເດ ຫົວໃຈເວນໍ້າອ້າຍ

ພໍຢາກຕາຍນໍາເຈົ້າ...........

**ເຕີ້ຍຫົວດອນຕານ:** ກອນເຕີ້ຍຫົວຕາ ແລະ ເຕີ້ຍທໍາມະດາແມ່ນຄືກັນເກືອບໝົດທຸກບ່ອນຕ່າງກັນຢູ່ບ່ອນລີງສຽງໜ້ອຍໜຶ່ງເທົ່ານັ້ນ.

**ຕົວຢ່າງ:**

ຊ ໂອລະແມ່ນນໍນາງ

ເຮົາມາລໍາກອນເຕີ້ຍ ຫົວດອນຕານເບິ່ງຈັກຫວ່າງ

ສາວພະນາງນາດນ້ອງ ມີຊູ້ແລ້ວບໍ່ນາງ

ຫຼືວ່າຍັງອ້າງວາງ ນອນປ່ຽວດຽວດາຍ

ຊາຍນີ້ໝາຍມາດອມ ຮ່ວມພະນາງນວນນ້ອງ

ຈັ່ງວ່າສອງໃຈນັ້ນ ເປັນອັນດຽວອ້າຍວ່າ

ປາດຖະໜາຢາດນໍ້າ ນໍ້າເຈົ້າສູ່ຮົ່ມໂພ

ແທ້ນ່າສາວນາງຜູ້ຄິ້ນໂກ້ ຢາກເອົາເມືອໂຊຢູ່ທາງນັ້ນ

ຍ: ໂອລະແມ່ນຊາຍລໍາ

ຄັນວ່າອ້າຍເວົ້າຈັ່ງຊັ້ນ ນ້ອງຂໍນອບໃຈນໍາ

ບໍ່ເອົາເງິນເອົາຄໍາ ຊິຂອບໃຈນໍາອ້າຍ

ຈັ່ງວ່າໃຈນາງນ້ອງ ຍັງຄອງຖ້າອ້າຍຢູ່

ຊູ້ບໍ່ມີແນມຂ້າງ ຍັງວ່າງຢູ່ໜ່ອຍໃຈ

ບໍ່ມີໃຜມາໝັ້ນ ໝາຍເອົາໄປເປັນຄູ່

ຢູ່ຜູ້ດຽວແທ້ໆ ເດີອ້າຍແມ່ນຜູ້ງາມ

ຈັ່ງວ່າ ແກ້ມປາຍລ່າຍ ຊາຍໜໍລໍາຜູ້ງາມເອີຍ.

ຊ ໂອລະແມ່ນນໍນາງ

ບັດນີ້ ມາລໍາເຕີ້ຍ ຫົວດອນຕານຊ້ອນຕໍ່

ເຊີນລະບໍນາດນ້ອງ ມາເຕີ້ຍເຂົ້າໃສ່ແຄນ

ເຈົ້າຜູ້ເນື້ອອ້ອນແອ້ນ ໂຕແກ່ນສາວສະໄໝ

ເກີນພີ່ພໍໃຈເຫຼືອ ເມື່ອມາເຫັນນ້ອງ

ອ້າຍຢາກລອງຖາມເລື່ອງ ການເມືອງເບິ່ງຈັກຢ່າງ

ໃຫ້ພະນາງຈົ່ງແກ້ ໄຂໃຫ້ເພິ່ນຟັງ

**ເຕີ້ຍພະມ້າ**

ຊາຍ ເອີມານ້ອງມາໆ

ມາສ້າງມາສາ ເມືອງລາວສິວິໄລ

ເມືອງລາວຈະສົດໃສ ກໍເພາະຄົນລາວເຮົາຮ່ວມໃຈ

ມາພ້ອມກັນ ສ້າງສາບ້ານເມືອງ

ໃຫ້ຮຸ່ງເຮືອງ ກ້າວໜ້າຖາວອນ

ຍິງ ເອີມາ ອ້າຍມາໆ

ມາພັດທະນາ ສ້າງສາບ້ານເມືອງ

ຊາດລາວເຮົາຈະເລີນຮຸ່ງເຮືອງ ງາມກະເດື່ອງໄປທົ່ວໂລກາ

ຍ້ອນປະຊາຊົນລາວ ສາມັກຄີ

ສົມກຽດສັກສີ ຊາດວິລະຊົນ

**ໝາຍເຫດ:**ລຳເຕີ້ຍພະມ້ານີ້ເພິ່ນບໍ່ໃຊ້ສະເພາະແຕ່ມັນເອງ, ແຕ່ເພິ່ນໃຊ້ລຳສ້ອຍເຂົ້ານຳລຳເພີນ ເພື່ອເປັນການປຸກລະດົມ ລົດຊາດ ແລະ ເຮັດໃຫ້ຜູ້ຟັງເກີດຄວາມສະເທືອນອາລົມ.

**•ກອນລຳເພີນ**

ແມ່ນກອນລຳປະເພດໜຶ່ງຊຶ່ງໃຊ້ກອນອ່ານທີ່ປະກອບດ້ວຍຫຼັກຄຳປະຈຳບ່ອນ(ຄຳເອກ, ຄຳໂທ). ສ່ວນຫຼາຍແມ່ນໃຊ້ກອນສຳຜັດນອກແບບຮຽງວັກ ຄືກອນອ່ານແບບວະຊິລະປັນຕິ. ແຕ່ວ່າຢູ່ໃນກອນລຳເພີນນີ້ເພິ່ນມັກຕື່ມບາດຄຳເຂົ້າໃສ່ໃນວັກໃດໜຶ່ງເພື່ອໃຫ້ມັກຖືກຈັງຫວະທຳນອງກ້າວເດີນຂອງມັນເຊັ່ນ: ຄຳວ່າ “ສາລະນໍ”, “ກະ” ເປັນຕົ້ນ. ການລຳເພີນນີ້, ຮູບການຂອງມັນຄືລຳເຕີ້ຍຢູ່ບ່ອນວ່າມັນມີຜູ້ຊາຍກັບແມ່ຍິງລຳກ້ຽວຕອບກັນເປັນເທື່ອລະ ບາດສອງບາດໄປ. ລຳເພີນເມື່ອເບິ່ງໃສ່ຈັງຫວະຂອງມັນແລ້ວເຫັນວ່າເປັນປະເພດລຳທີ່ຟົດຟື້ນກວ່າລຳປະເພດອື່ນໆ ແລະ ລຳເພີນກໍມີບົດຂຶ້ນຕົ້ນຂອງມັນສ່ວນບາດຈະລົງນັ້ນເພິ່ນກໍ່ພຽງແຕ່ໃສ່ເນື້ອໃນ “ຂໍອ່ອຍລາລົງ” ໂລດ.

ຕົວຢ່າງ: ບົດຂຶ້ນຕົ້ນ

ຈັ່ງວ່າເປີດຜ້າ ແຈ້ງສະຫວ່າງສີຂາວໆ

ອ້າຍບ່າວໝໍລຳເອີຍ ຄັນຢາກໄດ້ເມຍໝໍລຳ

ໃຫ້ອ້າຍນຳເຈົ້າເມືອບ້ານໆ

ຕົວຢ່າງ 1: ກອນລຳເພີນ

ຍ ໂອ່ຍ ນໍຊາຍ

| | |
|---|---|
| ມາເຫັນອ້າຍ | ພີ່ຊາຍງາມຮູບຫຼໍ່ |
| ນ້ອງປາກຂໍປາກຕ້ານ | ດອມອ້າຍຜູ້ງາມ |
| ນາມມະກອນອ້າຍ | ແນວໃດບອກນ້ອງແດ່ |
| ທັງພໍ່ແມ່ພີ່ນ້ອງ | ຂອງອ້າຍຢູ່ໃສ |
| ເພິ່ນຢູ່ໃກ້ | ຫຼືວ່າຢູ່ໄກ |
| ຄັນຫາກຊາຍເຫັນໃຈ | ບອກພະນາງແນ່ແມອ້າຍ |

ຊ ໂອ່ຍ ນໍນາງໆ

| | |
|---|---|
| ດີໃຈລົ້ນ | ພີ່ຊາຍລຳພໍ້ອຸ່ນ |
| ເປັນຈັ່ງບຸນແທ້ໆ | ພີ່ຊາຍອ້າຍຊື່ນໃຈ |
| ນາມມະກອນອ້າຍ | ສອນໄຊເປັນຊື່ |
| ໃຫ້ນາງຈື່ຈຳໄວ້ | ໄປໜ້າຢ່າລືມ |
| ສ່ວນວ່າອ້າຍເອື້ອຍນ້ອງ | ກະມີຢູ່ຫົກຄົນ |
| ເກີດຢູ່ເມືອງຈຳປາ | ເຂດແຂວງທາງໃຕ້ |

ຕົວຢ່າງ 2: ຜົວເພິ່ນແຟນເຮົາ

| | |
|---|---|
| ແມ່ນອ້າຍຊິເປັນຜົວໃຜ (ຊ້ຳ ) | ສະເປັກຫົວໃຈຂອງນ້ອງນີ້ນາ |
| ຂໍໂທດຖ້າມີພັນລະຍາ ( ຊ້ຳ ) | ເຂົ້າເປົ້າສາຍຕາຂອງນ້ອງເຫຼືອເກີນ |
| ຖ້າເປັນຂອງເພິ່ນນ້ອງຂໍອະໄພ | ຈັກຜົວຜູ້ໃດ.......ຕ້ອງຂໍອະໄພ |
| ຫົວໃຈວຸ້ນວາຍເຫຼືອເກີນ ( ຊ້ຳ ) | ເໝືອນຟ້າບັນດົນພໍ່ຄົນຄືອ້າຍ |
| ຈັ່ງແມ່ນຕໍ່າຕາຕ້ອງໃຈ (ຊ້ຳ) | ບອກໄດ້ບໍອ້າຍສະຕາຍສາກົນ |
| ຢາກເບິ່ງດົນໆ | ເດຄົນຄືຊາຍ |
| ຄັນໝາຍພໍໄດ້ບໍນໍ ( ຊ້ຳ) | ຫວັງທີ່ນ້ອງລໍ ຄົງສົມດັ່ງຕັ້ງໃຈ |
| ຈະຂໍເທີນທູນອ້າຍໄວ້ ( ຊ້ຳ ) | ຈັກແຟນຜູ້ໃດ ຢາກໄດ້ມາແຍງ |
| ໃຫ້ຂໍສ່ວນແບ່ງແນ່ເນີຈັກໜ່ອຍ | ໃຫ້ຂໍສ່ວນແບ່ງນຳແນ່ຈັກເທື່ອ |
| ຊິເມືອເອົາໄປຜົນກ້ຽວ ( ຊ້ຳ ) | ◌່ຢ່າໄດ້ ຕາຂຽວເດີເມຍຂອງເພິ່ນ |

| | |
|---|---|
| ເພາະຫົວໃຈນ້ອງສັ່ງໃຫ້ເອີ້ນ | ໃຫ້ເອີ້ນໂອຍໃຫ້ເອີ້ນໃຫ້ເອີ້ນ |
| ແຕ່ຄາວພໍ້ວ່າພົບກັນ | ຮັກສັນຍາສໍາພັນເປັນຊື່ |
| ອັນຢາຖືຊາຄົນໃຈດີ້ | ຄົນໃຈ....ດີ້...... |
| ມາຜູ້ງາມແທ້ນໍ | ຜົວໃຜມາງາມແທ້ນໍ |
| ໃຫ້ໄດ້ບໍໜໍຊິໄດ້ບໍໜໍ | ຄວາມຮັກຂອງເຈົ້າ |
| ຜ່ອນຖາຍສາຍຕາຂອງເຮົາ (ຊໍ້າ) | ພໍໄດ້ຖາຍຄວາມເຫງົາ ເບົາລົງດ້ານຄືນ |
| ຊິຫຼັບຊິຕື່ນ ຍັງຄິດພໍ້ບໍ່ວາຍ | ຈັກຜົວຜູ້ໃດ່ ຍັງຄິດຮອດບໍ່ວາຍ |
| ຜູ້ຊາຍອີຫຍັງ ມາເທ່ ( ຊໍ້າ ) | ຫຸ່ນກະໂກ້ເກ່ ເວົ້າຈາກະມ່ອນ |
| ຢາກເອົາໃຈຂອງນ້ອງນີ້ຊ້ອານ | ນີ້ຊອ້ານໂອຍນີ້ຊອ້ານນີ້ຊອ້ານ |
| ເຂົ້າໃນຫ້ອງແມ່ນກ່ອມນອນ | ລຸກຈາກບ່ອນກາຍເປັນຜົວເພິ່ນ |
| ລຸກຈາກບ່ອນກາຍເປັນຜົວເພິ່ນ | ຢ່າໄດ້ເຂີນອາຍ ນ້ອງຊິເອົາຊິເອົາ ຊິເອົາ ຊິເອົາ |
| | ມາລອງແມ່......... |

**ຂ. ກອນຂັບທ້ອງຖິ່ນ**

ນອກຈາກລໍາທົ່ວໄປແລ້ວ, ກໍຍັງມີລໍາທ້ອງຖິ່ນອີກ, ນັບແຕ່ວຽງຈັນຂຶ້ນເມື່ອຮອດພາກເໜືອ ເພິ່ນເອີ້ນວ່າ ຂັບ ເຊັ່ນ: ຂັບງື່ມ, ຂັບທຸ້ມ, ຂັບຊໍາເໜືອ, ຂັບເຈີມ,ພິເສດ ມີແຕ່ແຂວງຊຽງຂວາງທໍ່ ນັ້ນ ເອີ້ນວ່າ: ລໍາພວນ ເພິ່ນບໍ່ເອີ້ນ ່ວ່າ ຂັບພວນ. ສ່ວນນັບແຕ່ແຂວງຄໍາມ່ວນລົງໄປໄດ້ ເພິ່ນເອີ້ນວ່າລໍາເຊັ່ນ ລໍາຜູ້ໄທ , ລໍາບ້ານຊອກ,ລໍາຕັ້ງຫວາຍ, ລໍາສາລະ ວັນ, ລໍາສີພັນດອນ, ລໍາໂສມ.... ສະຫຼຸບແລ້ວ ບໍ່ວາຂັບຫຼືລໍາທຸກປະເພດ ແມ່ນການໝູນໃຊ້ກອນອາ ່ນທັງ ໝົດ.

ອາດເວົ້າໄດ້ວ່າທຸກໆປະເພດຂອງການຂັບລໍາ ລ້ວນແຕປະດິດແຕ່ງຕາມລັກສະນະຂອງ ກາບ ກອນ ຊີງ ມີ.ການ ສໍາຜັດກັນຢ່າງຄອງແຄ່ວ.. ຍ້ອນແນວນັ້ນ ເມື່ອມີສຽງຂັບ ຫຼືສຽງລໍາຂຶ້ນແລ້ວ ກໍມີບັນຍາກາດອັນເບີກບານມ່ວນຊື່ນ ຢູ່ ໃນປາງບຸນ, ງານຕ່າງໆ ຫຼືແມ່ນແຕ່ໃນການອອກແຮງງານ. ນອກຈາກນັ້ນ ບ່າວສາວ ກໍເສີຍໃຊ້ສຽງ ຂັບສຽງລໍາ ເພື່ອ ສະແດງຄວາມຮັກ ແລະຄວາມຫວັງຕໍ່ກັນ.

ປັດຈຸບັນການຂັບການລໍາ ກໍມີຫຼາຍຮູບ ການແຕກຕ່າງກັນ, ສາມາດສ້າງຄວາມສະເທືອນໃຈຢ່າງຫຼວງຫຼາຍ , ແກ່ຜູ້ຊົມ, ຜູ້ຟັງ, ພ້ອມກັນນັ້ນ, ມັນກໍກາຍເປັນພາຫະນະອັນມີປະສິດທິພາບໃນການຕໍ່ສູ້ຊິນຊັ້ນ ແລະປະກອບສ່ວນ ່ ຢ່າງຫຼວງຫຼາຍ ເຂົ້າໃນ ການສຶກສາອົບຮົມແນວຄິດ ຄຸນສົມບັດສິນທໍາປະຕິວັດ ແລະສ້າງໃຫ້ຄົນລາວ ກາຍເປັນຄົນທີ ປອດໃສສີວິໄລ.

ເມື່ອຢາກແຕ່ງບົດຂັບລໍາແຕ່ລະຊະນິດໄດ້ ກ່ອນອື່ນໝົດຕ້ອງຮູ້ທໍານອງຂັບ ແລະທໍານອງລໍາສາກ່ອນ ຄອຍແຕ່ງ ໄດ້.ເພື່ອເປັນຕົວຢ່າງປະກອບ ຕໍ່ໄປນີ້ຈະສະເໜີບົດຂັບລໍາທ້ອງຖິ່ນຈໍານວນໜຶ່ງ ດັ່ງນີ້:

**•ຂັບພວນ ( ລໍາພວນ )**

## ຮ່ວມແຮງຮ່ວມໃຈ

ໂອນໍ ຮຽນຂໍ 12 ຄຳເວົ້າ		ເປັນກອນເຈົ້າຊ້ອນສິ່ງ
ໃຫ້ແກ່ພີ່ງພີ້ນ້ອງ		ຊາວເຊື້ອໝູ່ເຮົາ		ພີ້ນ້ອງເອີຍ
ເພີ່ນວ່າການຮຽນຮູ້		ເຮົາມີຄູເພີ່ນສັງສອນ
ແຕ່ວ່າ ຍັງໜຶ່ງນັ້ນ		ຜູ້ຮູ້ຊວານແມ່ນປະຊາ		ເດີເຈົ້ານາ
ໂອນໍ ພໍ່ແມ່ເດັກກວ່ານັ້ນ		ຕ້ອງສຸ່ມໃສ່ນຳກັນ
ຂະຫຍັນພຽນແພງຮັກ		ຊ່ວຍກັນຕິຕາມໄວ້
ໃຫ້ໝູ່ຊຸມເດັກນ້ອຍ		ເອົາໃຈໃສ່ນໍສືບຕໍ່
ບົດເຝິກຫັດທີ່ໄດ້		ຕ້ອງມາຮ່ວມໃຈກັນ
ທັງຄອບຄວຊຸມຊົນ		ພ້ອມພາໂຮງຮຽນນັ້ນ
ຕ້ອງພາກັນຊູ້ຊວ້ານ		ນຳກັນມັນຈີ່ຄ່ອງ
ເພື່ອໃຫ້ຊຸມພີ້ນ້ອງ		ນັກຮຽນນັ້ນກ້າວເກັ່ງດີ  ເດີທ່ານເອີຍ
ລາລົງທໍ່ນີ້ນາແລ້ວ............

**ເຈັບແລ້ວຈຳ**

**ໂອນໍ**	ເພີ່ນໃຈຊາຍນີ້		ບໍ່ມີຈິງນັ້ນຈັກເທື່ອ
	ຄັນກິນເກືອ		ສູ່ມື້ເວົ້າພັດເລົ່າຈາງ
	ນ້ອງເຄີຍເຫັນ		ມາແລ້ວພບປານແມວ		ນັ້ນຮ້ອງແມ່ວ
	ຍາມໄດ້ມາພົບພໍ້		ປາຍັ່ງບໍ່ຢາກໜີ ນາອ້າຍນາ
ໂອນໍ	ຄັນແຕ່ຄາວ		ກ່ອນັ້ນຊິບໍ່ຫ່າງໄປທາງໃດ
	ຢາກລອງດວງຈິດໃຈ		ບໍ່ຢາກໄລ່ນັ້ນພໍນ້ອຍ
	ບາດເຫັນຮອຍໝູໝົ້ນ		ບາດເຫັນໂກນວ່າສ້າງທໍ່
	ບາດໄປພໍ້ຄົນໃໝ່ແລ້ວ		ເລີຍລືມນ້ອງບໍ່ຄິດນຳ		ນາອ້າຍນາ
ໂອນໍ	ອ້າຍລືມຄຳເວົ້າ		ເຄີຍເວົ້າສອງຄົນເຮົາຢູ່ຫົວໄຮ່
	ລືມສັນຍາໃຫ້ໄວ້		ກັບນ້ອງຢູ່ທົ່ງນາ
	ຕົວະນ້ອງຄອງຄ່ອຍຖ້າ		ກົກສີດາຈົນວ່າກ່ອງ
	ກົກທອງຈົນວ່າເນີ້ງ		ແຕ່ເຫີງແລ້ວບໍ່ກັບຄືນ		ເດີອ້າຍເອີຍ....
ໂອນໍ	ເພີ່ນວ່າບຸນ		ບໍ່ໃຫ້ຍອຍໄຮກະບໍ່ຢ່ອນ
	ບຸນບໍ່ຄາດໄດ້ຊ້ອນ		ມາໃກ້ພັດເລົ່າມາຍ

ຄັນເຮືອພາຍບໍ່ສີມນໍ້າ ອັນນາຫານບໍ່ສີມຄາດ
ເພິ່ນວ່າຄວາຍບັກຕູ້ ບໍ່ສີມແທ້ວ່າຕໍ່ໄຖ ໃດອ້າຍເອີຍ
ໂອນໍ ໃຈຜູ້ຍິງນີ້ ແດນໃຕ້ບໍ່ເຄີຍມີຫຼາຍແງ່
ມີແຕ່ບ່າວໄທເໜືອ ເຊື່ອບໍ່ໄດ້ເພາະໃຈເຈົ້າ
ບໍ່ແນ່ນອນຄຳເຄີຍວອນ ເຄີຍເວົ້າປະກອບແກ່ເສຍສີ
ອ້າຍຄືງມີນັ້ນພໍແຮງ ແຕ່ງພາງາຍຕ້ອນ
ຢູ່ບ່ອນນອນຄ່ອນຖ້ຳ ຄຳອຳລາເລີຍບໍ່ກ່າວ
ໃຈນ້ອງປວດຈ້າວໆ ຄັນເຈັບແລ້ວກະແມ່ນຈຳ ເດີອ້າຍເອີຍ
ໂອນໍ ພໍມາເຖິງບັດນີ້ ລຳພວນຊິເອີ້ນສັ່ງ
ສຸດສີມຫວັງພີ້ນ້ອງ ຈົ່ງຢືນໝັ້ນຄູ່ສູ່ຄືນ ຂໍລາລົງ ທໍ່ນີ້ແລ້ວ.

•ຂັບໄຕແດງ

**ເມືອຢາມເມືອງຊຳ**

ອຽວຫຼູນຳແນ່ ຄຳນ້ອງເອີຍ
ຍິນແຕ່ສຽງ ປີກອງຫູນາງຈີ່ອອນແລ້ວ
ອອນຄອນຫູອວນ ນາງສຽງແຄນອ້າຍເປົ່າແນ່
ອ້າຍມາຈອນ ອວນນຳນ້ອງ
ເມືອເມືອງຊຳ ເກົ່າເມືອງຫຼັງເຮົາແນ່
ຫຼ້າເອີຍຄັນອ້າຍ ໄດ້ຍິນສຽງນ້ອງ
ໄຕ້ບ້ານຈີ່ບໍ່ມາ ຢູ່ວຽງເລຍຮາ
ນ້ອງກໍເອີ້ນຄຳຈາຍ ສິ່ງມາຈອນນ້ອງ ວ່າຮັກເອີຍ
ຫຼ້າເອີຍຈອນ ນ້ອງເມືອຢາມບ້ານ
ເມືອຢາມອາວ ເມືອຢາມລົວ
ຢູ່ຕ່າງເມືອງຊ່ອນ ລະບໍ່ຮັກເອີຍ
ຫຼ້າອຽວເອີຍ ໄປອີ້ນແກ່ວປຸງຮ້ອນ
ເມືອງຮຽມເກົ່າ ວອນຈາຍນັ້ນມາ
ຄັນວ່າ ອ້າຍວ່າແຕ່ ຈີບເສື້ອໃສຖົງລາຍ ເມືອແມອວດເອີຍ
ຄັນວ່າ ຈາຍຈອຍແທ້ ຫ້າງແຫຖີ່ ເອີຍຄຳຮາ
ປາປີກຢູ່ຫົວ ຫາດກອງຫາ ເຈຄຳເອີຍ

ປາໄນຢູ່ຫົວ　　　　　　　　　ວັງກອງຖ້ຳ　　　ເຈ່

ຫຼ້າກົ້ນຫຼີເອີຍ　　　　　　　　　ສາວລ້ອງມາເມືອງແອດອຸ້ນ

ສອງເຮົາພາກັນເຕົ້າ　　　　　　　ບ້ານເກົ່າເມືອງນອນເຮົາແມ.

**•ຂັບທຸ່ມ**

ແກ້ມແປີນເວີນ　　　　　ຊູ້ເພິ່ນໃຫ້ເວີນໄປໄກ

ຄັນບໍ່ແມ່ນຊູ້ໃຜ　　　　　ໃຫ້ອ້າຍເວີ່ນເຂົ້າມາໃກ້

ນ້ອງນີ້ໜາ　　　　　　　ຕາດຳເອີຍບໍ່ມີຄູ່ຊ້ອນ

ບໍ່ມີຄູ່ຊ້ອນ　　　　　　　ຢູ່ຜູ້ດຽວ

ເກົ້າກຽງ　　　　　　　ອິດສາລ້ຽງນ້ອງແນ່ໄດ້ບໍ

ນໍອ້າຍນໍ　　　　　　　ຫຼືອ້າຍຫາກພໍກັນແລ້ວ

ເຈົ້້າດອກເອີຍ　　　　　ເຈົ້າດອກໆເອີຍ　ເຫີ.....ເຮີຍ

ໂອວ່າ ເຈົ້້າດອກລຳໄຍ　　ຮັກອ້າຍແມ່ນສຸດຫົວໃຈ

ເຈົ້າດອກລຳໄຍ　　　　　ພວມບານແຍ້ມ

ຄັນວ່າອ່ອນສີໄພ　　　　ຢ່າໄດ້ໄລ່ລືມນ້ອງ

**• ຂັບທຸ່ມຫຼວງພະບາງ( ຮັກບ່າວຫຼັ່ງພະບາງ ).**

ໃໝ່　　　　　　　　　　　ຫົວໃຈອ້າຍຫວ່າງບໍ່ນໍ
ຮັກກັບນ້ອງໄດ້ບໍ່　　　　　　ຫຼືວ່າບໍ່ພໍຫົວໃຈຂອງເຈົ້າ
ນ້ອງຄືນຂີ້ຮ້າຍ　　　　　　　ມາຍາກລຳບາກໃຈນ້ອງ　　　　ແທ້ເດ
ໂອລະວ່າມາຍາກ　　　　　　ມາລຳບາກໃຈນ້ອງນີ້ເດ
ຢ້ານແຕ່ຫົວໃຈເພ　　　　　　ອ້າຍຄຶງບໍ່ເຊ ນັ້ນເຂົ້າມາໃກ້...
ເຈົ້າດອກເອີຍ...　　　　　　ເຈົ້າດອກເອີຍ...ເອີ...ເອີຍ...
ໂອລະວ່າເຈົ້າດອກ　　　ມະນີລາ
ຫາກອ້າຍ　　　　　　　　ນັ້ນຄິດເມດຕາ
ຢ່າລືມສັນຍາ　　　　　　　ສອງເຮົາພໍແລ້ວ
ເອີ...ເອີຍ...ເຈົ້າແກ້ມ　　　　ເຈົ້າແກ້ມ ລະມາແກ້ມອ່ອງຕ່ອງ
ຖ້າຍັງເປັນໂສດ　　　　　　ໂດດດ່ຽວຂໍຈອງ
ເໝົາໝົດທຸກຫ້ອງ　　　ຫົວໃຈຂອງນ້ອງ
ແປງແຊງມັກແຮງ　　　　　ແທ້ເດອ້າຍເດ...
ຈົນຫົວໃຈຊິເພ　　　　　　ເພາະຫຼົງສະເໜ ຂອງເຈົ້າຕາຄົມ...
ວາດສະໜາ　　　　　　　ຊາຕານ້ອງບໍ່ສົມສ່ຳນີ້
ຢ້ານແຕ່ບຸນບໍ່ມີ　　　　　　ຄູ່ຄວນຄືນດີ　ບ່າວຫຼວງພະບາງ

| | | |
|---|---|---|
| ມາຢາກລຳບາກ | ຫົວໃຈແທ້ເດ | |
| ຜູ້ສາວເມືອງປາກເຊ | ເກັບຫົວໃຈເພ ຄືນເມືອພາກໃຕ້... | |
| ເຈົ້າດອກໆເອີຍ... | ເຈົ້າດອກໆ...ເອີ...ເອີຍ | |

ໂອລະວ່າເຈົ້າດອກ ກະດັນງາ ບໍ່ລືມອ້າຍຜູ້ຍິດສູງ

**ກອນສັບພື້ນເມືອງຊຳເໜືອ (ຕອນໜຶ່ງຂອງການສັ່ງລາກັນຂອງຄູ່ບ່າວສາວ ພາຍຫຼັງ ກັນ)**

| | |
|---|---|
| ລາກັນເດີນ້ອງ | ລາໄປຈ້ອຍໆ |
| ປັ້ນເຂົ້າບ່າຍນ້ຳອ້ອຍ | ອອຍໄດ້ກໍ່ບໍ່ຄືນ |
| ລາກັນແລ້ວ | ປານສິ້ມໄກ່ຈາກເກືອ |
| ລາກັນແລ້ວ | ປານເຮືອໄກຈາກຝັ່ງ |
| ເໜືອດັ່ງນ້ຳອ່າງແກ້ວ | ລາອ່າງນິນຄຳ |
| ໃຫ້ອ້າຍລາເສຍນ້ອງ | ບໍ່ມີລາລືມງ່າຍ |
| ຖ້າໃຫ້ນ້ຳສະໝຸດແຫ້ງ | ປານຖ້ອຍແຈ່ວບ້ອງຈຶ່ງຄ່ອຍລາ |
| ຖ້າໃຫ້ນ້ຳຂອງແຫ້ງ | ເຫັນຄີປາບູ່ ຈຶ່ງຄ່ອຍລາລືມ ນາງເອີຍ |

ຫຼື ວ່າບົດຂັບລຳພື້ນເມືອງຊຳເໜືອ ທີ່ເວົ້າເຖິງການເສຍຄວາມຮັກຂອງບ່າວສາວວ່າ:

| | | |
|---|---|---|
| ອີດູນຳແນ່ອ້າຍເອີຍ | ຊາດແຕ່ບຸນບໍ່ຮອດໄໝຍອດລັງສອງ | |
| ຊາດແຕ່ເງືອກຢູ່ນ້ຳ | ບໍ່ຊ່າງປັນແດນ | |
| ແຖນຢູ່ເໜືອ | ບໍ່ຊ່າງເປັນເບົ້າ | |
| ແມ່ເບົ້າຢູ່ລັ້ງເມືອງຟ້າ | ບໍ່ຊ່າງຫຼໍ່ແນມດຽວ | ອ້າຍເອີຍ |
| ແນມອ້າຍໄກແນນນ້ອງກ່າແຂນ | ແນນຊາຍໄກແນນນາງຄ່າສອກ ແທ້ແລ້ວ | |
| ບໍ່ໄດ້ກັນຊາດນີ້ | ຊາດລູກເອົາຫຼານ | |

ບໍ່ໄດ້ກັນຊາດຫຼານ ຊາດລຸນເຮົາສືບ ນໍອ້າຍເອີຍ

**•ຂັບງື່ມ ສັ່ງລາກັນ ເຂົາມັກເວົ້າວ່າ:**

**ໂອນໍນ້ອງເອີຍ**

| | | |
|---|---|---|
| ພໍແຕ່ເດີກຂ້ອນແຈ້ງ | ແສງອາລຸນແຈ້ງສະຫວ່າງ | ມາແລ້ວ |
| ຕ່າງຄົນກໍຕ່າງຈະໄດ້ຂ້າງ | ຮາມຮ້າງຫ່າງກັນ | ນໍນ້ອງເອີຍ |
| ນ້ອງກໍເມືອບ້ານນັ້ນ | ອ້າຍກໍເມືອບ້ານນັ້ນ | ຄືນລະທິທທາງທິດ |
| ຄິດອຸກນຳນາງ | ຊິຫ່າງໄກໄລ່ຮ້າງ | |
| ຫົນທາງທຽວເມືອບ້ານ | ແສນກັນດານຫຍຸ້ງຍາກ | |
| ລຳບາກແຕ່ຄິດຮອດນ້ອງ | ໄປແລ້ວຊິບໍ່ເຫັນ | |
| ນ້ອງຫຼ້າ | ແພງຕາອ້າຍເອີຍ. | |

**ຕົວຢ່າງ : ກອນຂັບສະຫຼາງສາມສ້າວ**

| | | |
|---|---|---|
| 1). | ເອີດອກຈຳປີຈຳປາ | ມາລາເບັ່ງບານ |
| | ສິ່ງກິນຫອມເຈື່ອຈານ | ບານທົ່ວລ້ານຊ້າງເມືອງລາວ |
| | ປະຊາຊົນລາວຊື່ນໃຈ | |

ໃຜມາເຫັນເມືອງລາວເຮົາ　　　ມີຊີວິດໃໝ່
ຊີວິດໃສສ່ອງແຈ້ງ　　　ແສງເຫຼືອມດັ່ງພະຈັນ
ສຸກສົມຫວັງ　　　ດັ່ງມະໂນໝາຍແມ້ງ
ເອີ... ເຮີຍ ເຈົ້າແກ້ມໆ　　　ອໍ່າທ່ໍາພາຍໃຕ້ການນໍາ
ຂອງພັກປະຊາ　　　ຊົນລາວກ້າວໄປ

2). ເອີຫຼວງພະບາງ　　　ລ້ານຊ້າງເມືອງລາວເຮົານນ
ເຈົ້າມີຊີວິດຊີວາ　　　ປະຊາມ້ວນຊື່ນເບີກບານ
ຊົມເຊີຍງານກິລາແຫ່ງຊາດ　　　ຄັ້ງທີຫ້າໄດ້ເຈີດຈາລືຊາທົ່ວແດນ
ທຸກເຂດແຄວ້ນເໜືອ ແລະ ໃຕ້　　　ມາໂຮມເຕົ້າເຂົ້າແຂ່ງຂັນ
ໄດ້ສ້າງສັນ　　　ຄວາມສໍາພັນແໜ້ນ
ເອີ ເຮີຍ ເຈົ້າແກ້ມໆ　　　ດອກຈໍາປາ
ງານກິລາແຫ່ງຊາດ　　　ຄັ້ງທີຫ້າປະຊາຊື່ນໃຈ

3). ເອີ...ເຮີຍ ລາລາລາ　　　ວັນນາຊູ້ເຈົ້າສັ່ງ
ເອີເຮີຍຟັງເດີເຈົ້າ　　　ຟັງຄໍານ້ອງສັ່ງ　　ເຈົ້າພໍ່ສີແດງເອີຍ
ອັນວ່າກ້ອຍ　　　ແມ່ສີນວນ ອັນວ່າສຸກກ່ອນປົ້າ
ສຸກກ່ອນປົ້າ　　　ກາຊີຫ້ອມກໍແມ່ນວິງວອນ
ສອງຄົນເຮົາ　　　ຈຶ່ງໄດ້ລົງລາຍມ້ວນ
ເອີ....ເຮີຍເຈົາແກ້ມອ່ອນໆ　　　ນ້ອງຂໍໝາຍເມືອງຊ້ອນ
ບ່ອນຊົນອນນໍາອ້າຍ　　　ຕະຕິໂຍງເປງ

**ຕົວຢ່າງ: ລໍາຄອນສະຫວັນ**

ອ່ອນໆແກ້ມອາຍອ່ອນໆ　　　ອີ່ນາງຫຼອນມາຢາມ　　　ແຕ່ລະຍາມຄາວນ້ອຍ
ຍາມເມື່ອນາງນີມາພົບພໍ້　　　ແກ້ວໜໍ່ງານິນ

ເປັນຍ້ອນຝົນຊາຕາ　　　ຈຶ່ງໄດ້ມາພານພໍ້

ຍາມເມື່ອນາງນີ້ມາເຫັນອ້າຍ　　　ເຢັນໃຈທຸ່ມໆ

ປານວ່າໄດ້ຢູ່ອຸ່ມໂອ້　　　ໃນຫ້ອງຮ່ອມພີ້ຊາຍ

ຊາຍເອີຍ ເພິ່ນວ່າ ບຸນຫຼາຍຈຶ່ງມາພໍ້　　　ບຸນຫຼາຍຈຶ່ງມາຈອບ

ບຸນນາງຫາກມີລົ້ນ　　　ຈຶ່ງມາພໍຈອບເຫັນ

ຍາມເມືອ ນາງນີ້ມາເຫັນແລ້ວ　　　ຈໍາໜີຢາກຂໍໄຫ້ວ

ຈໍາໄປຢາກຂໍຢູ່　　　ແຜ່ນດິນທີ່ນໍໝາກບ້າ

ແຜ່ນຟ້າທີ່ໝາກເບ້ຍ　　　ນາງຂໍມ້ຽນກະດູກດອມ

ຊາຍເວີຍ ໃຫ້ອິດນໍສາເບື້ອນ　　　ນອນເຮືອນຟາກໄມ້ໄຜ່　　ແຕ່ເນີເໜີຊາຍເອີຍ

ປີໃໝ່ມາຮອດແລ້ວ　　　ຈຶ່ງນອນແປ້ນແຜ່ນຄຳ

ອັນວ່າ　ໃຫ້ຊາຍອິດນໍສາລ້ຽງ　　　ລ້ຽງລະນໍນ້ອງໄວ້

ໂອນໍ　ໃຫ້ຊາຍອິດສາລ້ຽງ　　　ລ້ຽງລະນໍນ້ອງໄວ້　　　ພໍເປັນຫວາຍສາຍອູ່

ບາດພີ່ມີລູກນ້ອຍ　　　ຍັງຊິໄດ້ກ່ອມນອນ

ຊາຍເອີຍ　　　ເຫັນນ້ອງດຳຂີ້ຫຼີ　　　ຢ່າຟ້າວຂີ່ເຮືອກາຍ

ເຫັນນ້ອງດຳຄອຍລອຍ　　　ຢ່າຟ້າວຟາຍເຮືອເວັ້ນ

ອັນວ່າ　ບາດເຮືອຊາຍຫຼົ້ມ　　　ດຳຄອຍລອຍຊິຍູ້ຊ່ວຍ

ຄັນບໍ່ໄດ້ຊ່ວຍຍູ້　　　ຍັງຊິໄດ້ຊ່ວຍພາຍ

ຊາຍເອີຍ ຄັນບໍ່ຄາດົງຂັ້ນ　　　ຢາກຂານກິນງາຍຮ່ວມ

ຢ້ານແຕ່ບຸນບາງລົ້ວ　　　ບໍ່ສິມພໍ້ວໝາກເລັບແມວ

ອັນວ່າ　ຄັນວ່າຂອງຜູ້ດຽວນ້ອງ　　　ຢາກເອົາທອງມາຖັກແຊກ

ຢ້ານແຕ່ຂອງແຊກຄ້າ　　　ຊາວບ້ານເພິ່ນຫວງ

ຊາຍເອີຍ ຄັນວ່າສິມກະໃຈນ້ອງ　　　ຄັນແມ່ນນ້ອງໄດ້ອ້າຍ

ຄັນເຂົ້າສຸກເຕັມໄຮ່　　　ນາງບໍ່ໄດ້ອ້າຍລົງຫາ

ອັນວ່າ　ຄັນເຂົ້າສຸກນໍເຕັມນາ　　　ນາງບໍ່ໄດ້ອ້າຍລົງກ່ຽວ

ໃຫ້ຊາຍເໜັບກະຕຽວຜ້າ　　　ລົງກາງບ້ານຢອກຜູ້ສາວ

ຊາຍເອີຍ ເອົາລະນໍຮາວນີ້　　　ຄອນສະຫວັນຊິໄດ້ຕ່າວ

ລາກ່ອນຄຳເອີຍ　　　ຂໍໂຈະກອນບາດທ້າຍ

ຊິລາອ້າຍອວຍລົງ　　　ໂອລະນໍ............

**ຕົວຢ່າງ:　ລຳພູໄທໃຫຍ່**

ໂອຍ....ນາ....ເອີຍ　　　ບ່າວຜູ້ໄທເອີຍ

ໃຜເອີຍ　ໃຜຢາກມານາໍນ້ອງ　　　ສາວຜູ້ໄທຊິໃຫ້ຍ່າງ　　　ເນີອ້າຍ

ໂອນໍ　ຄັນບໍ່ຢາກຂີ່ຊ້າງ　　　ຊິພາຈ້າງຂີ່ເຄື່ອງບິນ ( ຊໍ້າ )　　　ພຸ້ນແລ້ວ

ຊາຍເອີຍ　　　ສັ່ງມາຈິບແທ້ນໍອ້າຍ　　　ສອງຕາລໍ່າມິເປີດ

ນາງຢາກເກີດຮ່ວມທ້ອງ　　　ສາຍໄສ້ອີ່ແມ່ດຽວ ( ຊໍ້າ )　ອ້າຍເອີຍ

ໂອຍ....ນາ...ເອີຍ　　　ບ່າວຜູ້ໄທເອີຍ

ຊາຍເອີຍ ນ້ອງນີ້ນາວ່ານາອ້າຍ ຈັ່ງຢາກມານໍນຳອ້າຍ ມີແພ້ແລ້ວວ່າຊາຍເອີຍ

ຄັນວ່າ ທາງນໍໄປໄຮ່ ແມ່ຊາຍບຽດນໍໜາມໜາ ນໍອ້າຍ

ໂອນໍ ຄັນວ່າທາງເມືອນາ ແມ່ຊາຍບຽດໜາມແທ່ງ

ນ້ອງນີ້ມາບໍ່ໄດ້ ໄຍບົ້ງຜ່ານຕາ ( ຊໍ້າ ) ອ້າຍເອີຍ

ໂອຍ....ນາ...ເອີຍ ບ່າວຜູ້ຟັງເອີຍ

ຊາຍເອີຍ ນີ້ລະນໍວ່ານໍອ້າຍ ເພິ່ນວ່າໂຄກາໜໍ່ຕໍ່ທົ່ງ ດົງຕໍ່ນາເອີຍ

ຄັນວ່າ ສານນໍຕໍ່ເລົ່າ ຊິພາອ້າຍແຍ່ມົດແດງ ນໍອ້າຍ

ຊາຍເອີຍ ແມ່ມົດແດງນໍຂົບອ້າຍ ມືຊ້າຍປາຍມົດແດງ ( ຊໍ້າ )ອ້າຍເອີຍ

ໂອຍ....ນາ...ເອີຍ ບ່າວຜູ້ຟັງເອີຍ

ຊາຍເອີຍ ໄປບໍນໍອ້າຍ ຂຶ້ນເມືອພູເກັບດອກຫວາ້ນ

ໂອນໍ ໃຫ້ອ້າຍເປັນນໍຜູ້ເກັບ ໃຫ້ນ້ອງເປັນນໍຜູ້ຮ້ອຍ

ຊາຍເອີຍ ເຫິງປານໃດຫັ້ນເດອ້າຍ ຈັ່ງຊິຈູງນໍແຂນເຂົ້າ ພາຂວັນປ້ອນໄຂ່ໜ່ອຍ

ໂອນໍ ຄັນມີຂວາປ້ອນໄຂ່ອ້າຍ ມືຊ້າຍປ້ອນໄຂ່ນາງ ( ຊໍ້າ ) ອ້າຍເອີຍ

ຊາຍເອີຍ ເອົາຫໍນໍວ່ານໍນີ້ ສຽງພູໄທຊິໄດ້ອວ່າຍ ລາແລ້ວ

ໂອນໍ ຂໍໂຈະກອນນັ້ນບາດທ້າຍ ຊິລາອ້າຍອວ່າຍລົງ ກ່ອນເນີ...ກ່ອນເນີ.

**ຕົວຢ່າງ: ລຳມະຫາໄຊ**

ໂອຍຊາຍເອີຍ ຈັງວ່າແກ້ມອ່ອນໆແກ້ມອ້າຍອ່ອນໆ ຢາກຫຼອນເມືອຢາມເດ........

ຊາຍເອີຍ ສາວນາງລຳຊິຂໍຈ້າວ ມະຫາໄຊໄຂສິ່ງ

ຂ້າມປ່າດົງທົ່ງກວ້າງ ໄປຫາອ້າຍຜູ້ນັ່ງຟັງ ລະນາ

ໂອຍ ຊາຍເອີຍໃຈນາງຍັງໝາຍໝັ້ນ ຄອຍຊາຍຢູ່ຄືເກົ່າ

ຕົວະໃຫ້ນ້ອງນັ່ງຢູ່ຖ້າ ອອນອ້າຍກະບໍ່ເມືອ

ຊາຍເອີຍ ຈັ່ງແມ່ນຕົວະໃຫ້ນາງຖ້າ ຫຼາຍລະນໍປີຜ່ານ ມາແລ້ວ

ນາງເຄີກເວົ້ານຳຜູ້ໃໝ່ ຜູ້ໃໝ່ມາຮອດແລ້ວ

ສາວນາງລຳນ້ອງຢາກເວົ້າ ພັດເຄືອງອ້າຍຜູ້ຢູ່ໄກ ລະນໍ

ໂອ ຊາຍເອີຍ ຄັນສັດຈະຜູ້ຊາຍນີ້ ບໍ່ເປັນຕານໍຟັງເຊື່ອ

ຊາຍກິນເກືອຢູ່ສູ່ມື້ ຄຳເວົ້າພັດເລົ່າຈາງ

ຊາຍເອີຍ ຈັ່ງແມ່ນຕວົະໃຫ້ນາງຫຼົ້ມ ຕົກສະໜົມວັງ ຍັງເປັນຮ້າງເຈົ້າຫຼາຍເທື່ອ

ຊາດວ່າແນວດອກເດືອ    ມັນບໍ່ບານຢູ່ຕົ້ນ   ຕົນນ້ອງບໍ່ເຊື່ອຊາຍແລ້ວນໍ

ຊາຍເອີຍ    ຄຳເວົ້ານໍແຕ່ກີ້ ( ຊ້ຳ )    ຊິຂານເອົາເຈົ້ານໍ່ໆໆ

ສ່ອນວ່ານ້ອງນໍ່າຂຶ້ນ    ອອນອ້າຍນໍ່າລົງ    ລະນໍ

ຊາຍເອີຍ    ນິລະນໍມະໂນອ້າຍ    ຄຳປາກນໍບໍ່ໄດ້ຊື່

ຄວາມໃດກືອ້າຍຫາໃສ່    ຄວາມຮັກນໍບໍ່ລ້ອມຮົ້ວ ຕົວະຫຼິ້ນຍັງຄືນ  ລະນໍ

ໂອຍ ຊາຍເອີຍ  ຄຳເວົ້າອ້າຍນໍແຕ່ກີ້    ຊິຂານລົ້ມທັບຄ່າແລ້ວ

ຊາຍເອີຍ  ຄຳເວົ້ານໍແຕ່ກີ້    ຊິຂານຕາຍຮ່ອມປ່າແຮ່ວ

ບາດວ່າມາຮອດແລ້ວ    ບາດໄຟນໍລຸກກົ້ວ

ບາດວ່າຫຼົ້ວນໍລຸກກຸ້ມ    ພັດໄລນ້ອງຢູ່ຜູ້ດຽວ

ໂອຍ ຊາຍເອີຍ ນີ້ລະນໍມະໂນອ້າຍ    ປຽບເໝືອນນົກກະຈອກນ້ອຍ    ທັງຄູ່ຜົວເມຍແລ້ວ

ພາກັນແປງນໍເຮືອນຮັງ    ຢູ່ປ່າແຂມແກ້ມອໍ້

ຊາຍເອີຍ    ທະເລາະກັນນໍແລງເຊົ້າ    ຜົວເມຍຫາລ້ຽງ

ທຸກແສນທຸກຊົ້ມວ່າເດ    ພາກັນດິ້ນນັກຕໍ່ສູ້    ຂານມ້ອນຮ່ອມຕາຍລະນໍ

ຊາຍເອີຍ    ບາດຊິເຫັນນໍຕອນຮ້າຍ    ◌່    ໄຟລາມປ່າຊິມາເຖິງ

ຜົວເລີຍບິນນໍໜີຮັງ    ບໍ່ຫວ່ງເມຍນັ້ນພໍນ້ອຍ

ຊາຍເອີຍ ເມຍເລີຍຕາຍນໍແຂນຫ້ອຍ    ຢູ່ໃນຮັງດອມລູກ

ອຸປະມານຄືດັ່ງອ້າຍ    ຄືດ້າມດັ່ງຊາຍນີ້ ແລ້ວ

ໂອຍ ຊາຍເອີຍ ເອົາລະນຳມາຮອດນີ້    ມະຫາໄຊຊິໂຄ້ງອວ່າຍ

ລາກ່ອນເດີ ຄຳເອີຍ ຂໍໂຈະກອນບາດທ້າຍ    ຊິລາອ້າຍອວ່າຍລົງ   ນີ້ແລ້ວ....ຂໍລາລົງແລ້ວ

ໂອ....ນາ.....ເອີຍ    ບ່າວຜູ້ຟັງເອີຍ.

**ແຜນວາດຂອງກອນລຳ**

ການລຳມີ 2 ປະເພດ

ລຳທົ່ວໄປ

ລຳທ້ອງຖິ່ນ

## 3.3. ກອນຮ່າຍ

ກອນຮ່າຍໃນກະວີລາວ ກໍຄືສຽງເປັ່ງກໍ່ຄືສຽງເປັ່ງອອກມາເປັນຈັງຫວະຍາວໆຄືລາກສຽງລິງໃຫ້ຍາວ ໃນກະວີລາວ ອາຈານມະຫາສີລາວິລະວົງໄດ້ໃຫ້ທັດສະນະວ່າ: ຮ່າຍອາດຈະໄດ້ແບບຈາກສຽງນົກເຄົ້າສັ່ນຄອນ ທີ່ ສຽງຊະນີຮ່າຍໄມ້ ຍາມເຊົ້າມືດ " ນັກກະວີບູຮານໄດ້ແຕ່ງບົດກະວີຫຼາຍຢ່າງຂຶ້ນມາເພື່ອອ່ານ, ເພື່ອຂັບ - ລໍາ ແລະ ເພື່ອສູດເທດ. ບົດກະວີ ທີ່ແຕ່ງ ຂຶ້ນມານັ້ນກໍໃຫ້ທໍານອງທີ່ແຕກຕ່າງກັນຫາຍທໍານອງຫຼາຍຈັງຫວະ ດັ່ງກອນອ່ານ ແລະ ຂັບ - ລໍາ ທີ່ກ່າວມາ ແລ້ວ. ສໍາລັບກອນຮ່າຍນີ້ ແມ່ນບົດກອນທີ່ນັກກະວີບູຮານໄດ້ແຕ່ງຂຶ້ນມາ ເທດ, ເພື່ອສູດ, ເນື້ອໃນຂອງກອນຮ່າຍມັກ ແມ່ນຄໍາມ່ວນ, ເສົ້າໂສກ ແລະ ສັງສອນເຈື່ອປົນກັນ.

ສຽງກອນຮ່າຍຕ່າງກັບກອນລໍາຫຼືກອນອ່ານອື່ນໆ, ເຮັດຄືສຽງຂອງທະນີເວລາຮ່າຍໄມ້ ຢູ່ຕາມປ່າດົງ, ບົດໜຶ່ງຊ້າ, ບົດໜຶ່ງໄວ, ບົດໜຶ່ງສຽງສັ້ນ, ບົດໜຶ່ງສຽງຍາວສະຫຼັບກັນໄປ, ເທດ, ການສູດ ກໍໃຊ້ທໍານອງທີ່ແຕກຕ່າງກັນເຊັ່ນ: ທໍາ ນອງເທດ ກໍມີທໍານອງກາເຕັ້ນກ້ອນ ນອງຈາກສຽງຍາວ, ຫຼົ້ນສຽງ ອັ່ນສຽງ. ກອນຮ່າຍໃນສູດຂວັນກໍມີທໍານອງສູດທໍາ ມະດາ ທໍານອງຈາກສຽງຍາວມີການປັ່ນສຽງເລັກຫນ້ອຍ.

ກອນຮ່າຍ ແມ່ນກອນສໍາຜັດນອກ ແລະ ສ່ວນຫຼາຍຈະຖືເອົາສໍາຜັດສະຫຼະເປັນຫຼັກ ການສໍາຜັດ, ກອນຮ່າຍນີ້ ຖ້າຖືເອົາຕາມທໍານອງຂອງກອນແລ້ວມີ2ແບບຄື: ແບບກາເຕັ້ນກ້ອນ ( ຮ່າຍສັ້ນ ) ແລະ ແບບກອນຮ່າຍຍາວ. ກອນ ຮ່າຍກາເຕັ້ນກ້ອນສຽງ.

**ກ. ແບບອະສິລະປັນຕິ**

ກອນຮ່າຍແບບອະສິລະປັນຕິ: ແມ່ນບໍ່ໃຊ້ຫຼັກຄໍາປະຈໍາບ່ອນ ໃຊ້ພຽງແຕ່ການສໍາຜັດນອກແບບຮຽງວັກ ບໍ່ມີ ການກໍານົດຈໍານວນບາດຄໍາໃນແຕ່ລະວັກ.

**ຕົວຢ່າງ:**

| | |
|---|---|
| ສັນຕິທົ່ວດິນແດນ | ສະຫງົບ |
| ຍ້ອນນັກຮົບລາວ | ເກັ່ງກ້າ |
| ໄດ້ນໍາໜ້າຕີ | ສັດຕູ |
| ຂັບໄລໝູ່ອະມິດຄິດ | ທໍາລາຍ |
| ປະຊາສຸກສະບາຍມີ | ສັນຕິພາບ |
| ເອກະລາດລາວຍິ່ງໃຫຍ | ໃນຕົວ |
| ການສູ້ຊົນ | ຮອບດ້ານ |
| ທົ່ວເຂດບ້ານ | ລາວເປັນເຈົ້າ |
| ລາວທຸກຊົນເຜົ່າ | ສາມັກຄີ |

ພວກເຮົາຈະສັງເກດເປັນວ່າບາງວັກການສຳຜັດອາດຈະຕົກ ທັງນີ້ກໍ່ເພື່ອຢາກໃຫ້ໄດ້ເນື້ອໃນໃຈຄວາມຕາມຈຸດປະສົງເປັນອັນວ່າບ່ອນນັ້ນຕົກຢູ່ໃນກໍລະນີ ອະນຸໂລມ ແລະ ບາງເທື່ອກໍອາດຈະໃຊ້ຄຳບຸບພະບົດ ແລະ ຄຳສ້ອຍເຂົ້າຕື່ມອີກກໍໄດ້.

**ຂ. ມະຫາວະສິລະປັນຕິ**

ລັກສະນະຂອງມັນ ແມ່ນຄ້າຍຄື ກັນ ກັບແບບວະຊິລະປັນຕິ ຕ່າງແຕ່ວ່າໃນວັກໜຶ່ງມີ 11 ບາດຄຳຄືຕອນໜ້າ5 ຕອນຫຼັງ 6,

ຕົວຢ່າງ:

| | |
|---|---|
| ພັກປີຊາສາມາດ | ທັງສະຫຼາດແລະສ່ອງໃສ |
| ນຳເອົາໄຊຍອດຍິ່ງ | ມາສູ່ບ້ານມີ່ງເມືອງຄົນ |
| ພາປວງຊົນເຕົ່າໄຕ | ກ້າວຂຶ້ນໃສ່ສັງຄົມນິຍົມ |
| ອັນເໝາະສົມເຮືອງຮຸ່ງ | ໃຫ້ກ້າວກຸ່ງທົ່ວແດນລາວ |

ກອນຮ່າຍນີ້ເພິ່ນຈະບໍ່ມີການກຳນົດບາດຄືກອນທົ່ວໄປແຕ່ງເພິ່ນຈະແຕ່ງໄປຈົນສຸດເລື່ອງຖືວ່າເປັນບົດໜຶ່ງ.

ກອນຮ່າຍນີ້ເພິ່ນໃຊ້ສຳລັບເທດ, ສູດຂວັນ, ກອນຮ່າຍທັງສອງແບບທີ່ເວົ້າມາຖືວ່າສາມາດໃຊ້ເຂົ້າໃນການສູດຂວັນ, ເທດໄດ້, ສຳລັບການສູດຂວັນ ແລະ ເທດມັນມີຄວາມແຕກຕ່າງກັນກໍຍ້ອນວ່າວິທີຫຼິ້ນສຽງ ຫຼື ທຳນອງສຽງຂອງມັນເທົ່ານັ້ນ.

**ກອນຮ່າຍ ສຳລັບສູດພອນປີໃໝ່**

| | |
|---|---|
| ສີສີ ມື້ນີ້ແມ່ນມື້ສັນ | ວັນດີ |
| ວັນດີຖືອະມຸດ . | ຕະໂຊກ |
| ໂຕກໜ່ວຍນີ້ແມ່ນໂຕກ | ໄມ້ຈັນ |
| ຂັນໜ່ວຍນີ້ແມ່ນຂັນ | ໄມ້ແກ້ວ |
| ຕົກແຕ່ງແລ້ວຈຶ່ງ | ຍໍມາ |
| ມາທຳລາບາສີວັນຂຶ້ນ | ປີໃໝ່ |
| ໃຫ້ພວກເຈົ້າເອົາໃຈໃສຄວາມ | ສາມັກຄີ |
| ອັນເປັນຫົນທາງດີໃນການ | ສ້າງຊາດ |
| ໃຫ້ພວກເຈົ້າສະຫຼາດເພີ່ມພູນ | ຜົນຜະລິດ |
| ເພື່ອໃຫ້ລາວທຸກຄົນມີກິນ | ມີຢູ່ |
| ພາກັນກ້າວເຂົ້າສູ່ເສັ້ນທາງ | ອັນດີ |

ເສັ້ນທາງມີ          ວິທະຍາສາດ

ເຮັດໃຫ້ຊາດເຮົາ          ສີວິໄລ

ອັນໜຶ່ງຄວາມຈັງໄຣໂລຄາ          ພະຍາດ

ຄວາມອຸບາດໃຫ້ຫ່າງ          ໄກໜີ

ໃຫ້ພວກເຮົາມີສຸຂີ          ລ້ຳເລີດ

ຢ່າໄດ້ເກີດພະຍາດ          ນາໆ

ທັງເຈັບຕາເຈັບຫົວ          ປວດທ້ອງ

ທັງພວກພ້ອງຍາດມິດ          ຫຼານເຫຼັນ

ຢ່າໄດ້ເຈັບໄດ້ເປັນ          ປ່ວຍໄຂ້

ໃຫ້ພວກເຈົ້າໄດ້ຢູ່          ສະຫວັດສະດີ

ຝູງໄພລີຢາໄດ້          ມາບຽດ

ຝຸງສະໜຽດໃຫ້ຫ່າງ          ໄກຕົນ

ໃຫ້ເປັນຄົນມີ          ສະຕິຊາດ

ສ້າງຊາດລາວໃຫ້ສະຫງາອົງອາດຂຶ້ນຊື່          ລືຊາ

ມີອະນຸພາວະ          ຍອດຍິ່ງ

ໃຫ້ສົມສິ່ງ          ປາຖະໜາ

ປວງປະຊາຍິນດີ          ຊົມຊື່ນ

ສ້າງເມືອງລາວໃຫ້ລືມປີເກົ່າ          ກາຍມາ

ພັກປະຊານຳພາ          ສອດຄ່ອງ

ໃຫ້ເຮົາເດີນຕາມປ່ອງເສັ້ນທາງ          ສົດໃສ

ໄປໄວໆຢ່າໄດ້          ຊັກຊາ

ຈົ່ງໄປຮອດບ່ອນ          ສັງຄົມນິຍົມ ທຸກຕົນທຸກຄົນເທີ້ນ..

**ຮ່າຍສູດຂວັນຄົນປ່ວຍ**

ສີໆ ສິດທິມະຫາ          ມິ່ງຄຸນ

ເຖົ້າແກ່ປຸນ          ແຕ່ງໃຫ້

ພໍ່ແມ່ໄດ້ແຕ່ງ          ຕາມຄອງ

ເພື່ອເປັນການຮັບຮອງ          ເອົາໂຊກ

ເພື່ອໃຫ້ຫາຍຈາດໂລກໄຂ້ປ່ວຍ          ເຈັບເປັນ

ເຈົ້າຫາກເຄີຍຝັນເຫັນຜີສາງ ຊ້າງຮ້າຍ

ເຈົ້າຫາກຝັນວ່າໄດ້ໄປທ່ຽວປ່າ ດົງດອນ

ເຈົ້າຫາກຝັນວ່ານອນນຳດິນ ນຳຫຍ້າ

ຂ້ອຍເຈົ້າຢ່າຊິຊ້າໃຫ້ຮີບ ມາຄືງ ມາເຢີ ຂວັນເອີຍ

ຂວັນເຈົ້າເຄີຍໄປກິນເຂົ້າ ກັບຜີ

ຂວັນເຈົ້າເຄີຍໄດ້ຫນີໄປທຽວ ຂ້າມນ້ຳ

ຂວັນເຈົ້າເຄີຍເຂົ້າຖ້ຳໄປຢູ່ ກັບງູ

ຂວັນເຈົ້າເຄີຍຂຶ້ນພູໄປເກັບ ໝາກໄມ້

ຂວັນເຈົ້າເຄີຍຮ້ອງໄຫ້ເຂົາໄລ່ ເຂົາພັນ

ເຈົ້າຫາກເຄີຍນອນຝັນເຫຼີໃຫຼ ຕື່ນເຕັ້ນ

ຮອດມື້ອື່ນເຈົ້າເມື່ອຍ ເຈັບເປັນ

ກໍໃຫ້ຫາຍເຄາະເຂັນເຈັບ ປ່ວຍຮ້າຍ

ຢ່າໄດ້ມາຢູ່ໃກ້ໃຫ້ເຊົາສວ່າງ ເຊົາສາ

ຄຸນພໍ່ທໍ່ພູຜາໃຫ້ມາບັງ ຂ້າງໜ້າ

ຄຸນແມ່ທໍ່ແຜ່ນຟ້າໃຫ້ມາ ຂ້າງຫຼັງ

ໃຫ້ເຈົ້າມີກຳລັງແຂງແຮງ ລຸກຂຶ້ນ

ໃຫ້ເຈົ້າໄດ້ມ່ວນຊື່ນລືມເຈັບ ລືມເປັນ

ຕື່ນຂຶ້ນແລ້ວໃຫ້ມ່ວນຊື່ນ ດີໃຈ

ໃຫ້ເຈົ້າຫາຍໄວໆເຊົາເຈັບ ດຽວນີ້

ຂວັນເຈົ້າໄປພຸ້ນພີ້ລືມບ່ອນ ທາງມາ

ກໍໃຫ້ຄືນມາຫາຢູ່ນຳ ຕົວເຈົ້າ

ມາກິນເຂົ້າກັບໄຂ່ແຕ່ງໄວ້ ໃນພາ

ມາກິນເຂົ້າກັບປາແຕ່ງໄວ້ ໃນຖ້ວຍ

ມາກິນກ້ວຍອ້ອຍແອບ ຂອງຂວັນ

ໃຫ້ເຈົ້າສຸກສຳລາຍເຊົາເຈັບ ປ່ວຍໄຂ້

**ກອນຮ່າຍຍາວສູ່ຂວັນ**

ໃຫ້ມາສຸກສະບາຍຢູ່ເຮືອນຫຼັງສູງ ຢູ່ໂຮງຫຼັງໃຫຍ່

ແອ້ມແປ້ນໃໝ່ ມຸງດິນ

ຊັບສິນໄຫຼເນືອງນອງ ຢ່າຂາດ

ເໝືອນດັ່ງນໍ້າທາດທາດໃນອະໂນມາ ມະທິ

ຢ່າໄດ້ບົກຈິກຢ່າໄດ້ລຶງ ມີງິ້ວໃຫ້ໄດ້ງິ້ວແມ່ລາຍ

ມີຄວາຍໃຫ້ໄດ້ຄວາຍ ເຂົາຢ້ອງ

ໃຫ້ໄດ້ຄ້ອງ ເກົ້າກ້າ

ໃຫ້ໄດ້ຄໍາ ເກົ້າໝື່ນ

ໃຫ້ໄດ້ເຂົ້າລ້ານລົ່ນ ມາເຍຍ

ໃຫ້ສາວຜູ້ຈົບຜູ້ງາມມານອນ ຜ່າງຂ້າງ

ໃຫ້ເຈົ້າໄດ້ລູກຈ້າງມາແຕ່ງພາແລງ ພາງາຍ

ໃຫ້ເຈົ້າໄດ້ລູກຊາຍ ຫົວປີເປັນຄົນດີງາມ ເຖິງຂະໜາດ

ໃຫ້ລູກຊາຍເຈົ້າໄດ້ບວດ ໃນພະສາສະໜາ

**ກອນຮ່າຍສໍາລັບເທດ**

ມັດທີ ດູລາມັດທີສີ ຊື່ນຊ້ອຍ

ນາງນາດນ້ອຍ ເພິ່ງແພງ

ໂສມສີແສງ ເຮືອງຮອດ

ດູຍອດມິ່ງ ເມືອງແມນ

ອັນວາບຸດຕີເປັນລູກສາວສີພະຍາ ມັດທະລາດ

ຍົດຍິ່ງອາດ ລືຊາ

ປາໂຕວະ ແຕ່ເຊົ້ານາງເຂົ້າປ່າ ສະແຫວງຫາ

ດວງມາລາແລະ ລູກໄມ້

ເອົາມາໄວ້ເຮັດ ຈັງຫັນ

ກໍມີທັງ ວັນນີ້ນາງຂ້ຽວຄືນເຂົ້າ ມາເຮືອນ

ດ້ວຍລັດສະໝີເດືອນດາວ ດູຍາກ

ດ້ວຍວ່ານາງເຫຼັ້ນຫຼາກ ຫຼາຍປະການ

ໃນປ່າຫິມະພານ ແຫຼ່ງຫຼ້າ

ຍ່ອມມີຄົນກ້າທິບ ພະຍາທອນ

ພະເນຈອນໃນ ປ່າໄມ້

ເຂົ້າໄປໃກ້ແລ້ວກ່າວ ມາຍາ

ທັ່ງສອງຫາມີ ກວັກກວາດ
ຍົກຄິ້ວຟາດ ເນື້ອງນັ້ນ
ແມ່ນວ່ານາງກະທຳສັນໃດພະກະບໍ່ ມີຮູ້
ແມ່ນວ່ານາງຫຼິ້ນຊູ້ໃຜກະບໍ່ ມີເຫັນ...

**ຄຳບະຄຳບົນ**

ສາທຸ, ສາທຸ,! ເອີ,,,ພວກຜູ້ຂ້າທັງຫຼາຍ
ຂໍຖວາຍໃຫ້ເຈົ້າອະວິງຂິງເຂດ
ເຈົ້າປະເທດດິນດອນ
ເຈົ້າດົງຜູ້ເປັນດອນ
ເຈົ້າກອນຜູ້ເປັນເຫຼົ່າ
ດອນສາມຈອກກໍມີຈອມ
ດິນສາມປອມກໍມີເຈົ້າ
ມາຍຶດຍາວຄາວນີ້
ພວກຜູ້ຂ້າ ບໍ່ໄດ້ປະຮິດໃຫ້ໝອງ
ບໍ່ໄດ້ປະຄອງໃຫ້ເສົ້າ
ຍັງໄກ່ເຖົ້າ ເຂົ້າແອບຂາວ
ມາມອບມາຖວາຍໃຫ້ເຈົ້ານ້ຳດິນແດນ
ຂໍໃຫ້ມາຮັບມາໂຈມເອົາກໍຂ້າທ້ອນ
ຕໍ່ວັນນີ້ວັນໜ້າ ພວກຜູ້ຂ້າທັງຫຼາຍ
ຂໍເພິ່ງເຈົ້າດິນດອນຕອນຫຍ້າ ເຈົ້າດິນແດນ
ຂໍໃຫ້ມາຮັບມາໂຈມເອົາກໍຂ້າທ້ອນ
ຕໍ່ວັນນີ້ວັນໜ້າພວກຜູ້ຂ້າທັງຫຼາຍ
ຂໍເພິ່ງເຈົ້າດິນດອນຕອນຫຍ້າ ເຈົ້ານຳດິນແດນ
ຂໍໃຫ້ມາປົກປັກຮັກສາ
ເຮັດໄຮ່ໃຫ້ໄດ້ເຂົ້າຮວງໜາ
ເຮັດນາໃຫ້ໄດ້ເຂົາຮວງມາກ
ໂຕໝູຢ່າໄດ້ມາແລ່ນ
ຕັກແຕນຢ່າໄດ້ມາກັດ

ຕົ້ນໃຫຍ່ໃຫ້ໄດ້ດັ່ງສຸມຣິກ  ຫົວນາ

ໃຫ້ງາມດັ່ງຫຍ້າຄາຕີນບ້ານ

ການອິດຢ່າໄດ້ມາພານ

ມານຮ້າຍຢ່າໄດ້ມາຕ້ອງ   ກໍຂ້າເທີ້ນ

**ການສູ່ຂວັນແຕ່ງງານ**

ບັດນີ້  ຂ້ອຍຈັກເຊີນ                    ເອົາຂວັນນາງຍອດຟ້າຢູ່ກົ້າຝ່າຍເໜືອ

ມາຊ່ອຍຄຸນຊ່ອຍຍູ້                    ຂວັນຫຼານເຈົ້າເຢີ

ຂ້ອຍຈັກເຊີນ ເອົາຂວັນ ນາງຄຳເຝືອຢູ່ກົ້າຝ່າຍໃຕ້

ມາຊ່ອຍຍໍຂວັນເຈົ້າເຢີ !

ວ່າມາເຢີ ຂວັນເອີຍ !

ຂວັນເຈົ້າໄປປູກພູເປັນຮາກ

ຂວັນເຈົ້າໄປປູກໝາກເປັນໃບປູກສີໄຄຂຽວອ່ອນ

ກໍໃຫ້ມາສາມື້ນີ້ວັນນີ້

ມານຳທາງຄືນທ່ອງ

ມານຳປ່ອງຄືນທຽວ

ມາກິນເຂົ້າຕົ້ມ ແລະ ຂອງຫວານ

ມາກິນນ້ຳຕານ ແລະ ນ້ຳອ້ອຍ

ໝໍ່ເຖົ້າເອີ້ນຈ້ອຍໆ ໃຫ້ຂວັນເຈົ້າຕ່າວມາ

ວ່າ ມາເຢີຂວັນເອີຍ !

ຂວັນໃນ ແລະ ຂວັນນອກ

ຂວັນສອກ ແລະ ຂວັນຄາງ

ຂວັນແອວບາງກົມກົ່ວ

ຂວັນທ້ອງນ້ອຍ ແລະ ຮາວນົມ

ຂວັນຜົມດຳດູອາດ

ຂວັນປາກມາຍາ

ຂວັນຕາ ແລະ ຂວັນຄິ້ວ

ຂວັນນິ້ວ ແລະ ຂວັນແຂນ

ຂວັນແຟນກາງໄຫຼ

ລະໄມແມ່ນຂວັນຫູ

ກໍໃຫ້ມາສາມື້ນີ້ວັນນີ້

ຄັນເຈົ້າກິນເຂົ້າຜີ ໃຫ້ເຈົ້າຈົກຄໍຄາຍ

ໃຫ້ເຈົ້າຄືນມາດາຍທ້ອງເປົ່າ

ໃຫ້ເຈົ້າມາສືບສ້າງດ່ອມແມ່ມານດາ

ທັງບິດາ ແລະ ເຊື້ອໂຄດ

ໃຫ້ສອງເຈົ້າຢູ່ສຸກສຳບາຍ ພໍ່ພ້ອມ

ໃຫ້ສອງອ່ອນນ້ອຍ ຕໍ່ເຊີຍຊົມ

ເຈົ້າເປັນເຂີຍໃຫ້ທຳໃຈກວ້າງ

ຢ່າກ່າວຕ້ານຄຳຮ້າຍສິ່ງໃດ

ເຈົ້າໄລ່ໄກ່ໃຫ້ເຈົ້າວ່າ ໂຊໆ

ເຈົ້າໄລ່ໝາໃຫ້ເຈົ້າວ່າ ເສະໆ

ເຈົ້າໄລ່ຄວາຍໃຫ້ເຈົ້າວ່າ ຮຸ່ຍໆ ຮື້ໆ

ເຈົ້າຢ່າດື້ ເຕະຕ່ອຍຕີເມຍ

ໃຫ້ເຈົ້າທັງສອງຕູ້ມຫໍ່ກັນເນີ

ຮັດກັນເຂົ້າເໝືອນດັ່ງເຊືອກເຮືອ

ເຝືອເຂົ້າກັນເໝືອນດັ່ງເຊື່ອກຝັ່ນ

ໃຫ້ສອງເຈົ້າເປັນຜົວແກ້ວເມຍທິບ

ຜົວຫຍິບເມຍແສ່ວ

ຜອງເຖົ້າຊົ່ວຊີວັງ

ໄດ້ລູກຍິງ ໃຫ້ເຈົ້າໄດ້ດັ່ງໝາຍ

ໄດ້ລູກຊາຍ ໃຫ້ເປັນຜູ້ປະເສີດ

ໂຊກຮ້າຍ ຢ່າມາພານ

ມານຮ້າຍ ຢ່າມາບຽດຕ້ອງ

ມາເຢີຂວັນເອີຍ !

ຂວັນຫົວ ໃຫ້ເຈົ້າມາຢູ່ຫົວນີ້ນໍ່າ

ເຖິງຍາມຄໍ່າ ໃຫ້ເຈົ້າເຂົ້າບ່ອນນອນ

ຕົວຮຽງໝອນ ຮັກຮໍ່

ໃຫ້ເຈົ້າຕັ້ງຕໍ່ສ້າງຕັ້ງແຕ່ຄວາມດີ ກໍຂ້າເທີ້ນ

ໄຊຍະຕຸພະວັງ ໄຊຍະມັງຄະລະ ໄຊຍະ ຫາມຸງຄຸນ

ຈັດຕາໂລ ທຳມາ ອະທັນຕຸ ອາຍຸວັນໂນ ສຸຂັງພະລັງ

**ຄຳພອນທົ່ວໄປ**

| | |
|---|---|
| ປາຖະໜາສິ່ງໃດ | ໃຫ້ເຈົ້າໄດ້ສິ່ງນັ້ນ |
| ສົມດັ່ງມະໂນນຶກ | ຄຶດອັນໃດຂໍໃຫ້ໄດ້ |
| ສົມດັ່ງກະໃຈໝາຍ | ດ້ວຍກຸສົນຜົນທານ |
| ໃຫ້ສິ່ງນຳສອນຍູ້ | ຂໍໃຫ້ຊູ້ຍົກຂຶ້ນ |
| ເທິງສະຫວັນ | ໄປຍິ່ງໆ |
| ຂໍໃຫ້ຍອງໆຂຶ້ນ | ເມືອງຟ້າສູ່ສະຫວັນ |
| ເກີດຊາດໃດ | ຕາຍໄປຊາດໃໝ່ |
| ຂໍໃຫ້ພົບໜ່ວຍແກ້ວ | ໃສເຫຼື້ອມຮຸ່ງເຮືອງ |
| ຢ່າໄດ້ເຄືອງໃຈແຄ້ນ | ແສນພະໄທຊົມຊື່ນ |
| ສິ່ງໃດເປັນໂທດຮ້າຍ | ໃຫ້ກາຍເວັ້ນຫ່າງໜີ |
| ສິ່ງໃດສັບພາໂຈມຂຶ້ນ | ໃຫ້ສົມໃຈນຶກວ່າ |
| ຂໍໃຫ້ມາເຂົ້າໃກ້ | ໃຈເຈົ້າໃຫ້ຢູ່ເຢັນ |
| ຂໍສະຫວັດດີດ້ວຍ | ພອນໄຊທີ່ຂ້າວ່າ |
| ອະນຸພາບແຫ່ງພຸດທາ | ທຳມາສັງຄານ |
| ໃຫ້ມາເຫຼື້ອມກຸ້ມ | ຄຸນເຈົ້າຜູ້ແຕ່ງທານ |
| ເທວະດາໃຫ້ມາເຫຼື້ອມກັ້ງ | ຮັກສາຕົນຕ້ານດ້ານ |
| ຢ່າໄດ້ພົບໝູ່ມານ | ຢ່າໄດ້ພານຜູ້ຮ້າຍ |
| ໃຫ້ກາຍເວັ້ນຫ່າງໜີ | ຄັນຢູ່ໃນໂລກນີ້ ປັດຈຸບັນ |
| ຢ່າໄດ້ຫວັ່ນທັນຕະກຳ | ຢ່າສູ່ມາຕ້ອງ |
| ເວນຮ້າຍຢ່າສຸຕາມ | ງາມກໍໃຫ້ງາມເຫຼືອລົ້ນ |
| ເກີນຄົນໃນໂລກ | ເຫຼື້ອມ ເຈີດຈ້າ |
| ກາຍເຈົ້າໃຫ້ແຈ່ມໃສ | ຄັນຢູ່ບ້ານ ຂໍຢ່າມີໄພ |
| ຄັນເດີນທາງໄກ | ຂໍໃຫ້ມີໂຊກ |
| ຖ້າຂຶ້ນໂຄກກວ້າງ | ໄພຮ້າຍຢ່າສຸມີ |

ບຸນທານນີ້          ມັນກໍສຳເລັດແລ້ວ
ປ່ອນເງິນລົງ ໃນບາດ          ອະທິຖານຢາດນ້ຳ
ລົງພື້ນແຜ່ນດິນ          ໃຫ້ແກ່ທໍລະນີແກ້ວ
ເທວະດາລູກຄະຊາດ          ຂໍໃຫ້ສົມຄວາມມາດມຸ້ງ ຄວາມຂ່າວອ່ວມາເຖິ້ນ
ຂໍໃຫ້ຄາດແມ້ງ          ຂອງເຈົ້າປາຖະໜາ
ດ້ວຍສັດທາແກ່ກ້າ          ໄດ້ມາທອດເທທານ
ໂມທະນາສາທຸການ          ແຕ່ງທານຄາວນີ້
ຂໍໃຫ້ພະຫຼາເຈົ້າ          ກຸສົນນຳຊັກຈ່ອງ
ໃຫ້ໄດ້ໄປເຖິງແຫ່ງຫ້ອງ          ວິມານກວ້າງແມ່ນໝາຍ
ຍາມເຈົ້າຍົກຍ່າງຍ້າຍ          ໄປຖິ່ນທາງໃດ
ຂໍໃຫ້ສົມພອນໄຊ          ກ່າວຄຳຖະແຫຼງຕ້ານ
ການກຸສົນຄາວນີ້          ໃຫ້ເປັນບຸນໜູນສົ່ງ
ສົມປະສົງມາດແມ້ງ          ມະໂນເຈົ້າຄູ່ສູ່
ອາຍຸນັ້ນ ຂໍໃຫ້ມີລື່ນລົ້ນ          ອັນທີ່ຢູ່ຍາວນານ
ຕະຫຼອດການອະສົງໄຂ          ສູ່ຄົນເດີເຈົ້າ
ຢ່າມີອັນໝອງເສົ້າ          ສະເຫວີຍບຸນຄຸນທ່ານ
ມີອາຍຸຍືນຍາວ          ຢ່າໄດ້ຫຼຸດຊົ່ວເທົ້າ
ຕະຜອງເຖົ້າແກ່ຊະລາ          ທັງຄຸນລຸງຄຸນປ້າ
ທັງນ້າສາວນ້າບ່າວ          ທັງຄຸນຕາຄຸນຍາຍ
ຄູ່ສູ່ຄົນມວນພ້ອມ          ອັດຕະມາ ຂໍໃຫ້ໂມທະນານ້ອງ
ສາທຸການຊ້ອຍຊື່ນ          ມີອາຍຸຍືນຍາວ
ຢ່າໄດ້ຫຼຸດຊົ່ວແມ້ງ          ເມືອໜ້າໃຫ້ຢູ່ດີ
ວັນນະ ຂໍໃຫ້ກາຍສີເຫຼື້ອມ.          ທຽບພະຈັນ ◌່
ມື້ສິບສີ່ລັດສະໝີຂວັ້ມຄົນ          ໃຫ້ຄົນຫຸ້ມແຫ່ແຫນ
ຂໍໃຫ້ກາຍຂອງເຈົ້າ          ງາມຄ່ອງເໝືອນທອງ
ຍາມຄົນມອງແລຫຼຽວ          ໃຫ້ຊື່ນພະໄທຕ້ອງ
ຍາມຄົນມອງເຫັນແລ້ວ          ແວວຕາງາມສະຫງ່າ
ເໝືອນຢາດມາແຕ່ຟ້າ          ກາຍຍາເຈົ້າໃຫ້ແຈ່ມໃສ
ຢ່າມີໄພໂລກຮ້າຍ          ກາຍຍາໃຫ້ລູບຫູ່

| | |
|---|---|
| ແຂນຂາຄໍລຽບກ້ວຍ | ສວຍໂກ້ເຄິ່ງອິນ |
| ທຸກລະຫວ່າງຕະຫຼອດສິ້ນ | ຊັດສ່ວນສະກົນກາຍ |
| ຂໍໃຫ້ຜິວພັນງາມ | ດັ່ງອິນຕາແຕ້ມ |
| ໃຜໄດ້ແນມດູແລ້ວ | ໃຫ້ໃຈຫຼົງຫຼ່ຳ |
| ໃຫ້ຄົນນຳຊ່ວຍຍ້◌ູ | ຊູເຈົ້າໃຫ້ແຈ່ມໃສ |
| ສຸຂະພາບນັ້ນ | ໃຫ້ມີແຕ່ຄວາມສຸກ |
| ທັງກາຍໃຈ | ຢ່າມີທຸກໃດມາຕ້ອງ |
| ໃຫ້ເຈົ້ານອນໃນຫ້ອງ | ເຮືອນຊານສະໜຸກນັ່ງ |
| ປະກອບດ້ວຍສຸກຂັງ | ຢ່າມີໄພ ໂລກຮ້າຍ |
| ໃຫ້ກາຍຂ້ອງໝິ່ນໝອງ | ຢ່າມີໄພໂລກຕ້ອງ |
| ໃຫ້ຢູ່ສະບາຍດີ | ຢ່າມີໄພອັນພານ |
| ໃຫ້ຊື່ນບານເລີງເລື້ອຍ | ສະເໝີກັນທັງສອງຝ່າຍ |
| ຝູງໝູ່ໄພພະຍາດຮ້າຍ | ຫາຍເວັ້ນຫ່າງໄກ |
| ປາຖະໜາໃດໄດ້ | ສົມໃຈຄູ່ສູ່ທານ |
| ສະໜຸກໃຕ້ລຸ່ມຟ້າ | ສັດທາເຈົ້າຢ່າໝິ່ນໝອງ |
| ພັດສະນັ້ນ | ກໍໃຫ້ກຳລັງ ເຄິ່ງປາຍສານ |
| ມີກຳລັງສະເໝໝີປານ | ດັ່ງກຸນສະໂລຊ້າງ |
| ປະສົງໄປເພມ້າງ | ໄປພັງທະລາຍມຸ່ນ |
| ດ້ວຍຜົນບຸນສິ່ງໃຫ້ | ພະລັງເຈົ້າໃຫ້ເບິ່ງສານ |
| ມີກຳລັງຕໍ່ຕ້ານ | ການແຕ່ງແຮງງານ |
| ປະຈຳການຍັງໄດ້ | ສົມໃຈແບກກິ່ນ |
| ກຳລັງຄົນໃນໂລກນີ້ | ບໍ່ມີໃກ້ໝູ່ໂຍມ |
| ຂໍໃຫ້ສົມພອນຖະແຫຼງໄວ້ | ກຳລັງມີຄືວ່າ |
| ກຳລັງຊັບກຳລັງປັນຍາ | ກຳລັງກາຍໝູ່ເຈົ້າ |
| ຂໍໃຫ້ແຂງກ້າກວ່າຄົນ | ຂໍໃຫ້ບຸນເລີດລົ້ນ |
| ກຸສົນສິ່ງເສີມປະສົງ | ເຈດຕະນາຈຳນົງ |
| ຢູ່ໃນຂົງເຂດຟ້າ | ຂໍໃຫ້ໄດ້ດັ່ງຫວັງ ດ້ວຍເຖີດ. |

# ບົດທີ 4

# ໂຄງ

## 1. ຄວາມໝາຍຂອງໂຄງ

ໂຄງ ແມ່ນກອນທີ່ມີຄວາມເວົ້າເປັນຄວາມຕໍ່ເນື່ອງກັນ, ບໍ່ມີຄໍາບຸບພະບົດ ຫຼື ຄໍາສ້ອຍໃສ, ເປັນຄື ໂຄງກະດູກ ຫຼື ໂຄງຮ່າງຂອງເຮືອນທີ່ຫາກໍ່ປຸກຂຶ້ນ, ເປັນຮູບການສັນທະກະວິຊະນິດໜຶ່ງ.

ຄົນບູຮານມັກໃຊ້ກອນໂຄງ ເພື່ອແຕ່ງ ໂສກຄ້ອງ, ໂສກກອງ, ໂສກປືນ, ໂສກເຮືອນ, ໂສກຄັນເບັດ ແລະ ອື່ນໆ ບາງເທື່ອເພິ່ນກໍໃຊ້ກອນໂຄງເພື່ອສະແດງຄວາມສະເໜ່ຮັກ.ທວາຍກັນລະຫວ່າງຜູ້ບ່າວຕໍ່ຜູ້ສາວອີກດ້ວຍ, ເພິ່ນແຕ່ງໂຄງຂຶ້ນດ້ວຍສໍານວນຄໍາເວົ້າທີ່ມ່ວນອອນຊອນ, ເກາະກ່າຍກັນ, ເນື່ອງກັນ, ຕາມວັກຕາມແຖວຢ່າງມີສີລະປະຄືກັນກັບກາບ ແລະ ກອນທີ່ກ່າວມາຂ້າງເທິງ. ຄໍາໂຄງເປັນຄໍາເວົ້າທີ່ຄົມຄາຍ, ເວົ້າໃຫ້ຄົນໄດ້ຄິດຮື່ນຕອງ, ເວົ້າໃຫ້ຄົນ ນຶກໃນຄວາມດີ ແລະ ຄວາມຊົ່ວ. ຄໍາໂຄງ ແມ່ນບົດກະວິຊະນິດໜຶ່ງ ທີ່ມີການສໍາຜັດເກາະກ່າຍ ຂອງຄໍາເວົ້າເປັນສໍານວນມ່ວນອອນຊອນ ໃຈ

ໂຄງກໍຄືສັນທະກະວີປະເພດອື່ນ ຕ້ອງການ ສໍາຜັດເກາະກ່າຍ ໂດຍສະເພາະ ສໍາຜັດນອກ ເພື່ອເກາະກ່າຍວັກນີ້ໃສ່ ວັກໜ້າ.

ຖ້າສັງເກດ້ານປະລິມານ ຄໍາ ໃນວັກ, ໂຄງມີປະລິມານຕໍາສຸດຄືມີພຽງສອງຄໍາກໍ່ເປັນໄດ້ ຊຶ່ງປະເພດສັນທະກະວີອື່ນບໍ່ມີ.

ສໍາຣອງລິງມາຈາກປະລິມານຄໍາ, ເຮົາເຫັນວ່າ: ໂຄງຍັງມີຈຸດພິເສດດ້ານຈັງຫວະອີກ, ຈັງຫວະໃນໂຄງມີລັກສະນະເຕັ້ນໂອນເອ່ນໄປມາ, ຍິ່ງຄໍາໜ້ອຍເທົ່າໃດຈັງຫວະເຕັ້ນຈຶກຈັ້ກຍິ່ງສູງ.

ພາກສ່ວນຂອງໂຄງ ໂຄງ ມີແຕ່ສອງພາກສ່ວນໃຫຍ່ ຄື ວັກ ແລະ ບົດ, ວັກໜຶ່ງອາດມີແຕ່ສອງຄໍາຂຶ້ນສ່ວນບົດບໍ່ກໍານົດວ່າມີຈັກວັກເຊິ່ງແລ້ວແຕ່ເນື້ອໃນຂອງມັນຮຽກຮ້ອງ.

## 2.ຊະນິດຂອງໂຄງ

ອີງຕາມປະລິມານບາດຄໍາໃນການປະດິດແຕ່ງໃນວັກ ອາດແບ່ງໂຄງອອກເປັນຫຼາຍຊະນິດຄື: ໂຄງ 2, 3, 4, 5, 6, 7,

### 2.1.ໂຄງ 2

ໂຄງທີ່ມີສອງບາດຄໍາ ເພິ່ນເອີ້ນວ່າ ໂຄງ ສອງ

**ຕົວຢ່າງ: ໂຄງໂສກຕົວເພິ່ງຂອງຊຽງໝ້ຽງ**

ຊິກງິກ (ຊ້າງ)

ທິກກວຽນ (ງົວ)

ຫຽນແອນ (ຄຸດ)

ແບນຕົວ (ແມວ)

ໂສພາບ (ລາຊະສີ)

ນາບຟານ (ເສືອ)

ຫານນໍ້າ ( ນາກ)

ຊ້າໂກນ (ໝູ)

**ໂຄງ 3**

ໂຄງທີ່ມີ ສາມບາດຄໍາເພິ່ນເອີ້ນວ່າ ໂຄງ ສາມ

**ຕົວຢ່າງ: ໂຄກໂສກກອງຫຼວງ**

ສີຊົມຊື່ນ

ຮື່ນເມືອງພົມ

ສົມຢູ່ສາງ

ມ້າງສັງໂຄ

ໂພທິສັດ

ວັດພະເຈົ້າ

ເຕົ້າໂຮມພົນ

**ໂຄງຄໍາທວາຍຂອງຊຽງໝ້ຽງ**

ຕຸ້ມກາງດົງ ( ປືນ )

ຊີງກາງຫ້ວຍ ( ກວາງ )

ສ້ອຍກາງລໍາ( ສາກຕໍາເຂົ້າ ຫຼື ສາກເຂົ້າເບື້ອທີ່ໃຊ້ສອງທາງ

ຊໍາກາງຂ່ວງ ( ຫມາ )

ລ່ວງກາງເຮືອນ ( ແມວ )

**ໂຄງ 4**

ໂຄງ 4ແມ່ນໂຄງທີ່ມີສີ່ບາດຄໍາ ໃນວັກໜຶ່ງໆ

**ຕົວຢ່າງ: ໂຄງໂສກຂ້ອງ**

ໄປເປົ່າ ມາແປນ

ກົກແຂນ ຈິນເຕື່ອຍ

ເມື່ອຍຖອກ ເມື່ອຍຜອງ

ຢ່າຄອງ ກິນເກັດ

ເກັບເຫັດ ເກັບຫອຍ

ກາງອຍ ປາຍຊານ

ມີດບ່ານ ຂຽງຫຍໍ້

**2.2 ໂຄງ 5**

ໂຄງຫ້າ ແມ່ນໂຄງທີ່ມີຫ້າຄຳໃນວັກໜຶ່ງໆ ໂຄງຫ້າ ອາດມີລັກສະນະພິເສດ ຖ້າທຽບ. ໂຄງ 2 - 3 - 4 ທີ່ກ່າວມາ , ເພາະມັນນຳໃຊ້ຫຼັກການເມືອງສຽງ ຫຼື ຄຳປະຈຳບອນເຂົ້າມາປະກອບແດ່ແລ້ວ ໂຄງ 5 ມີຢູ່ສອງຊະນິດຄື: ໂຄງ5ທຳມະດາ ແລະ ໂຄງ 5ທີ່ໄດ້ແບບມາຈາກ ກາບວິດຊຸມາລີ. ດັ່ງນັ້ນ ໃນເວລາສະເໜີ ໂຄງ 2 - 3 - 4,ພວກເຮົາບໍ່ໄດ້ແຕ້ມໂຄງຮ່າງ ຫຼື ຮ່າງຄຳປະຈຳບ່ອນ. ສຳລັບໂຄງ5ນີ້ ພວກເຮົາສະເໜີແຜນຮ່າງໃຫ້ເຫັນ:

**2.2.1ໂຄງ5ທຳມະດາ**

**ຕົວຢ່າງ1: ໂຄງໂສກນັບຫຼັກຂຶ້ນສຳລັບຫ້າງເອົານົກ**

ຫ້າງແຮ້ວຖືກ ຕົນສານ

ບໍ່ນານຂາດ ເປັນຊຸ້ນ

ຖືກຄັນຍຽບ ລົງດິນ

ນົກພາບິນ ສູ່ໄມ້

ໄດ້ສິມດັ່ງ ໃຈປອງ

ມີໃຈຫອງ ຢາກເຂົ້າ

ບໍ່ຕ້ອງເຝົ້າ ໜານເລີງ

**ຕົວຢ່າງ2: ໂສກໃຫ້ຮູ້ຄືນດີມີພີ່ນ້ອງ**

ຈາກບ້ານ ແດນໄກ

ຄືນໃດກໍ່ ໜ້າຕ່າງ

ຢາຫ່າງຈາກ ຄວາມດີ

ຈັກຄືນມີ ພີ່ນ້ອງ

ຜ່ານການສັງເກດໂຄງຫ້າທຳມະດາຂຂ້າງເທິ່ງນີ້ ພວກເຮົາພໍສະຫຼູບໄດ້ວ່າ:

ວັກທີ 1 ຈະລົງທ້າຍດ້ວຍສຽງດາງ ( o )

ວັກທີ່ 2 ຈະລົງທ້າຍດ້ວຍສຽງ ໂທ ( o້ )

ຄຳທີ 1 ຫຼື ທີ 2 ໃນວັກຕໍ່ໄປຈະລົງທ້າຍດ້ວຍສຽງ ໂທ ( o້ )

**2.2.2ໂຄງ 5 ວິດຊຸມາລີ**

ໂຄງ 5 ແບບ ວິດຊຸມາລີ ແມ່ນໂຄງທີ່ແຕກຕ່າງຈາກໂຄງປະເພດອື່ນ ເພາະວ່າ : ໂຄງ 5 ແບບວິດສຸມາລີນີ້ມີຈຸດພິເສດດັ່ງນີ້:

- ມີບາດ
- ນຳໃຊ້ຮູບການຄຳປະຈຳບ່ອນຕາມສຽງແຕ່ງກອນຫຼາຍກວ່າ, ພິເສດຄຳຂຶ້ນຕົ້ນຂອງວັກແມ່ນມີສຽງໂທ .

- ໃຊ້ການສຳຜັດລຽນ ແລະ ບາວັກໄປພ້ອມໆກັນ ແຕ່ສຳຜັດລຽນວັກທ້າຍແມ່ນບໍ່ບັງຄັບແຕ່ຖ້າແຕ່ງໄດ້ກໍ ຈະເຮັດໃຫ້ກາບ ມ່ວນດີ.

**ຕົວຢ່າງ:**

| | |
|---|---|
| ເພື່ອນມິດ | ຮ່ວມສຶກສາ |
| ຍິງຊາຍ | ທັງໃຫຍ່ນ້ອຍ |
| ເວົ້າຈາ | ມ່ວນລະຫ້ອຍ |
| ຕົນຂ້ອຍ | ກໍຄະນິງ |
| ຖ້ອຍຄຳ | ພໍ່າຫວຍໜັກ |
| ຈິງຈັງ | ສັດທ່ຽງແທ້ |
| ຮັກຮໍ່ | ໂຮມຮ່ວມເຕົ້າ |
| ຕິແຫຍ້ | ຝູງຜີມານ |

**ໂຄງ 6**

ໂຄງ 6 ແມ່ນໂຄງທີ່ມີ 6 ບາດຄໍສໃນວັກ ໜຶ່ງ , ຄຳປະຈຳບ່ອນຂອງໂຄງ ຫົກແມ່ນຄືກັນກັບໂຄງ 5 ທຳາມະດາ

**ຕົວຢ່າງ1 : ໂສກປູກພຶດພັນຕ່າງໆຕາມວ້ອນຂອງບູຮານ**

| | |
|---|---|
| ທິດເປັນຮາກ | ເຫົ້າງາຫົວດີ |
| ຈັນເຄືອຍາວ | ຮີບໍ່ມົ້ວ |
| ຄານມີພົ້ວ | ໝາກດົກໝາ |
| ພຸດມີມາ | ລາບໍ່ເສົ້າ |
| ພະຫົດໝາກ | ແຕ່ເຄົ້າເຖິງປາຍ |
| ສຸກເປືອກໜາ | ຫຼາຍສຸດຍິງ |
| ເສົາມີກ້ານ | ກິ່ງລຳງາມ. |

**ຕົວຢ່າງ2**: ໂສກອາໄສຕົນເອງ ດີ

| | |
|---|---|
| ເຮືອນໂຕນ້ອຍ | ຫາກບໍ່ເຊົ່າ |
| ເຮືອນເຂົາເສົາ | ຄຳກໍຍາກ |
| ເຂົ້າໂຕຢາກ | ແຈ່ວຍັງດີ |
| ເຂົ້າເຈົ້າມີ | ແກງກິນຝືດ. |

**ຕົວຢາງ3:ໂສກເພື່ອສຶກສາແນວຄິດຄຸນສົມບັດ**

| | |
|---|---|
| ທິດຮັກຊາດ | ແທ້ເຖິງຖອງ |

| | |
|---|---|
| ຈົນຄຶດຫາ | ຄອງກໍ່ສ້າງ |
| ຄານທັບແຜ່ | ມ້າງປະຕິການ |
| ພຸດກ້າອາດ | ຫານສຸດຍິງ |
| ພະຫັດລວມ | ມ້າກິ່ງງົວຄວາຍ |
| ສຸກຢ່າລຸກ | ສວາຍຫຼ້າຫມ |
| ເສົາເຂົ້າຮ່ວມ | ຢູສະຫະກອນ |

**2.3. ໂຄງ 7ສຸພາບ ( ໂຄງມະຫາສິນທຸມາລີ )**

ໂຄງ7ສຸພາບ ຫຼື ມະຫາສິນທຸມາລີ, ມີລັກສະນະດັ່ງນີ້:

- ໂຄງໜຶ່ງມີ 4ວັກ ລວມເປັນບາດໜຶ່ງ, ວັກ 1 , 2, 3 ມີວັກລະ 7ຄໍາ, ອາດ ຕື່ມຄໍາສ້ອຍ ໃສ່ວັກ1 ແລະ3 ) ສ່ວນວັກທີ 4ແມ່ນ 9ຄໍາ.
- ໂຄງຊະນິດນີ້ມີຫຼັກການເນື່ອງສຽງເອກ, ໂທ, ປະຈໍາບ່ອນ
- ໂຄງຊະນິດນີ້ ມີລັກສະນະສໍາຜັດນອກ ຄື: ຄໍາທີ 3ຂອງວັກທີ 1, ສໍາຜັດກັບ ຄໍາທີ່ 5ຂອງວັກທີ2 ແລະຄໍາທີ5ຂອງວັກທີ 3, ຄໍາທີ 7ຂອງວັກທີ 2ສໍາຜັດກັບຄໍາທີ5 ຂອງວັກທີ 4

ເມື່ອເອົາຄໍາມາຮຽງໃສ່ກັນຕາມໂຄງຮ່າງຂ້າງເທິງນີ້ ພວກເຮົາກໍຈະໄດ້ເນື້ອຄວາມດັ່ງນີ້:

**ຕົວຢ່າງ 1.**

| | | |
|---|---|---|
| ດອກໜຶ່ງ | ເປັນສໍ່າດ້າວ | ດາລາ |
| ດອກບໍ່ | ເປັນຈອມຜາ | ທັນງ່ອນ |
| ດອກສິງ | ໃດນັ້ນເຈົ້ານັ້ນ | ຮ່ອມຝ່າຍເວຫາ |
| ດອກໜຶ່ງ | ຫອມອ່ອນພຽງ | ໃນທວງ |
| ແດເດືອດ | ແດແດດດວງ | ເດືອດດັ້ງ |
| ດອກໜຶ່ງ | ຍອມເປັນດວງ | ສະມາດ |
| ໃຜອາດ | ລິງລອຍຮັ້ງ | ຈິງໄດ້ຊົມເຊີຍ |
| ດອກໜຶ່ງ | ເປັນຊາດເຊື້ອ | ໃນໜອງ |
| ທັດບໍ່ | ເປັນລວນກອງ | ກ່ຽວບ້ານ |
| ດອກໜຶ່ງ | ຄືວັນທອງ | ທັງແທ່ງ |
| ດອກງວງ | ມີໃນບ້ານ | ສິ່ງນັ້ນ ລືໃດໆໆ. |

**ຕົວຢ່າງ 2:**

| | |
|---|---|
| ວັນຄູສິເລີດລໍ້າ | ເຈັດຕຸລາ |
| ຄູແມ່ນຜູ້ມີປັນຍາ | ຮອບຮູ້ |

| | |
|---|---|
| ແຫ່ງຄູຜູ້ມີວິຊາ | ສູງຍິ່ງ |
| ຊາດວິລະຊົນກອນກູ້ | ຊ່ວຍໃຫ້ຄູສອນ. |

# **ບົດທີ 5**

# **ສານ**

## **1.ຄວາມໝາຍຂອງສານ**

ຄຳວ່າ ສານ ແມ່ນຄຳສັບທີ່ມາຈາກພາສາປາລີ - ສັນສະກິດ ຄື : ສາຣະແປ່ວ່ ໜັງສື ຫຼື ຈົດໝາຍ.

ສານ ແມ່ນຂໍ້ຄວາມທີ່ຜູ້ໜຶ່ງສົ່ງຫາອີກຜູ້ໜຶ່ງ, ເວົ້າງ່າຍໆ ສານ ກໍແມ່ນຈົດໝາຍ ໃຊ້ຂຽນຫາກັນໃນຊຸມື້ນີ້ແຫຼະ, ແຕ່ວ່າ ສານທີ່ເພິ່ນຂຽນຫາກັນໃນສະໄໝກ່ອນມັກຂຽນໃນຮູບແບບກະວີ, ໃຊ້ເພື່ອສົ່ງຂ່າວຫາກັນ ຫຼື ຂຽນຕໍ່ແຍກັນລະຫວ່າງບ່າວ : ສາວ.. ຍ້ອນ ເພິ່ນຈຶ່ງຈັດສານເຂົ້າເປັນໜຶ່ງໃນປະເພດກະວີ.

ເວົ້າລວມແລ້ວສານ ແມ່ນຈົດໝາຍປະເພດໜຶ່ງ ຊຶ່ງແຕ່ງຂຶ້ນດ້ວຍຄຳຮ້ອຍກອງ ແລະ ຄຳຮ້ອຍແກ້ວແມ່ນກາບກອນປະເພດໜຶ່ງ ທີ່ມີລັກສະນະສຳຜັດ, ເນື່ອງສຽງກັນ ເໝືອນກອນອ່ານ

. ສານໃນສະໄໝກ່ອນ ເພິ່ນໃຊ້ສັດເປັນພະຫະນະ ໃນການສົ່ງສານເຊັ່ນ: ມ້າ, ນົກ, ສະນັ້ນ ເພິ່ນຈຶ່ງນິຍົມໃຊ້ຊື່ຕາມສັດທີ່ເປັນພາຫະ ນຳສານໄປສົ່ງເຊັ່ນ: ສານມ້າມະນີກາບ, ສານຫົງ, ສານນົກກາງແກ, ສານນົກສາລິກາ, ສານນົກແກ້ວ, ສານໄກ່ນ້ອຍ ແລະ ອື່ນໆ..

## **2.ປະເພດຂອງສານ**

ສານມີຫຼາຍປະເພດ ເຊິ່ງແບ່ງອອກຕາມການນຳໃຊ້ຄື:



## 3. ວິທີແຕ່ງສານ

ການແຕ່ງສານນັ້ນ ເພິ່ນຈະຂຽນຕໍ່ເນື່ອງກັນຕັ້ງແຕ່ຕົ້ນຈົນໝົດບົດ, ອາດໃຊ້ຄຳກາບ, ຜະຫຍາຍ, ໂຄງປະສົມເຂົ້າກັນ ແລ້ວແຕ່ເຫັນວ່າເໝາະສົມ , ບາງສານກໍ່ແມ່ນພຽງແຕ່ແຕ່ງໄປຄືກັນກັບໃຊ້ຄຳຮ້ອຍແກ້ວທຳມະດາ.

## 4. ຕົວຢ່າງສານ

### ສານອວຍພອນ

ຜູ້ນຳເຮົາສົ່ງສານອວຍພອນຜູ້ນຳກຳປູເຈຍໃນໂອກາດວັນສ້າງຕັ້ງສາຍພົວພັນການທູດຄົບຮອບ55ປີ ”

ຫວ່າງບໍ່ດົນມານີ້ ພະນະທ່ານ ນາງປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດ ໄດ້ສົ່ງສານອວຍພອນເຖິງສົມເດັດ ອັກຄະມະຫາໂປເຍຍຈັກກຣີເຮັງຊຳຣິນ, ປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ ທີ່ນະຄອນຫຼວງ ພະນົມເປັນ ສານມີເນື້ອຄວາມວ່າ:

ສົມເດັດອັກຄະມະຫາ ໂປເຍຍ ຈັກກຣີ ເຮັງຊຳຣິນ

ຂ້າພະເຈົ້າ ຂໍສົ່ງຄຳຊົມເຊີຍອັນຈິງໃຈ ແລະ ພອນໄຊອັນປະເສີດມາຍັງສົມເດັດ ພ້ອມດ້ວຍຄອບຄົວ ແລະ ປະຊາຊົນແຫ່ງ ຣາຊະອານາຈັກກຳປູເຈຍ ເນື່ອງໃນໂອກາດລະນຶກເຖິງວັນ ສ້າງຕັ້ງສາຍພົວພັນການທູດ 15ມິຖຸນາ 1956 – 15ມິຖຸນາ 2011ລະຫວ່າງ ສ.ປ.ປ ລາວ ຂໍ້ລະ ຣາຊະອານາຈັກກຳປູເຈຍ ຄົບຮອບ 55ປີ, ໃນນາມສະພາແຫ່ງຊາດ ແຫ່ງ ສ.ປ.ປ ລາວ ແລະ ໃນນາມສ່ວນຕົວພວກເຮົາ, ການພົວພັນທາງການທູດຂອງພວກເຮົາ ຍາມໃດກໍດຳເນີນມາຍາມ ຄວາມຈິງ ແລະ ຖະນຸຖະໜອມເລື້ອຍໆ ປະຊາຊົນພວກເຮົາໄດ້ສະໜັບສະໜູນຊຶ່ງກັນ ແລະ ກັນ ຍາມທຸກ ແລະ ຍາມ ສຸກມາຕະຫຼອດ. ຂ້າພະເຈົ້າ ມີຄວາມເຊື່ອໝັ້ນວ່າ ຈາກປະສົບການອັນໃຫ່ຍຫຼວງໃນວຽກງານການເມືອງ ແລະ ຄວາມ ສາມາດໃນການນຳພາຂອງສົມເດັດ, ສາຍພົວພັນມິດຕະພາບຖານອ້າຍນ້ອງ ແລະ ການຮ່ວມມືທີ່ດີ ລະຫວ່າງສອງ ປະເທດພວກເຮົາເວົ້າ. ເວົ້າສະເພາະ ກໍຄືສອງອົງການນິຕິບັນຍັດຂອງພວກເຮົາ ຈະໄດ້ຮັບການເສີມຂະຫຍາຍຂຶ້ນ ເລື້ອຍໆ ເພື່ອຜົນປະ ໂຫຍດຂອງປະຊາຊົນສອງຊາດຂອງພວກເຮົາ.

ໃນໂອກາດອັນສະຫງ່າລາສີນີ້, ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍອວຍພອນ ໃຫ້ສົມເດັດ ແລະ ປະຊາຊົນແຫ່ງ ຣາຊະ ອານາຈັກກຳປູເຈຍ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນສູງສົ່ງຂອງຕົນ.

ໃນໂອກາດດຽວກັນພະນະທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີແຫ່ງ ສປປລາວ ກໍໄດ້ສົ່ງສານອວຍພອນ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກກຳປູເຈຍ ທີ່ນະຄອນຫຼວງ ພະນົມເປັນ ເນື້ອໃນຂອງສານຂຽນວ່າ: ໃນນາມ ລັດຖະບານ ແລະ ປະຊາຊົນ ແຫ່ງ ສ.ປ.ປ ລາວ ກໍຄືໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳ ຊົມເຊີຍອັນອົບອຸ່ນ ພ້ອມດ້ວຍພອນໄຊອັນປະເສີດມາຍັງສົມເດັດ ແລະ ຜ່ານສົມເດັດໄປຍັງ ລັດຖະບານ ແລະ ປະຊາຊົນກຳປູເຈຍ ອ້າຍນ້ອງທຸກຖ້ວນໜ້າ ເນື່ອງໃນໂອກາດ ລະນຶກເຖິງ ວັນສ້າງຕັ້ງສາຍພົວພັນການ ທູດ ຄົບຮອບ55ປີ ລະຫວ່າງ ສ.ປ.ປ ລາວ ແລະ ຣາຊະ ອານາຈັກກຳປູເຈຍ,

ຂ້າພະເຈົ້າມີຄວາມປິ້ມປິຕິຍິນດີເປັນຢ່າງຍິ່ງທີ່ເຫັນວ່າຕະຫຼອດ55ປີ ທີ່ຜ່ານມາສາຍພົວພັນມິດຕະພາບ ແລະ ການ ຮ່ວມມືອັນໃກ້ຊິດຖານບ້ານໃກ້ເຮືອນຄຽງທີ່ດີ ແລະ ໄວ້ເນື້ອເຊື່ອໃຈກັນ ລະຫວ່າງສອງປະເທດພວກເຮົາ ໄດ້ຮັບການ

ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ບົນຈິດໃຈການປຶກສາຫາລື ລະຫວ່າງພວກເຮົາທັງສອງກໍຄື ການຢ້ຽມຢາມ ຣາຊະອານາຈັກ ກຳປູເຈຍ ຢ່າງເປັນທາງການຂອງຂ້າພະເຈົ້າ ແລະ ຄະນະ ເມື່ອວັນທີ 7 - 8ມີນາ 2011 ແລະ ດ້ວຍການຮ່ວມມືກັນຢ່າງໃກ້ຊິດຂອງສອງຝ່າຍ, .ສາຍພົວພັນອັນເປັນມູນເຊື້ອທີ່ດີງາມດັ່ງກ່າວຈະໄດ້ຮັບການສືບຕໍ່ເພີ່ມທະວີຍິ່ງໆຂຶ້ນເພື່ອຜົນໂຫຍດຮ່ວມກັນຂອງປະຊາຊົນສອງຊາດພວກເຮົາກໍຄືເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ໃນບັນຍາກາດ ແຫ່ງຄວາມເບີກບານມ່ວນຊື່ນ ຕໍ່ເຫດການທີ່ມີຄວາມໝາຍ ທາງດ້ານປະຫວັດສາດນີ້, ຂ້າພະເຈົ້າຂໍອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນແໜ້ນ ແຟ້ນ ລະຫວ່າງສອງປະເທດພວກເຮົາ ຈົ່ງໝັ້ນຄົງຄະະໜົງແກ່ນ ແລະ ແຕກດອກອອກຜົນຕະ ຫຼອດໄປ ແລະ ຂໍອວຍພອນໃຫ້ສົມເດັດຈົ່ງມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບ ຜົນສຳເລັດໃນໜ້າທີ່ອັນມີກຽດສູງສົ່ງຂອງຕົນ.

ພະນະທ່ານ ດຣ ທອງລຸນ ສີສຸລິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງ ການຕ່າງປະເທດ ກໍໄດ້ສົ່ງສານອວຍພອນເຖິງ ພະນະທ່ານ ນໍາຮົງ, ຮອງນາຍົກ ລັດຖະ ມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ຮ່ວມມືສາກົນ ແຫ່ງ ຣາຊະອານາ ຈັກກຳປູເຈຍ ທີ່ນະຄອນຫຼວງພະນົມເປັນເຊັ່ນດຽວກັນ.

**ຕົວຢ່າງ: ສານຂອງຊາຍສະບັບແຮກຮັກ( ສານ ກາງແກ )**

ຂຽນທີ່ອຸກອັ່ງແຄ້ນ

ວັນທີ່ອີ່ມ ເດືອນຄົມ

ພ.ສ. ແສນລະທົມ ແທບສະຫຼາຍ ຫຼາຍຄັ້ງ

ຂຽນທີ ເຄຫາຫອງເຮືອນແພງຟາກໄມ້ໄຜ່ ໃຈກະສັນໜອມນ້ອງນາງຫຼ້າຜູ້ຢູ່ໄກ ເປັນຈັ່ງໃດນໍແກ້ວສາຍສະ ໜອນນ້ອງພີ່ ມີຄວາມສຸກຢູ່ລ້ອນສະບາຍບ້າງຢູ່ລື ຄືວ່າ ຕົນຕົວອ້າຍຊາຍພອຍບໍ່ມີຄູ່ ຢູ່ໄປແຕ່ລະມື້ຄິດເຖິງນ້ອງຜູ້ດຽວດັ່ງນັ້ນ, ພີ່ຈິ່ງອົດບໍ່ໄດ້ກອຍກ່າວກອນສານ ລະບາຍຄວາມໃນໃຈສູ່ອະນົງນາງຫຼ້າ ຫາພວງມາໄລຍອດສະຫງ່າ.

ຄາວນີ້ໂອກາດກຸ້ມສຸມໄໝໜົນກອງ ມັນສະໝອງຂອງອ້າຍທົ່ວຮົນທົ່ນສະຫວາດ ຫາໂອກາດກາວກ້ຽວ ນາງນ້ອງກໍບໍ່ມີ ຕາມແຕ່ປົກກະຕິອ້າຍ ນອນເອົາມືກາຍໜ້າຜາກ ມີແຕທຸກຍາກຍ້ອນ ຮົນຮ້ອນຫຼວງພະນາງ ຫາຫົນທາງຄຸ້ຍນ້ອງແສນມອງຫາແຕ່ສອງ ທຽວເຂົ້າໄປບ້ານນ້ອງຄອງຊິໄຂຕໍ່ເຈົ້າຄວາມເສົ້າພັດແລ່ນດັນ ມີແຕ່ຄວາມຕັນຕື້ນເຕັມຊວງແໜ້ນອັ່ງ ຄາວນ້ອງ ນັ່ງຕໍ່ໜ້າ ບໍ່ຫານກ້າກ່າວຈາ ຕາມພາສາຂອງອ້າຍເປັນຄົນອາຍຢ້ານຂາຍ ໂງ ໂສສຸດວ່າ ຊິເວົ້າ ຫຼາຍຄັ້ງໄດ້ແຕ່ວຽນ ຂຶ້ນເທິງເຮືອນຫາ ນ້ອງກໍກກອງບໍ່ກ້າກ່າວ ອຳນາດຫຍັງໜ່ວງນ້າວເຕັມ ຕັ່ງອັ່ງສະໝອງ ວ່າຊິຄຸຍກັບນ້ອງຄັນຄໍຫອຍບໍ່ຫານປາກ ຍາກເອົາເຫຼືອວ່າລີ້ນວົນເວົ້າວ່າ ຊິໄຂ ຍາມເມື່ອໄປເຖິງໃກ້ເຫັນພະນາງແໜ້ນອັ່ງ ລາງເທື່ອວ່າຊິເວົ້າໄຂຂໍ້ຕໍ່ພະນາງ ຫາຫົນທາງບໍ່ພໍ ໄດ້ຄວາມລະອາຍແລ່ນມາຜ່າ ທັງລັບຫຼັງຕໍ່ໜ້າເຊີງຊູ້ພີ່ບໍ່ໄຂ ຫາເວລາບໍ່ພໍ ໄດ້ຈົນໃຈອົກຈັກແຕກ ຕັ້ງແຕ່ແຮກຮັກນ້ອງໜອງໄໝ້ ເມື່ອຍມະໂນ ຈົນກວ່າໂຕສຸດມ້ອນໝາຍຊິຈາອ້າປາກ ໝາຍຊິຝາກຮັກນ້ອງປອງເວົ້າຕັ້ງແຕ່ນານ ແຕ່ບໍ່ຫານຫາເວົ້າເຖິງສາວຊູ້ ມິ່ງ ຕາມຄວາມຈິງພີ່ພື້ທະວີໜ້າໜໍ່າຕະພື ທັງໜັງສືສານໃຊ້ທັງຈິດ

ໝາຍນັບບໍ່ຄູ່ ຂຽນແລ້ວດູອັ່ງແໜ້ນແທນນ້ອງຍອງໃສໄຟ ອຸກໃຈຈົນໄຫ້ຂຽນຈົດໝາຍບໍ່ກ້າສົ່ງ ສົງໄສໃຈໜອມນ້ອງລອງແຕ້ມແຕ່ງແຕ່ສານ ຂຽນແລ້ວຜ່ານເຜົາຖິ້ມໝົດສະໜົມແຕ່ທາງ ໂງ່ ໝົດກະດາດຫຼາຍໂຫຼ ແຕ່ພີ່ຂຽນຂີດໄວ້ໝາຍຊິໃຊ້ສົ່ງພະນາງ ບໍ່ກ້າວາງສານໃຊ້ເຖິງພະນາງຮ້າງເປົ່າ ມີແຕ່ເຮົາສູ່ສິ້ນສຸ້ມສ່ຽງສຽງແ◌ຕກໍາ ຄຳແມນຈຳຄຳເວົ້າເຜົາໄຟ

ໄໝ້ກະດາດ ໂລກະທາດຜີ້ງຟ້າໜ້າແໜ້ນແມ່ນແຕ່ສານ ຂຽນແລ້ວຜານເຜົາ ຖິ້ມສຸມໄຟເຫຼືອແຕ່ຝຸ່ນ ບຸນສົມພານພີ່ນ້ອຍຄອຍນ້ອງສ່ອງແຕ່ທາງ ຄອຍພະນາງພໍເຫັນໜ້າຮ່ວມລົງມາພໍແຕ່ຊີ້ ຖືເອົານາມໜອມນ້ອງສະຫຼັກໄວ້ໃສ່ສະໝອງ ຈາລຶກ

ຮອງລົງໄວ້ໃນຫົວໃຈ ຈໍາຈື່ ຂຽນຈິດຈາລຶກໄວ້ໃນຂວັ້ນສອນສະໝອງ ຄິດຮໍ່າຮອນຫານ້ອງພາວະນານອນນັ່ງ ຂວັນຫົວ ຮຽມບໍ່ຄ້າງຄາເນື້ອເຫຼືອ ໄຫຼ ມັນໂລດເຕັມທີອ້າຍຄວາມລະກໍາອຸກອັ່ງ ທັງລັບຫຼັງຕໍ່ໜ້າ ບໍ່ຈາເວົ້າເງື່ອນງໍາ ຄໍາລະຫັດ ບໍ່ທ່ອນເວົ້າປິດງໍາ ເງົາເງື່ອນ

ເໝືອນດັ່ງເປັນປ່ວງບ້າ ນໍ້າຕາອ້າຍຫຼັ່ງໄຫຼ ຫົວໃຈອິນວຽນກ້ຽວນໍານາງບໍ່ເວັ້ນວ່າງ ຮ່າງກາຍພີ່ຢູ່ພຸ້ນຫົວໃຈໝູນຢູ່ ພີ້ວຽນຂ້າງໜ່ອມພະນາງ ມີແຕ່ຄາງຄວນໄຫ້ໃຫຼລະເມີເພີຈົ່ມ ນອນບັນທຶມຄິດຮອດນ້ອງນອນຄອງຄິດຮອດເຈົ້າແລງເຊົ້າ ຫງ່ວມເຫງົາ ຈິດໜຶ່ງວ່າ ຢາກເວົ້າ ໃຈໜຶ່ງພັດເກງຂາມ ກົວແຕສິນງາມງອນແງ່ມີຫຼາຍລີ້ນ ຢ້ານແຕ່ສິມຖະຫວິນນ້ອງມີເງົາ ແງ້ນເງື່ອນ ຢ້ານນ້ອງຊຸດເຊື່ອງສິ້ນເງົາແງ້ນເງືອນບໍ່ໄຂ ຢ້ານນ້ອງປົກປິດໄວ້ບໍ່ໄຂ

ຄວາມຄໍາຊື້ ຄືຊິມີຮັກຊ້ອນຕອນນີ້ພີ່ຊີງົງ ຈຶ່ງໄດ້ທົນທານໄວ້ອິດຫົວໃຈບໍ່ກ້າກ່າວ ຄາວນີ້ຂໍໂທດໄວ້ອະໄພໃຫ້ພີ່ ຊິໄຂຂໍອະໄພເດີຫຼ້າພວກມາໄລແກ້ວແກ່ນ ພີ່ແຮງອຸກອັ່ງແຄ້ນແສນເສົາຢາກສົ່ງສານ ຄັນແມ່ນນາງຄານນ້ອງມີສອງໃຫ້ ສີກທ່ອງຍ່ອງໃສ່ໄຟຢ່າໄວ້ສຸມໄໝ້ມຸ່ນທຸລີ ຝຸ່ນຢ່າມີເຫຼືອໄວ້ໄຟເຜົາ ຢາໄດ້ຈິ່ງ ຢ່າຫຼົງເຫຼືອເສດຊີ້ນສຸມສ້ຽງສ່ຽງໃສ ໄຟພີ່ ເນີ ຄັນນ້ອງພໍໃຈອ້າຍຈິດໝາຍ ຊາຍຢ່າມ້ຽນມົ່ ຍໍໃສຫົວຮີບຟ້າວເອົາ ຊົ້ນເຊື່ອງໃສໝອນ ໃຕ້ທີ່ ນອນຂອງນ້ອງ ຮອງ ໝອນບ່ອນນ້ອງຢູ່ ຢ່າໃຫ້ຄົນອື່ນຮູ້ຢ່າໃຫ້ຊູ້ນ້ອງພົ້ສານອ້າຍແຮ່ງລະອາຍ ຄັນນ້ອງພໍໃຈອ້າຍເຕັມໃຈບໍ່ຕິພິ ຍິນດີຮັບຮັກ ໄວ້ພໍ ໃຈກັບພີພີ້ ພະນາງນ້ອງໃຫ້ເຊື່ອງສານ ໃຫ້ນ້ອງຊຸກເຊື່ອງໄວ້ໃນທີ່ບັງຄັບ ຢ່າໃຫ້ຄົນຫວນເຫັນເງື່ອນ ເງົາປາຍສິ້ນ ຢ່າໃຫ້ຄົນເຫັນຮູ້ດູສານຂອງພີ່ ຄັນຍິນດີຕໍ່ອ້າຍຈິດໝາຍນ້ອງສົ່ງສະໝອງພີ່ເນີ້ ຄັນບໍ່ມີເຄື່ອຂ້ອງຊອງຈິດໝາຍນ້ອງໃຫ້ສົ່ງ ລົງສະຫຼັກຄັກຂໍ້ຂຽນແຕ້ມຕອບສານ ຢ່າໄດ້ເນີນນານຊ້າ ເສຍເວລາທາງພີ້ ວິນາທີແຮກເລີ່ມຈິດໝາຍນີ້ພີ່ສົ່ງມາ ມີແຕ່ ຄອຍເຫັນໜ້າສານຕາຍອດສະ ຫງ່າ ຄອຍຖ້າຟັງຂ່າວເຈົ້າແລງເຊົ້າ ສອງຖະໜົນ ຄັນເຫັນຄົນທາງນ້ອງຊິຄອງມອງຖ້າ ຊາບຂ່າວ ຄ່ານີ້ວ ອຸກອັ່ງຮ້າຍ ໂສສ້ຽງສ່ຽງຊີວັງ ຄັນນ້ອງຊີຊັງອ້າຍທາງ ຈິດໝາຍບໍ່ຕ້ອງສົ່ງ ຄັນສົ່ງສາ ນຈຶ່ງຄ່ອຍເວົ້າຄັນຊີ ເອົາຈຶ່ງຄ່ອຍວ່າ ມີສັນຍາຜູກພ້ອມ ໃຜຕົ້ມໃຫ້ຫຼົ່ມຫຼວງ ຢ່າໄດ້ລົມລວງຫຼີ້ນ : ຫຼາຍລາຍເລ່ລ່ຽມ ຕຽມແຕ່ຫາທ່າຕົ້ມງົມ ແຕ່ຫາ ທ່າຄົ້ນຂະຫຍັນຍີ້ພີ່ຊິຕາຍ ໂອກາດມັກຮັກຮ້າຍ ຈຶ່ງຫານຂີດຂຽນສານ ເຫຼືອທີ ທົນທານອິດຍາກກະໃຈ ຈົນຮ້າຍ ຂຽນຈິດໝາຍເທົ່ງໄຫ້ ໃຜນໍຊີສິມເພດ ຄາວນີ້ເກີດເຫດຮ້ອນ ໃຫ້ນາງນ້ອງ ຜ່ອນຜັນແດທ້ອນ.

ອະວະສານສຸດສິ້ນໄຂກ່າວກອນສານ ຂໍ ໃຫ້ອະນິງນາງຮ່ວມເຫັນໃຈອ້າຍ ຕາມຈິດໃຈຊາຍນີ້ຫວັງດີຢູ່ ທຸກເມື່ອຍຫວັງເພື່ອຄວາມກ້າວຫນ້າຮຽງນ້ອງຮ່ວມສອງແທ້ນາ.

## ສານສາວຄູ

| | |
|---|---|
| ສານນີ້ຂຽນຈາກນ້ອງ | ນ້ອຍນາດນາງຄູ |
| ຢູ່ແຖບແດນດອຍພູ | ຜູ້ຢູ່ຄອງຄອຍຄ້າງ |
| ຫຼາຍປີນາງຄອຍອ້າຍ | ຊາຍຄູເຂົ້າຮ່ວມ |
| ຂະບວນລວມລຶບລ້າງ | ຄວາມບໍ່ຮູ້ໜັງສື |
| ແຕ່ວ່າຄືຊ້ອຍມ້ອຍ | ປານປ່ອຍອ່ຽນລົງຕົມ |
| ນ້ອງນີ້ແສນລະທົມທຸກ | ຮໍ່າຄະນຶງເຖິງອ້າຍ |
| ຈຶ່ງໄດ້ບາຍເອົາເຈ້ຍ | ຂຽນສານສອດສົ່ງ |
| ໂດຍປະສົ່ງບອກແຈ້ງ | ໃຈນ້ອງຕໍ່ຊາຍ |

ນ້ອງນີ້ຍາກໃຫ້ອ້າຍ — ເຂົ້າຮ່ວມກັບນາງ
ສ້າງແດນດອຍນາດ່ຽວ — ຮຸ່ງໃສຄືແກ້ວ
ຫຼືອ້າຍໄລລາແລ້ວ — ແຖວຄູກຽດສະຫງ່າ
ລືມສັນຍາວ່າໄວ້ — ໃນມື້ຈາກກັນ
ອ້າຍວ່າຈະຍຶດໝັ້ນ — ອາຊີບຄູສອນ
ຈົນຊີວາມອດມຸດ — ບໍ່ມີມາຍມ້າງ
ຖືກກັບໃຈນາງນ້ອຍ — ສອງເຮົາຮັກຮ່ວມ
ແລ້ວອ້າຍສວມສອດນິ້ວ — ແຫວນໝັ້ນມອບນາງ
ຫຼາຍປີຫ່າງຈາກອ້າຍ — ນ້ອງຫ່ວງຫວງແຫນ
ແຫວນໝັ້ນຂອງຊາຍແພງ — ແນບນອນນຳນ້ອງ
ວັນຄືນຄອງຫາອ້າຍ — ຊາຍຄູຊູ້ເກົ່າ
ຫຼາຍຄືນມາກ່າວເວົ້າ — ໂອມອ້ອມອ່ອຍນາງ
ແຕ່ນ້ອງວາງບໍ່ໄດ້ — ຮັກຮ່ວມກັບຊາຍ
ເພາະຮັກມີຄວາມໝາຍ — ຮ່ວມວິຊາຄວາມຮູ້
ຮ່ວມເປັນຄູຄຽງຂ້າງ — ອຸດົມການສອດຄ່ອງ
ຮັກເຮົາສອງຖືກຕ້ອງ — ຄອງເຄົ້າເຄັ່ງຄວນ
ນ້ອງຢາກຊວນອຸ່ນອ້າຍ — ຂຶ້ນເຂດພູດອຍ
ເຖິງປ່ຽວພອຍກັນດານ — ຜ່ານມາຄາວກີ້
ດຽວນີ້ພວມເປັນເປົ້າ — ຈຸດສຸມສ້າງກໍ່
ຕໍ່ໜ້າໄປຊີກ້າວ — ຈະເລີນແທ້ແນ່ນອນ
ເພາະເປັນບ່ອນບົ່ມຊ້ອນ — ຊັບສິ່ງສຳຄັນ
ໃນນັ້ນມີ " ຄຳຂຽວ " — ມາກມາຍຫຼາຍລົ້ນ
ຄົນກໍມີມູນເຊື້ອ — ສາມັກຄີກ້າກັ່ນ
ດຸໝັ່ນພຽນພໍ່າພ້ອມ — ແຕ່ຍັງດ້ອຍພັດທະນາ
ຍ້ອນວ່າຖືກເຂັ່ນຂ້າ — ຂູດຮີດດົນນານ
ອາໄສການປະຕິວັດ — ຈຶ່ງເງີຍຄໍໄດ້
ແຕ່ນີ້ໄປທາງໜ້າ — ແດນດອຍຊີພົ້ນພຸ່ງ
ອ້າຍຈຶ່ງມອງມຸງກວ້າງ — ກວມກຸ້ມທົ່ວແດນ

ຄິດຫ່ວງຫາເຂດແຄວ້ນ ຫ້ອງຖິ່ນດິນດອຍ
ທີ່ນັ້ນຄອງຄອຍຄູ ຊູ່ເຢັນເວັນເຊົ້າ
ຄືນົກເຂົາຄອຍເຂົ້າ ໃນນາກ້າອ່ອນ
ຄືເກສອນດອກໄມ້ ຄອງເຜີ້ງຄູ່ຕອມ
ນ້ອງປາກໃຫ້ອ້າຍພ້ອມ ເຂົ້າຮ່ວມກັບນາງ
ສ້າງເຂດແດນພູດອຍ ຮຸ່ງເຮືອງຈະເລີນກ້າວ
ຊາວພູດອຍແດນນີ້. ແສນດີວິເສດຍິ່ງ
ຫົວໃຈຈິງແຈ່ມແຈ້ງ ແພງເຊື້ອຊາດລາວ
ຄິດເບິ່ງຄາວຕໍ່ຕ້ານ ກູ້ຊາດຂອງເຮົາ
ແຖບພູເຂົາເປັນແດນ ແກ່ນຂະໜົງຄົງກ້າ
ເມື່ອໄດ້ມາໄຊແລ້ວ ແຖວດອຍບໍ່ໄດ້ດ່າງ
ຍິ່ງຕ້ອງສ້າງໃຫ້ກ້າວ ເປັນເບື້ອງບ່ອນຈະເລີນ
ເພິ່ນຈຶ່ງໄດ້ຮຽກເອີ້ນ ຜູ້ນໍາພາ
ພັດທະນາພູດອຍ ຢ່າງຈິງຈັງແທ້
ແກ້ເອົາຄວາມຈົນຈ້າ ຕົກມາແຕ່ຍຸກເກົ່າ
ເອົາສຶກສາອອກໜ້າ ເດີນກ້າວເປີດທາງ
ນາງຈຶ່ງເຮັ່ງຮີບຮ້ອນ ຟ້າວສົ່ງສານຫາ
ຫວັງວ່າຊາຍຄະນິງຄັກ ຮໍາຮອນຫວນຮູ້
ປູຫົນທາງເດີນກ້າວ ຍາວໄກໄວດ່ວນ
ເພື່ອຊີວິດຄົບຖ້ວນ ລືມດ້ານດັ່ງປອງ
ເພື່ອໃຫ້ສອງພີ່ນ້ອງ ໄດ້ຮ່ວມຮຽງຮັກ
ພັກ - ລັດ ແສນຊົມເຊີຍ ສົ່ງເສີມເບີງຍູ້
ສ້າງເປັນຄູຄົນກ້າວ ຊາວລາວຮັກຫໍ່
ຍົກຍື່ນຍໍດອກໄມ້ ປະນົມໄຫວ້ຊູ່ວັນ.

**ສານໄກ່ແກ້ວ "**

ສານນີ້ ການຫາກຈາກໄກ່ແກ້ວ ແພງແສນສຸດທີ່ປ່ວງ ປາງນັ້ນ
ມາພົບບາດພໍແລນ້ອຍ ຄາແຄວ້ນຄາດໄກ

ຄິດຈັກກາປາຖະນາໝັ້ນ ໝາຍນຳໃຫ້ໝົດຊົ່ວ ຊີວັງແລ້ວ
ບໍ່ໄດ້ໄຫວຫວັ່ນຫຼີງ ຫຼີງຮູ້ຮ່າວຈາ ອຸ່ນເອີຍ
ເມກຄະຊາດເຊື້ອ ແກ້ວແກ່ນຈັນແດງ ພີ່ເອີຍ
ຜິວຜາງງາມ ເພັດທອງທັງຄ້າຍ
ສຸດທີ່ຂອງໄກລ້າ ອະຈິນໄຕໝົດທີ່ອ່າວ ເອງແລ້ວ
ພີ່ຜູ້ນອນຄຶກຮ້າງ ຊິນອນເຝົ້າແຕ່ຂວັນ
ຄຳຮັກຄຳກມິທໍ່ຟ້າ ໃຕ້ຕ່ຳເຂົາຂຽວ
ພີ່ນີ້ເປັນຄົນເນົາເທິງດິນ ຊິຄ່ອຍແນມນຳນ້ອງ
ຢຽວທໍ່ກຳເສຍສ້ຽງ ມໍລະນາເສຍຊີບ ຊີວັງນັ້ນ
ຕາຍພີ່ຊິມ້ຽນກະດູກໄວ້ ນຳນ້ອງຜູ້ປະສົງ ນີ້ແລ້ວ
ເຈົ້າຜູ້ຫົງພະໄພສ້ອຍ ສໍລະຍານເບືອງສ່ອງຫາລີ
ຮູ້ວ່າເຈົ້າຊິໃຫ້ພີ່ນອນຢູ່ແລ້ງ ຕາຍເຝົ້າຝຸ່ນທຸລີ
ຄຳທຸກອ້າຍ. ຈອມພະນາງບໍ່ມີສ່ອງ ເຫັນແລ້ວ
ເຈົ້າຫາກມີທີ່ຊ້ອນ ພາຍພຸ້ນເລົ່າລືມ ພີ່ແລ້ວ
ໄດ້ວ່າຍັງສັດຈະໝັ້ນ ໃຈດຽວຕັ້ງຕໍ່ ດອມແລ້ວ
ພີ່ບໍ່ຄິດໂລບລ້ຽວ ລວງລີ້ນແງງອນ ຂື່ນເອີຍ
ຢຽວວ່າພາຍພະອວນນ້ອງ ຫຼາຍໃຈຈິ່ງຕ່າງ ເສຍນັ້ນ
ອີກອີ່ພີ່ ຫາກໄດ້ຜັງແກ່ນແກ້ ເສຍແລ້ວບໍ່ທ່າງມາຍ ງ່າຍດາ
ຂໍໃຫ້ປະກອບແກ້ວ ແຝງບາດຮຽງຮົມ ຮ່ວມນັ້ນ
ຢ່າໃຫ້ເສຍແຮງຮຽນ ເຄີກເສຍດາຍຕູ້
ຄິດຈັກບາຍແບກໄວ້ ເປັນແວ່ນຍໍແຍງສະລອຍ
ມັນຫາກເຫຼືອແຮງຄິດ ຊວດອັນໄກແກ້ວ
ພີ່ກໍ່ເນົ່າທັງໝ່ອມ ຊິນລະທາໄຫຼຫັ້ງ ເລິງແລ້ວ
ພີກໍເມີນມຸ່ງຍ້ຽມ ບໍ່ເຫັນແກ້ວທີ່ດີ ຂື້ນເອີຍ
ເຫຼືອຫາກກ້າມີແມະ ມອບທວງຍັງສະອື້ນ
ເຈັບທີ່ໄດ້ມາເກີດຕ່າງດ້າວ ໄກເຂດຄັນທະເສມາ ສິ່ງນີ້
ອິດໃຫ້ອ້າຍ ໄດ້ເກີດໃນນະຄອນສີ ທີ່ດຽວດອມນ້ອງ ຊື່ນເອີຍ
ບໍ່ຢາກໄກຈາກເຈົ້າ ພໍທໍ່ໄຍບົວ ໜຶ່ງນັ້ນ

ເຈັບທີ່ເວນຫາກມາຈຳໄກ ພາກແພງຮາມນ້ອງ
ວ່າຈັກ ຜາຍທາງຕັ້ງ ເດີນນຳທົບພະຂິ່ນ ຄຳນັ້ນ
ເກງທໍ່ເວນຫ້າຮ້ອຍ ໂຮມທ້ອນເທົ່າຕີນ ຂີ່ນເອີຍ
ເຈັບທີ່ວັງຂວງຂັ້ນ ຊິນລະທີຍາວໂຍດ
ເມື່ອຈັກຊຸກເຂົ້າໃກ້ ພໍ່ຢື້ປ່ອງເຖິງສະໜ່ອຍແມ
ພີ່ຫາກ ຄະຫຼັງເອີກແຄ້ນ ແຄນໃນອັດທະ ເຍດ ຈິເຍົາແລ້ວ
ກໍທໍ່ຫອດສະອື້ນ ຊອນອອນໄຫ້ຮຸງຫາ
ກະສັນ ຫາກໄດ້ຮັກມາດທະນ້ອງ ລິ້ນທີ່ທົນອີກ ຮັ່ງແລ້ວ
ຮຽມບໍ່ໄດ້ຜີນຄຳແພງ ຫົ້ ໃຜພໍເຕື້ອງ ແມ່ເອີຍ
ໂອນໍ ຂໍໃຫ້ໄດ້ເຝືອຝັກຝັນ ໄມຕີດຶງຂອດ
ເທວະລາດເຈົ້າ ຈອມໄທທີ່ດຽວ ແດ່ແມ
ຍອດມິ່ງແກ້ວ ກຸມກອດກັນລົງ ແດ່ແມ
ຄຳສະເຫນຫາ ຢ່າໄດມາຍມ້າງ ແມ່ເຮີຍ
ຮັກຈິ່ງໄດ້ຂັນໄຂໜາ ຄຳແຜ່ນຜານຕໍ່ ພະອອນແລ້ວ
ຮັກພີຈິ່ງໄດ້ມາປາກເວົ້າ ວອນໃຫ້ໜຽວແຂວນ ອຸ່ນເອີຍ
ອ້າຍຫາກຫອມຫຸ້ມແລ້ວ ກອງສີປະສິງຮ່ວມ ພະອອນແລ້ວ
ຄຳຮັກ ຄຳແພງມີແຕ່ນ້ອງ ຢ່າໃຫ້ຫ່າງສອງ ອຸ່ນເອີຍ
ມື້ນີ້ ຈິດບໍ່ມີທາງຫ້ອຍ ຫົນໃດດອມເພື່ອນ ແພງເອີຍ
ທີ່ຮັກມີແຕ່ນ້ອງ ຕົວຂ້ອຍແຂ່ງປະສົງ ຍື່ນເອີຍ
ໂອນໍ ເຈັບທໍ່ໄດ້ມາເກີດຕ່າງບ້ານ ໄກເຂດຂັນທະເສນາ ສິ່ງນີ້
ໃຫ້ໄດ້ເກີດໃນນະຄອນສີ ທີ່ດຽວດອມນ້ອງ ອຸ່ນເອີຍ
ເຈັບແຕ່ພູພະນັງຂັນ ໄກກັນອະນັນໂຍດ ແພງເອີຍ
ສັງບໍ່ຊຸກໃຫ້ໃກ້ ພໍ່ຢື້ປ່ອງສະໜ່ອຍແດ່

**ສານຫົງ**

**ສານທີ່ຝ່າຍຊາຍຂຽນ**

ສານນີ້ ຊື່ວ່າຫົງຄຳຜ້າຍ ເວຫາເຫີນເມກ
ຈິດປະສົງຈອດຢັ້ງ ຫວັງນ້ອງຝ່າຍໄກ

ບັດນີ້ ຕົນອ້າຍປຸນປຽບໄດ້ ດັ່ງຊາຍຊາດພະເນຈອນ
ບິນວອນຕາມເວຫາ ສ່ອງລີງບໍ່ເຫັນ
ຈັກແມ່ນກຳຫຍັງອ້າຍ ຈື່ງກາຍເປັນຫົງປ່ຽວ
ຫຼຽວອງວາກຫາກິ່ງໄມ້ ໄຊຕົ້ນກໍບໍ່ມີ
ຄັນນ້ອງມີແນວຕົ້ນ ໂພໄຊໃຫ້ສິ່ງຂ່າວ ແດ່ເນີ
ໃຫ້ຫົງປີກຫ້ຽນ ໄດ້ເກາະກ້ານກິ່ງໄຊ ແດ່ແມ່

**ສານຝ່າຍຍິງຕອບ**

ສານນີ້ ຊື່ວ່າໂພໄຊກວ້າງ ສານງາມຕົ້ນໄມ້ໃຫຍ່
ໃຈປະສົງຕໍ່ເຈົ້າ ຫົງແກ້ວຜູ້ເວີ່ນຫາ
ຢ້ານແຕ່ຫົງຄຳຜ້າຍ ກາຍໜີບໍ່ຫຼຽວເບິ່ງ ນັ້ນແລ້ວ
ຕິວ່າໄຊຕ່ຳເຕ້ຍ ຊິເສຍເຊື້ອຊາດຕະກຸນ
ຊາດທີ່ແນວນາມຕົ້ນ ໄຊສິມແດ່ຈາຕິ ບໍ່ແນວ
ແນວຫົງເຫີນຢູ່ຟ້າ ບໍ່ຫວັງຊ້ຳວ່າຊິງອຍ ລະຕິ

# ບົດທີ 6

# ກາບເຊີ້ງ

## 1.ຄວາມໝາຍຂອງກາບເຊີ້ງ

ເຊີ່ງຄືຮູບການສະແດງສິລະປະວັນນະຄະດີພື້ນເມືອງປະເພດກາບກອນແບບໜຶ່ງເຊິ່ງປະຊາຊົນເຮົາປະດິດແຕ່ງຂຶ້ນມາແຕ່ບູຮານນະການແລະໄດ້ສືບທອດເສີມຂະຫຍາຍມາຈົນເຖິງທຸກວັນນີ້. ການເຊີ່ງຈະຈັດຂຶ້ນໃນເວລາທີ່ມີບຸນສົມກິນທານຕາມປະເພດນີ້ເຊັ່ນເຊີ່ງໃນບຸນອອກພັນສາ ,ບຸນຊ່ວງເຮືອ, ເຊີ່ງໃນບູນບັ້ງໄຟ, ເວລາແຫ່ເຂີຍ ຫຼື ເວລາບຸນປີໃຫມ່ລາວ. ການແຫ່ນັ້ນນອກຈາກຜູ້ພາເຊີ້ງແລ້ວ ຍັງມີໝູ່ຄູ່ຫລາຍຄົນອີກ. ເຄື່ອງດົນຕີປະກອບມີ ແຄນ, ຄ້ອງ, ກອງ ... ຈຸດພິເສດອັນໜຶ່ງອີກ ໃນຂະບວນເຊີ່ງນັ້ນມັກຈະໃສ່ເຄື່ອງແປກເປັນຕົ້ນຜູ້ຊາຍມັກນຸ່ງສິ້ນ, ນຸ່ງເຄື່ອງຂາດສ້ອຍ, ແຕ້ມຫນ້າຕາໃຫ້ໝອງໝົ່ນ, ບາງຄົນໃນກຸ່ມອາດຈະຫາບ ຫຼືພາຍເຄື່ອງຂອງທີ່ເປເພ ເຊັ່ນ ກະຕ່າເພ, ກະບຸງຂາດ ແລ້ວເກັບເອົານັ້ນເອົານີ້ໃສ່ ເບິ່ງແລ້ວເປັນຕາຢາກຫົວ. ສ່ວນເນື້ອໃນນັ້ນອີງໃສ່ບຸນງານຕ່າງໆອາດຈະອວຍພອນໃນບຸນ ຫຼື ເປັນການຕະຫຼົກສ້າງບັນຍາກາດ. ສະ ນັ້ນຜູ້ພາເຊີ້ງຕ້ອງເປັນຄົນກ້າຫານ, ກ້າເວົ້າທັງຄວາມເພີ ແລະຄວາມດີ, ມາຮອດປັດຈຸບັນ ໂດຍອີງໃສ່ຄວາມ ຈະເລີນກ້າວໜ້າທາງດ້ານວັດທະນະທຳສັງຄົມແບບໃໝ່ ການໝູນໃຊ້ຮູບການສະແດງ, ເຊີ່ງກໍໄດ້ຮັບການ ປຸງໃຫ້ມີເນື້ອໃນໃໝ່ ທັງຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງມະຫາຊົນນັບມື້ນັບດີຂຶ້ນ.

## 2. ຫຼັກການແຕ່ງກາບເຊີ້ງ

ການປະດິດແຕ່ງກາບກອນແມ່ນຈຸດສູງສຸດຂອງການແຕ່ງ ເພາະການແຕ່ງກາບກອນເປັນການປະດິດແຕ່ງທີ່ຫຍຸ້ງຍາກຫຼາຍ ແຕ່ການປະດິດແຕ່ງບົດເຊີ້ງຕ້ອງປະຕິບັດຕາມຫຼັກການແຕ່ງກາບໃຫ້ມີການສຳຜັດນອກ ຫຼື ສຳຜັດໃນສຸດແລ້ວແຕ່ເໝາະສົມ.

ທານ ພູມີວົງວິຈິດໄດ້ຂຽນໄວ້ວ່າ ລວຍ ເຊີ້ງ ແລະຄຳສຸພາສິດລາວເປັນອັນມັງມູນຫຼາຍ ພ້ອມທັງມີເນື້ອໃນຍົນຍ້ອງຊາວຜູ້ອອກແຮງງານ ຈະ ຈິ່ງໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນຢ່າງກ້ວາງຂວາງ....

ມາຮອດປັດຈຸບັນ. ໂດຍສືບຕໍ່ຜັນຂະຫຍາຍມູນເບື້ອອັນດີງາມດັ່ງກ່າວ ເພື່ອເຮັດໃຫ້ວັນນະຄະດີພື້ນເມືອງລາວນັບມື້ນັບໄດ້ຮັບການປັບປຸງເປັນຕົ້ນແມ່ນວັນນະຄະດີປະເພດກາບກອນອັນໄດ້ເປັນການປະກອບສວນເຂົ້າໃນພາລະກິດການຕໍ່ສູ້ແລະກໍ່ສ້າງແນວຄິດຄຸນສົມບັດຂອງຄົນລາວສືບຕໍ່ໄປ

**ໂຄງຮ່າງ**

o o (o) o o o o
o o (o) o o o o
o o (o) o o o o
o o (o) o o o o

**ຕົວຢ່າງ:**

ໂອ ໂຣ ໂອ ກໍລະໂອ ໂຣ ໂອ

ຂໍກິນເຫຼົ້າເດັດ ນຳເຈົ້າຈັກໂອ

ຂໍກິນເຫຼົ້າໂຫ ນຳເຈົ້າຈັກຈອກ

ຫວານຈ້ອຍໆ ໃສ່ປາກຫຼານຊາຍ
ເຈົ້າບໍ່ໃຫ້ ຂ້ອຍກໍ່ບໍ່ໜີ
ຕາຍເປັນຜີ ຊິນຳມາຫຼອກ
ບໍ່ໄດ້ຢອກ ຊິກວນໃຫ້ຢ້ານ
ອອກຈາກບ້ານ ກໍຊິຫວ່ານດິນນຳ
ໄປອຳລຳ ເປັນຝູງເປັນພວກ
ຕາຍເປັນປວກ ຊິໄປກັດເຄືອພູ
ຕາຍເປັນໜູ ຊິໄປກັດເຄືອຫູກ
ຕາຍເປັນລູກ ຊິໄປຈ່ອງກິນນົມ ໂອ ໂຣ ໂຣ ໂອ

# ່ເອກະສານອ້າງອີງ


1. ພູມີ ຈັນທະລັງສີ  ສັນທະກະວີ ພາສາລາວ ລະບົບ ຕໍ່ເນື່ອງ ພິມປີ 2007
2. ພຣະອາຈານ ໄພວັນ ມາລາວົງ  ປຶ້ມ ຫຼັກການແຕ່ງກອນລາວ ວິທະຍາໄລອິງຕົ້ ປີ 2012
3. ປຶ້ມ ສັນທະສິນສາດ ມະຫາໄລແຫ່ງຊາດ 2002
4. ສັນທະສິນສາດສໍາລັບໂຮງຮຽນສ້າງຄູລະບົບ 11+3+2
5.  ໄວຍາກອນລາວ ພາກສ່ວນສັນທະກະວີ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແຫ່ງຊາດ 2000
6. ແບບຮຽນ ພາສາລາວ 3 ສໍາລັບໂຮງຮຽນ ສ້າງຄູມັດທະຍົມ  ລະບົບ 8+3
7. ພາສາລາວ 2 ສໍາລັບໂຮງຮຽນສ້າງຄູ ລະບົບ 11+3 ປີທີ 1 ກະຊວງສຶກສາທິການ, ສູນພັດທະນາຄູ, ກະຊວງ ສຶກສາທິການ, ກົມສ້າງຄູ 2008
8. ແບບຮຽນພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 1,2,3,4 ,6 ກະຊວງສຶກສາທິການ, ສະຖາບັນຄົນຄວ້າ ວິທະຍາສາດ.


**ແຜນການສອນ**

**ຊື່ ວິຊາ: ສັນທະສິນສາດ 2**

| | |
|---|---|
| ລະບົບ/ພາກຮຽນ | ລະບົບ 4 ປີ ( 12+4) ພາກຮຽນທີ 2 ປີທີ 3 |
| ຈຳນວນຊົ່ວໂມງ | 64 ຊົ່ວໂມງ |
| ຄ່າໜ່ວຍກິດ | 3( 2-2-0 ) |
| ອະທິບາຍໜ່ວຍກິດ | ວິຊານີ້ມີ 3 ໜ່ວຍກິດດ ໃນນັ້ນປະກອບມີການສອນສາທິດ, ການປະຕິບັດກິດຈະກຳຕົວຈິງຈຳນວນ 2 ຊົ່ວໂມງໃນ 16 ອາທິດ ລວມມີ 64 ຊົ່ວໂມງ |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວນັກຮຽນຄູສາມາດ:<br>- ຈຳແນກຄວາມແຕກຕ່າງລະຫວ່າງໂຄງ, ສານ, ກາບ, ກອນແຕ່ລະຊະນິດໄດ້<br>- ແຕ່ງກາບ, ກອນ, ໂຄງ, ສານໄດ້ຢ່າງຖືກຕ້ອງ<br>- ມີທັດສະນະຄະຕິຕໍ່ການນຳໃຊ້ສັນທະສິນສາດ |
| ເນື້ອໃນຫຍໍ້ | ວິຊານີ້ສຶກສາກ່ຽວກັບສັນທະກະວີ, ກາບ, ໂຄງ, ສານ ແລະ ກອນ , ນອກນັ້ນ ຍັງຈະໄດ້ສຶກສາກ່ຽວກັບຫຼັກການ ວິທີການແຕ່ງ ແລະ ການນຳໃຊ້ສັນທະກະວີ |
| ການດຳເນີນການສອນ | ວິຊານີ້ມີ 6 ບົດ ເຊິ່ງດຳເນີນການສອນແມ່ນສົມທົບຫຼາຍວິທີປະສົມປະສານ ແລະຕິດພັນກັບການປະສົມປະສານຕົວຈິງເຊັ່ນ: ຟັງ, ບັນລະຍາຍ, ອະທິບາຍ, ສົນທະນາ ແລະ ປະຕິບັດຕົວຈິງໃນການແຕ່ງກາບ, ກອນ, ໂຄງ, ສານຕ່າງໆ. |
| ອາທິດທີ 1 | ບົດທີ 1 ສັນທະກະວີ<br>1. ຄວາມໝາຍຂອງສັນທະກະວີ<br>2. ພາກສ່ວນສ່ວນຂອງສັນທະກະວີ |
| ອາທິດທີ 2 | ບົດທີ 1ສັນທະກະວີ ( ຕໍ່ )<br>3. ຫຼັກຄຳປະຈຳບ່ອນ<br>4. ການສຳຜັດ<br>5. ຄຳຜະຫຍາ<br>6. ຄຳສຸພາສິດ |
| ອາທິດທີ 3 | ບົດທີ 2 ປະເພດຂອງກາບ<br>1. ຄວາມໝາຍຂອງກາບ<br>2ການສຳຜັດຂອງກາບ<br>3.ວິທີໃຊ້ກາບ |
| ອາທິດທີ 4 | ບົດທີ 2 ປະເພດຂອງກາບ<br>3.1ກາບເຊີ້ງ ( ສຽງເຍີ້ນ )<br>3.2ກາບເຊີ້ງ ( ສຽງໄວ ) |
| ອາທິດທີ 5 | ເຝິກນັກຮຽນແຕ່ງກອນ |
| ອາທິດທີ 6 | ບົດທີ 3 ກອນ<br>1.ຄວາມໝາຍຂອງກອນ<br>2. ຫຼັກຄຳປະຈຳບ່ອນ<br>3. ຊະນິດຂອງກອນ |

| | |
|---|---|
| ອາທິດທີ 7 | ບົດທີ3ກອນ ( ຕໍ່ )<br>3.1 ຊະນິດກອນອ່ານ<br>ກ. ກອນອ່ານແບບທຳມະດາ<br>ຂ. ກອນອ່ານແບບອັກສອນສັງວາດ<br>ຄ. ກອນອ່ານແບບວິຊຸມາລີ<br>ງ. ກອນອ່ານແບບວະສິລະປັນຕິ |
| ອາທິດທີ 8 | ບົດທີ 3ກອນ ( ຕໍ່)<br>ຈ. ກອນອ່ານແບບມະຫາສິນທຸ<br>ສ. ກອນອ່ານແບບສັບພະສອດ<br>ຊ. ກອນອ່ານແບບກອນແປດ<br>ຍ. ກອນອ່ານແບບກອນຊ້ອນເລັບ |
| ອາທິດທີ 9 | ບົດທີ 3ກອນ ( ຕໍ່ )<br>3.2ກອນລຳ - ກອນຂັບຂັບ<br>ກ. ລຳທົ່ວໄປ<br>ລຳຕັດ<br>ລຳລ່ອງ<br>ລຳເຍີ້ນ<br>ລຳເຕີ້ຍ<br>ລຳເພີນ |
| ອາທິດທີ 10 | ບົດທີ 3ກອນ ( ຕໍ່ )<br>ຂ. ຂັບທ້ອງຖິ່ນ<br>ຂັບພວນ<br>ຂັບໄຕແດງ<br>ຂັບໄຕດຳ<br>ຂັບທຸ້ມ<br>ຂັບງື່ມ |
| ອາທິດທີ 11 | ບົດທີ 3ກອນ ( ຕໍ່ )<br>3.3ກອນຮ່າຍ<br>ກ. ແບບສິລະປັນຕິ<br>ຂ. ແບບມະຫາວະສິລະປັນຕິ |
| ອາທິດທີ 12 | ເຝິກການແຕ່ງກອນປະເພດຕ່າງໆ |
| ອາທິດທີ 13 | ບົດທີ 4ໂຄງ<br>1. ຄວາມໝາຍຂອງໂຄງ<br>2. ຊະນິດຂອງໂຄງ |

| | |
|---|---|
| | 2.1 ໂຄງ 2<br>2.2 ໂຄງ 5<br>2.3 ໂຄງ 7 |
| ອາທິດທີ 14 | ບົດທີ 5ສານ<br>1. ຄວາມໝຍຂອງສານ<br>2. ປະເພດຂອງສານ<br>3. ວິທີແຕ່ງສານ<br>4. ຕົວຢ່າງສານ |
| ອາທິດທີ 15 | ບົດທີ 6ກາບເຊີ້ງ<br>1. ຄວາມໝາຍຂອງກາບເຊີ້ງ<br>2. ຫຼັກການແຕ່ງກາບເຊີ້ງ<br>3. ເຝິກການແຕ່ງກາບເຊີ້ງ |
| ອາທິດທີ 16 | ນໍາພານັກສຶກສາທອນຄືນ |
| ການຕີລາຄາຜົນການຮຽນ | ການມາຮຽນ 10%<br>ກິດຈະກໍາບຸກຄົນ/ກຸ່ມ 10%<br>ການກວດກາ 20%<br>ສອບເສັງຈົບໜ່ວຍກິດ 40 % |
| ເອກະສານອ້າງອີງ | ແບບຮຽນພາສາລາວ 3 ສໍາລັບສ້າງຄູລະບົບ 8+3 ປີທີ 2 ສູນພັດທະນາຄູ 1998<br>ສັນທະສິນສາດສໍາລັບໂຮງຮຽນສ້າງຄູລະບົບ 11+3+2<br>ໄວຍາກອນລາວ ພາກສ່ວນສັນທະກະວີ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ 2000<br>ແບບຮຽນ ພາສາລາວ 3 ສໍາລັບໂຮງຮຽນ ສ້າງຄູມັດທະຍົມ ລະບົບ 8+3<br>ພາສາລາວ 2 ສໍາລັບໂຮງຮຽນສ້າງຄູ ລະບົບ 11+3 ປີທີ 1 ກະຊວງສຶກສາທິການ, ສູນພັດທະນາຄູ, ກະຊວງສຶກສາທິການ, ກົມສ້າງຄູ 2008<br>ແບບຮຽໜພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 1,2,3,4 ,6 ກະຊວງສຶກສາທິການ, ສະຖາບັນຄົນຄວ້າວິທະຍາສາດ. |
| ຊື່ຄູສອນ | ອາຈານ ພິມມາ ສໍສີມສີ 020 99586696<br>ອາຈານ ພອນສະຫວັນ ກໍາກ້ຽງຍົນ 020 22226226<br>ອາຈານ ປະຢັດ ລັດຕະນາ 020 98150505<br>ອາຈານ ໂພໄຊ ເພັດພູຄໍາ 020 96269979<br>ອາຈານ ມະນີວັນ ອິນທິລາດ 020 55445828 |